ຄະນະກຳມະທິການອາຊຽນ ວ່າດ້ວຍການ ສົ່ງເສີມ ແລະ
ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍ (ACWC)

# ຄູ່ມື

## ສຳລັບການຕິດຕາມ
## ການນຳໃຊ້ວິທີການຄຳນຶງ ເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນວຽກງານຕ້ານການຄ້າມະນຸດ



Australian Aid | ASEAN-Australia Counter Trafficking

ເດືອນກັນຍາ 2023

**ການສະຫງວນລິຂະສິດ:** ປື້ມຄູ່ມືສະບັບນີ້ໄດ້ຖືກສ້າງຂຶ້ນໂດຍຄະນະກຳມະທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍ (ACWC), ທີ່ໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໂດຍຜ່ານ ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT). ທັດສະນະທີ່ລະບຸໃນປື້ມຄູ່ມືນີ້ ເປັນຂອງຜູ້ຂຽນແຕ່ພຽງຜູ້ດຽວ ແລະ ບໍ່ແມ່ນທັດສະນະຂອງລັດຖະບານອົດສະຕຣາລີ.

# ສາລະບານ


1. **ຄຳນຳ** ........ 3
2. **ສາລະບານ** ........ 4
3. **ການສະແດງຄວາມຂອບໃຈ** ........ 5
4. **ບົດນຳ** ........ 6
5. **ຕົວອັກສອນຫຍໍ້** ........ 7
6. **ອະທິບາຍຄຳສັບຫລັກ** ........ 8
7. **ປະຫວັດຄວາມເປັນມາ** ........ 11
8. **ກ່ຽວກັບຄູ່ມືສະບັບນີ້** ........ 12
9. ວິທີການພັດທະນາຄູ່ມືສະບັບນີ້ ........ 13
10. ກຸ່ມເປົ້າໝາຍທີ່ໄດ້ຕັ້ງໄວ້ ........ 15
11. **ວິທີນຳໃຊ້ປຶ້ມຄູ່ມືສະບັບນີ້** ........ 16
12. ຮັບຮອງ ........ 18
13. ປັບໃຊ້ ........ 18
14. ການສະໜັບສະໜູນ ........ 18
15. ລາຍງານ ........ 18
16. **ການໂຄສະນາເຜີຍແຜ່ ແລະ ສະກັດກັ້ນການຄ້າມະນຸດ** ........ 20
17. ຕົວຢ່າງ: ພາກປະຕິບັດທີ່ດີທີ່ດີດ້ານການໂຄສະນາເຜີຍແຜ່ ແລະ ສະກັດກັ້ນການຄ້າມະນຸດ ........ 28
18. **ການລະບຸຕົວຜູ້ຖືກເຄາະຮ້າຍ ແລະ ການສົ່ງຕໍ່** ........ 29
19. ຕົວຢ່າງ: ພາກປະຕິບັດທີ່ດີດ້ານການລະບຸຕົວຜູ້ຖືກເຄາະຮ້າຍ ແລະ ການສົ່ງຕໍ່ ........ 44
20. **ການທົບທວນ, ການຟູຟື້ນ ແລະ ດ້ານທີ່ພັກອາໄສ** ........ 45
21. ຕົວຢ່າງ: ພາກປະຕິບັດທີ່ດີດ້ານການທົບທວນ, ການຟູຟື້ນຮັກສາ ແລະ ດ້ານທີ່ພັກອາໄສ ........ 52
22. **ການກັບບ້ານ ແລະ ການເຊື່ອມໂຍງຄືນສູ່ສັງຄົມ** ........ 53
23. ຕົວຢ່າງ:ພາກປະຕິບັດທີ່ດີດ້ານການກັບບ້ານແລະການເຊື່ອມໂຍງຄືນສູ່ສັງຄົມ ........ 60
24. **ການຊ່ວຍເຫຼືອດ້ານການແພດ ແລະ ສຸຂະພາບຈິດ** ........ 61
25. ຕົວຢ່າງ: ພາກປະຕິບັດທີ່ດີຂອງການຊ່ວຍເຫຼືອດ້ານການແພດ ແລະ ສຸຂະພາບຈິດ ........ 65
26. **ຂະບວນການຍຸຕິທຳ** ........ 66
27. ຕົວຢ່າງ:ພາກປະຕິບັດທີ່ດີຂອງຂະບວນການຍຸຕິທຳ ........ 92
28. **ເອກະສານຊ້ອນທ້າຍ 1: ຕົວຊີ້ບອກຜົນໄດ້ຮັບ** ........ 93
29. **ເອກະສານຊ້ອນທ້າຍ 2: ວຽກບົດບາດຍິງ-ຊາຍ, ຄົນທີ່ມີຄວາມພິການ, ການມີສ່ວນຮ່ວມຂອງກຸ່ມດ້ອຍໂອກາດ** ........ 94
    **ແລະ ການເກັບກຳຂໍ້ມູນ TIP**

# ການສະແດງຄວາມຂອບໃຈ

ລະບົບການຕິດຕາມ ແລະ ປະເມີນຜົນການນຳໃຊ້ວິທີການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ ລວມທັງ ຄູ່ມືສະບັບນີ້ ຖືກສ້າງຂຶ້ນໂດຍ ຄະນະກຳມະທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດຂອງແມ່ຍິງ ແລະ ເດັກນ້ອຍ (ACWC) ໄດ້ຮັບການສະໜັບສະໜູນ ຈາກ ລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ພ້ອມທັງກອງເລຂາອາຊຽນ.

ACWC ຂໍສະແດງຄວາມຮູ້ບຸນຄຸນ ເຖິງຄວາມໝາຍໝັ້ນ ແລະ ມຸ້ງໝັ້ນປາດຖະນາ ຂອງ ທ່ານ ນາງ ສີຣີ ດັນຕີ ອັນຫວາ (Sri Danty Anwar), ຜູ້ຕາງ ໜ້າຂອງ ປະເທດອິນໂດເນເຊຍ ດ້ານປົກປ້ອງສິດທິຂອງແມ່ຍິງ ປະຈຳ ACWC, ທີ່ໄດ້ພັດທະນາ ລະບົບຕິດຕາມ ແລະ ການປະເມີນຜົນ. ACWC ຂໍສະແດງຄວາມຂອບໃຈ ສຳລັບການປະກອບສ່ວນອັນໃຫຍ່ຫລວງ ຂອງ ສະມາຊິກໜ່ວຍງານວິຊາການ ACWC ຕໍ່ໂຄງການສ້າງຂີດຄວາມສາມາດ ໃຫ້ແກ່ເຈົ້າໜ້າທີ່ດ້ານໜ້າ ໃນການນຳໃຊ້ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງຊາຍ ໃນຕ້ານການຄ້າມະນຸດ ເວົ້າສະເພາະກໍຄື: ທ່ານ ນາງ ຍັນຕີ ກູສູມາວາດານີ (Yanti Kusamawardhani) ຜູ້ຕາງໜ້າ ດ້ານສິດທິເດັກນ້ອຍ ACWC ອິນໂດເນເຊຍ), ທ່ານ ລູເດຊິຕ້າ ໂຊບີເວກ້າ - ຈັນ (Lourdesita Sobrevega-Chan) (ຜູ້ຕາງໜ້າ ດ້ານສິດທິແມ່ຍິງ ACWC ຟີລິບປິນ), ທ່ານ ຣັດສະດາ ຈາຢາກັບຕາ (Ratchada Jayagupta) (ຜູ້ຕາງໜ້າດ້ານສິດທິແມ່ຍິງ ACWC ປະເທດໄທ), ແລະ ທ່ານ ວັນໄຊ ລຸດຈະນາວົງ (Wanchai Roujanavong) (ຜູ້ຕາງໜ້າດ້ານສິດທິເດັກ ACWC ປະເທດໄທ).

ACWC ຂໍສະແດງເຖິງຄວາມຮູ້ບຸນຄຸນ ມາຍັງ ທ່ານ ປອ. ແອນ ສະຕີເຟັນ (Anne Stephens) ແລະ ທ່ານ ນາງ ຈິວ ໂທມັດ (Jill Thomas) ຈາກ ບໍລິສັດທີ່ປຶກສາ Ethos of Engagement Consulting ທີ່ໄດ້ສະໜັບສະໜູນ ACWC ໃນການພັດທະນາກອບວຽກການປະເມີນຜົນ, ບັນດາຄູ່ມື ແລະ ເຄື່ອງມືສຳລັບການຕິດຕາມ ແລະ ປະເມີນຜົນ ເອກະສານທີ່ໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດ ໂດຍນຳໃຊ້ວິທີເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງຊາຍໃນການຕ້ານການຄ້າມະນຸດ ຢູ່ພາກພື້ນອາຊຽນ.

ACWC ກໍ່ຍັງຮັບຮູ້ເຖິງການສະໜັບສະໜູນທີ່ຕໍ່ເນື່ອງ ຂອງແຜນງານ ASEAN-ACT ເຊິ່ງນຳພາໂດຍ ທ່ານ ນາງ ລູເຊຍ ເປຍໂຕຼປາວລີ (Lucia Pietropaoli) ຮ່ວມກັບ ທ່ານ ນາງ ນູຣູ ຄອຍເລຍ (Nurul Qoiriah) ແລະ ຄະນະທີມງານ ອື່ນໆ ຂອງແຜນງານ ASEAN-ACT.

ສຸດທ້າຍນີ້, ACWC ຮັບຮູ້ເຖິງການປະກອບສ່ວນ ຂອງ ກອງເລຂາອາຊຽນ ຜ່ານພະແນກລຶບລ້າງຄວາມທຸກຍາກ ແລະ ບົດບາດຍິງຊາຍ ໃນການຮັບປະກັນການພັດທະນາ ກອບວຽກການຕິດຕາມ ແລະ ປະເມີນຜົນ, ຄູ່ມື ແລະ ເຄື່ອງມື ທີ່ໄດ້ຄຳນຶງເຖິງ ນະໂຍບາຍ ແລະ ກອບວຽກທີ່ສຳຄັນຂອງ ອາຊຽນ ພ້ອມທັງປະຕິບັດສອດຄ່ອງຕາມຂະບວນການ ແລະ ຂັ້ນຕອນທີ່ກ່ຽວຂ້ອງ.

# ບົດນຳຈາກປະທານຄະນະກຳມະທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍ (ACWC)

ບາດກ້າວອັນສຳຄັນໃນການສະກັດກັ້ນ ແລະ ລຶບລ້າງການຄ້າມະນຸດ (TIP) ເປັນໜຶ່ງໃນບັນດາຄຳໝັ້ນສັນຍາທີ່ໄດ້ຕົກລົງຮ່ວມກັນຂອງປະເທດອາຊຽນ. ການຮັບຮອງເອົາສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ (ACTIP) ໃນປີ 2015, ຕໍ່ມາ ບັນ ຈາກປະເທດສະມາຊິກອາຊຽນທັງໝົດ ໄດ້ໃຫ້ສັດຕະຍາບັນ ໂດຍບໍ່ມີຂໍ້ຍົກເວັ້ນ ແລະ ເປັນຂີດໝາຍອັນສຳຄັນໃນປະຫວັດສາດຂອງອາຊຽນ ທີ່ຈະມີເອກະສານ ຜູກມັດທາງກົດໝາຍ. ໃນດ້ານການຄ້າມະນຸດ. ເຖິງແນວໃດກໍຕາມ, ກໍ່ຍັງຄົງດຳເນີນຕໍ່ໄປ ໂດຍສະເພາະຕໍ່ກັບແມ່ຍິງ ແລະ ເດັກນ້ອຍ ແລະ ສືບຕໍ່ພັດທະນາຢ່າງ ຕໍ່ເນື່ອງ.

ພາລະກິດໜຶ່ງທີ່ສຳຄັນ ກໍ່ຄືໃຫ້ການສະໜັບສະໜູນສິດທິແມ່ຍິງ ແລະ ເດັນນ້ອຍໃນທົ່ວພາກພື້ນ, ຄະນະກຳມະທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດຂອງແມ່ຍິງ ແລະ ເດັກນ້ອຍ (ACWC) ໃຫ້ການສືບຕໍ່ສະໜັບສະໜູນສິດທິຂອງແມ່ຍິງ ແລະ ເດັກນ້ອຍ ແລະ ການລຶບລ້າງການຄ້າມະນຸດ. ໂດຍການຮ່ວມມືກັບຂະແໜງການຕົ້ນຕໍ, ACWC ໄດ້ສ້າງປຶ້ມຄູ່ມື ແລະ ກອບວຽກ ເພື່ອເສີມຂະຫຍາຍຄວາມອາດສາມາດຂອງທຸກພາກສ່ວນທີ່ກ່ຽວຂ້ອງ. ໃນບໍລິບົດຂອງການຕ້ານການຄ້າມະນຸດ, ໄດ້ມີການພັດທະນາຍຸດທະສາດ ແລະ ແນວທາງປະຕິບັດລະດັບພາກພື້ນຕ່າງໆ. ຊຶ່ງລວມມີຄູ່ມືອາຊຽນ ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ້ານໜ້າ ໃນການປົກປ້ອງສິດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄູ່ມື ແລະ ຂັ້ນຕອນການປະຕິບັດຂອງພາກພື້ນ ໃນການຕອບສະໜອງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ແລະ ຄູ່ມືໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍມີຄວາມເອົາໃຈໃສ່ຕໍ່ ບົດບາດຍິງ-ຊາຍ ຄູ່ມືເຫລົ່ານີ້ໄດ້ເສີມຂະຫຍາຍຄວາມພະຍາຍາມຂອງອາຊຽນໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢ່າງມີຄວາມໝາຍ ແລະ ມີການສະໜັບສະໜູນເຂົາເຈົ້າ ໂດຍນຳໃຊ້ວິທີການ ເອົາຜູ້ເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດ ຍິງ-ຊາຍ.

ACWC ຮັບຮູ້ເຖິງຄວາມຈຳເປັນໃນການປະເມີນຄວາມຄືບໜ້າ ແລະ ຂອບເຂດຂອງການຮັບຮອງເອົາ ແລະ ການຈັດຕັ້ງປະຕິບັດວິທີການທີ່ເອົາຜູ້ເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວມອ່ອນໄຫວດ້ານບົດບາດຍິງ-ຊາຍ ເພື່ອສະແດງໃຫ້ເຫັນເຖິງຜົນກະທົບຂອງເຂົາເຈົ້າ ແລະ ກຳນົດຂອບເຂດໃນການປັບປຸງ. ໂດຍການຮ່ວມມືກັບແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT), ປຶ້ມຄູ່ມືສະບັບນີ້ໄດ້ຖືກສ້າງຂຶ້ນ ເພື່ອສະໜັບສະໜູນການຕິດຕາມການນຳໃຊ້ວິທີການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ປຶ້ມຄູ່ມືອາດຈະຖືກນຳໃຊ້ໂດຍບັນດາປະເທດສະມາຊິກອາຊຽນທັງໝົດ, ບັນດາຂະແໜງການຕ່າງໆຂອງຄະນະກຳມະການອາຊຽນ ແລະ ພາກສ່ວນກ່ຽວຂ້ອງຂອງວຽກງານຕ້ານການຄ້າມະນຸດໃນທົ່ວພາກພື້ນ ເພື່ອເກັບກຳຂໍ້ມູນຢ່າງສະໝ່ຳສະເໝີ ແລະ ດຳເນີນການປະເມີນ ແລະ ສະທ້ອນຄືນກ່ຽວກັບຂອບເຂດທີ່ເຂົາເຈົ້າໄດ້ຍຶດໝັ້ນໃນຫລັກການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍໃນວຽກງານຕ້ານການຄ້າມະນຸດ.

ACWC ເຊື່ອວ່າ ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໃນການຕ້ານການຄ້າມະນຸດ ແມ່ນມີຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດພັນທະຂອງ ACTIP ຂອງຕົນຢ່າງມີປະສິດທິພາບ. ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຈະບັນລຸໄດ້ ກໍ່ຕໍ່ເມື່ອມີຂໍ້ມູນ ແລະ ສາມາດເຂົ້າເຖິງໄດ້, ແລະ ຖືກນຳໃຊ້ເພື່ອການຕັດສິນໃຈ, ມີສ່ວນຮ່ວມປະກອບຄຳເຫັນຕໍ່ຕໍ່ກົດໝາຍ, ນະໂຍບາຍ ແລະ ການປະຕິບັດ. ປຶ້ມຄູ່ມືສະບັບນີ້ ສະໜອງກອບວຽກ ແລະ ເຄື່ອງມືໃຫ້ແກ່ອົງກອນ ເພື່ອເກັບກຳຂໍ້ມູນຢ່າງມີປະສິດທິຜົນໃນການນຳໃຊ້ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດ ຍິງ-ຊາຍ ໃນການຕອບໂຕ້ຕໍ່ການຕ້ານການຄ້າມະນຸດ. ເຊິ່ງສາມາດກຳນົດ ແລະ ແກ້ໄຂບັນດາຊ່ອງຫວ່າງໃນການປະຕິບັດໄດ້, ສາມາດບັນທຶກ ຄວາມຄືບໜ້າໄດ້, ແລະ ອົງກອນຕ່າງໆສາມາດຕໍ່ຍອດໄດ້ ໂດຍອີງຕາມຄວາມສຳເລັດດັ່ງກ່າວໃນອະນາຄົດ. ສິ່ງນີ້ຈະບໍ່ພຽງແຕ່ຮັບປະກັນວ່າການຕອບໂຕ້ຕໍ່ການຕ້ານການຄ້າມະນຸດ ຈະເປັນການຊ່ວຍໃຫ້ມີການຊ່ວຍເຫລືອທີ່ຮອບດ້ານ ທີ່ເປັນການຕອບສະໜອງຄວາມຕ້ອງການຂອງກຸ່ມທີ່ມີຄວາມສ່ຽງພຽງເທົ່ານັ້ນ, ແຕ່ຍັງເປັນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍທັງໝົດ ເພື່ອໃຫ້ເຂົາເຈົ້າສາມາດໄດ້ຮັບການສົ່ງເສີມໃນການຟື້ນຟູຊີວິດຂອງເຂົາເຈົ້າດ້ວຍກຽດສັກສີ ແລະ ຄວາມຍຸຕິທຳ.

ໃນຂະບວນການສ້າງປຶ້ມຄູ່ມືນີ້, ໄດ້ປຶກສາຫາລືຫລາຍຮອບກັບຜູ້ຊ່ຽວຊານດ້ານວຽກງານຕ້ານການຄ້າມະນຸດ ແລະ ຜູ້ປະຕິບັດຕົວຈິງຈາກອົງການຈັດຕັ້ງຂອງລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ໃນປະເທດສະມາຊິກອາຊຽນ, ນອກຈາກນັ້ນ ກໍ່ຍັງຂໍຄຳແນະນຳ ແລະ ຄວາມຊ່ຽວຊານຂອງຜູ້ຕາງໜ້າຈາກ ACWC ແລະ ຄະນະນຳ ແລະ ທີມງານລະດັບປະເທດຂອງແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ດ້ວຍເຫດນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຜູ້ຕາງໜ້າ ACWC ທີ່ໄດ້ມີສ່ວນຮ່ວມໃນການພັດທະນາ ແລະ ກວດກາປຶ້ມຄູ່ມືສະບັບນີ້, ໂດຍສະເພາະບັນດາສະມາຊິກຂອງຄະນະປະຕິບັດງານດ້ານວິຊາການຂອງໂຄງການ ແລະ ຜູ້ທີ່ໄດ້ນຳພາການປຶກສາຫາລື ແລະ ທົບທວນກ່ຽວໃນລະດັບປະເທດເຊັ່ນ: ອິນໂດເນເຊຍ, ໄທ ແລະ ຫວຽດນາມ. ACWC ຍັງສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ແລະ ທ່ານ ດຣ Anne Stephens ແລະ ທ່ານ ນາງ Jill Thomas ຈາກ Ethos of Engagement Consulting ໂດຍການມີສ່ວນຮ່ວມຂອງທີ່ປຶກສາສຳລັບການແລກປ່ຽນດ້ານຄວາມຊຳຊິຊຳນານ ແລະ ຄຳໝັ້ນສັນຍາອັນລ້ຳຄ່າ ໃນການພັດທະນາປຶ້ມຄູ່ມືສະບັບນີ້ຈົບສຳເລັດ. ໃນຂະບວນການຕ້ານການຄ້າມະນຸດ ອັນຕໍ່ເນື່ອງຂອງພວກເຮົາ, ການສືບຕໍ່ໃນຮ່ວມມື ແລະ ການອຸທິດຕົນຢ່າງຕັ້ງໜ້າຂອງຜູ້ມີສ່ວນຮ່ວມທັງໝົດ ເປັນໝາກຜົນສຳຄັນຂອງຄວາມພະຍາຍາມລວມຂອງພວກເຮົາໃນທົ່ວພາກພື້ນອາຊຽນ.

ທ່ານ ນາງ Yanti Kusumawardhani
ປະທານ ACWC

# ຕົວອັກສອນຫຍໍ້

| | |
|---|---|
| **ACWC** | ຄະນະກຳມະທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍ |
| **ASEAN-ACT** | ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ |
| **ACTIP** | ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ |
| **ASEAN** | ອາຊຽນ |
| **CSO** | ອົງການຈັດຕັ້ງທາງສັງຄົມ |
| **CTIP** | ການຕ້ານການຄ້າມະນຸດ |
| **EoE** | ອົງກອນທີ່ປຶກສາການມີສ່ວນຮ່ວມດ້ານຫລັກການປະຕິບັດ (Ethos of Engagement Consulting) |
| **EPO** | ຜົນໄດ້ຮັບພາຍຫລັງສິ້ນສຸດໂຄງການ |
| **DFAT** | ກະຊວງການຕ່າງປະເທດ ແລະ ການຄ້າຂອງປະເທດອົດສະຕຣາລີ |
| **GEDSI** | ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ, ຄວາມພິການ ແລະ ການມີສ່ວນຮ່ວມຂອງສັງຄົມ |
| **GEMs** | ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ, ສະພາບແວດລ້ອມ ແລະ ສຽງຂອງກຸ່ມຄົນດ້ອຍໂອກາດ |
| **KII** | ການສຳພາດຜູ້ໃຫ້ຂໍ້ມູນທີ່ສຳຄັນ |
| **KPI** | ຕົວຊີ້ວັດການປະຕິບັດງານທີ່ສຳຄັນ |
| **M&E** | ການຕິດຕາມ ແລະ ປະເມີນຜົນ |
| **MEL** | ການຕິດຕາມ, ປະເມີນຜົນ ແລະ ການຮຽນຮູ້ |
| **MOU** | ບົດບັນທຶກຄວາມເຂົ້າໃຈ |
| **PWD** | ຄົນທີ່ມີຄວາມພິການ |
| **SOP** | ມາດຕະຖານຂັ້ນຕອນການດຳເນີນງານ |
| **TIP** | ການຄ້າມະນຸດ |
| **TOR** | ເງື່ອນໄຂອ້າງອີງ ຫລື ພາລະບົດບາດ |
| **TWG** | ໜ່ວຍງານວິຊາການຂອງ ACWC |
| **UNODC** | ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ |

# ອະທິບາຍຄຳສັບຫລັກ

| | |
|---|---|
| **ກິດຈະກຳ** | ການກະທຳ ຫລື ການປະຕິບັດວຽກງານໂດຍຜ່ານຂໍ້ມູນຕ່າງໆ ເຊັ່ນ:ງົບປະມານ, ການຊ່ວຍເຫລືອ ດ້ານວິຊາການ ແລະ ຊັບພະຍາກອນປະເພດອື່ນໆ ທີ່ຖືກລະດົມຂົນຂວາຍ ເພື່ອສ້າງໃຫ້ມີຜົນໄດ້ຮັບອື່ນໆ. |
| **ການຢືນຢັນຄວາມຍິນຍອມ** | ການຢືນຢັນຄວາມຍິນຍອມ ແມ່ນການເຫັນດີຍິນຍອມຂອງເດັກນ້ອຍທີ່ຈະເຂົ້າຮ່ວມໃນການຄົ້ນຄວ້າ. ແນວຄວາມຄິດຂອງການຍິນຍອມແມ່ນຮັບຮູ້ເຖິງຄວາມສາມາດໃນການພັດທະນາທີ່ພົ້ນເດັ່ນຂອງເດັກນ້ອຍ, ເຖິງແມ່ນວ່າເຂົາເຈົ້າອາດຈະບໍ່ມີຄວາມສາມາດໃຫ້ຄວາມຍິນຍອມໂດຍບອກຂໍ້ມູນໄດ້ຢ່າງສົມບູນ. ໂດຍທົ່ວໄປຈະໄດ້ຮັບການຍິນຍອມຈາກເດັກນ້ອຍທີ່ມີອາຍຸ 7 ປີ ຂຶ້ນໄປ.[1] |
| **ເດັກນ້ອຍ** | ອີງຕາມ ACTIP, ເດັກນ້ອຍໝາຍເຖິງມະນຸດທຸກໆຄົນທີ່ມີອາຍຸຕໍ່າກວ່າ 18 ປີ ເວັ້ນເສຍແຕ່ວ່າມີກົດໝາຍທີ່ບັງຄັບໃຊ້ກັບເດັກນ້ອຍ, ເຊິ່ງຈະຕ້ອງບັນລຸນິຕິພາວະກ່ອນ ໂດຍອີງຕາມ ACTIP.[2] |
| **ຄ່າຊົດເຊີຍ** | ການຊົດເຊີຍຄ່າເສີຍຫາຍດ້ານວັດຖຸ ແລະ ຄວາມເສຍຫາຍອື່ນໆທີ່ບໍ່ແມ່ນວັດຖຸ ທີ່ຜູ້ຖືກຄ້າມະນຸດໄດ້ຮັບຄວາມເສຍຫາຍ.[3] |
| **ເຄື່ອງມືໃນການເກັບກຳຂໍ້ມູນ** | ວິທີການນຳໃຊ້ເພື່ອກຳນົດແຫລ່ງຂໍ້ມູນຂ່າວສານ ແລະ ເກັບກຳຂໍ້ມູນໃນລະຫວ່າງການຕິດຕາມ ຫລື ໃນລະຫວ່າງການປະເມີນຜົນ. ຕົວຢ່າງແມ່ນການສຳຫລວດທີ່ບໍ່ເປັນທາງການ ແລະ ເປັນທາງການ, ການສັງເກດການໂດຍກົງ ແລະ ແບບມີສ່ວນຮ່ວມ, ການສຳພາດຊຸມຊົນ, ກຸ່ມເປົ້າໝາຍສະເພາະ, ຄວາມຄິດເຫັນຂອງຜູ້ຊ່ຽວຊານ, ແລະ ກໍລະນີສຶກສາ. |
| **ການບັນເທົາເຫດໄພພິບັດ ແລະ ຕອບໂຕ້ຕໍ່ເຫດການສຸກເສີນ** | ການປະຕິບັດໂດຍກົງ ກ່ອນ, ໃນໄລຍະນັ້ນ ຫລື ຫລັງໄພພິບັດໃນທັນທີ ເພື່ອຊ່ວຍຊີວິດ, ຫລຸດຜ່ອນຜົນກະທົບຕໍ່ສຸຂະພາບ, ຮັບປະກັນຄວາມປອດໄພຂອງປະຊາຊົນ, ແລະ ຕອບສະໜອງຄວາມຕ້ອງການດ້ານການດຳລົງຊີວິດພື້ນຖານຂອງປະຊາຊົນທີ່ໄດ້ຮັບຜົນກະທົບ.[4] |
| **ການປະເມີນຜົນ** | ການປະເມີນຜົນຢ່າງເປັນລະບົບ ແລະ ມີຈຸດປະສົງ ສຳລັບໂຄງການ, ແຜນງານ ຫລື ນະໂຍບາຍ, ການອອກແບບ, ການປະຕິບັດ, ແລະ ຜົນຮັບ ທີ່ກຳລັງດຳເນີນການ ຫລື ສຳເລັດຜົນ . ຈຸດປະສົງແມ່ນ ເພື່ອກຳນົດຄວາມກ່ຽວຂ້ອງ ແລະ ການປະຕິບັດຕາມຈຸດປະສົງ, ປະສິດທິພາບການພັດທະນາ, ປະສິດທິຜົນ, ຜົນກະທົບ, ແລະ ຄວາມຍືນຍົງ. ການປະເມີນຜົນຄວນສະໜອງຂໍ້ມູນທີ່ມີຄວາມໜ້າເຊື່ອຖື ແລະ ເປັນປະໂຫຍດ, ເຮັດໃຫ້ການລວມເອົາບົດຮຽນທີ່ຖອດຖອນເຂົ້າໃນຂະບວນການຕັດສິນໃຈຂອງທັງຜູ້ໄດ້ທຶນສະໜັບສະໜູນ ແລະ ຜູ້ໃຫ້ທຶນ. ການປະເມີນຜົນຍັງໝາຍເຖິງຂັ້ນຕອນການກຳນົດມູນຄ່າ ຫລື ຄວາມສຳຄັນຂອງກິດຈະກຳ, ນະໂຍບາຍ, ຫລື ແຜນງານ. ການປະເມີນຜົນທີ່ເປັນລະບົບ ແລະ ຕາມຈຸດປະສົງທີ່ເປັນໄປໄດ້, ຂອງກິດຈະກຳທີ່ສ້າງຂຶ້ນຕາມທີ່ໄດ້ວາງແຜນໄວ້, ທີ່ສືບຕໍ່, ຫລື ເສົາເລັດຜົນ. |
| **ບົດບາດຍິງ-ຊາຍ/ເພດພາວະ** | ໝາຍເຖິງບົດບາດ, ພຶດຕິກຳ, ກິດຈະກຳ, ແລະ ຄຸນລັກສະນະທີ່ຖືກກຳນົດໄວ້ໃນສັງຄົມ, ແລະ ຄວາມສຳພັນລະຫວ່າງເພດຍິງ ແລະ ຊາຍ. ຄວາມບໍ່ສະເໝີພາບລະຫວ່າງບົດບາດຍິງ-ຊາຍ, ລວມທັງໂອກາດ, ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ ແລະ ການຕັດສິນໃຈແມ່ນໄດ້ຮັບອິດທິພົນຈາກວິທີການທີ່ສັງຄົມມີທັດສະນະຕໍ່ເພດຍິງ ແລະ ຊາຍໃນທຸກໆໄວ.[5] |
| **ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ** | ວິທີການການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແມ່ນຄຳນຶງເຖິງຄວາມຕ້ອງການສະເພາະທາງດ້ານເພດພາວະຂອງບຸກຄົນທັງໝົດ ຕາມປະເພດຂອງການທຳຮ້າຍ ແລະ ການຂູດຮີດທີ່ເຂົາເຈົ້າຖືກບັງຄັບ. ເຊິ່ງຊ່ວຍໃຫ້ພວກເຮົາອອກແບບ ແລະ ປະຕິບັດການຕອບສະໜອງ ແລະ ສ້າງກິດຈະກຳທີ່ເໝາະສົມກັບຄວາມຕ້ອງການເຫລົ່ານີ້. ໂດຍເພີ່ມຂີດຄວາມສາມາດຂອງພວກເຮົາ ເພື່ອແກ້ໄຂອັກຄະຕິທາງດ້ານບົດບາດຍິງ-ຊາຍ, ກຳນົດຂໍ້ມູນຂອງຜູ້ຖືກເຄາະຮ້າຍ 'ບໍ່ເໝາະສົມ', ສົ່ງເສີມການມີສ່ວນຮ່ວມຂອງເພດຊາຍ ແລະ ເດັກຊາຍໃນການແກ້ໄຂບັນຫາການຈຳແນກຂອງຄວາມເປັນຊາຍ ແລະ ຍິງ, ແລະ ແກ້ໄຂສາເຫດຂອງຄວາມຮຸນແຮງຕໍ່ເພດຍິງ ແລະ ເດັກຍິງ.[6] |
| **ຕົວຊີ້ວັດ** | ປັດໄຈດ້ານປະລິມານ ຫລື ຄຸນນະພາບ ຫລື ຕົວແປ ທີ່ສະໜອງວິທີການທີ່ງ່າຍດາຍ ແລະ ເຊື່ອຖືໄດ້ ເພື່ອວັດແທກຜົນສຳເລັດ, ສະທ້ອນໃຫ້ເຫັນການປ່ຽນແປງທີ່ເຊື່ອມຕໍ່ກັບບັນດາກິດຈະກຳ, ຫລື ເພື່ອຊ່ວຍປະເມີນການປະຕິບັດງານຂອງນັກພັດທະນາ. |

1 Santelli, J. Haerizadeh, S and McGovern, T (2017) ການມີສ່ວນຮ່ວມ ແລະ ການປົກປ້ອງ: ການຂໍຄວາມຍິນຍອມໂດຍມີຂໍ້ມູນຄົບຖ້ວນ ເວລາເຮັດການຄົ້ນຄວ້າກ່ຽວກັບເດັກນ້ອຍ, Innocenti Research Briefs, no. 2017-05, ຫ້ອງການຄົ້ນຄວ້າ ຂອງ UNICEF, Innocenti, Florence

2 ສົນທິສັນຍາອົງການ ສປຊ ວ່າດ້ວຍສິດທິເດັກ, 1989, ມາດຕາ 1; ASEAN, ASEAN ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ, Article 2

3 Cusveller J and Kleemans E (2018) 'ການຊົດເຊີຍທີ່ເປັນທຳໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ? ກໍລະນີສຶກສາ ກ່ຽວກັບ ການຮຽກຮ້ອງຈາກຄົນ Dutch, International Review of Victimology, 24(3):297-311. http://doi: 10.1177/0269758018758427

4 ຫ້ອງການຫຼຸດຜ່ອນຄວາມສ່ຽງໄພພິບັດທຳມະຊາດ ຂອງ ອົງການ ສປຊ (UNDRR) (n.d.) Our Work, accessed 1 October 2023.

5 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022

6 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022

| | |
|---|---|
| **ການຍິນຍອມໂດຍມີຂໍ້ມູນຄົບຖ້ວນ** | ການຕັດສິນໃຈຂອງບຸກຄົນໃດໜຶ່ງ, ໂດຍສະໝັກໃຈ, ຕົກລົງເຫັນດີກັບການສໍາພາດ, ການປິ່ນປົວ, ຂັ້ນຕອນ, ການຊ່ວຍເຫລືອ, ຫລື ກິດຈະກໍາອື່ນໆທີ່ເຮັດຂຶ້ນມາ. ຂໍ້ມູນທີ່ຊັດເຈນ ແລະ ເຂົ້າໃຈໄດ້ ກ່ຽວກັບຄວາມສ່ຽງ ແລະ ຜົນປະໂຫຍດຂອງກິດຈະກໍາທີ່ສະເໜີໄປ, ເຊັ່ນດຽວກັນກັບທາງເລືອກທີ່ມີຢູ່, ຕ້ອງໄດ້ຮັບການສະໜອງໃຫ້ຜູ້ຖືກເຄາະຮ້າຍ/ບຸກຄົນ ເພື່ອໃຫ້ສາມາດຕັດສິນໃຈໄດ້ຢ່າງຖືກຕ້ອງ. ຄວນມີນາຍພາສາໃຫ້ ເພື່ອໃຫ້ແນ່ໃຈວ່າບຸກຄົນນັ້ນເຂົ້າໃຈຂໍ້ມູນທີ່ໄດ້ຮັບໃນການສື່ສານ.[7] |
| **ຂໍ້ມູນ** | ດ້ານການເງິນ, ຊັບພະຍາກອນມະນຸດ ແລະ ວັດຖຸ/ເອກະສານທີ່ໃຊ້ໃນພັດທະນາກິດຈະກໍາ.[8] |
| **ເຊື່ອມສານເຂົ້າອົງການຈັດຕັ້ງ** | ເຊື່ອມສານເຂົ້າອົງການຈັດຕັ້ງ ໝາຍຄວາມວ່າການປ່ຽນແປງທີ່ຕ້ອງການ ໂດຍກາຍເປັນສ່ວນໜຶ່ງຂອງກິດຈະກໍາຢ່າງຕໍ່ເນື່ອງຂອງອົງການຈັດຕັ້ງ ຫລື ໜ່ວຍງານ ແລະ ທົດແທນສິ່ງທີ່ມີມາກ່ອນ.[9] |
| **ການຈໍາແນກແບບທັບຊ້ອນ** | ວິທີການເຊື່ອມໂຍງລັກສະນະຂອງບຸກຄົນ, ລວມທັງເພດພາວະ, ອາຍຸ, ແລະ ຄວາມພິການ. ຕົວຢ່າງ, ບຸກຄົນໃດໜຶ່ງອາດຈະໄດ້ຮັບການຈໍາແນກຍ້ອນບົດບາດຍິງ-ຊາຍ ແລະ ຄວາມພິການຂອງເຂົາເຈົ້າ. ນີ້ອາດຈະນໍາໄປສູ່ການຍົກເວັ້ນ ຫລື ຄວາມສ່ຽງເພີ່ມຂຶ້ນສໍາລັບບຸກຄົນນັ້ນ ແລະ ຮຽກຮ້ອງໃຫ້ມີການພິຈາລະນາຢ່າງລະອຽດ. ການຈໍາແນກແບບບທັບຊ້ອນ ຊີ້ໃຫ້ເຫັນເຖິງຄວາມສໍາຄັນຂອງການບໍ່ພິຈາລະນາດ້ວຍຄຸນລັກສະນະໃດໜຶ່ງໃນການຈໍາແນກ ແລະ ການຮັບຮອງເອົາວິທີການມີສ່ວນຮ່ວມຂອງສັງຄົມ. |
| **ແນວທາງການປະຕິບັດຫລັກ** | ການປະຕິບັດທີ່ສະທ້ອນ ຫລື ສອດຄ່ອງກັບທັດສະນະຄະຕິ ແລະ ຄ່ານິຍົມທີ່ມີຢູ່. |
| **ການຕິດຕາມ** | ສືບຕໍ່ນໍາໃຊ້ການເກັບກໍາຂໍ້ມູນ ຕົວຊີ້ວັດທີ່ກໍານົດໄວ້ ຢ່າງເປັນລະບົບ ເພື່ອໃຫ້ມີການຄຸ້ມຄອງ ແລະ ພາກສ່ວນກ່ຽວຂ້ອງໄດ້ສືບຕໍ່ໃນການພັດທະນາກິດຈະກໍາ ດ້ວຍການຊີ້ບອກໃຫ້ເຫັນເຖິງຂອບເຂດຂອງຄວາມຄືບໜ້າ ແລະ ຜົນສໍາເລັດຂອງເປົ້າໝາຍ ແລະ ຄວາມຄືບໜ້າໃນການຈັດສັນທຶນຮອນ. |
| **ຜົນໄດ້ຮັບຂອງໂຄງການ** | ຄວາມເປັນໄປໄດ້ ຫລື ອາດຈະສໍາເລັດໃນທັນທີ ແລະ ມີຜົນກະທົບໄລຍະກາງຈາກຜົນໄດ້ຮັບຂອງກິດຈະກໍາ. |
| **ຜົນໄດ້ຮັບຂອງກິດຈະກໍາ** | ຜະລິດຕະພັນ, ສິນຄ້າ ແລະ ການບໍລິການທີ່ເປັນຜົນມາຈາກກິດຈະກໍາຂອງການພັດທະນາກິດຈະກໍາ ແລະ ອາດຈະລວມເຖິງການປ່ຽນແປງທີ່ເປັນຜົນມາຈາກກິດຈະກໍາ. |
| **ຄົນທີ່ມີຄວາມພິການ** | ຄົນທີ່ມີຄວາມພິການລວມມີຜູ້ທີ່ມີຄວາມບົກຜ່ອງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ, ຫລື ຄວາມຮູ້ສຶກ ທີ່ເປັນໄລຍະຍາວ ເຊິ່ງພົວພັນກັບບັນດາອຸປະສັກຕ່າງໆໄດ້ເປັນສິ່ງກີດຂວາງເຂົາເຈົ້າໃນການ ໃນການມີສ່ວນຮ່ວມຢ່າງມີປະສິດທິພາບ ໃນສັງຄົມບົນພື້ນຖານເທົ່າທຽມກັນກັບຜູ້ອື່ນ.[10] |
| **ການກັບຄືນສູ່ສັງຄົມ** | ຂັ້ນຕອນການຟື້ນຟູ ແລະ ການມີສ່ວນຮ່ວມຕາມປະສົບການໃນຖືກຄ້າມະນຸດ.[11] |
| **ການຊົດເຊີຍຄ່າເສຍຫາຍ** | ສະໜອງວິທີການຊົດເຊີຍຄວາມເສຍຫາຍບາງຢ່າງໃຫ້ກັບຜູ້ຖືກເຄາະຮ້າຍ ແລະ ເພື່ອໃຫ້ເກີດມີວິທີການທາງສັງຄົມ ເພື່ອໃຫ້ ຜູ້ກະທໍາຜິດໄດ້ຮັບຜິດຊອບ, ພ້ອມສະເໜີຂອບເຂດການຟື້ນຟູຮັກສາທີ່ເປັນໄປໄດ້ຫລາຍທີ່ສຸດ. ເຊິ່ງລວມເຖິງການສົ່ງຄືນຊັບສິນ ຫລື ການຊໍາລະສໍາລັບຄວາມເສຍຫາຍ ຫລື ການສູນເສຍທີ່ໄດ້ຮັບ, ການຊົດເຊີຍຄືນຕໍ່ຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກການຕົກເປັນຜູ້ຖືກເຄາະຮ້າຍ, ການໃຫ້ບໍລິການ ແລະ ການຟື້ນຟູຄືນສິດຂອງຜູ້ຖືກລະເມີດ.[12] |
| **ການໄດ້ຮັບຄວາມບອບຊໍ້າດ້ານຈິດໃຈຊໍ້າຄືນ** | ກໍລະນີທີ່ຜູ້ຖືກເຄາະຮ້າຍປະສົບກັບຄວາມບອບຊໍ້າດ້ານຈິດໃຈອີກຄັ້ງໃນປະສົບການການຄ້າມະນຸດ. [13] |
| **ຜູ້ສະໜອງການບໍລິການ** | ບຸກຄົນ/ສະຖາບັນ/ໜ່ວຍງານ, ອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫລືອແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ໂດຍບໍ່ໄດ້ຈໍາກັດເພາະ ທີ່ລວມມີການຊ່ວຍເຫລືອທາງສັງຄົມ, ຈິດຕະສັງຄົມ, ການປິ່ນປົວ, ກົດໝາຍ, ການປົກປ້ອງ, ແລະ ການເປັນຢູ່ ເຊິ່ງການຊ່ວຍເຫລືອນັ້ນບໍ່ສະເພາະວ່າມາຈາກອົງການຈັດຕັ້ງລັດຖະບານ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.[14] |
| **ໃນການສ່ວນຮ່ວມໃນສັງຄົມ** | ຂະບວນການປັບປຸງຄວາມສາມາດ, ໂອກາດ, ກຽດສັກສີຂອງປະຊາຊົນ, ຜູ້ດ້ອຍໂອກາດຍ້ອນເພດພາວະ, ເຊື້ອຊາດ, ຊົນເຜົ່າ, ສາສະໜາ, ລົດສະນິຍົມທາງດ້ານເພດ, ຄວາມພິການ, ຫລື ສະຖານະພາບການເຄື່ອນຍ້າຍ ເພື່ອເຂົ້າມາມີສ່ວນຮ່ວມໃນສັງຄົມ.[15] |

7 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, 2022

8 Osman-Gani, A. M. and Jacobs, R. L. (2004). 'ການເຊື່ອມສານເພື່ອປ່ຽນແປງອົງການຈັດຕັ້ງ: ການສຶກສາ ກ່ຽວກັບ ກິດຈະກໍາການພັດທະນາຊັບພະຍາກອນມະນຸດ ຂອງ ບໍລິສັດສິງກະໂປ, ສະຫະລັດ ອາເມລິກາ, ຍີ່ປຸ່ນ ແລະ ເຢັຍລະມັນ. A Paper presented at the Academy of Human Resource Development International Conference (AHRD), Austin, TX, Mar 3-7, 2004, pp 482-489

9 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, 2022

10 ສົນທິສັນຍາ ອົງການ ສປຊ ວ່າດ້ວຍ ສິດທິຂອງຄົນທີ່ມີຄວາມພິການ, 1989, Article 1; ອາຊຽນ, ແຜ່ນແມ່ນບົດອາຊຽນເພື່ອເອື້ອອໍານວຍ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ, Febru ary 2019.

11 Surtees, R. M. Meshi, S, Tanellari, A. Lila and O. Hinaj (2022) ຂັ້ນຕອນການຟື້ນຟູ ແລະ ເຊື່ອມໂຍງຄືນສູ່ສັງຄົມ ສໍາລັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄູ່ມືການເຊື່ອມໂຍງຄືນສູ່ສັງຄົມ ສໍາລັບ ຜູ້ປະຕິດຕົວຈິງ. Tiranë: Different and Equal and Washington, D.C., NEXUS Institute

12 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, 2022

13 ASEAN, ຄູ່ມືການຄໍານຶງເຖິງບົດບາດຍິງ-ຊາຍ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເພດຍິງ, ຕຸລາ 2016.

14 ASEAN, ຄູ່ມືການຄໍານຶງເຖິງບົດບາດຍິງ-ຊາຍ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເພດຍິງ, ຕຸລາ 2016.

15 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, 2022

| | |
|---|---|
| **ມາດຕະຖານຂັ້ນຕອນການດຳເນີນງານ** | ສ້າງ ຫລື ກຳນົດວິທີການ ໂດຍຕິດຕາມເປັນປົກກະຕິ ເພື່ອປະຕິບັດງານທີ່ໄດ້ຮັບການມອບໝາຍ ຫລື ໃນສະຖານະການທີ່ໄດ້ກຳນົດໄວ້. |
| **ການຄ້າເດັກນ້ອຍ** | ການຄ້າເດັກນ້ອຍ, ເຊິ່ງລວມເຖິງບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ, ແມ່ນການຊອກຫາ, ການຂົນສົ່ງ, ການເຄື່ອນຍ້າຍ, ການຈັດທີ່ພັກອາໄສ, ຫລື ການຮັບເດັກນ້ອຍເພື່ອຈຸດປະສົງໃນການກົດຂີ່ຂູດຮີດ, ເຖິງແມ່ນວ່ານີ້ບໍ່ໄດ້ກ່ຽວຂ້ອງກັບວິທີການໃດໆທີ່ໄດ້ກຳນົດໄວ້ໃນຄຳນິຍາມ ຂອງການຄ້າມະນຸດ.[16] |
| **ການຄ້າມະນຸດ** | ໝາຍເຖິງການຊອກຫາ, ການຂົນສົ່ງ, ການເຄື່ອນຍ້າຍ, ການຈັດຫາທີ່ພັກອາໄສ, ຫລື ການຮັບເອົາຄົນເພື່ອຈຸດປະສົງໃນການກົດຂີ່ຂູດຮີດ ຫລື ການນຳໃຊ້ການບັງຄັບ ຫລື ຮູບແບບອື່ນໆຂອງການບັງຄັບ, ການລັກພາຕົວ, ການສໍ້ໂກງ, ການຫລອກລວງ, ການໃຊ້ອຳນາດ ຫລື ການໃຊ້ສວາຍອຳນາດ ຫລື ຕຳແໜ່ງ ເພື່ອໃຫ້ ຫລື ຮັບການສຳລະເງິນ ຫລື ຜົນປະໂຫຍດ ເພື່ອໃຫ້ໄດ້ຮັບຄວາມຍິນຍອມ ຫລື ຢັ້ງຢືນຈາກບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ, ຂອງຜູ້ມີອຳນາດໃນການຄວບຄຸມບຸກຄົນອື່ນ ເພື່ອກົດຂີ່ຂູດຮີດ. ການກົດຂີ່ຂູດຮີດລວມເຖິງການກົດຂີ່ຂູດຮີດຈາກການຄ້າປະເວນີຂອງບຸກຄົນອື່ນ ຫຼື ການກົດຂີ່ຂູດຮີດທາງເພດໃນຮູບແບບອື່ນບໍ່ວ່າຈະເປັນການບັງຄັບໃຊ້ແຮງງານ ຫລື ການບໍລິການ, ການເປັນທາດ, ຫລື ປະຕິບັດຄ້າຍຄືກັບການເປັນຂ້າທາດ, ການເປັນຂ້າທາດຮັບໃຊ້, ຫລື ການຄ້າອະໄວຍະວະຕ່າງໆຂອງຮ່າງກາຍ.[17] |
| **ຄວາມບອບຊ້ຳທາງດ້ານຈິດໃຈ** | ຜົນຄວາມບອບຊ້ຳທາງຈິດໃຈເກີດມາຈາກການສຳຜັດກັບເຫດການ ຫລື ບັນດາກິດຈະກຳ/ເຫດການທີ່ລົບກວນທາງຈິດໃຈ ຫລື ເປັນໄພຂົ່ມຂູ່ຕໍ່ຊີວິດທີ່ມີຜົນກະທົບທາງລົບຕໍ່ການເຮັດວຽກຂອງບຸກຄົນ ແລະ ຈິດໃຈ, ທາງດ້ານຮ່າງກາຍ, ສັງຄົມ, ຄວາມຮູ້ສຶກ, ແລະ / ຫລື ຈິດວິນຍານ ຄວາມເປັນຢູ່.[18] |
| **ການດູແລຄວາຮມບອບຊ້ຳທາງດ້ານຈິດໃຈ** | ຮັບຮູ້ຜົນກະທົບຈາກການປະສົບຄວາມບອບຊ້ຳທາງດ້ານຈິດໃຈ (ໂດຍສະເພາະ, ການໃຊ້ຄວາມຮຸນແຮງທາງຮ່າງກາຍ ຫລື ຈິດໃຈທີ່ອາດຮວມເຖິງການຖືກລ່ວງລະເມີດກ່ອນ ແລະ ໃນລະຫວ່າງການປະສົບພົບພໍ້ກັບຄ້າມະນຸດ) ຕໍ່ຊີວິດ ແລະ ພຶດຕິກຳຂອງບຸກຄົນ, ແລະ ຕໍ່ຄວາມຮັບຮູ້ຂອງຕົນເອງ ແລະ ຮ່າງກາຍຂອງເຂົາເຈົ້າ. ເຊິ່ງຮັບຮູ້ເຖິງສັນຍານ ແລະ ອາການຂອງຄວາມບອບຊ້ຳທາງດ້ານຈິດໃຈຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຊັ່ນດຽວກັນກັບວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໂດຍເນັ້ນໃສ່ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ແລະ ຄວາມປອດໄພ ແລະ ການປົກປ້ອງຕໍ່ນະໂຍບາຍ ແລະ ການປະຕິບັດທີ່ອາດຈະເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມບອບຊ້ຳທາງດ້ານຈິດໃຈ.[19] |
| **ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ** | ວິທີການເອົາຜູ້ຖືກເຄາະຮ້າຍເປັນຈກາງ ແມ່ນການສຸມໃສ່ຢ່າງເປັນລະບົບ ກ່ຽວກັບຄວາມຕ້ອງການ ແລະ ຄວາມກັງວົນຂອງຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນວ່າໄດ້ມີການໃຫ້ບໍລິການຢ່າງເຫັນອົກເຫັນໃຈ ແລະ ລະອຽດອ່ອນໃນລັກສະນະທີ່ບໍ່ມີການຕັດສິນ.[20] |
| **ຜູ້ຖືກເຄາະຮ້າຍ** | ເປັນບຸກຄົນທົ່ວໄປ ຜູ້ທີ່ຕົກຢູ່ໃນການລະເມີດທີ່ເຂົ້າຄ່າຍການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນ ACTIP.[21] |
| **ກຸ່ມສ່ຽງຕໍ່ການຄ້າມະນຸດ** | ບັນດາກຸ່ມຄົນຜູ້ທີ່ມີຄວາມສ່ຽງຕໍ່ການຄ້າມະນຸດ ອັນເນື່ອງມາຈາກຫລາຍປັດໃຈເຊັ່ນ: ສັນຊາດ, ສະຖານະພາບການແຕ່ງງານ, ເພດ, ຊົນຊາດ, ເຊື້ອຊາດ, ສາດສະໜາ, ລັດສະນິຍົມທາງເພດ, ອາຍຸ, ຄວາມພິການ, ຫລື ສະຖານະພາບການເຄື່ອນຍ້າຍຖິ່ນຖານ.[22] |
| **ພະຍານ** | ບຸກຄົນໃດໜຶ່ງທີ່ອາດລວມເຖິງຜູ້ຖືກເຄາະຮ້າຍ, ຜູ້ຮູ້ກ່ຽວກັບເຫດການທີ່ກ່ຽວຂ້ອງໃນຄະດີການຄ້າມະນຸດ.[23] |

16 United Nations ອະນຸສັນຍາ ອິງການ ສປຊ ວ່າດ້ວຍການປ້ອງກັນ, ສະກັດກັ້ນ ແລະ ລົງໂທດຜູ້ຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (The TIP Protocol), 2000, Article 3(c); ASEAN, ASEAN ສົນທິສັນຍາ ອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ, 2015, Article 2

17 ASEAN, ASEAN ສົນທິສັນຍາ ອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ Article 2(a).

18 ສູນຂໍ້ມູນຂ່າວສານ ເພື່ອຈັດຕັ້ງປະຕິບັດການຊ່ວຍເຫຼືອທີ່ຄຳນຶງເຖິງເຫດກະທົບຈິດໃຈຮ້າຍແຮງ (2023) ການຊ່ວຍເຫຼືອທີ່ຄຳນຶງເຖິງເຫດກະທົບຈິດໃຈຮ້າຍແຮງແມ່ນຫຍັງ? Accessed 31 October 2023.

19 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022

20 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022

21 ASEAN, ASEAN ສົນທິສັນຍາ ອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ, 2015, Article 2(e); ສົນທິສັນຍາ ອົງການ ສປຊ ວ່າດ້ວຍການຕ້ານອາຊະກຳທີ່ມີການຈັດຕັ້ງ (UNTOC) 2001;ສົນທິສັນຍາ ຂອງ ສະພາຄະນະກຳມາທິການເອີຣົບ ວ່າດ້ວຍການຕ້ານການຄ້າມະນຸດ, 2005

22 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022

23 ASEAN, ຄູ່ມືການຄຳນຶງເຖິງບົດບາດຍິງ-ຊາຍ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເພດຍິງ, October 2016

# ປະຫວັດຄວາມເປັນມາ

ຄະນະກຳມະທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍ (ACWC) ແມ່ນອົງການຈັດຕັ້ງລະຫວ່າງລັດຖະບານ ແລະ ເປັນພາກສ່ວນໜຶ່ງຂອງໂຄງຮ່າງອົງການຈັດຕັ້ງອາຊຽນ. ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2010 ເພື່ອປົກປ້ອງສິດທິຂອງແມ່ຍິງແລະ ເດັກນ້ອຍ. ACWC ໄດ້ຮ່ວມມືກັບແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT), ເພື່ອສົ່ງເສີມການຮັບຮອງເອົາການນຳໃຊ້ວິທີທີ່ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອຕ້ານການຄ້າມະນຸດ ແລະ ກິດຈະກຳຕ່າງໆໃນການຕອບໂຕ້ຕໍ່ການຄ້າມະນຸດ. ASEAN-ACT ສືບຕໍ່ໃຫ້ຄຳໝັ້ນສັນຍາຂອງລັດຖະບານອົດສະຕຣາລີ ໃນການສະໜັບສະໜູນການປະຕິບັດ ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ (ACTIP) ຢູ່ໃນພາກພື້ນ, ລະດັບຊາດ ແລະ ລະດັບອົງກອນ.

ອາຊຽນ ແລະ ACWC ຮ່ວມກັບ ASEAN-ACT ມຸ່ງໝັ້ນທີ່ຈະສົ່ງເສີມການນຳໃຊ້ວິທີການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນການຕ້ານການຄ້າມະນຸດ (TIP) ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ACTIP ທີ່ບັນດາ ປະເທດສະມາຊິກອາຊຽນທັງໝົດໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາດັ່ງກ່າວ. ACTIP ຊຸກຍູ້ໃຫ້ບັນດາປະເທດສະມາຊິກອາຊຽນປັບປຸງຄວາມມີປະສິດທິຜົນຂອງກົດ ໝາຍ, ນະໂຍບາຍ, ການບໍລິການ ແລະ ການຮ່ວມມືຢ່າງຕໍ່ເນື່ອງ, ແລະ ຫລຸດຜ່ອນຄວາມສ່ຽງທີ່ຈະເກີດໄພອັນຕະລາຍຕໍ່ຜູ້ຖືກເຄາະຮ້າຍຈາກ TIP. ເພື່ອບັນລຸຈຸດປະສົງເຫລົ່ານີ້, ACWC ໄດ້ສ້າງ 3 ຄູ່ມື ສໍາລັບການຕອບໂຕ້ຕໍ່ການຄ້າມະນຸດ ດັ່ງຂ້າງລຸ່ມນີ້:

- ຄຳແນະນຳ ແລະ ຂັ້ນຕອນປະຕິບັດລະດັບພາກພື້ນ ເພື່ອແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[24]
- ຄູ່ມືແນະນຳໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ,[25] ແລະ
- ຄູ່ມືອາຊຽນ ວ່າດ້ວຍການບໍ່ສ້າງໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ່ານໜ້າ: ການປົກປ້ອງສິດທິຂອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[26]

ເອກະສານແນະນຳສາມສະບັບນີ້ ໄດ້ເປັນເອກະສານອ້າງອີງ ແລະ ແນວທາງການປະຕິບັດທີ່ດີຂອງວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ໃນວຽກງານຕ້ານການຄ້າມະນຸດ. ແຕ່ເຖິງຢ່າງໃດກໍຕາມ, ມາຮອດປັດຈຸບັນ, ຂໍ້ມູນ ແລະ ຂ່າວສານກ່ຽວກັບການດຳເນີນການຈັດຕັ້ງປະຕິບັດຕາມຄຳແນະນຳເຫລົ່ານີ້ແມ່ນຍັງມີຂໍ້ຈຳກັດ. ຕໍ່ກັບບັນຫາດັ່ງກ່າວ, ACWC ດ້ວຍການສະໜັບສະໜູນຈາກແຜນງານ ASEAN-ACT ທີ່ໄດ້ມອບໝາຍໃຫ້ທີ່ປຶກສາດ້ານການມີສ່ວນພົວພັນ (EoE) ພັດທະນາລະບົບການຕິດຕາມ ແລະ ປະເມີນຜົນ (M&E) ແລະ ເຄື່ອງມື ເພື່ອສະໜັບສະໜູນຜູ້ນຳໃຊ້ ແລະ ການຕິດຕາມຄູ່ມືວິທີການທີ່ເອົາຜູ້ຖືກເຄາະຮ້າຍທີ່ເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ. ລະບົບ M&E ທີ່ຖືກພັດທະນາ ໂດຍປະກອບມີກອບວຽກຂອງຜົນໄດ້ຮັບ ແລະ ຕົວຊີ້ວັດ. ປຶ້ມຄູ່ມືນີ້ ແມ່ນເຄື່ອງມືທີ່ງ່າຍສໍາລັບພາກສ່ວນກ່ຽວຂ້ອງທີ່ຈະນຳໃຊ້ກອບການຕິດຕາມ ແລະ ການປະຕິບັດການຕິດຕາມຕໍ່ການຮັບຮອງນຳໃຊ້ ແລະ ການຈັດຕັ້ງປະຕິບັດວິທີການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງຂອງ TIP.

24 ACWC, ຄູ່ມື ແລະ ຂະບວນການພາກພື້ນ ເພື່ອຕອບສະໜອງຄວາມຕ້ອງການ ຂອງ ຜູ້ຖືກເຄາະຮ້າຍ ຈາກການູຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, 2018.
25 ASEAN, ຄູ່ມືການຄຳນຶງເຖິງບົດບາດຍິງ-ຊາຍ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເພດຍິງ, October 2016.
26 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, 2022

# ກ່ຽວກັບຄູ່ມືສະບັບນີ້

ACWC ໄດ້ຮັບມອບໝາຍໜ້າທີ່ໃນການພັດທະນາປຶ້ມຄູ່ມືສະບັບນີ້ ເພື່ອເປັນເຄື່ອງມືໃຫ້ແກ່ ACWC, ປະເທດສະມາຊິກອາຊຽນ, ອົງການຈັດຕັ້ງ, ໜ່ວຍງານ ແລະ ຄູ່ຮ່ວມງານອື່ນໆທີ່ສຳຄັນ ທີ່ເຮັດວຽກງານຕ້ານການຄ້າມະນຸດ ເພື່ອສະ ໜັບສະໜູນການປະເມີນຕົນເອງ ແລະ ລາຍງານກ່ຽວກັບຄວາມຄືບໜ້າໃນການຮັບຮອງນຳໃຊ້ຄູ່ມືການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ຂອງ ACWC.

ປຶ້ມຄູ່ມືສະບັບນີ້ໄດ້ຖືກອອກແບບ ແລະ ພັດທະນາຂຶ້ນ ເພື່ອສະໜອງຜົນປະໂຫຍດໃຫ້ແກ່ຜູ້ຊົມໃຊ້ທຸກຄົນ, ACWC ແລະ ບັນດາປະເທດສະມາຊິກອາຊຽນແມ່ນຊຸກຍູ້ຢ່າງໜັກແໜ້ນໃຫ້ນຳໃຊ້ຄູ່ມືດັ່ງກ່າວ ແຕ່ບໍ່ຖືວ່າເປັນພາກບັງຄັບ.

ປຶ້ມຄູ່ມືນີ້ເນັ້ນໃສ່ 40 TIP ທີ່ກ່ຽວກັບຜົນໄດ້ຮັບໄລຍະສັ້ນ, ເຊິ່ງໄດ້ມາຈາກຄູ່ມືການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ. ແຕ່ລະຜົນໄດ້ຮັບໄລຍະສັ້ນ ໄດ້ຖືກອະທິບາຍຢ່າງລະອຽດຢູ່ໃບດຽວ (ເບິ່ງຮູບ 1). ແຕ່ລະຜົນໄດ້ຮັບໄລຍະສັ້ນ ປະກອບມີຄຳອະທິບາຍ ແລະ ບັນທຶກເພີ່ມເຕີມທີ່ສະແດງໃຫ້ເຫັນເຖິງຜົນໄດ້ຮັບທີ່ຕັ້ງໄວ້. ເຊິ່ງມີຜົນໄດ້ຮັບໄລຍະປານກາງ ແລະ ໄລຍະຍາວ ເພື່ອຊ່ວຍໃຫ້ຜູ້ນຳໃຊ້ເຫັນໂອກາດໄລຍະຍາງ ເພື່ອການປັບປຸງຢ່າງຕໍ່ເນື່ອງ.

ໄລຍະເວລາສຳລັບຜົນໄດ້ຮັບໄລຍະສັ້ນ, ປານກາງ, ແລະ ໄລຍະຍາວແມ່ນແນະນຳດັ່ງນີ້:




ໄລຍະເວລາເຫລົ່ານີ້ໄດ້ຮັບການທົດສອບໂດຍຜ່ານການປຶກສາຫາລື ແລະ ທົບທວນໂດຍຄຳນຶງໃຫ້ເຫັນເຖິງໄລຍະເວລາທີ່ມັນອາດຈະຕ້ອງໄດ້ໃຊ້ ເພື່ອໃຫ້ບັນລຸຜົນໄດ້ຮັບແຕ່ລະອັນ. ໂດຍຮັບຮູ້ວ່າ, ໂດຍອີງຕາມສະພາບການ, ໄລຍະເວລາຂອງການບັນລຸຜົນສຳເລັດຂອງຜົນທີ່ໄດ້ຮັບນັ້ນ ອາດຈະແຕກຕ່າງກັນໄປຂຶ້ນກັບຜົນທີ່ໄດ້ຮັບໄລຍະສັ້ນນັ້ນແມ່ນອາດຈະສຳເລັດໄປແລ້ວ, ແລະ ບາງຜົນໄດ້ຮັບອື່ນໆແມ່ນໃຊ້ເວລາຫລາຍກວ່າ 2 ປີກວ່າຈະສຳເລັດ.

ປຶ້ມຄູ່ມືນີ້ຍັງຮວມເອົາເຄື່ອງມື ເພື່ອໃຫ້ຜູ້ນຳໃຊ້ສາມາດປະເມີນຄວາມຄືບໜ້າຂອງທີມງານ ຫລື ອົງກອນຂອງເຂົາເຈົ້າ ສຳລັບແຕ່ລະຜົນໄດ້ຮັບໄລຍະສັ້ນ. ຊຶ່ງອາດຈະໄດ້ເຮັດໂດຍກົງ ຜ່ານລາຍການກວດສອບຜົນໄດ້ຮັບໄລຍະສັ້ນ (ຮູບ 1) ແລະ ການຈັດລຽງທີ່ກ່ຽວຂ້ອງໂດຍນຳໃຊ້ຮູບແບບການສ້າງຂັ້ນຕອນການຈະເລີນເຕີບໃຫ່ຍ (Building Block Maturity Model) (ຮູບ 20.). ໂຕຊີ້ວັດຜົນໄດ້ຮັບຂອງກິດຈະກຳ ຍັງຖືກແນະນຳໃຫ້ກຳນົດປະເພດຂອງຂໍ້ມູນທີ່ອາດຈະເປັນປະໂຫຍດໃນການເກັບກຳ ແລະ ລາຍງານກ່ຽວກັບການປ້ອງກັນ ແລະ ຮັບມືກັບ TIP (ເບິ່ງເອກະສານຊ້ອນທ້າຍ 1). ຕົວຊີ້ວັດເຫລົ່ານີ້ ແມ່ນຖືກຕັ້ງໄວ້ໃນລະດັບສູງ ແລະ ອາດຈະສອດຄ່ອງກັບການເກັບກຳຂໍ້ມູນ ແລະ ການລາຍງານທີ່ມີຢູ່ພາຍໃນ ACWC, ປະເທດສະມາຊິກອາຊຽນ, ອົງການຈັດຕັ້ງ, ໜ່ວຍງານ ແລະ ຄູ່ຮ່ວມງານອື່ນໆທີ່ສຳຄັນ ທີ່ເຮັດວຽກງານຕ້ານການຄ້າມະນຸດ

ຫລັກການຄວາມສະເໝີພາບບົດບາດຍິງ-ຊາຍ, ຄວາມພິການ ແລະ ການຮວມເອົາທຸກຄົນໃນສັງຄົມ (GEDSI) ໄດ້ຖືກລວມເຂົ້າໃນປຶ້ມຄູ່ມືສະບັບນີ້ ເຊິ່ງເປັນສ່ວນໜຶ່ງຂອງ ACWC ແລະ ອາຊຽນ ທີ່ເນັ້ນໃສ່ວິທີການທີ່ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງໃນວຽກງານຕ້ານການຄ້າມະນຸດ ແລະ ກິດຈະກຳຕອບໂຕ້ຕໍ່ການຄ້າມະນຸດ. ໂດຍລວມມີການປະຕິບັດທີ່ບໍ່ຈຳແນກຕໍ່ ກຸ່ມທີ່ມີຄວາມສ່ຽງໂດຍອີງໃສ່ໜຶ່ງ ຫລື ຫລາຍປັດໃຈ ເຊັ່ນ: ອາຍຸ, ຄວາມສາມາດ, ຊົນເຜົ່າ, ສາດສະໜາ, ການສຶກສາ, ສຸຂະພາບ, ເພດ, ແລະ ລັກສະນະທາງດ້ານເພດ (ເບິ່ງເອກະສານຊ້ອນທ້າຍ 2)

# ວິທີການພັດທະນາຄູ່ມືສະບັບນີ້

ຫຼັກຊີ້ເຂດສຳຄັນຂອງວຽກງານຕ້ານການຄ້າມະນຸດ ແລະ ກິດຈະກຳໃນການຕອບໂຕ້ ແມ່ນໄດ້ຖືກນຳໃຊ້ເພື່ອຈັດສ້າງປຶ້ມຄູ່ມື ແລະ ພາຍໃຕ້ກອບວຽກຂອງ M&E. ເນື້ອໃນເຫລົ່ານີ້ໄດ້ຖືກດັດປັບມາຈາກ ACTIP, ແຜນປະຕິບັດງານອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ແລະ ຄູ່ມືອາຊຽນ ວ່າດ້ວຍການບໍ່ເຮັດໄພອັນຕະລາຍສຳລັບເຈົ້າໜ້າທີ່ດ້ານໜ້າ ໃນການປົກປ້ອງສິດທິ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ[27]. ແຕ່ລະອັນແມ່ນໄດ້ອະທິບາຍໄວ້ຂ້າງລຸ່ມນີ້:

### 1. ການສ້າງຄວາມຮັບຮູ້ ແລະ ການປ້ອງກັນການຄ້າມະນຸດ

ຍຸດທະສາດການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP ມີຈຸດປະສົງເພື່ອປ້ອງກັນ, ຕ້ານ, ແລະ ສະກັດກັ້ນ TIP ຢ່າງມີປະສິດທິຜົນ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ. ຂໍ້ລິເລີ່ມໃນການປ້ອງກັນ ເພື່ອສ້າງຄວາມຮັບຮູ້ຂອງປະຊາຊົນ ແລະ ຫລຸດຜ່ອນຄວາມສ່ຽງຕໍ່ການຄ້າມະນຸດ. ຊຶ່ງລວມມີ ແລະ ບໍ່ຈຳກັດ, ກ່ຽວກັບການດຳເນີນການໂຄສະນາປູກຈິດສຳນຶກ ເພື່ອໃຫ້ຄວາມຮູ້ແກ່ທຸກພາກສ່ວນຂອງສັງຄົມ ແລະ ການເຊື່ອມໂຍງກັບການລະເມີດສິດທິມະນຸດ, ໂດຍກຳນົດເປົ້າໝາຍທີ່ມີຄວາມສ່ຽງທີ່ສຸດ ໂດຍການມີສ່ວນຮ່ວມຂອງສື່ມວນຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ພາກເອກະຊົນ, ແລະ ຜູ້ນຳຊຸມຊົນ ເພື່ອປັບປຸງຄວາມສະເໝີພາບທາງສັງຄົມ, ຄວາມເທົ່າທຽມກັນ ແລະ ການແກ້ໄຂຄວາມທຸກຍາກ, ການປະຕິຮູບຂະແໜງການຕ່າງໆ ເຊັ່ນ: ເສັ້ນທາງການເຄື່ອນຍ້າຍແຮງງານທີ່ປອດໄພ, ແລະ ກົນໄກການລາຍງານ TIP (ເຊັ່ນ: ການນຳໃຊ້ສາຍດ່ວນ). ການປ້ອງກັນ ແລະ ປູກຈິດສຳນຶກຍັງໝາຍເຖິງການຮັບຮອງນຳໃຊ້ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ຖ້າມີ, ເພື່ອກຳນົດ ແລະ ຈັດບູລິມະສິດບັນດານະໂຍບາຍ ແລະ ແຜນງານທີ່ສຳຄັນ ເພື່ອແນໃສ່ການປ້ອງກັນ TIP, ແລະ ເພີ່ມທະວີການຈັດຕັ້ງປະຕິບັດ ແລະ ການປະສານງານ ແລະ ກົນໄກການຕິດຕາມແຜນງານດັ່ງກ່າວ.[28]

### 2. ການກຳນົດຕົວຕົນ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ ແມ່ນຂະບວນການທີ່ບຸກຄົນໃດໜຶ່ງຖືກກຳນົດຕົວວ່າເປັນຜູ້ເຄາະຮ້າຍຈາກການຄ້າມະນຸດ, ເຊິ່ງໃນທາງກົງກັນຂ້າມ, ຕ້ອງເຮັດໃຫ້ເຂົາເຈົ້າໄດ້ຮັບສິດ ແລະ ການບໍລິການການຊ່ວຍເຫລືອ ແລະ ການປົກປ້ອງ, ເຊັ່ນ: ການບໍລິການທາງດ້ານການແພດ ແລະ ດ້ານສາທາລະນະສຸກອື່ນໆ, ທີ່ພັກເຊົາ, ອາຫານ, ແລະ ຄວາມຕ້ອງການພື້ນຖານ, ການໃຫ້ຄຳປຶກສາ, ແລະ ການດູແລທາງດ້ານຈິດໃຈ. ການກຳນົດຕົວທີ່ຖືກຕ້ອງ ແລະ ທັນເວລາ ຈະອຳນວຍຄວາມສະດວກໃນການຊ່ວຍເຫລືອ ແລະ ສະໜອງການດູແລຜູ້ຖືກເຄາະຮ້າຍໃຫ້ທັນເວລາ. ຊຶ່ງສິ່ງນີ້ມັນຂັດຂວາງຂະບວນການຄ້າມະນຸດ ແລະ ສະໜັບສະໜູນການສືບສວນ-ສອບສວນ ແລະ ການດຳເນີນຄະດີແກ່ຜູ້ກະທຳຜິດ.[29]

### 3. ການສະທ້ອນຄືນ, ການຟື້ນຟູ ແລະ ດ້ານທີ່ພັກອາໄສ

ໄລຍະເວລາການຟື້ນຟູ ແລະ ການສະທ້ອນຄືນ ເຮັດໃຫ້ຜູ້ຖືກເຄາະຮ້າຍໃຊ້ເວລາເພື່ອຟື້ນຕົວຈາກປະສົບການຂອງເຂົາເຈົ້າ ເພື່ອຊ່ວຍໃຫ້ເຂົາເຈົ້າເລີ່ມຕົ້ນຟື້ນຟູທາງດ້ານຮ່າງກາຍ, ຈິດໃຈ, ຈິດວິນຍານ, ແລະ ຄວາມເປັນຢູ່ທາງສັງຄົມຂອງເຂົາເຈົ້າ. ດ້ານສູນພັກເຊົາທີ່ເປັນແບບສະໝັກໃຈ ຫລື ມີຄວາມເໝາະສົມທາງວັດທະນະທຳ ຫລື ສະຖານທີ່ພັກເຊົາຊົ່ວຄາວ ຈະສະໜອງ ສະພາບແວດລ້ອມທີ່ປອດໄພສຳລັບຜູ້ຖືກເຄາະຮ້າຍຈາກ TIP ເພື່ອໃຫ້ເຂົາເຈົ້າສາມາດເຂົ້າເຖິງການບໍລິການທີ່ຈຳເປັນ ເພື່ອການຟື້ນຟູ ແລະ ຊ່ວຍເຫລືອໃນການດຳເນີນຄະດີທາງກົດໝາຍ. ໃນໄລຍະເວລານີ້, ຜູ້ຖືກເຄາະຮ້າຍສາມາດພິຈາລະນາຂໍ້ມູນທັງໝົດ ແລະ ທາງເລືອກທີ່ມີຢູ່ ຢ່າງເໝາະສົມ.[30]

### 4. ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ

ການສົ່ງຜູ້ຖືກເຄາະຮ້າຍກັບຄືນສູ່ບ້ານຂອງເຂົາເຈົ້າ ຄວນຈະມີຄວາມປອດໄພ ແລະ ມີກຽດສັກສີ, ໂດຍຄຳນຶງເຖິງຄວາມເປັນສ່ວນຕົວ ແລະ ບໍ່ເປີດເຜີຍຕົວຕົນຂອງເຂົາເຈົ້າ. ການກັບຄືນຂອງຜູ້ຖືກເຄາະຮ້າຍໃດໆກໍຕາມ ຄວນຈະເປັນໄປດ້ວຍການສະໝັກໃຈ. ຜູ້ຖືກເຄາະຮ້າຍທີ່ຕ້ອງການກັບຄືນບ້ານ ຄວນໄດ້ຮັບການຊ່ວຍເຫລືອໃນການດຳເນີນການດັ່ງກ່າວຢ່າງປອດໄພໂດຍບໍ່ໃຫ້ມີຄວາມຊັກຊ້າເກີນໄປ ຫລື ເຫດຜົນອື່ນໆ. ສຳລັບຜູ້ທີ່ບໍ່ສາມາດກັບຄືນບ້ານໄດ້, ໂດຍສະເພາະຖ້າອາດຈະເປັນອັນຕະລາຍຕໍ່ຄວາມປອດໄພ ແລະ ຊີວິດຂອງເຂົາເຈົ້າ, ໃຫ້ຊອກຫາທາງເລືອກອື່ນ.[31]

27 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022
28 ASEAN, ແຜນດຳເນີນງານ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ, 2015, pp 5-6.
29 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022
30 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022.
31 ACWC, ຄູ່ມືບໍ່ເຮັດໄພອັນຕະລາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, 2022

## 5. ການຊ່ວຍເຫລືອດ້ານການແພດ ແລະ ສຸຂະພາບຈິດໃຈ

ສິດທິພື້ນຖານດ້ານສຸຂະພາບ ເປັນສິດທິຂັ້ນພື້ນຖານຂອງມະນຸດ. ສໍາລັບຜູ້ຖືກເຄາະຮ້າຍຈາກ TIP, ການເຂົ້າເຖິງການດູແລທາງການແພດ ແລະ ດ້ານຈິດໃຈແມ່ນສິ່ງທີ່ສໍາຄັນ. ຜູ້ຖືກເຄາະຮ້າຍຈາກ TIP ອາດຈະມີບັນຫາດ້ານສຸຂະພາບເລັກນ້ອຍ ຫລື ຮ້າຍແຮງ. ສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າອາດຈະໄດ້ຮັບຜົນກະທົບໂດຍຜ່ານເງື່ອນໄຂຂອງການຂູດຮີດ ຫລື ການທໍາຮ້າຍໂດຍກົງ, ລວມທັງການບັງຄັບໃຫ້ເສບຢາ, ທີ່ເປັນມາດຕະການໃນການຄວບຄຸມ. ບາງຄົນອາດຕິດເຊື້ອພະຍາດຕິດຕໍ່ ຫລື ກາຍເປັນຄົນພິການທາງຮ່າງກາຍໃນລະຫວ່າງການຄ້າມະນຸດ. ແມ່ຍິງ ແລະ ເດັກຍິງທີ່ຖືກຂູດຮີດທາງເພດອາດຈະຕິດເຊື້ອພະຍາດຕິດຕໍ່ທາງເພດສໍາພັນ ແລະ/ຫລື ຖືພາ[32]

## 6. ຂະບວນການຍຸຕິທໍາ

ຄູ່ມື ແລະ ຫລັກການ ທີ່ແນະນໍາຂອງອົງການສະຫະປະຊາຊາດ ວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດຮຽກຮ້ອງໃຫ້ປະເທດສະມາຊິກຂອງອົງການສະຫະປະຊາຊາດ[33] ປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍລະບຸວ່າເຂົາເຈົ້າເປັນຜູ້ຖືກເຄາະຮ້າຍຈາກອາດຊະຍາກໍາ, ຊຶ່ງສົ່ງຜົນໃຫ້ເຈົ້າເຂົາບໍ່ໄດ້ຖືກປະຕິບັດວ່າເປັນອາດຊະຍາກອນ ແລະ ເປັນພຽງແຕ່ພະຍານຫລັກຖານເທົ່ານັ້ນ ໃນເວລາທີ່ເຂົາເຈົ້າເຂົ້າຮ່ວມໃນຂະບວນການຍຸຕິທໍາ. ຜູ້ຖືກເຄາະຮ້າຍມີທາງເລືອກທີ່ຈະເຂົ້າຮ່ວມ ຫລື ບໍ່ເຂົ້າຮ່ວມຂະບວນການຍຸຕິທໍາ. ແນວທາງ ແລະ ຂັ້ນຕອນການປະຕິບັດໃນລະດັບພາກພື້ນຂອງອາຊຽນ[34] ສະທ້ອນໃຫ້ເຫັນເຖິງມາດຕະການສາກົນ ໂດຍຢືນຢັນວ່າຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນທີ່ເຂົ້າຮ່ວມຂະບວນການຍຸຕິທໍາໄດ້ຮັບການປົກປ້ອງ, ສະໜັບສະໜູນ ແລະ ຊ່ວຍເຫລືອ ຢ່າງພຽງພໍ ຕາມທີ່ໄດ້ກໍານົດໃນກົດໝາຍ ໃນຕະຫລອດໄລຍະເວລາມີສ່ວນຮ່ວມໃນຂະບວນການດໍາເນີນຄະດີ ແລະ ສາມາດຢຸດຕິການມີສ່ວນຮ່ວມຂອງເຂົາເຈົ້າໃນຕອນໃດກໍໄດ້.

ອີງຕາມພັນທະຂອງ ACTIP, ປະເທດສະມາຊິກອາຊຽນ ຈະພິຈາລະນາຮັບຮອງເອົານິຕິກໍາ ຫລື ມາດຕະການທີ່ເໝາະສົມອື່ນໆ ທີ່ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢູ່ໃນດິນແດນຂອງຕົນ, ຊົ່ວຄາວ ຫລື ຖາວອນ ແລະ ຈະພິຈາລະນາການສະໜັບສະໜູນ ແລະ ການເບິ່ງແຍງຜູ້ເຄາະຮ້າຍຕາມຫລັກການມະນຸດສະທໍາ ແລະ ຄວາມເຫັນອົກເຫັນໃຈ, ລວມທັງຄວາມປອດໄພທາງຮ່າງກາຍ, ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ. ລັດສະມາຊິກອາຊຽນຈະບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກ TIP ຮັບຜິດຊອບທາງອາຍາ ຫລື ຮັບໂທດທາງບໍລິຫານ ທີ່ເຂົາເຈົ້າໄດ້ກະທໍາຄວາມຜິດຕໍ່ກົດໝາຍ ອັນເນື່ອງມາຈາກຜູ້ຖືກເຄາະຮ້າຍໄດ້ກະທໍາໃນລະຫວ່າງມີການການຄ້າມະນຸດ ແລະ ບໍ່ໃຫ້ເຂົາເຈົ້າຖືກກັກຂັງ ຫລື ເຂົ້າຄຸກ, ກ່ອນ, ໃນລະຫວ່າງ, ຫລື ຫລັງຈາກການດໍາເນີນຄະດີແພ່ງ, ຄະດີອາຍາ, ຫລື ຂະບວນການທາງບໍລິຫານ.

ACTIP ຮຽກຮ້ອງໃຫ້ບັນດາປະເທດສະມາຊິກອາຊຽນ ຮັບປະກັນວ່າລະບົບກົດໝາຍພາຍໃນປະເທດຂອງຕົນມີມາດຕະການທີ່ໃຫ້ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບຄ່າຊົດເຊີຍ ແລະ/ຫລື ການຊົດໃຊ້ຄວາມເສຍຫາຍ ເທົ່າທີ່ເປັນໄປໄດ້. ເພື່ອໃຫ້ສາມາດບັນລຸບັນສິ່ງທ້າທາຍຕ່າງໆໃນການປະຕິບັດການຊົດເຊີຍຄ່າເສຍຫາຍໃຫ້ຜູ້ຖືກເຄາະຮ້າຍ ແລະ/ຫລື ການທົດແທນຄືນນັ້ນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນໄດ້ຮັບການສະໜອງການຊ່ວຍເຫລືອທາງດ້ານກົດໝາຍ ແລະ ທາງດ້ານວັດຖຸ ເພື່ອເຮັດໃຫ້ເຂົາເຈົ້າສາມາດຮັບຮູ້ສິດທິຂອງເຂົາເຈົ້າໃນການໄດ້ຮັບການປຽວຢາທີ່ພຽງພໍ ແລະ ເໝາະສົມ, ລວມທັງການສ້າງຕັ້ງກອງທຶນແຫ່ງຊາດ. ໜ່ວຍງານພິເສດວ່າດ້ວຍການຕ້ານ TIP ທີ່ຢູ່ນັ້ນ ແລະ ການຮ່ວມມືກັບໜ່ວຍງານທີ່ບໍ່ແມ່ນໜ່ວຍງານຍຸຕິທໍາ ລວມທັງອົງການອົງການຈັດຕັ້ງທາງສັງຄົມ (CSOs) ແມ່ນຖືວ່າມີຄວາມສໍາຄັນໃນການຊຸກຍູ້ ຫລື ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຖືກເຄາະຮ້າຍ ຫລື ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກ TIP ເພື່ອໃຫ້ເຂົາເຈົ້າເຂົ້າຮ່ວມໃນຂະບວນການຍຸຕິທໍາທາງອາຍາ.

ຖ້າເປັນໄປໄດ້, ແຫລ່ງຂໍ້ມູນ ແລະ ເອກະສານສິ່ງພິມຕ່າງໆຂອງອາຊຽນທີ່ມີຢູ່ນັ້ນ ຄວນມີການແຈ້ງໃຫ້ຊາບກ່ຽວກັບເນື້ອໃນ, ພາສາ ແລະ ໂຄງຮ່າງຂອງປຶ້ມມຄູ່ມືເຫລັ້ມນີ້. ຊຶ່ງລວມມີ ACTIP ແລະ ແຜນແມ່ບົດການສົ່ງເສີມອາຊຽນປີ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ[35].

ການປຶກສາຫາລືຢ່າງເປີດກວ້າງໄດ້ຖືກມານໍາໃຊ້ໃນການພັດທະນາປຶ້ມຄູ່ມືນີ້. ໂດຍນໍາໃຊ້ວິທີວິທີການປະເມີນຜົນແບບມີສ່ວນຮ່ວມຢ່າງເປັນລະບົບ ກ່ຽວກັບບົດບາດຍິງ-ຊາຍ, ສະພາບແວດລ້ອມ ແລະ ກະບອກສຽງຂອງກຸ່ມດ້ອຍໂອກາດ ຂອງອົງການ ສປຊ ເພື່ອແມ່ຍິງ (ISE4GEMs), ໄດ້ດໍາເນີນກອງປະຊຸມປຶກສາຫາລື ແລະ ການສໍາພາດຜູ້ໃຫ້ຂໍ້ມູນຫລັກ (KIIs) ທັງໝົດ 4 ຄັ້ງ ໂດຍມີຜູ້ເຂົ້າຮ່ວມຫລາຍກວ່າ 270 ຄົນ ໂດຍມີຜູ້ຊ່ຽວຊານດ້ານ TIP ໃນປະເທດສະມາຊິກອາຊຽນ, ສະມາຊິກ ACWC, ຄະນະບໍລິຫານ ແລະ ທີມງານລະດັບປະເທດຂອງແຜນງານ ASEAN-ACT, ລັດຖະບານ, ແລະ ອົງການຈັດຕັ້ງທາງສັງຄົມ (CSOs). ກອງປະຊຸມປຶກສາຫາລືພາກພື້ນຮ່ວມກັບກັບຜູ້ຕາງໜ້າ ACWC 3 ຄັ້ງ ແລະ ກອງປະຊຸມລະດັບຊາດ 6 ກອງປະຊຸມ ທີ່ໄດ້ຈັດຂຶ້ນຢູ່ ອິນໂດເນເຊຍ, ໄທ, ຫວຽດນາມ ໂດຍມີຜູ້ເຂົ້າຮ່ວມ 200 ກວ່າຄົນ; ເພດຊາຍ 58 ຄົນ, ເພດຍິງ 143 ຄົນ ແລະ 01 ຄົນທີ່ບໍ່ລະບຸເພດ. ຄໍາຄິດເຫັນຈາກກອງປະຊຸມດັ່ງກ່າວນັ້ນ, ໄດ້ມີການດໍາເນີນແບບ KIIs ແລະ ແບບກຸ່ມເປົ້າໝາຍ ເພື່ອທົບທວນຄືນ ແລະ ປັບປຸງກອບຄູ່ມື, ເນື້ອໃນ, ແລະ ການນໍາໃຊ້ສໍາລັບທຸກພາກສ່ວນ.

32 ACWC, ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, 2022.
33 ຫ້ອງການ ຄະນະກໍາມະການລະດັບສູງ ຂອງ ອົງການ ສປຊ ເພື່ອສິດທິມະນຸດ ຫຼັກການແນະນໍາ ແລະ ຄູ່ມື ກ່ຽວກັບ ສິດທິມະນຸດ ແລະ ການຕ້ານການຄ້າມະນຸດ, 2002
34 ACWC, ຄູ່ມື ແລະ ຂະບວນການພາກພື້ນ ເພື່ອຕອບສະໜອງຄວາມຕ້ອງການ ຂອງ ຜູ້ຖືກເຄາະຮ້າຍ ຈາກການູຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, 2018.
35 ASEAN, ແຜ່ນແມ່ນບົດອາຊຽນເພື່ອເອື້ອອໍານວຍ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ, ກຸມພາ 2019

# ກຸ່ມເປົ້າໝາຍທີ່ໄດ້ຕັ້ງໄວ້

ປຶ້ມຄູ່ມືສະບັບນີ້ແມ່ນມີຈຸດປະສົງເພື່ອນຳໃຊ້ໂດຍ ACWC ແລະ ຂະແໜງການທີ່ກ່ຽວຂ້ອງ, ປະເທດສະມາຊິກອາຊຽນ, ອົງການຈັດຕັ້ງ, ໜ່ວຍງານ, ແລະ ຄູ່ຮ່ວມງານອື່ນໆ ທີ່ເຮັດວຽກງານຕ້ານ TIP ເພື່ອປະຕິບັດການຕິດຕາມການຮັບຮອງນຳໃຊ້ ແລະ ການປະຕິບັດວິທີການທີ່ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງຂອງວຽກງານຕ້ານ TIP.

ປຶ້ມຄູ່ມືສະບັບນີ້ ສາມາດນຳໃຊ້ໄດ້ຢ່າງຫລາກຫລາຍ ຂຶ້ນກັບຂົງເຂດວຽກງານ ແລະ ຄວາມຮັບຜິດຊອບຂອງຄູ່ຮ່ວມງານ ຊຶ່ງເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມໃນໜຶ່ງ ຫລື ຫລາຍຂົງເຂດທີ່ກ່ຽວກັບໜ້າວຽກຂອງເຂົາເຈົ້າ. ໂດຍຂຶ້ນກັບຂົງເຂດວຽກງານຂອງອົງການ ຫລື ໜ່ວຍງານ, ຊຶ່ງອາດແຕກຕ່າງກັນໄປ ເຊິ່ງລວມເຖິງເຈົ້າໜ້າທີ່ຜູ້ຕອບໂຕ້ດ້ານໜ້າ, ການລາຍງານ ຫລື ຂໍ້ມູນພະນັກງານ ແລະ ການຄຸ້ມຄອງ.

ປະເພດຂອງອົງການຈັດຕັ້ງ, ຫົວໜ່ວຍ ແລະ ຄູ່ຮ່ວມງານທີ່ເຮັດວຽກງານຕ້ານ TIP ທີ່ອາດຈະໃຊ້ປຶ້ມຄູ່ມືນີ້ໂດຍບໍ່ຈຳກັດ ເຊິ່ງລວມມີ:

- ໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ພະນັກງານ
- ສານ ແລະ ພະນັກງານສານ
- ໜ່ວຍງານທີ່ກ່ຽວຂ້ອງຂອງທີ່ເປັນປະເທດສະມາຊິກອາຊຽນ
- ພາກສ່ວນໃຫ້ບໍລິການທີ່ກ່ຽວຂ້ອງ ແລະ ພະນັກງານ<br>(ຕົວຢ່າງ: ການບໍລິການດ້ານກົດໝາຍ, ສູນພັກເຊົາ ແລະ ການແພດ, ອື່ນໆ)
- ອົງການຈັດຕັ້ງທີ່ໃຫ້ການສະໜັບສະໜູນTIP ແລະ ພະນັກງານ
- ຜູ້ປະຕິບັດຕົວຈິງດ້ານການຕິດຕາມ ແລະ ປະເມີນຜົນ
- ບັນດາຂະແໜງການຕ່າງໆຂອງຄະນະກຳມະການອາຊຽນ
- ACWC ແລະ ກອງເລຂາ ປະຈຳອາຊຽນ

# ວິທີນຳໃຊ້ປື້ມຄູ່ມືສະບັບນີ້

ນີ້ແມ່ນປື້ມຄູ່ມືຖືກສ້າງຂື້ນ ເພື່ອເພີ່ມປະສິດທິພາບການນຳໃຊ້ ໂດຍການລວມເອົາຂໍ້ມູນທີ່ກ່ຽວຂ້ອງທັງໝົດກ່ຽວກັບຜົນໄດ້ຮັບໄລຍະສັ້ນແຕ່ລະອັນ ຈັດໃສ່ເອກະສານໜຶ່ງໜ້າ (ເບິ່ງຮູບ 1). ແຕ່ລະໜ້າປະກອບມີ:

- ຂົງເຂດສຳຄັນ ແລະ ການລະບຸສັນຍາລັກ
- ຕົວເລກຂອງຜົນໄດ້ຮັບໄລຍະສັ້ນ
- ຜົນໄດ້ຮັບໄລຍະສັ້ນ
- ອ້າງອີງເຖິງຂໍ້ທີ່ກ່ຽວຂ້ອງ ກັບເອກະສານກ່ຽວກັບການຄຳນຶງເຖິງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການຜູ້ຖືກເຄາະຮ້າຍເປັນໃຈກາງຂອງອາຊຽນ ທີ່ເປັນແຫລ່ງຂໍ້ມູນ.
- ລາຍລະອຽດ ແລະ ຄຳອະທິບາຍຂອງຜົນໄດ້ຮັບໄລຍະສັ້ນ
- ຂອບເຂດຂອງຜົນໄດ້ຮັບໄລຍະສັ້ນ ທີ່ໃຫ້ຂໍ້ມູນຢ່າງເລິກເຊິ່ງ ກ່ຽວກັບການນຳໃຊ້ຜົນໄດ້ຮັບດັ່ງກ່າວ.
- ລາຍການກວດສອບທີ່ສະຫລຸບຄຳອະທິບາຍ ແລະ ຂອບເຂດ: ຜູ້ນຳໃຊ້ສາມາດກວດສອບລາຍການທີ່ອີງກອນຂອງຕົນສາມາດບັນລຸໄດ້.
- ກອບການປະເມີນຄວາມຄືບໜ້າ: ຜູ້ນຳໃຊ້ສາມາດປະເມີນການຈັດຕັ້ງປະຕິບັດຂອງຕົນເອງໄດ້ ໃນແຕ່ລະຜົນໄດ້ຮັບໄລຍະສັ້ນ ໂດຍຜ່ານແຕ່ລະຂັ້ນຂອງຄວາມຄືບໜ້າຂອງວຽກງານ ເຊັ່ນ ປະເມີນຕອນບໍ່ມີຄວາມຄືບໜ້າ, ໄລຍະຕົ້ນ, ໃນໄລຍະລະດັບໃດໜຶ່ງ ແລະ ມີຄວາມຄືບໜ້າທີ່ກ້າວກະໂດດ ເຮັດໃຫ້ສາມາດກຳນົດພື້ນທີ່ຂອງຄວາມເຂັ້ມແຂງ ແລະ ກາລະໂອກາດໃນການປັບປຸງ (ເບິ່ງຮູບ. 2).
- ຜົນໄດ້ຮັບໄລຍະກາງ (5-2 ປີ) ແລະ ໃນໄລຍະຍາວ (+5 ປີ); ໃຫ້ຜູ້ນຳໃຊ້ມີທັດສະນະໄລຍະຍາວຕໍ່ກັບການປະກອບສ່ວນຜົນສຳເລັດໄລຍະຍາວໃນຜົນໄດ້ຮັບໄລຍະສັ້ນ.

ຮູບທີ 1: ຕົວຢ່າງຂອງຜົນໄດ້ຮັບໄລຍະສັ້ນໃນປຶ້ມຄູ່ມືສະບັບນີ້

ລາຍການກວດກາ: ຈຸດທີ່ສະແດງໃຫ້ເຫັນຜົນທີ່ໄດ້ຮັບ

ຂົງເຂດສຳຄັນ ແລະ ການລະບຸສັນຍະລັກ

ຕົວເລກສະເພາະ

ຜົນໄດ້ຮັບໄລຍະສັ້ນ (ລະຫວ່າງ 0-2 ປີ ຂອງການຈັດຕັ້ງປະຕິບັດ)

ເອກະສານອ້າງອີງເຖິງຫົວຂໍ້ທີ່ກ່ຽວຂ້ອງຂອງເອກະສານແຫຼ່ງທີ່ມາ




ລາຍລະອຽດ ແລະ ຄຳອະທິບາຍຂອງຜົນໄດ້ຮັບໄລຍະສັ້ນ

ກາງ ແລະ ໄລຍະຍາວ

ຂອບເຂດ: ແຫຼ່ງຂໍ້ມູນເພີ່ມເຕີມສິ່ງທີ່ລວມຢູ່ໃນຜົນໄດ້ຮັບ. ປະກອບມີຂໍ້ມູນກ່ຽວກັບ GEDSI ແລະ ປຶ້ມຄູ່ມືແນວທາງຈາກ ACWC ແລະ ແຫຼ່ງຂໍ້ມູນຂອງເອກະສານ.

ກອບປະເມີນຄວາມຄືບໜ້າ:
ເຄື່ອງມືປະເມີນດ້ວຍຕົນເອງ. ຜົນໄດ້ຮັບໄລຍະສັ້ນແມ່ນ:

- ບໍ່ສາມາດນຳໃຊ້ໄດ້ (ໃນອົງກອນຂອງທ່ານ).
- ບໍ່ມີຄວາມຄືບໜ້າ: ອົງກອນພວກເຈົ້າບໍ່ໄດ້ດຳເນີນກິດຈະກຳທີ່ກໍ່ໃຫ້ເກີດຜົນໄດ້ຮັບ.
- ຄວາມຄືບໜ້າລະດັບໃດໜຶ່ງ: ບາງລາຍການທີ່ສາມາດບັນລຸໄດ້ແມ່ນສະທ້ອນໃຫ້ເຫັນກິດຈະກຳທີ່ໄດ້ເຮັດ.
- ຄວາມຄືບໜ້າລະດັບກ້າວກະໂດດ: ທຸກລາຍການແມ່ນສາມາດບັນລຸໄດ້.

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນໍາໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

ຮູບພາບທີ 2: ກອບປະເມີນຄວາມຄືບໜ້າ

**ການຮັບຮອງ**

ເພື່ອສະໜັບສະໜູນການຮັບຮອງເອົາປຶ້ມຄູ່ມືສະບັບນີ້ ອາດເປັນປະໂຫຍດຕໍ່ການເຊື່ອມສານເຂົ້າໃນນະໂຍບາຍ ແລະ ຂັ້ນຕອນໃໝ່ທີ່ມີຢູ່ແລ້ວ. ຄວາມຖີ່ຂອງການຕິດຕາມການນໍາໃຊ້ປຶ້ມຄູ່ມືນີ້ ແມ່ນແນະນໍາໃຫ້ສອດຄ່ອງກັບ ການລາຍງານປະຈໍາປີ ຫຼື ສອງປີ ແລະ ຄາດວ່າຈະເປັນປະໂຫຍດໃຫ້ແກ່ກຸ່ມເປົ້າໝາຍພາຍໃນ ແລະ ສາກົນ.

ເຊິ່ງແນະນໍາວ່າ ຜົນໄດ້ຮັບຂອງການປະເມີນຕົນເອງສໍາລັບຜົນໄດ້ຮັບໄລຍະສັ້ນໃນຄູ່ມືສະບັບນີ້ ແມ່ນນໍາໃຊ້ເພື່ອສືບຕໍ່ການປັບປຸງ, ການເກັບກໍາຂໍ້ມູນ ແລະ ການລາຍງານກິດຈະກໍາ..

**ການປັບໃຊ້**

ແຕ່ລະປະເທດສະມາຊິກອາຊຽນແລະກຸ່ມເປົ້າໝາຍທີ່ຢູ່ພາຍໃນແຕ່ລະປະເທດອາດຈະເລືອກນໍາໃຊ້ປຶ້ມຄູ່ມືນີ້ທີ່ເປັນສະບັບພາສາອັງກິດ ຫຼື ສະບັບທີ່ມີການແປພາສາເປັນພາສາອື່ນ. ຖ້າມີການນໍາໃຊ້ສະບັບພາສາແປ, ຈະຕ້ອງກວດຄືນເນື້ອໃນຢ່າງລະມັດລະວັງ ເພື່ອຮັບປະກັນຄວາມໝາຍທີ່ມີຖືກຖ່າຍທອດຢ່າງຖືກຕ້ອງ.

ລາຍລະອຽດຂອງປຶ້ມຄູ່ມືໄດ້ຮັບການຂຽນຂຶ້ນ ເພື່ອໃຫ້ແຕ່ລະປະເທດສະມາຊິກອາຊຽນ, ອົງການຈັດຕັ້ງ, ຫຼື ຫນ່ວຍງານຕ່າງໆ ສາມາດຕີຄວາມຫມາຍໄດ້ ໂດຍຜ່ານການແປຄວາມໝາຍຂອງຕົນເອງ. ຕົວຢ່າງ, ບາງຄູ່ຮ່ວມງານ ອາດຈະຕ້ອງປ່ຽນຄໍາສັບທີ່ກ່ຽວຂ້ອງ ໃນແຕ່ລະສະພາບການຂອງເຂົາເຈົ້າ. ພຽງແຕ່ໃຫ້ລະມັດລະວັງ ເພື່ອຮັບປະກັນຄວາມຫມາຍທີ່ຂຽນໄວ້ຈະປ່ຽນແປງ.

**ການຄົ້ນຄວ້າການສະໜັບສະໜູນ**

ສະຫນັບສະຫນູນການນໍາໃຊ້ປຶ້ມຄູ່ມື ແລະ ເຄື່ອງມືລາຍງານ ແມ່ນສະຫນອງໃຫ້ໂດຍ ACWC ຕາມຄໍາຮ້ອງຂໍ.

**ລາຍງານ**

ຂັ້ນຕອນຕໍ່ໄປແມ່ນແນະນໍາໃຫ້ໃຊ້ປຶ້ມຄູ່ມືນີ້ຢ່າງມີປະສິດທິພາບໃນການລາຍງານ.

ຂັ້ນຕອນ 01

**ແຕ່ງຕັ້ງຜູ້ທີ່ຈະໃຊ້ປຶ້ມຄູ່ມື**

ຄະນະບໍລິຫານຈະແຕ່ງຕັ້ງພະນັກງານທີ່ຮັບຜິດຊອບ ເພື່ອດຳເນີນວຽກງານໃນນາມຕາງໜ້າໃຫ້ອົງການ, ໜ່ວຍງານ, ພາກພື້ນ, ຫລື ທີມງານ. ຊຶ່ງນີ້ລວມມີການກຳນົດສິ່ງທີ່ຢູ່ນອກໃນ ຫລື ນອກເໜືອຂອບເຂດຂອງອົງການຈັດຕັ້ງ ຫລື ໜ່ວຍງານ ແລະ ເຈົ້າໜ້າທີ່ຮັບຜິດຊອບແຕ່ລະຄົນ. ເຊິ່ງເປັນໄປໄດ້ວ່າພະນັກງານແຕ່ຄົນມີຄວາມແຕກຕ່າງກັນຈະປະຕິບັດພາກສ່ວນທີ່ແຕກຕ່າງກັນຂອງປຶ້ມຄູ່ມືນີ້.

**ໝາຍເຫດ: ລະບຸລາຍການທີ່ຢູ່ນອກຂອບເຂດຂອງຄູ່ມືໂດຍໝາຍເຄື່ອງໝາຍໃສ່ຫ້ອງ N/A ໃນຕາຕະລາງ.**

ຂັ້ນຕອນ 02

**ຄວາມເຂົ້າໃຈຂອງຜົນໄດ້ຮັບໄລຍະສັ້ນ**

ເຈົ້າໜ້າທີ່ ທີ່ຮັບຜິດຊອບຈະ:

- ທົບທວນຂອບເຂດຂອງຜົນໄດ້ຮັບໄລຍະສັ້ນ
- ອ່ານຄຳອະທິບາຍ ແລະ ຂອບເຂດ
- ໃນກໍລະນີທີ່ມີຄຳຖາມ ໃຫ້ໃຊ້ຂໍ້ມູນອ້າງອີງ ເພື່ອກວດສອບທີ່ມາຂອງເອກະສານ.

ຂັ້ນຕອນ 03

**ການລວມລວມຫລັກຖານ**

ເຈົ້າໜ້າທີ່ ທີ່ຮັບຜິດຊອບຈະ:

- ລວບລວມຫລັກຖານ ຫລື ກວດສອບລາຍການທີ່ໄດ້ບັນລຸ.

**ໝາຍເຫດ: ຊຶ່ງນີ້ອາດລວມເຖິງການລວບລວມຂໍ້ມູນດ້ານປະລິມານ ແລະ ຄຸນນະພາບ ແລະ ຍັງກວດສອບກັບພະນັກງານທີ່ກ່ຽວຂ້ອງ ແລະ ປຶກສາຫາລືກັບແນວທາງການປະຕິບັດໃນປະຈຸບັນ.**

ຂັ້ນຕອນ 04

**ສຳເລັດເປົ້າໝາຍ**

ເຈົ້າໜ້າທີ່ ທີ່ຄວາມຮັບຜິດຊອບຈະ:

- ໃຊ້ການປະເມີນການກວດສອບລາຍການແຕ່ລະຢ່າງ ແລະ ກວດສອບລາຍການທີ່ໄດ້ປະຕິບັດແລ້ວ.

**ໝາຍເຫດ: ເຈົ້າໜ້າທີ່ຮັບຜິດຊອບຈະຕ້ອງຕັດສິນດ້ວຍຕົນເອງໃນຂັ້ນຕອນນີ້, ໂດຍອີງຕາມເຫດຜົນທີ່ສົມເຫດສົມຜົນຂອງແຕ່ລະລາຍການກວດກາ.**

ຂັ້ນຕອນ 05

**ກຳນົດຄວາມຄືບໜ້າໃນແຕ່ລະຜົນໄດ້ຮັບໄລຍະສັ້ນ**

ເຈົ້າໜ້າທີ່ ທີ່ຮັບຜິດຊອບຈະ:

ກຳນົດຄະແນນປະເມີນຕົນເອງທີ່ເໝາະສົມທີ່ສຸດ ໂດຍໃຊ້ແບບຂອງຂອບການປະເມີນຄວາມຄືບໜ້າຂອງແຕ່ລະຜົນໄດ້ຮັບໄລຍະສັ້ນ (ບໍ່ມີຄວາມຄືບໜ້າ, ຄວາມຄືບໜ້າລະດັບໃດໜຶ່ງ, ຫລື ຄວາມຄືບໜ້າແບບກ້າວກະໂດດ) ແລະ ເລືອກໝາຍເຄື່ອງໝາຍທີ່ເໝາະສົມ ໃສ່ໃນຄູ່ມືນີ້.

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

1

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ກິດຈະກຳການໃຫ້ຄວາມຮູ້ ແລະ ການໂຄສະນາປູກຈິດສຳນຶກ ກວມເອົາຄວາມເຂົ້າໃຈພື້ນຖານກ່ຽວກັບການຄ້າມະນຸດ ແລະ ກອບກົດໝາຍ ເພື່ອຕ້ານການຄ້າມະນຸດ, ລວມທັງກຸ່ມສ່ຽງ ແລະ ຄວາມສ່ຽງ, ການລົງໂທດ ແລະ ຜົນສະທ້ອນຂອງ TIP.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ
- ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ໃນພາກທີ 4.4
- ມາດຕາ 11(2), ACTIP.
- ແຜນແມ່ບົດຂອງອາຊຽນ 2025: ການເຊື່ອມສານສິດທິຄົນທີ່
- ມີຄວາມພິການ APSC 23.

### ລາຍລະອຽດ ແລະ ຄຳອະທິບາຍ

ການໃຫ້ຄວາມຮູ້ ແລະ ການປູກຈິດສຳນຶກຂອງປະຊາຊົນລວມມີຂໍ້ມູນຂ່າວສານການໂຄສະນາເຜີຍແຜ່ຜ່ານສື່ມວນຊົນ ແລະ ຂໍ້ລິເລີ່ມທາງດ້ານເສດຖະກິດ-ສັງຄົມເພື່ອສ້າງຄວາມເຂົ້າໃຈ, ສ້າງຄວາມຮັບຮູ້ກ່ຽວກັບການຄ້າມະນຸດ ແລະ ລະມັດລະວັງປ້ອງກັນ, ຕ້ານ ແລະ ສະກັດກັ້ນທັງຄວາມຕ້ອງການ ແລະ ການສະໜອງທີ່ຊຸກຍູ້ໃຫ້ມີການຂູດຮີດປະຊາຊົນ, ການຕຳນິດ້ອຍຄ່າ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກ TIP.

### ຂອບເຂດ

ຜົນໄດ້ຮັບນີ້ປະກອບມີ ໂດຍບໍ່ໄດ້ຈຳກັດຄື:

- ກິດຈະກຳດ້ານການໃຫ້ຄວາມຮູ້ ແລະ ເຄື່ອງມືໃນສ້າງຄວາມຮັບຮູ້ແມ່ນເປັນຊິ່ງຫລັກຖານ ແລະ ສິດທິພື້ນຖານ, ເພື່ອແຈ້ງໃຫ້ທຸກພາກສ່ວນຂອງສັງຄົມກ່ຽວກັບ TIP, ກອບກົດໝາຍ, ການລິເລີ່ມໃນການຕ້ານ TIP, ແຜນງານການໃນວຽກງານການຕ້ານ TIP ແລະ ຜົນປະໂຫຍດຂອງແຜນງານ, ເຊັ່ນດຽວກັນກັບຄວາມສ່ຽງຂອງບາງກຸ່ມທີ່ສ່ຽງຕໍ່ກັບ TIP.
- ກິດຈະກຳ ແລະ ເຄື່ອງມື ຄວນໄດ້ຮັບການພັດທະນາ ແລະ ສະໜອງໃຫ້ໃນລັກສະນະທີ່ເໝາະສົມກັບອາຍຸ ແລະ ເຂົ້າເຖິງໄດ້ ທີ່ເໝາະສົມກັບກຸ່ມເປົ້າໝາຍ, ສະຖານທີ່, ວັດທະນະທຳ ແລະ ຄວາມຕ້ອງການຂອງທ້ອງຖິ່ນ.
- ການລິເລີ່ມທີ່ມີສ່ວນຮ່ວມໃນທຸກພາກສ່ວນຂອງສັງຄົມ ລວມທັງອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ນັກວິຊາການ, ແລະ ຜູ້ນຳຊຸມຊົນເພື່ອເຮັດວຽກກັບລັດຖະບານໃນການປ້ອງກັນ ແລະ ສ້າງຄວາມຮັບຮູ້.
- ການໂຄສະນາໃຫ້ປະຊາກອນເພື່ອໃຫ້ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ, ການເອົາຖືກຜູ້ເຄາະຮ້າຍເປັນໃຈກາງ, ແລະ ສາມາດເຂົ້າເຖິງທຸກພາກສ່ວນຂອງສັງຄົມ ລວມທັງກຸ່ມທີ່ມີຄວາມສ່ຽງ ເຊັ່ນ: ແມ່ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ເອກະສານທີ່ອີງໃສ່ຫລັກຖານ ແມ່ນສາມາດເຂົ້າເຖິງໄດ້ໃນທຸກພາສາ ແລະ ຖືກເຜີຍແຜ່ໃນຊ່ອງທາງຕ່າງໆຜ່ານສື່ ຫລື ສະຖານທີ່ອື່ນໆ ເຊັ່ນ: ວິທະຍຸ, ໂທລະພາບ, ຮູບແບບການກະຈາຍສຽງ, ສິ່ງພິມ ແລະ ສື່ສັງຄົມ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ໄດ້ມີການຈັດຕັ້ງປະຕິບັດກິດຈະກຳ ແລະ ໂຄງການ ທີ່ຫຼາກຫຼາຍກ່ຽວກັບ ການປູກຈິດສຳນຶກກ່ຽວກັບ TIP ໂດຍອີງໃສ່ຫຼັກຖານ
- ☐ ກິດຈະກຳໃຫ້ຄວາມຮູ້ມີຈຸດປະສົງ ເພື່ອແຈ້ງໃຫ້ທຸກພາກສ່ວນຂອງສັງຄົມ, ໂດຍສະເພາະກຸ່ມທີ່ມີຄວາມສ່ຽງເຊັ່ນ: ແມ່ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການໃຫ້ຮູ້ກ່ຽວກັບຄວາມອັນຕະລາຍຂອງ TIP.
- ☐ ກິດຈະກຳກ່ຽວກັບການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແມ່ນສາມາດເຂົ້າເຖິງ ໂດຍທຸກພາກສ່ວນຂອງສັງຄົມ, ໂດຍສະເພາະແມ່ນກຸ່ມທີ່ມີຄວາມສ່ຽງທີ່ສຸດຕໍ່ TIP.
- ☐ ສື່ຕ່າງໆແມ່ນໄດ້ວາງສະແດງໃນສະຖານທີ່ທີ່ສັງເກດເຫັນໄດ້ ແລະ ໃນຮູບແບບສື່ອອນລາຍ.
- ☐ ກິດຈະກຳອາດມີການທົບທວນ ແລະ ປັບປຸງເປັນປະຈຳ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການຮັບຮູ້ກ່ຽວກັບ TIP ໄດ້ເພີ່ມຂຶ້ນເຊິ່ງນຳໄປສູ່ ການກວດພົບການຄ້າມະນຸດແຕ່ເບື້ອງຕົ້ນ ແລະ ມີການລາຍງານ TIP ເພີ່ມຂຶ້ນ. | ການຮັບຮູ້ກ່ຽວກັບ TIP ແລະ ການລາຍງານງານອັດຕາຂອງແຜ່ກະຈາຍ TIP ໄດ້ຫຼຸດລົງ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

2

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

ສ້າງເສັ້ນທາງການຍ້າຍຖິ່ນຖານທີ່ປອດໄພ, ເປັນລະບຽບ ແລະ ເປັນປົກກະຕິ ແລະ/ຫລື ໃຫ້ມີຄວາມເຂັ້ມແຂງ ແລະ ໄດ້ມີການສົ່ງເສີມ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ໃນພາກທີ 4.5, 4.6.
- ມາດຕາ 12 (e), ACTIP

### ລາຍລະອຽດ ແລະ ຄໍາອະທິບາຍ

ປະເທດຕົ້ນທາງເປີດໂອກາດສໍາລັບເສັ້ນທາງການເຄື່ອນຍ້າຍທີ່ເປັນປົກກະຕິ, ເປັນປະໂຫຍດ,, ແລະ ບໍ່ມີການກົດຂີ່ຂູດຮີດ ໂດຍມີກົນໄກດ້ານລະບຽບການ ແລະ ການຊີ້ນໍາ ເພື່ອປົກປ້ອງສິດ ແລະ ຄວາມປອດໄພຂອງຜູ້ເຄື່ອນຍ້າຍ ແລະ ກຸ່ມທີ່ມີຄວາມສ່ຽງຕໍ່ TIP.

### ຂອບເຂດ

ຜົນໄດ້ຮັບນີ້ລວມມີການໂຄສະນາປູກຈິດສໍານຶກໃຫ້ປະຊາຊົນ ກ່ຽວກັບ TIP ແລະ ການເຄື່ອນຍ້າຍຖິ່ນຖານທີ່ເປັນປົກກະຕິ ເພື່ອ:

- ເອື້ອອໍານວຍໃຫ້ຄົນມີການເຄື່ອນໄຫວຢ່າງເສລີ ແລະ ຮັບປະກັນວ່າຂໍ້ກໍານົດການເຂົ້າ-ອອກເມືອງໄດ້ຖືກປະຕິບັດ. ບັນດາປະເທດສະມາຊິກອາຊຽນ ມີການເຜີຍແຜ່ຂໍ້ມູນທີ່ຖືກຕ້ອງກ່ຽວກັບທາງເລືອກການເຄື່ອນຍ້າຍຖິ່ນຖານຢ່າງເປັນປົກກະຕິ, ປອດໄພ, ແລະ ບໍ່ມີການກົດຂີ່ຂູດຮີດ.
- ແຈ້ງໃຫ້ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີທ່າແຮງ, ໂດຍສະເພາະແມ່ຍິງ, ກ່ຽວກັບຄວາມສ່ຽງຂອງການເຄື່ອນຍ້າຍ ແລະ ການເຄື່ອນຍ້າຍທີ່ບໍ່ຖືກຕ້ອງ ລວມທັງການຂູດຮີດ, ການຕິດໜີ້ສິນ, ຄວາມໝັ້ນຄົງ, ແລະ ບັນຫາດ້ານສຸຂະພາບ ເຊັ່ນ: HIV/AIDS ແລະ ການລັກເອົາ
- ອະໄວຍະວະຂອງຮ່າງກາຍ ແລະ ດໍາເນີນການໂຄສະນາປູກຈິດສໍານຶກໃນແກ່ປະຊາຊົນ. ໃຫ້ໂອກາດໃນການເຄື່ອນຍ້າຍຖິ່ນຖານຢ່າງເປັນປົກກະຕິ, ປອດໄພ, ຍຸຕິທໍາ, ແລະ ມີຈັນຍາທໍາ, ແລະ ສົ່ງເສີມບັນດາມາດຕະການຄຸ້ມຄອງ ແລະ ການນໍາພາ ທີ່ເປັນການປົກປ້ອງສິດຂອງຜູ້ເຄື່ອນຍ້າຍຖິ່ນຖານ.
- ສະໜອງຂໍ້ມູນທີ່ມີການຄໍານຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ, ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ເຂົ້າເຖິງທຸກພາກສ່ວນຂອງສັງຄົມ ລວມທັງກຸ່ມທີ່ມີຄວາມສ່ຽງ ເຊັ່ນ: ແມ່ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.

| ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ |
|---|
| ປະເທດຕົ້ນທາງ ແລະ ປະເທດປາຍທາງ: |
| ☐ ເອື້ອອໍານວຍໃຫ້ຄົນມີການເຄື່ອນໄຫວຢ່າງເສລີ ແລະ ຮັບປະກັນວ່າມີຂໍ້ກໍານົດການເຂົ້າ-ອອກເມືອງໄດ້ຖືກປະຕິບັດຕາມຂໍ້ກໍານົດ. |
| ☐ ແຈ້ງໃຫ້ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີທ່າແຮງ ແລະ ຜູ້ເຄື່ອນຍ້າຍຖິ່ນຖານໃໝ່ໃຫ້ຮູ້ກ່ຽວກັບຄວາມສ່ຽງຂອງ TIP ໃນຂະບວນການເຄື່ອນຍ້າຍທີ່ເປັນປົກກະຕິ ແລະ ຂະບວນການເຄື່ອນຍ້າຍທີ່ບໍ່ປົກກະຕິ/ບໍ່ຖືກຕ້ອງ. |
| ☐ ດໍາເນີນການໂຄສະນາປູກຈິດສໍານຶກໃຫ້ແກ່ປະຊາຊົນກ່ຽວກັບ TIP ແລະ ຄວາມສ່ຽງຂອງການເຄື່ອນຍ້າຍ ແລະການເຄື່ອນຍ້າຍທີ່ບໍ່ປົກກະຕິ/ບໍ່ຖືກຕ້ອງ. |
| ☐ ຊຸກຍູ້ບັນດາມາດຕະການຄຸ້ມຄອງ ແລະ ການນໍາພາ ໃອປົກປ້ອງສິດຂອງຜູ້ເຄື່ອນຍ້າຍຖິ່ນຖານ. |
| ☐ ສະໜອງຂໍ້ມູນ ທີ່ຄໍານຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ, ການເອົາຜູ້ເຄາະຮ້າຍເປັນຈຸດໃຈກາງ, ແລະ ເຂົ້າເຖິງທຸກພາກສ່ວນຂອງສັງຄົມ. |

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການຮັບຮູ້ກ່ຽວກັບ TIP ໄດ້ເພີ່ມຂຶ້ນເຊິ່ງນໍາໄປສູ່ ການກວດພົບການຄ້າມະນຸດແຕ່ເບື້ອງຕົ້ນ ແລະ ມີການລາຍງານ TIP ເພີ່ມຂຶ້ນ. | ການຮັບຮູ້ກ່ຽວກັບ TIP ແລະ ການລາຍງານງານອັດຕາຂອງແຜ່ກະຈາຍ TIP ໄດ້ຫຼຸດລົງ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນໍາໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

3

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ການຄົ້ນຄວ້າໄດ້ຖືກດຳເນີນການ, ແລະ ຂໍ້ມູນ ແລະ ການປະຕິບັດທີ່ດີໄດ້ຖືກເກັບກຳ, ກ່ຽວກັບ TIP ແລະ ບັນຫາທີ່ກ່ຽວຂ້ອງ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ໃນພາກທີ 4.1, 4.8.
- ມາດຕາ 11 (4), ACTIP

## ລາຍລະອຽດ ແລະ ຄຳອະທິບາຍ

ປະເທດ ແລະ ອົງການຈັດຕັ້ງ ດຳເນີນການຄົ້ນຄ້ວາ, ການສຶກສາ ແລະ ການວິເຄາະສະຖານະການ ຢ່າງເປັນທາງການ ແລະ ບໍ່ເປັນທາງການ ກ່ຽວກັບ TIP, ບັນຫາທີ່ພົ້ນເດັ່ນ, ແລະ ຫົວຂໍ້ທີ່ກ່ຽວຂ້ອງ. ຂໍ້ມູນ TIP ທີ່ມີໄຈ້ແຍກຂໍ້ມູນກ່ຽວກັບ GEDSI ແລະ ການປະຕິບັດທີ່ດີອາດຈະຖືກເກັບກຳໂດຍທັງລັດຖະບານ, CSOs ແລະ ຜູ້ປະຕິບັດຕົວຈິງ ເພື່ອປັບປຸງການປ້ອງກັນ ແລະ ການຕອບໂຕ້ຕໍ່ TIP

## ຂອບເຂດ

ການເຮັດບົດຄົ້ນຄວ້າ, ການສຶກສາ, ແລະ ການວິເຄາະສະຖານະການອາດຈະດຳເນີນການໂດຍບັນດາປະເທດສະມາຊິກອາຊຽນ ຫລື CSOs ເພື່ອ:

- ແຈ້ງໃຫ້ຊາບ ຫລື ປັບປຸງນະໂຍບາຍລະດັບຊາດ ຫລື ລະດັບພາກພື້ນ.
- ເສີມສ້າງມາດຕະການ
- ປັບປຸງການຮ່ວມມືສອງຝ່າຍ ຫລື ຫລາຍຝ່າຍ ແລະ
- ແຈ້ງໃຫ້ຊາບກ່ຽວກັບການຕັດສິນໃຈພາຍໃນອົງກອນ.

ບາງຫົວຂໍ້ອາດລວມຢູ່ໃນນີ້ແຕ່ບໍ່ໄດ້ຈຳກັດມີ:

- ປັດໃຈທີ່ເຮັດໃຫ້ຄົນມີຄວາມສ່ຽງຕໍ່ການຄ້າມະນຸດ ເຊັ່ນ: ຄວາມທຸກຍາກ, ການພັດທະນາລ່າຊ້າ, ແລະ ການຂາດໂອກາດທີ່ເທົ່າທຽມກັນ, ການແບ່ງແຍກ, ແລະ ການກີດກັ້ນ.
- ທ່າອ່ຽງຂອງຄວາມຕ້ອງການ ແລະ ການສະໜອງ TIP ເຊັ່ນ: ການຂູດຮີດທາງເພດ, ການຂູດຮີດແຮງງານ, ການຕັດອະໄວຍະວະຂອງຮ່າງກາຍ, ການບັງຄັບໃຫ້ແຕ່ງງານ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ.
- ຍັງມີປັດໃຈອື່ນໆອີກເຊັ່ນ: ກົດໝາຍ, ນະໂຍບາຍ ແລະ ຂັ້ນຕອນ ທີ່ບໍ່ເຂັ້ມແຂງ, ການສໍ້ລາດບັງຫລວງ, ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ.
- ການບັງຄັບໃຊ້ກົດໝາຍອາຍາສຳລັບ TIP ແລະ
- ແນວທາງປະຕິບັດທີ່ດີ ໃນການປ້ອງກັນ ແລະ ລຶບລ້າງ TIP

ການເກັບກຳຂໍ້ມູນທີ່ອາດລວມເຖິງ ແຕ່ບໍ່ຈຳກັດ ເພື່ອ:

- ການຄົ້ນຄວ້າຢ່າງເປັນທາງການ, ບໍ່ເປັນທາງການ ແລະ ການສັງລວມຂໍ້ມູນຈາກເອກະສານ ແລະ ບົດລາຍງານຕ່າງໆ ສຳລັບການວິເຄາະ.

ຜົນການຄົ້ນຄວ້າການຄົ້ນພົບຈະຖືກນຳໄປເຜີຍແຜ່ໃຫ້ແກ່ສາທາລະນະ ແລະ ທຸກຄົນສາມາດເຂົ້າເຖິງໄດ້ ໃນຂະນະດຽວກັນກໍຄວນຄຳນຶງເຖິງການຮັກສາຄວາມລັບຄວາມເປັນສ່ວນຕົວ ແລະ ການລະບຸຕົວຕົນດ້ວຍ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ການຄົ້ນຄວ້າແມ່ນດຳເນີນການກ່ຽວກັບປັດໃຈໃດນຶ່ງ ແລະ ບັນຫາທີ່ພົ້ນເດັ່ນກ່ຽວກັບ TIP.
- ☐ ອົງການຈັດຕັ້ງດຳເນີນການຄົ້ນຄ້ວາພາຍໃນ.
- ☐ ຄຳແນະນຳ ແລະ ການຄົ້ນພົບ ໃນບົດຄົ້ນຄວ້າແຈ້ງໃຫ້ທາບ ໃນການສະກັດກັ້ນ ແລະ ການຕອບສະໜອງ TIP
- ☐ ຂໍ້ມູນ TIP ທີ່ແຍກອອກຈາກ GEDSI ໄດ້ຖືກລວບລວມ, ວິເຄາະ, ແລະ ແບ່ງປັນໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ.
- ☐ ຜົນການຄົ້ນຄວ້າ ແລະ ການວິເຄາະຂໍ້ມູນ TIP ແຈ້ງໃຫ້ຮູ້ເຖິງການພັດທະນາຂອງກົດໝາຍ, ນະໂຍບາຍ, ແລະການປ່ຽນແປງການປະຕິບັດ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຫຼັກຖານຖືກນຳມາໃຊ້ ເພື່ອສ້າງມາດຕະຖານຕາມຫຼັກການການຕໍ່ສູ້ກັບການສະໜອງ ແລະ ຄວາມຕ້ອງການຂອງ TIP | ການຄົ້ນຄວ້າ ແລະ ການລາຍງານ TIP ໄດ້ຫຼຸດອັກຕາການແຜ່ລະບາດ ແລະ ການປັບປຸງການຕອບສະໜອງ TIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

4

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ລັດຖະບານ ແລະ ສະຖາບັນ ມີກົດໝາຍຕ້ານ TIP,ນະໂຍບາຍ, ແຜນການ, ແຜນງານ, ຊັບພະຍາກອນ, ຂໍ້ຕົກລົງ, ແລະ ຂໍ້ແນະນຳຕ່າງໆເພື່ອຕ້ານ TIP.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ໃນພາກທີ 4.2, 4.8, 4.16
- ແຜນແມ່ບົດຂອງອາຊຽນປີ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ APSC 9.
- ACTIP ມາດຕາ 11(4).

## ລາຍລະອຽດ ແລະ ຄໍາອະທິບາຍ

ບັນດາປະເທດສະມາຊິກອາຊຽນ ປະກາດໃຊ້ກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ໂຄງການ ຫລື ຂໍ້ລິເລີ່ມ ໃນການຕ້ານ TIP ທີ່ກ່ຽວຂ້ອງ ແລະ ຄົບຖ້ວນ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ມີການປະສານງານ ແລະ ການຮ່ວມມືລະຫວ່າງບັນດາປະເທດສະມາຊິກອາຊຽນ.

ລະບົບການຕິດຕາມ ແລະ ການປະເມີນຜົນ ໄດ້ຖືກເສີມສ້າງໃຫ້ມີເຂັ້ມແຂງ ເພື່ອປະເມີນ ແລະ ທົບທວນຄືນກ່ຽວກັບກົດໝາຍ, ແຜນການ, ໂຄງການ ຫລື ຂໍ້ລິເລີ່ມຕ່າງໆ ໃນການຕ້ານ TIP.

## ຂອບເຂດ

ຜົນໄດ້ຮັບນີ້ປະກອບມີກົດໝາຍ, ລະບຽບການ, ແລະ ນະໂຍບາຍ:

- ບັນດາປະເທດ ໄດ້ປະເມີນ(ຄືນ) ແລະ ປັບປຸງກົດໝາຍ, ລະບຽບການ ແລະ ນະໂຍບາຍທີ່ຕ້ານກັບ TIP, ເພື່ອປົກປ້ອງຜູ້ອອກແຮງງານໃນຂະແໜງການຕ່າງໆທີ່ມີການກົດຂີ່ຂູດຮີດ ແລະ ຮັບປະກັນໃນການເຄື່ອນຍ້າຍຖິ່ນຖານທີ່ປອດໄພ ໂດຍການພິຈາລະນາຜົນກະທົບຂອງກົດໝາຍ ທີ່ການຈຳແນກຕໍ່ກຸ່ມທີ່ມີຄວາມສ່ຽງເຊັ່ນ: ແມ່ຍິງ, ເດັກນ້ອຍ, ແລະ ຄົນທີ່ມີຄວາມພິການ.
- ມີການຈັດໂຄງຮ່າງ ຫລື ກົນໄກຕ່າງໆ ເຊັ່ນ ກອງກຳລັງ ຫລື ໜ່ວຍງານຕ້ານການຄ້າມະນຸດ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ.

ຜົນໄດ້ຮັບນີ້ລວມມີຂໍ້ລິເລີ່ມ ເພື່ອຫລຸດຜ່ອນຄວາມສ່ຽງຕໍ່ TIP:

- ມາດຕະການຈັດການກັບປັດໃຈທີ່ເຮັດໃຫ້ບຸກຄົນ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍມີຄວາມສ່ຽງຕໍ່ການຄ້າມະນຸດ. ສິ່ງ ເຫລົ່າ ນີ້ ລວມ ເຖິງ ປັດ ໃຈ ທີ່ມີຄວາມກ່ຽວພັນກັນ ລວມມີຄວາມທຸກຍາກ, ຄວາມດ້ອຍພັດທະນາ, ຄວາມບໍ່ສະເໝີພາບທາງດ້ານບົດບາດຍິງ-ຊາຍ ແລະ ຂາດໂອກາດທີ່ເທົ່າທຽມກັນ.
- ແຜນງານດ້ານການສຶກສາ (ເຊັ່ນ: ການຮູ້ໜັງສື) ແລະ ການຝຶກອົບຮົມທັກສະອາຊີບ ເປັນການສະໜອງວິທີທາງໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ມີຄວາມຮັບປະກັນຊີວິດການເປັນຢູ່ ແລະ ເພື່ອປ້ອງກັນການຕົກໃນຂະບວນການຄ້າມະນຸດຊໍ້າຄືນ.

ຜົນໄດ້ຮັບນີ້ປະກອບມີການປະສານງານ ແລະ ການຮ່ວມມື:

- ການສະໜອງ ແລະ ການເຂົ້າເຖິງການບໍລິການດູແລ ແລະ ການຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບການສົ່ງເສີມ ໂດຍເນັ້ນໃສ່ສິດທິຂອງຜູ້ຖືກເຄາະຮ້າຍ.
- ລັດຖະບານ, ກົມກອງ, ສະຖາບັນ ແລະ ໜ່ວຍງານຕ່າງໆແຫ່ງຊາດ ແມ່ນເຮັດວຽກປະສານສົມທົບ ແລະ ຮ່ວມມືກັນລະຫວ່າງຂະແໜງການ ໂດຍມີຈຸດປະສົງໃນການປ້ອງກັນ TIP ພາຍໃຕ້ MOUs ສອງຝ່າຍ, ຖ້າມີ.
- ຂໍ້ຕົກລົງ, ການຮ່ວມມື, ແລະ ການປະສານງານໃນພາກພື້ນ ແມ່ນເປັນຊັບພະຍາກອນ ແລະ ສະໜັບສະໜູນໃນການຈັດຕັ້ງປະຕິບັດແຜນປະຕິບັດງານໃນການຕ້ານ TIP ລວມທັງການຕ້ານອາດຊະຍາກຳຂ້າມຊາດຕ່າງໆ.

### ລາຍການກວດກາເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ບັນດາປະເທດຕ່າງໆ ມີການກຳນົດ, ປັບປຸງ, ແລະປະກາດໃຊ້ກົດໝາຍ ແລະ ນະໂຍບາຍຕ້ານ TIP.
- ☐ ມີການຈັດຕັ້ງປະຕິບັດໂຄງການເພື່ອຊີວິດການເປັນຢູ່ທີ່ປອດໄພ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP
- ☐ ໜ່ວຍງານຕ່າງໆ ມີການຮ່ວມມື ແລະ ປະສານງານ ໃນການໃຫ້ການເບິ່ງແຍງ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍຈາກ TIP
- ☐ ຂໍ້ຕົກລົງສອງຝ່າຍຕ້ານ TIP ແມ່ນໄດ້ຮັບການສ້າງຕັ້ງຂຶ້ນ ແລະ/ຫຼື ເພີ່ມທະວີ, ຊັບພະຍາກອນ ແລະ ການປະຕິບັດ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ລັດຖະບານ, ກົມກອງ, ສະຖາບັນ ໜ່ວຍງານຕ່າງໆ ໃນລະດັບຊາດ ແລະ ທ້ອງຖິ່ນ ພັດທະນາ ແລະ ປະຕິບັດແຜນງານຍຸດທະສາດ ແລະ ປະກາດໃຊ້ນະໂຍບາຍ ແລະ ແຜນງານທີ່ຈຳເປັນ. | ກົດໝາຍ ແລະ ນະໂຍບາຍຕ້ານ TIP ມີຄວາມສົມບູນ ຄົບຖ້ວນ, ເຂັ້ມແຂງ ແລະ ຫຼຸດຜ່ອນອັດຕາການແຜ່ຂະຫຍາຍຂອງ TIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸຫຼາຍລາຍການ |

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

5

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ກົດໝາຍ ແລະ ນະໂຍບາຍຖືກຈັດຕັ້ງປະຕິບັດ ເພື່ອສືບສວນ-ສອບສວນ, ດຳເນີນຄະດີ, ແລະ ຕັດສິນຄະດີ TIP, ສົ່ງເສີມສິດທິຂອງຜູ້ຖືກຄ້າມະນຸດ, ໂດຍສະເພາະແມ່ນສິດທິໃນການໄດ້ຮັບການປຽວຢາເຊັ່ນ: ການທົດແທນຄືນ ແລະ/ຫລື ການຊົດເຊີຍ ແລະ ສະກັດກັ້ນ TIP.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ໃນພາກທີ 3.6.2.
- ACTIP ມາດຕາ 12(h), 16(9).

### ລາຍລະອຽດ ແລະ ຄຳອະທິບາຍ

ຜູ້ຄ້າມະນຸດ ແລະ ຜູ້ກະທຳຜິດ ລວມທັງເຈົ້າໜ້າທີ່ລັດຖະບານ ທີ່ກ່ຽວຂ້ອງກັບ TIP ໄດ້ຖືກສືບສວນ-ສອບສວນ ແລະ ຖືກດຳເນີນຄະດີ ທີ່ອີງຕາມ ACTIP. ຜົນໄດ້ຮັບນີ້ແມ່ນ ເພື່ອຮັບປະກັນການບັງຄັບໃຊ້ສິດທິຂອງຜູ້ຖືກເຄາະຮ້າຍ, ໂດຍສະເພາະແມ່ນການເຂົ້າເຖິງການປຽວຢາ ເຊັ່ນ: ການທົດແທນຄືນ ແລະ/ຫລື ການຊົດເຊີຍ, ຕະຫລອດຮອດເຖິງການກຳນົດການລົງໂທດທີ່ເໝາະສົມເພື່ອເປັນການສະກັດກັ້ນ.

### ຂອບເຂດ

ຜົນໄດ້ຮັບນີ້ປະກອບມີມາດຕະການສຳລັບການສະກັດກັ້ນ TIP:

- ການສືບສວນ-ສອບສວນ, ການຈຳກັດການເຄື່ອນໄຫວ, ການພິພາກສາ ແລະ ການດຳເນີນຄະດີພວກຄ້າມະນຸດ ແລະ ອື່ນໆ ຕາມກົດໝາຍແຫ່ງຊາດ ແລະ ຮັບປະກັນວ່າຜູ້ໃດກະທຳຜິດ ຫລື ສະໜັບສະໜູນ TIP ຈະຖືກນຳມາດຳເນີນຄະດີ.
- ການສ້າງຄວາມເຂັ້ມແຂງຂອງຊຸມຊົນ ເພື່ອເຂົ້າຮ່ວມໃນການໃຫ້ຄວາມຮູ້ກ່ຽວກັບ TIP, ການປ້ອງກັນ, ແລະ ການລາຍງານອາຊະຍາກຳຂອງ TIP .
- ປະເທດສະມາຊິກອາຊຽນ ສົ່ງເສີມຄວາມພະຍາຍາມໃນການຕ້ານ TIP ໂດຍລາຍງານການສືບສວນ, ການຈັບກຸມ, ແລະ ການດຳເນີນຄະດີ, ເຊັ່ນດຽວກັນກັບການທົດແທນຄືນ ແລະ/ຫລື ການຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ນິຕິກຳແຫ່ງຊາດມີຄວາມເອື້ອອຳນວຍໃຫ້ການສືບສວນ-ສອບສວນກັບຜູ້ຄ້າມະນຸດ ແລະ ຜູ້ອື່ນ, ແລະ ການກະທຳຜິດທີ່ກ່ຽວຂ້ອງ..
- ☐ ນິຕິກຳແຫ່ງຊາດມີຄວາມເອື້ອອຳນວຍໃຫ້ການພິພາກສາ ແລະ ດຳເນີນຄະດີຕໍ່ຜູ້ຄ້າມະນຸດ ແລະ ອື່ນໆ.
- ☐ ນິຕິກຳແຫ່ງຊາດ ທີ່ເອື້ອອຳນວຍໃຫ້ມີການຈ່າຍຄ່າທົດແທນ ແລະ /ຫຼື ການຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP
- ☐ ຊຸມຊົນໄດ້ຮັບສິດໃນການມີສ່ວນຮ່ວມໃນການຮັບຮູ້, ການປ້ອງກັນ, ແລະ ການລາຍງານ ຈາກ TIP.
- ☐ ຂໍ້ມູນກ່ຽວກັບການດຳເນີນຄະດີ TIP ແມ່ນສາມາດເຂົ້າເຖິງສາທາລະນະໄດ້ ເພື່ອໃຫ້ເປັນເຄື່ອງມືໃນການຢັບຢັ້ງ

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ພວກຄ້າມະນຸດ ແລະ ຜູ້ອື່ນທີ່ກ່ຽວຂ້ອງກັບ TIP ໄດ້ຖືກສືບສວນ-ສອບສວນ ແລະ ຖືກດຳເນີນຄະດີຕາມປົກກະຕິ. | ການສືບສວນ ແລະ ການດຳເນີນຄະດີ TIP ທີ່ເພີ່ມຂຶ້ນໄດ້ຂັດຂວາງອາຊະຍາກຳຂອງ TIP |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

6

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ໜ່ວຍງານຕ້ານ TIP ມີຄວາມຮູ້ໃນການເຮັດວຽກກ່ຽວກັບອົງປະກອບຂອງ TIP, ທັກສະທີ່ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ແລະ ມີຊັບພະຍາກອນເພື່ອປ້ອງກັນ TIP

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ແນວທາງ ແລະ ຂັ້ນຕອນການປະຕິບັດໃນລະດັບພາກພື້ນ ພາກທີ 4.1.1.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ໃນພາກທີ 4.10, 4.16.
- ACTIP ມາດຕາ 13(2), 16(1), 16(6).

## ລາຍລະອຽດ ແລະ ຄຳອະທິບາຍ

ບັນດາໜ່ວຍງານຕ້ານ TIP, ອຳນາດການປົກຄອງທີ່ກ່ຽວຂ້ອງ, CSOs ແລະ ຜູ້ນຳຊຸມຊົນ ມີຄວາມສາມາດ, ຄວາມຮູ້, ທັກສະກ່ຽວກັບການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນອາດຊະຍາກຳ TIP.

## ຂອບເຂດ

ຊັບພະຍາກອນໄດ້ຖືກຈັດສັນໃຫ້ແກ່ໜ່ວຍງານຕ້ານ TIP, ອຳນາດການປົກຄອງທີ່ກ່ຽວຂ້ອງ, CSOs ແລະ ຜູ້ນຳຊຸມຊົນເພື່ອດຳເນີນການຝຶກອົບຮົມ ເພື່ອ:

- ເສີມສ້າງຄວາມສາມາດຄວາມເປັນມືອາຊີບ ເພື່ອດຳເນີນການກວດຫາ ແລະ ປ້ອງກັນ TIP ໂດຍໄວ.
- ປັບປຸງການພົວພັນຮ່ວມມື ແລະ ການຮ່ວມມືໃນພາກພື້ນ.
- ປັບປຸງການຄວບຄຸມຊາຍແດນດ້ວຍການສ້າງຄວາມຮັບຮູ້ກ່ຽວກັບ TIP ຫລາຍຂຶ້ນ.
- ອອກເອກະສານປະຈຳຕົວ ແລະ ເອກະສານການເດີນທາງ ໃຫ້ມີຄວາມປອດໄພ.
- ມາດຕະການຕ້ານການປອມແປງ ແລະ ການສໍ້ໂກງການນຳໃຊ້ເອກະສານ, ແລະ
- ປະຕິບັດກິດຈະກຳປ້ອງກັນ ແລະ ປູກຈິດສຳນຶກກ່ຽວກັບການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ.

| ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ |
| --- |
| ☐ ການຄວບຄຸມຊາຍແດນທີ່ເຂັ້ມງວດ ແລະ ໄດ້ຮັບການສະໜັບສະໜູນໂດຍການເພີ່ມທະວີການຮັບຮູ້ກ່ຽວກັບ TIPs. |
| ☐ ຊັບພະຍາກອນໄດ້ຖືກຈັດສັນເພື່ອຈັດຕັ້ງປະຕິບັດ ແລະ ເສີມຂະຫຍາຍຄວາມສາມາດຂອງຜູ້ປະຕິບັດຕົວຈິງ ໃນການຕ້ານການຄ້າມະນຸດ, ລວມທັງຜູ້ຕອບໂຕ້ດ້ານໜ້າ ເພື່ອປະຕິບັດກິດຈະກຳປ້ອງກັນ ແລະ ປູກຈິດສຳນຶກ ທີ່ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. |

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
| --- | --- |
| ໜ່ວຍງານຕ້ານການຄ້າມະນຸດມີທັກສະທາງດ້ານການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ, ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄວາມສາມາດໃນການກວດສອບ ແລະ ປ້ອງກັນອາດຊະຍາກຳ TIP ໄດ້ຢ່າງທັນການ. | ການສ້າງຄວາມຮັບຮູ້ກ່ຽວກັບTIP ແລະ ມາດຕະການປ້ອງກັນຫຼຸດຜ່ອນໂອກາດສຳລັບ TIP ທີ່ຈະເກີດຂຶ້ນ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
| --- | --- | --- |
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

7

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

SOPs, ກົດໝາຍ, ລະບຽບການ ແລະ ນະໂຍບາຍການບັນເທົາທຸກໄພພິບັດ ແລະ ການຕອບໂຕ້ສຸກເສີນ ລວມເຖິງການປ້ອງກັນ TIP.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍໆ ໃນພາກທີ 3.8.1.2, 3.8.1.3.
- ແຜນແມ່ບົດຂອງອາຊຽນປີ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ APSC 9, 12, 13, 14.

### ລາຍລະອຽດ ແລະ ຄໍາອະທິບາຍ

ສະຖານະການໄພພິບັດ ຫລື ການຕອບໂຕ້ສຸກເສີນ ລວມມີໄພພິບັດທາງທໍາມະຊາດ ເຊັ່ນ: ໄພແຫ້ງແລ້ງ, ນໍ້າຖ້ວມ, ຄື້ນສຸນາມິ, ແຜ່ນດິນໄຫວ, ແລະ ພູເຂົາໄຟລະເບີດ ແລະ ອື່ນໆ. ມັນຍັງລວມເຖິງວິກິດການດ້ານມະນຸດສະທໍາ ເຊັ່ນ: ຄວາມອຶດຫິວ, ການບັງຄັບໃຫ້ເຄື່ອນຍ້າຍຖິ່ນຖານ ແລະ ການຂັດແຍ້ງ. ການບັນເທົາໄພພິບັດ ແລະ ການຕອບໂຕ້ສຸກເສີນບໍ່ແມ່ນຂຶ້ນກັບການປະກາດສະຖານະສຸກເສີນ.

TIP ແມ່ນຜົນສະທ້ອນໂດຍກົງຂອງວິກິດການ. ສະຖານະວິກິດການດັ່ງກ່າວກະຕຸ້ນໃຫ້ເກີດມີປັດໃຈສ່ຽງເພີ່ມຂຶ້ນ ແລະ ໂດຍສະເພາະຕໍ່ກັບ TIP. ການລະເມີດລະບຽບກົດໝາຍ ແລະ ສະຖາບັນ ແລະ ການຂາດໂອກາດທາງເສດຖະກິດອາດຈະເພີ່ມຄວາມສ່ຽງຕໍ່ TIP ໃນກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບ ລວມເຖິງການຂັດຂວາງເຄືອຂ່າຍອາຊະຍາກໍາ ເພື່ອດັດປັບໃຫ້ເຂົ້າກັບສະຖານະການໃໝ່. ຜູ້ກະທໍາຜິດ TIP ອາດຈະແນ່ໃສ່ສະຖານທີ່ໃໝ່ໆ ລວມທັງສູນສໍາລັບຜູ້ອົບພະຍົບ ແລະຜູ້ບໍ່ມີທີ່ຢູ່ອາໄສເປັນຫລັກແຫລ່ງ, ຈຸດຜ່ານແດນ ຫລື ທ້ອງຖິ່ນທີ່ມີປະຊາກອນຜູ້ທີ່ເປັນຜູ້ດເຄື່ອນຍ້າຍຖິ່ນຖານ. ການປະຕິບັດທີ່ເປັນອັນຕະລາຍ ແລະ ມີວັດທະນະທໍາແບບດັ້ງເດີມ ອາດຈະເພີ່ມຂຶ້ນໃນຊ່ວງເກີດວິກິດ ແລະ ການຂາດແນວທາງແກ້ໄຂໃນທັນທີ ຊຶ່ງເຮັດໃຫ້ມີການເພີ່ມທະວີ ຄວາມສ່ຽງ ແລະ ປະລິມານ TIP[36]

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ການບັນເທົາໄພພິບັດ ແລະ ການຕອບໂຕ້ສຸກເສີນ SOPs, ກົດໝາຍ, ລະບຽບການ, ແລະ ນະໂຍບາຍ ສ້າງໃຫ້ມີການການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP.
- ☐ SOPs, ກົດໝາຍ, ລະບຽບການ ແລະ ນະໂຍບາຍ ສໍາລັບຮັບມືກັບໄພພິບັດ ແລະ ວິກິດການ ແມ່ນມາດຕະການປ້ອງກັນ ແລະ ຕອບໂຕ້ TIP ທີ່ຄໍານຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ.
- ☐ ການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ການປະສານງານສຸກເສີນກັບພາກສ່ວນກ່ຽວຂ້ອງ ແລະ ຮ່ວມມື ໃນການຕ້ານ TIP ເພື່ອປ້ອງກັນ ແລະ ສະກັດກັ້ນ TIP ໃນເວລາເກີດວິກິດ ແລະ ກໍລະນີສຸກເສີນ.
- ☐ ຜູ້ຕອບໂຕ້ດ້ານໜ້າວຽກງານສຸກເສີນ ໄດ້ຮັບການຝຶກອົບຮົມໃຫ້ໃຊ້ຄໍາແນະນໍາແຫ່ງຊາດ ຫຼື SOPs ທີ່ກ່ຽວຂ້ອງກັບການກໍານົດຕົວຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ.
- ☐ ການໂຄສະນາປຸກຈິດສໍານຶກ ແລະ ການໃຫ້ຄວາມຮູ້ໄດ້ຖືກຈັດຕັ້ງປະຕິບັດ ກ່ຽວກັບກ່ອນ, ໃນລະຫວ່າງ ແລະ ຫຼັງໄພພິບັດ ແລະ TIP ແລະ ແນວທາງການສົ່ງຕໍ່.

36 ອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ: ການແກ້ໄຂບັນຫາການຄ້າມະນຸດ ແລະ ການສວຍໃຊ້ເອົາປຽບ ໃນໄລຍະວິກິດການ (IOM) 2015.

# ການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP 7

## ຂອບເຂດ

ຜົນໄດ້ຮັບນີ້ແນະນຳວ່າ ຄວາມພະຍາຍາມໃນການຕ້ານ TIP ທີ່ຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແມ່ນໄດ້ລວມເຂົ້າໄປໃນການບັນເທົາໄພພິບັດ ແລະ ການຕອບໂຕ້ສຸກເສີນ. ບັນດາຂະແໜງການຕ້ານ TIP ຕ້ອງປະສານງານກັບຂະແໜງການບັນເທົາໄພພິບັດ ແລະ ການຕອບໂຕ້ເຫດການສຸກເສີນ ໂດຍການປະສານສົມທົບ ແລະ ຮ່ວມມືໃນລະດັບຊາດ, ພາກພື້ນ, ແລະ ທ້ອງຖິ່ນ, ລວມທັງລະຫວ່າງ ແລະ ພາຍໃນປະເທດສະມາຊິກອາຊຽນ.

SOPs, ກົດໝາຍ, ລະບຽບການ, ແລະ ນະໂຍບາຍສຳລັບການຕອບໂຕ້ໄພພິບັດ ແລະ ວິກິດການ ໄດ້ຮັບການສະໜັບສະໜູນໂດຍ:

- ແຜນການຮັບມືໄພພິບັດທີ່ມີການຈັດສັນງົບປະມານ, ອຸປະກອນຊ່ວຍເຫລືອ, ການປິ່ນປົວທາງການແພດ, ການເຂົ້າເຖິງການດູແລສຸຂະພາບ, ການກະກຽມສຸກເສີນ, ຍຸດທະສາດການຕອບໂຕ້, ແຜນບັນເທົາທຸກ, ແລະ ກົນໄກການຕິດຕາມ.
- ເຄືອຂ່າຍຂອງຜູ້ຊ່ຽວຊານດ້ານຄວາມພິການ ແລະ ສິດທິມະນຸດພາຍໃນການຄຸ້ມຄອງການຕອບໂຕ້ສຸກເສີນ, ມີສ່ວນຮ່ວມກັບອົງການຈັດຕັ້ງຂອງຄົນທີ່ມີຄວາມພິການ ໃນການວາງແຜນ, ການປະຕິບັດ, ແລະ ການປະເມີນນະໂຍບາຍໄພພິບັດ ແລະ ສຸກເສີນ.
- ຄະນະກຳມະທິການອາຊຽນ ເພື່ອການຄຸ້ມຄອງໄພພິບັດ ແລະ ຄຳແນະນຳກ່ຽວກັບ ກອບວຽກກ່ຽວກັບຄົນທີ່ມີຄວາມພິການ ແລະ ສິດທິມະນຸດໃນສາກົນ ແລະ ພາກພື້ນ.
- ກອບວຽກກ່ຽວກັບຄົນທີ່ມີຄວາມພິການ ແລະ ສິດທິມະນຸດ ແມ່ນລວມຢູ່ໃນແຜນປະຕິບັດງານສຳລັບການຮ່ວມມືລະຫວ່າງບັນດາຂະແໜງການກ່ຽວກັບອາຊະຍາກຳ TIP ທີ່ມີລັກສະນະຂ້າມຊາດ.
- ການໂຄສະນາປູກຈິດສຳນຶກ ແລະ ການໃຫ້ຄວາມຮູ້ກ່ຽວກັບ TIP ແລະ ເສັ້ນທາງການສົ່ງຕໍ່ ທີ່ແນໃສ່ປະຊາຊົນທົ່ວໄປ, ປະຊາກອນທີ່ໄດ້ຮັບຜົນກະທົບຈາກວິກິດການ ແລະ ປະຊາກອນທີ່ມີຄວາມສ່ຽງ, ລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ຜູ້ຮັກສາຄວາມສະຫງົບ, ໂດຍມີຈຸດປະສົງ ເພື່ອເຊື່ອມຕໍ່ຊ່ອງຫວ່າງຄວາມຮູ້ ກ່ອນ, ໃນລະຫວ່າງ ແລະ ຫລັງໄພພິບັດ[37].
- ການຝຶກອົບຮົມໃຫ້ແກ່ຜູ້ຕອບໂຕ້ດ້ານໜ້າ ເພື່ອປະຕິບັດຕາມຄຳແນະນຳແຫ່ງຊາດ ຫລື SOPs ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການສົ່ງຕໍ່.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| SOPs, ກົດໝາຍ, ລະບຽບການ ແລະ ນະໂຍບາຍການບັນເທົາທຸກໄພພິບັດ ແລະ ການຕອບໂຕ້ສຸກເສີນໄດ້ຖືກຈັດຕັ້ງປະຕິບັດ ແລະ ປັບປຸງຢ່າງຕໍ່ເນື່ອງ. | SOPs, ກົດໝາຍ, ລະບຽບການ, ແລະ ນະໂຍບາຍ ໄດ້ເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂະບວນການເຮັດວຽກ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

37 ອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ: ການແກ້ໄຂບັນຫາການຄ້າມະນຸດ ແລະ ການສວຍໃຊ້ເອົາປຽບ ໃນໄລຍະວິກິດການ (IOM) 2015 (IOM) 2015, p 4.

# ຕົວຢ່າງ ພາກປະຕິບັດທີ່ດີ ດ້ານການສ້າງຄວາມຮັບຮູ້ ແລະ ການປ້ອງກັນ TIP

**ກິດຈະກໍາໃຫ້ຄວາມຮູ້ ແລະ ການໂຄສະນາປູກຈິດສໍານຶກ ທີ່ເນັ້ນໜັກເຖິງຄວາມສ່ຽງ, ການລົງໂທດ, ແລະ ຜົນສະທ້ອນຂອງ**

ຢູ່ຫວຽດນາມ ບັນດາອົງການຈັດຕັ້ງສັງຄົມດໍາເນີນ ແລະ ຕິດຕາມບັນດາກິດຈະກໍາປົກປ້ອງເດັກ ໂດຍຜ່ານບັນດາກອງປະຊຸມສໍາມະນາ, ການຝຶກອົບຮົມ ແລະ ບັນດາຂະບວນການສື່ສານ. ສ່ວນໃຫຍ່ແມ່ນສະໜັບສະໜູນກໍລະນີຂອງການລ່ວງລະເມີດທາງເພດເດັກນ້ອຍ ໂດຍໃຫ້ການສະໜັບສະໜຸນ ແລະ ໃຫ້ຄໍາແນະນໍາ ໂດຍຜ່ານອາສາສະໝັກ.

ທະນາຍຄວາມເພື່ອສິດທິຂອງເດັກ ສະໝັກໃຈທີ່ຈະສະໜັບສະໜູນອົງການຈັດຕັ້ງເຫລົ່ານີ້ ໂດຍດໍາເນີນການສາທິດການພິຈາລະນາຄະດີສານຈໍາລອງໃນທີ່ສາທາລະນະ ໂດຍໃຊ້ທະນາຄວາມທີ່ມີຊື່ສຽງ. ຮູບແບບດັ່ງກ່າວໄດ້ຮັບຄວາມນິຍົມຫລາຍຢູ່ບັນດາທ້ອງຖິ່ນ ຊຶ່ງໄດ້ມີການຈັດຕັ້ງປະຕິບັດ ເນື່ອງຈາກວ່າມັນເປັນຈຸດໃຈກາງຂອງການຮຽນຮູ້, ເຊື່ອມຊຶມໄດ້ງ່າຍ ແລະ ປະຊາຊົນໄດ້ແລກປ່ຽນປະສົບການໃນການປົກປ້ອງເດັກ, ການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການປ້ອງກັນການຄ້າມະນຸດ.

**ການຈັບລູກຄ້າທີ່ໃຊ້ບໍລິການການຄ້າມະນຸດ**

ການດໍາເນີນຄະດີ TIP ໃນປະເທດໄທ, ທີ່ດຶງດູດຄວາມສົນໃຈຂອງສື່ມວນຊົນຢ່າງຫລວງຫລາຍ, ໂດຍສຸມໃສ່ການດໍາເນີນຄະດີກັບບຸກຄົນທີ່ມີຊື່ສຽງ ໃນຖານະເປັນລູກຄ້າທີ່ບັງຄັບໃຫ້ຄ້າປະເວນີເດັກນ້ອຍຕໍ່າກວ່າ 18 ປີ. ລູກຄ້າໄດ້ຖືກສືບສວນ, ດໍາເນີນຄະດີ, ແລະ ຕັດສິນລົງໂທດການລ່ວງລະເມີດເດັກນ້ອຍທີ່ມີອາຍຸຕໍ່າກວ່າ 15 ປີ. ນອກຈາກນັ້ນ, ລາວຍັງໄດ້ສູນເສຍວຽກຂອງລາວໂດຍທີ່ບໍ່ໄດ້ຮັບເງິນບໍານານ ຍ້ອນເຫດຜົນທີ່ລາວໄດ້ເຮັດການກະທໍາທີ່ໂຫດຮ້າຍ. ຄະດີນີ້ໄດ້ສ້າງຄວາມຮັບຮູ້ໃຫ້ປະຊາຊົນ ແລະ ເປັນການສະກັດກັ້ນຢ່າງເອົາຈິງເອົາຈັງຕໍ່ການພົວພັນກັບການຄ້າມະນຸດ ຫລື ການບັງຄັບໃຫ້ເປັນໂສເພນີ.

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

8

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

ປະເທດສະມາຊິກ ອາຊຽນ ຮັບຮອງ ແລະ ນຳໃຊ້ຄຳນິຍາມ ການຄ້າມະນຸດ ໃນ ACTIP

**ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ**

- ຄູ່ມື ແລະ ຂະບວນການໃນລະດັບພາກພື້ນ ພາກທີ 1.1.1, 1.1.2, 1.1.3, 4.1.1.
- ACTIP ມາດຕາ 2(a)-(e), 14(2).

**ລາຍລະອຽດ ແລະ ຄຳອະທິບາຍ**

ອານຸສັນຍາ ສປຊ ວ່າດ້ວຍປ້ອງກັນ, ສະກັດກັ້ນ, ແລະ ລົງໂທດ ໃນການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ຊຶ່ງເປັນອານຸສັນຍາເສີມເພີ່ມເຕີມໃຫ້ແກ່ ສົນທິສັນຍາ ສປຊ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ[38] ຖືວ່າເປັນ ຫລັກການສາກົນ ແລະ ເຄື່ອງມືທີ່ມີຜົນບັງຄັບໃຊ້ທາງກົດໝາຍ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ໂດຍສະເພາະ ແມ່ນກຳນົດຄຳນິຍາມ ໃນທາງກົດໝາຍສາກົນ ກ່ຽວກັບ ການຄ້າມະນຸດ. ອານຸສັນຍາການຕ້ານການຄ້າມະນຸດ ປີ 2000 ໄດ້ມີການຮັບຮອງຢ່າງກວ້າງຂວາງ ໂດຍລັດ ແລະ ປະຊາຄົມສາກົນ ໂດຍທີ່ບັນດາກົດໝາຍ ແລະ ນະໂຍບາຍສາກົນ ໄດ້ນຳໃຊ້ນິຍາມ ຂອງ ອານຸສັນຍາ ລວມທັງ ACTIP.

ນິຍາມ ການຄ້າມະນຸດ ຖືກກຳນົດຢ່າງຈະແຈ້ງ ໃນມາດຕາ 3 ຂອງ ອານຸສັນຍາ ໂດຍມີ ສາມ ອົງປະກອບ (ການກະທຳ, ວິທີການ, ແລະ ຈຸດປະສົງ) ຊຶ່ງຕ້ອງມີທັງໝົດ ສາມ ອົງປະກອບ ຈຶ່ງຖືວ່າເປັນການຄ້າມະຍຸດ ຍົກເວັ້ນກໍລະນີທີ່ກ່ຽວຂ້ອງກັບການຄ້າເດັກນ້ອຍ ຊຶ່ງບໍ່ຈຳເປັນຕ້ອງມີອົງປະກອບທີ່ເປັນວິທີການ. ນອກນັ້ນ, ກໍບໍ່ຈຳເປັນຕ້ອງພິຈາລະນາຄວາມຍິນຍອມ ຂອງ ຜູ້ຖືກເຄາະຮ້າຍ ເວລາທີ່ໄດ້ມີການນຳໃຊ້ວິທີການທີ່ຖືກກຳນົດ. ນິຍາມ ຂອງ ເດັກ ແມ່ນ ບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ ອີງຕາມການກຳນົດ ຂອງ ສົນທິສັນຍາ ວ່າດ້ວຍສິດທິເດັກ.

ການນຳໃຊ້ຄຳນິຍາມ ກ່ຽວກັບ ການຄ້າມະນຸດ ທີ່ເປັນເອກະພາບກັນມີຄວາມສຳຄັນຢ່າງຍິ່ງ ເພື່ອສາມາດກຳນົດຕົວຜູ້ຖືກເຄາະຮ້າຍໄດ້ຢ່າງຖືກຕ້ອງ. ການຮັບຮູ້ ເຊິ່ງກັນແລະກັນ ກ່ຽວກັບການກຳນົດຕົວຜູ້ຖືກເຄາະຮ້າຍ ໃນກໍລະນີທີ່ເກີດມີການຄ້າມະນຸດ ທີ່ກ່ຽວຂ້ອງກັບຫລາຍປະເທດ ຖືວ່າເປັນຂໍ້ກຳນົດໃນ ACTIP ມາດຕາທີ 14 (2) ຈະສາມາດນຳໃຊ້ໄດ້ ໃນກໍລະນີທີ່ປະເທດສະມາຊິກອາຊຽນທັງໝົດ ຮັບຮູ້ ແລະ ນຳໃຊ້ນິຍາມ TIP ທີ່ມີຄວາມໝາຍເປັນອັນດຽວກັນ ໃນກອບນິຕິກຳແຫ່ງຊາດ ຂອງຕົນ ລວມທັງຄູ່ມືໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ SOPs.

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ກົດໝາຍ, ນະໂຍບາຍ ແລະ ຂະບວນການ ລວມທັງການຮັບຮອງ ແລະ ນຳໃຊ້ນິຍາມການຄ້າມະນຸດ ຕາມທີ່ລະບຸໃນ ACTIP
- ☐ SOP ແລະ ຄູ່ມື ສຳລັບການກຳນົດຕົວຜູ້ຖືກເຄາະຮ້າຍ ຈາກ TIP ນຳໃຊ້ນິຍາມການຄ້າມະນຸດທີ່ຖືກຕ້ອງ ອີງຕາມ ACTIP ລວມທັງການໄຈ້ແຍກອົງປະກອບລະຫວ່າງ ຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ ແລະ ເດັກ
- ☐ ເດັກນ້ອຍ ໝາຍເຖິງບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ ອີງຕາມ ສົນທິສັນຍາ ວ່າດ້ວຍ ສິດທິເດັກ
- ☐ ການນຳໃຊ້ນິຍາມຄຳສັບຫຼັກໆ ໃນກອບນິຕິກຳແຫ່ງຊາດ ເຊິ່ງໃຫ້ຄຳນິຍາມທີ່ກ່ຽວຂ້ອງກັບ TIP ແມ່ນໄດ້ກຳນົດໃນ ACTIP ທີ່ກ່ຽວຂ້ອງ ແລະ/ຫຼືເຄື່ອງມືທາງກົດໝາຍ ຫຼື ຄຳແນະນຳສາກົນ
- ☐ ການສະໜອງການຝຶກອົບຮົມ ໃຫ້ແກ່ຜູ້ປະຕິບັດຕົວຈິງ ເພື່ອຮັບປະກັນຄວາມເຂົ້າໃຈ ແລະ ການນຳໃຊ້ຄຳນິຍາມ ການຄ້າມະນຸດ
- ☐ ກົດໝາຍ, ນະໂຍບາຍ ແລະ ຂະບວນການເຮັດວຽກຕ້ານ TIP ຖືກທົບທວນ, ປະເມີນຜົນ ແລະ ຍົກລະດັບເປັນປະຈຳ

38 ອະນຸສັນຍາ ອົງການ ສປຊ ວ່າດ້ວຍການປ້ອງກັນ, ສະກັດກັ້ນ ແລະ ລົງໂທດຜູ້ຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (The TIP Protocol), 2000, ສົນທິສັນຍາ ອົງການ ສປຊ ວ່າດ້ວຍການຕ້ານອາຊະຍາກຳທີ່ມີການຈັດຕັ້ງ (UNTOC) 2001. p 4.

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ 8

**ຂອບເຂດ**

ຜົນໄດ້ຮັບນີ້ກວມເອົາ:

- ກົດໝາຍ, ນະໂຍບາຍ ແລະ ຂັ້ນຕອນ ຮັບຮອງ ແລະ ນຳໃຊ້ຄຳນິຍາມ ຂອງ TIP ອີງຕາມການລະບຸໃນ ACTIP ລວມທັງນິຍາມສຳລັບການຄ້າມະນຸດ ທີ່ເປັນເດັກ ແລະ ຫລັກການທີ່ບໍ່ພິຈາລະນາຄວາມຍິນຍອມ.
- ຄຳສັບຫລັກ ທີ່ນອນໃນນິຍາມກົດໝາຍແຫ່ງຊາດ ກ່ຽວກັບ ການຄ້າມະນຸດ ເຊັ່ນ ແຮງງານບັງຄັບ ຫລື ການສວຍໃຊ້ສະຖານະທີ່ມີຄວາມສ່ຽງ ແລະ ເດັກ, ຖືກກຳນົດນິຍາມ ອີງຕາມ ກົດໝາຍ ຫລື ຄູ່ມືສາກົນທີ່ກ່ຽວຂ້ອງ.
- ນິຍາມ ຂອງ ການຄ້າເດັກ ຖືກລະບຸໃນກົດໝາຍ ແລະ ນະໂຍບາຍຕ້ານການຄ້າມະນຸດ ແຫ່ງຊາດ ແລະ ອົງປະກອບການກະທຳຜິດສະຖານການຄ້າມະນຸດເດັກ (ການກະທຳ ແລະ ຈຸດປະສົງ) ຖືກກຳນົດຢ່າງຈະແຈ້ງ ໃນຄູ່ມືການກຳນົດຕົວຜູ້ຖືກເຄາະຮ້າຍ.
- ການສະໜອງການຝຶກອົບຮົມໃຫ້ແກ່ຜູ້ປະຕິບັດຕົວຈິງ ເພື່ອຮັບປະກັນຄວາມເຂົ້າໃຈ ແລະ ການນຳໃຊ້ນິຍາມ ການຄ້າມະນຸດ.
- ກົດໝາຍ ແລະ ນະໂຍບາຍ ແລະ ຂັ້ນຕອນ ຖືກທົບທວນ, ປະເມີນຜົນ ແລະ ສ້າງຄວາມເຂັ້ມແຂງເປັນປະຈຳ ເພື່ອກວມເອົາບັນຫາ TIP ທີ່ພົ້ນເດັ່ນ ເຊັ່ນ ການບັງຄັບຜູ້ຖືກເຄາະຮ້າຍໃຫ້ກະທຳຜິດທາງອາຍາ

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ບັນດາ SOP, ກົດໝາຍ, ລະບຽບການ ແລະ ນະໂຍບາຍ ກ່ຽວກັບ ນິຍາມການຄ້າມະນຸດ ຖືກຈັດຕັ້ງປະຕິບັດ ແລະ ປັບປຸງແບບຕໍ່ເນື່ອງ ເພື່ອໃຫ້ສອດຄ່ອງກັບ ສົນທິສັນຍາ ລະດັບຊາດ ແລະ ສາກົນ, ບັນຫາທີ່ເກີດຂຶ້ນໃໝ່ ແລະ ແນວໂນ້ມ. | ກົດໝາຍ ແລະ ນະໂຍບາຍຕ້ານການຄ້າມະນຸດ ຖືກທົບທວນແບບຕໍ່ເນື່ອງ ເພື່ອຮັບປະກັນການປະຕິບັດສອດຄ່ອງ ຕໍ່ກັບພັນທະພາຍໃຕ້ ACTIP ແລະ ການຫຼຸດຜ່ອນອາຊະຍາກຳການຄ້າມະນຸດ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

9

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

SOPs ແລະ ຄູ່ມື ສໍາລັບການກໍານົດຕົວຜູ້ຖືກເຄາະຮ້າຍ ທີ່ສອດຄ່ອງກັບ ACTIP.

**ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ**

- ຄູ່ມື ແລະ ຂັ້ນຕອນໃນລະດັບພາກພື້ນ ພາກທີ 1.3.8, 2.2.6, 1.2.4, 2.4.10. 4.2.9. 4.3.10.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ພາກທີ 2.6.2, 3.2.1, 3.2.4, 3.2.5, 3.2.7, 3.3.3, 3.5.6.
- ຄູ່ມືການບໍ່ເຮັດໄພອັນຕະລາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 15, 16, 24, 25, 29, 32.
- ACTIP ມາດຕາ 1(b), 14(1), 14(2), 14(7), 14(10), 14(12).

**ລາຍລະອຽດ ແລະ ຄໍາອະທິບາຍ**

ຄວາມລົ້ມເຫລວ ໃນການຮັບຮູ້ວ່າບຸກຄົນໃດໜຶ່ງຕົວ ຜູ້ທີ່ອາດເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະເປັນການລະເມີດສິດທິຂອງບຸກຄົນດັ່ງກ່າວນັ້ນ, ສ້າງໄພອັນຕະລາຍເພີ່ມເຕີມ ແລະ ເຮັດໃຫ້ເສຍໂອກາດໃນການນໍາໃຊ້ກອບນິຕິກໍາ ຕ້ານ TIP. ການກໍານົດຕົວຜູ້ຖືກເຄາະຮ້າຍແບບວ່ອງໄວ ແລະ ຖືກຕ້ອງ ມີຄວາມສໍາຄັນເປັນພື້ນຖານ ໃນການຕອບໂຕ້ຄວາມຍຸຕິທໍາທາງອາຍາແບບມີປະສິດທິຜົນ ແລະ ເພື່ອຮັບປະກັນການຊ່ວຍເຫລືອ, ສະໜັບສະໜູນ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ. ຕ້ອງມີກົນໄກ ແລະ ຂະບວນການເຮັດວຽກເພື່ອເອື້ອອໍານວຍ.

ACTIP ຮຽກຮ້ອງໃຫ້ປະເທດສະມາຊິກອາຊຽນ ສ້າງຄູ່ມືການກໍານົດຕົວຜູ້ຖືກເຄາະຮ້າຍ ແລະ SOP ສໍາລັບການກໍານົດຕົວຜູ້ຖືກເຄາະຮ້າຍ ທີ່ເປັນເອກະພາບກັນ ແລະ ຮ່ວມມືກັບອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຖ້າມີຄວາມຈໍາເປັນ. ບັນດາເຄື່ອງມື ແລະ ຄູ່ມືເຫລົ່ານີ້ແມ່ນການປົກປ້ອງຊີວິດການເປັນຢູ່ ຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ທີ່ອາດເປັນຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ນມີການພິຈາລະນາຄວາມຕ້ອງການພິເສດຂອງເດັກນ້ອຍ.

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ມີການຈັດຕັ້ງປະຕິບັດ SOPs ແລະ ຄູ່ມືສໍາລັບການກໍານົດຕົວຜູ້ຖືກເຄາະຮ້າຍ ທີ່ສອດຄ່ອງກັບ ພັນທະ ພາຍໃຕ້ ACTIP
- ☐ ປະເທດສະມາຊິກອາຊຽນ ນໍາໃຊ້ນິຍາມ TIP ອັນດຽວກັນ ແລະ ຮັບຮູ້ຜົນຂອງການກໍານົດຕົວຜູ້ຖືກເຄາະຮ້າຍ ຮ່ວມກັນ ຖ້າເກີດມີກໍລະນີການຄ້າມະນຸດທີ່ກ່ຽວຂ້ອງກັບຫຼາຍປະເທດ.
- ☐ ປະເທດສາມາຊິກອາຊຽນຮ່ວມມືເພື່ອກ້າວໄປສູ່ຂະບວນການທົບທວນກົດໝາຍ, ລະບຽບການ ແລະ ນະໂຍບາຍ ເພື່ອຮັບປະກັນຄວາມສອດຄ່ອງກັບ ACTIP ແລະ ມາດຕະຖານສາກົນ ກ່ຽວກັບການກໍານົດຕົວຜູ້ຖືກເຄາະຮ້າຍອື່ນໆ.
- ☐ ການກໍານົດຕົວຜູ້ຖືກເຄາະຮ້າຍເປັນສ່ວນໜຶ່ງຂອງສິດທິຂອງຜູ້ຖືກເຄາະຮ້າຍ. ຜູ້ທີ່ອາດເປັນຜູ້ຖືກເຄາະຮ້າຍທັງໝົດ ຄວນໄດ້ຮັບຂໍ້ມູນ ແລະ ເຂົ້າເຖິງຂະບວນການກໍານົດຕົວ.
- ☐ ຕ້ອງມີຄວາມຍິນຍອມໂດຍມີຂໍ້ມູນຄົບຖ້ວນ ແລະ ເຫັນໄດ້ຈະແຈ້ງ
- ☐ SOPs ແລະ ຄູ່ມື ສໍາລັບການກໍານົດຕົວຜູ້ຖືກເຄາະຮ້າຍຈາກ TIP ພິຈາລະນາບົດບາດຍິງ-ຊາຍ, ອາຍຸ ແລະ ຄວາມຕ້ອງການໂດຍສະເພາະຂອງເດັກ.
- ☐ ມີພະນັກງານຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກ TIP
- ☐ ສະໜອງນາຍແປພາສາທີ່ມີຄຸນວຸດທິ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ຖ້າມີຄວາມຕ້ອງການ
- ☐ ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບຂໍ້ມູນ ເປັນພາສາໃດໜຶ່ງ ແລະ ໃນຮູບແບບທີ່ເຂົາເຈົ້າເຂົ້າໃຈ
- ☐ ຜູ້ຖືກເຄາະຮ້າຍຈາກ TIP ມີສ່ວນຮ່ວມໃນການວາງແຜນ ແລະ ຈັດຕັ້ງປະຕິບັດການຊ່ວຍເຫຼືອ

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ 9

## ຂອບເຂດ

ປະເທດສະມາຊິກອາຊຽນ:

- ໄດ້ສ້າງ, ຮັບຮອງ ແລະ ຈັດຕັ້ງປະຕິບັດ ເອກະສານຄູ່ມືລະດັບຊາດ ຫລື ພາກພື້ນ ສຳລັບການກຳນົດຕົວຜູ້ຖືກເຄາະຮ້າຍ ທີ່ສອດຄ່ອງພາຍໃຕ້ພັນທະຂອງ ACTIP.
- SOPs ແລະ ຄູ່ມື ສຳລັບການກຳນົດຕົວຜູ້ຖືກເຄາະຮ້າຍຈາກ TIP ແລະ ການຕັດສິນບັນຫາ ມີຄວາມຈະແຈ້ງ, ມີການບັນທຶກລະອຽດ ແລະ ອີງຕາມການປະຕິບັດທີ່ເປັນຕົວແບບທີ່ດີ ເພື່ອຍົກລະດັບຄວາມວ່ອງໄວ ແລະ ຄວາມຖືກຕ້ອງໃນການກຳນົດຕົວຜູ້ຖືກເຄາະຮ້າຍ.
- SOPs ແລະ ຄູ່ມືແມ່ນຖືກອອກແບບເພື່ອຮັບປະກັນການຮັບຮູ້ຜົນຮ່ວມກັນໃນການກຳນົດຕົວຜູ້ຖືກເຄາະຮ້າຍໂດຍປະເທດສະມາຊິກອາຊຽນອື່ນໆ, ການປະສານງານ ແລະ ການຮ່ວມມື ລະຫວ່າງເຈົ້າໜ້າທີ່ພາຍໃນ ແລະ ສາກົນ.
- ການປັບປຸງກົດໝາຍ, ລະບຽບການ ແລະ ນະໂຍບາຍ ຢ່າງເປັນປະຈຳ ເພື່ອຮັບປະກັນຄວາມສອດຄ່ອງກັບ ACTIP ແລະ ມາດຕະຖານສາກົນອື່ນໆໃນການການກຳນົດຕົວຜູ້ຖືກເຄາະຮ້າຍ.
- ເກັບກຳ ຂໍ້ມູນທີ່ແທດເໝາະ ແລະ ສອດຄ່ອງ ເພື່ອການຕັດສິນບັນຫາ, ການບັນທຶກ ແລະ ການລາຍງານ.
- ການເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ພາກສ່ວນປະຕິບັດຕົວຈິງ ລວມທັງ ການຝຶກອົບຮົມ ແລະ ສື່ຕ່າງໆອີງຕາມຫລັກຖານຕົວຈິງ.

ມີມາດຕະການປົກປ້ອງກຸ່ມທີ່ມີຄວາມສ່ຽງ ເປັນຕົ້ນແມ່ນ ແມ່ຍິງ, ເດັກນ້ອຍ, ຄົນທີ່ມີຄວາມພິການ, ແລະ ນຳໃຊ້ວິທີການທີ່ເປັນມິດກັບເດັກ:

- ບຸກຄະລາກອນຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກ TIP, ນາຍແປພາສາ ແລະ ຂໍ້ມູນຂ່າວສານທີ່ເປັນມິດຕໍ່ເດັກນ້ອຍ ແລະ ສະໜອງໃນຮູບແບບຫລາຍພາສາ ແລະ ພ້ອມທັງ ຮູບແບບພາສາມື ແລະ ທຸກພາກສ່ວນຂອງສັງຄົມສາມາດເຂົ້າເຖິງໄດ້ ລວມທັງເດັກນ້ອຍ, ປະຊາກອນທີ່ມີສ່ຽງ ແລະ ຄົນທີ່ມີຄວາມພິການ. ຜູ້ຖືກເຄາະຮ້າຍຈາກ TIP ຄວນສາມາດເລືອກເພດຂອງພະນັກງານທີ່ຈະໃຫ້ການຊ່ວຍເຫລືອ
- ປະຕິບັດຕໍ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງທາງເພດ ໂດຍຄຳນຶງເຖິງຄວາມລະອຽດອ່ອນ ແລະ ອີງຕາມອາຍຸ, ເພດ ແລະ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ.
- ຜູ້ຖືກເຄາະຮ້າຍ ຈາກ TIP ມີສ່ວນຮ່ວມໃນທຸກໆດ້ານຂອງການວາງແຜນ ແລະ ຈັດຕັ້ງປະຕິບັດການຊ່ວຍເຫລືອ, ການຍິນຍອມໂດຍມີຂໍ້ມູນຄົບຖ້ວນ, ຫລື ການໃຫ້ຄວາມຍິນຍອມແບບຈະແຈ້ງ (ສຳລັບເດັກ).
- ພາຍຫລັງທີ່ມີສ່ວນຮ່ວມໃນຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍ, ຄວນສົ່ງຕໍ່ຜູ້ຖືກເຄາະຮ້າຍ ໃຫ້ໄດ້ຮັບການຊ່ວຍເຫລືອ ເຖິງວ່າເຂົາເຈົ້າຈະບໍ່ເຂົ້າຂະບວນການຍຸຕິທຳກໍຕາມ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| SOPs ແລະ ຄູ່ມື ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ຖືກຈັດຕັ້ງປະຕິບັດ ແລະ ປັບປຸງແບບຕໍ່ເນື່ອງ. | SOPs ແລະ ຄູ່ມື ກ່ຽວກັບ ການກຳນົດຕົວຜູ້ຖືກເຄາະຮ້າຍ ຖືກເຊື່ອມສານເຂົ້າສູ່ອົງການຈັດຕັ້ງ ແລະ ສອດຄ່ອງກັບ ACTIP ພ້ອມທັງມີການເຄົາລົບ ແລະ ຮັບຮູ້ຮ່ວມກັນ ຂອງບັນດາປະເທດສະມາຊິກອາຊຽນທັງໝົດ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການກຳນົດຕົວ
# ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

10

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ມີການສ້າງຕັ້ງ ຈຸດປະສານງານ TIP ຂັ້ນສູນກາງ ຫລື ກົນໄກການປະສານງານທີ່ຄ້າຍຄຽງ ແລະ/ຫລື ຈຸດປະສານງານ ຫລື ກົນໄກດັ່ງກ່າວໄດ້ຮັບການສ້າງຄວາມເຂັ້ມແຂງ ຢູ່ແຕ່ລະປະເທດສະມາຊິກອາຊຽນ

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການພາກພື້ນ ພາກທີ 1.3.9, 1.4.10, 6.1.3.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ພາກທີ 3.1.1, 3.2.8, 3.4.1, 3.4.2, 3.4.4.
- ACTIP ມາດຕາ 12(b).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ APSC19.

### ລາຍລະອຽດ ແລະ ຄໍາອະທິບາຍ

ຈຸດປະສານງານທີ່ເປັນສູນກາງ ຫລື ກົນໄກທີ່ມີລັກສະນະຄ້າຍຄືກັນ ເຊັ່ນ: ໜ່ວຍງານສະເພາະກິດຕ້ານ TIP ຢູ່ ອິນໂດເນເຊຍ, ຄະນະກຳມະການປະສານງານ ຢູ່ ຟີລິບປິນ, ແລະ ບັນດາຄະນະກຳມະການ ຢູ່ ບັນດາປະເທດພາກພື້ນແມ່ນ້ຳຂອງ ໄດ້ສ້າງນະໂຍບາຍ, ຄູ່ມື ແລະ SOP ສຳລັບການດຳເນີນການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ.

ເພື່ອຮັບປະກັນການກຳນົດຕົວຜູ້ຖືກເຄາະຮ້າຍ ແບບວ່ອງໄວ ແລະ ຖືກຕ້ອງ, ຄະນະປະສານງານຕ່າງໆ ຄວນແຕ່ງຕັ້ງພາກສ່ວນທີ່ຮັບຜິດຊອບໃນການກຳນົດຕົວ, ການຊ່ວຍເຫລືອ ແລະ ການປົກປ້ອງ ຜູ້ຖືກເຄາະຮ້າຍ. ຄວນສົ່ງເສີມໃຫ້ CSO, ຜູ້ນຳຂັ້ນຊຸມຊົນ, ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ມີສ່ວນຮ່ວມ ໃນການຄົ້ນພົບ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍເບື້ອງຕົ້ນ, ຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການສົ່ງຕໍ່. ຄະນະປະສານງານຂັ້ນສູນກາງນີ້ ຄວນຊຸກຍູ້ສົ່ງເສີມໃຫ້ມີການສ້າງຕັ້ງ ໜ່ວຍງານສະເພາະກິດຢູ່ຂັ້ນທ້ອງຖິ່ນ ເພື່ອເສີມຂະຫຍາຍວຽກງານການກຳນົດຕົວ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ນະໂຍບາຍ ເພື່ອດຳເນີນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ເສັ້ນທາງການສົ່ງຕໍ່ ແມ່ນຖືກສ້າງຂຶ້ນ.
- ☐ ອົງກອນທີ່ຮັບຜິດຊອບ ນຳໃຊ້ເຄື່ອງມື ແລະ ຄູ່ມື ສຳລັບການກຳນົດຕົວຜູ້ຖືກເຄາະຮ້າຍ ໂດຍມີການຄຳນຶງເຖິງບົດບາດຍິງຊາຍ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ.
- ☐ ເຄື່ອງມື ແລະ ຄູ່ມື ກ່ຽວກັບການກຳນົດຕົວຜູ້ຖືກເຄາະຮ້າຍ ຖືກທົບທວນ ແລະ ປັບປຸງ ເປັນແຕ່ລະໄລຍະຕາມຄວາມຈຳເປັນ.
- ☐ ສະຖານທູດອາດແຕ່ງຕັ້ງຈຸດປະສານງານ ເພື່ອຮ່ວມມືກັບອົງການຈັດຕັ້ງພາກລັດ.
- ☐ ໜ່ວຍງານ/ຄະນະກຳມະການ ຂັ້ນທ້ອງຖິ່ນຖືກສ້າງຂຶ້ນ ເພື່ອສະໜັບສະໜູນການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍໃນຂັ້ນທ້ອງຖິ່ນ.
- ☐ ອົງການຈັດຕັ້ງທາງສັງຄົມ, ຜູ້ນຳຂັ້ນຊຸມຊົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານອື່ນໆ ມີສ່ວນຮ່ວມເພື່ອສະໜັບສະໜູນຜູ້ຖືກເຄາະຮ້າຍຈາກ TIP ແລະ/ຫຼື ຜູ້ທີ່ອາດເປັນຜູ້ຖືກເຄາະຮ້າຍໃນຂະບວນການການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ.
- ☐ ຈຸດປະສານງານ TIP ຂັ້ນສູນກາງ ແລະ ທ້ອງຖິ່ນ (ເຊັ່ນ: ໜ່ວຍງານສະເພາະກິດ/ສະພາ/ຄະນະກຳມະການ) ໄດ້ຮັບການສະໜັບສະໜູນໂດຍຈັດສັນຊັບພະຍາກອນທີ່ພຽງພໍ ເພື່ອຈັດຕັ້ງປະຕິບັດວຽກງານການກຳນົດຕົວ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ (ເປັນຕົ້ນແມ່ນ ງົບປະມານ, ຊັບພະຍາກອນມະນຸດ ແລະ ເຕັກໂນໂລຊີ)

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ 10

**ຂອບເຂດ**

ຈຸດປະສານງານ TIP ຂັ້ນສູນກາງ (ໜ່ວຍງານສະເພາະກິດ/ສະພາ/ຄະນະກຳມະການ) ຄວນ:

- ສ້າງນະໂຍບາຍ ກ່ຽວກັບ ການກຳນົດຕົວຜູ້ຖືກເຄາະຮ້າຍ ລວມທັງ ແນວທາງໃນການກຳນົດຕົວ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ.
- ສ້າງການຊີ້ນຳນຳພາໃນການດຳເນີນງານ ແລະ ນຳໃຊ້ວິທີຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນການຊ່ວຍເຫລືອຜູ້ຖືກເຄາະຮ້າຍ (ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ປະກອບມີ ການກຳນົດຕົວຜູ້ຖືກເຄາະຮ້າຍ, ການຟື້ນຟູ, ດ້ານສູນພັກເຊົາ, ການກັບບ້ານ ແລະ ກັບຄືນສູ່ສັງຄົມ).
- ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ນຳໃຊ້ຄູ່ມື ແລະ ເຄື່ອງມື ເຫລົ່ານີ້, ຖ້າຈຳເປັນ, ພ້ອມທັງປັບປຸງເປັນແຕ່ລະໄລຍະ ເພື່ອພິຈາລະນາທ່າອ່ຽງ ແລະ ວິທີການຄ້າມະນຸດທີ່ເກີດຂຶ້ນໃໝ່ ແລະ ພົ້ນເດັ່ນ.
- ສ້າງກົນໄກການສົ່ງຕໍ່ແຫ່ງຊາດ ສຳລັບການຊ່ວຍເຫລືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ໂດຍເຮັດວຽກປະສານສົມທົບກັບ ບັນດາຂະແໜງການຕ່າງໆ ຂອງຄະນະກຳມະການອາຊຽນ ທີ່ກ່ຽວຂ້ອງ.
- ການຈັດສັນຊັບພະຍາກອນທີ່ພຽງພໍ ເພື່ອເພີ່ມທະວີການກຳນົດຕົວ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ.

ຜົນໄດ້ຮັບນີ້ ລວມທັງວຽກການປະສານງານ ແລະ ການຮ່ວມມື:

- ຈຸດປະສານງານ ຖືກຮັບຮູ້ໂດຍ ປະເທດສະມາຊິກອາຊຽນອື່ນໆ ເພື່ອຮັບເອົາຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຖືກສົ່ງຕໍ່.
- ສະຖານທູດ ອາດແຕ່ງຕັ້ງຈຸດປະສານງານ ເພື່ອຮ່ວມມືກັບອົງການຈັດຕັ້ງພາກລັດ ໃນການກຳນົດຕົວ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ວ່າເຂົາເຈົ້າຈະມີເອກະສານທາງການຫລືບໍ່.
- ສ້າງຄວາມເຂັ້ມແຂງຂອງ ຊ່ອງທາງການສື່ສານ ກັບປະເທດສະມາຊິກອາຊຽນອື່ນໆ ເພື່ອແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບ ການກຳນົດຕົວຜູ້ຖືກເຄາະຮ້າຍ ທີ່ເປັນຄົນຕ່າງປະເທດ ໂດຍນຳໃຊ້ກົງສູນຕາມຄວາມເໝາະສົມ.
- ຜູ້ໃຫ້ບໍລິການ (ເຊັ່ນ: ການບໍລິການດ້ານກົດໝາຍ, ສູນພັກເຊົາ ແລະ ທີ່ພັກອາໄສ, ການບໍລິການດ້ານການແພດ ແລະ ດ້ານສັງຄົມ) ຂໍຄວາມຍິນຍອມຂອງ ຜູ້ຖືກເຄາະຮ້າຍ ທີ່ເປັນລາຍລັກອັກສອນ ຫລື ບັນທຶກສຽງ ຫລື ຄວາມຍິນຍອມຈະແຈ້ງ ຈາກ ບຸກຄົນທີ່ມີຕໍ່າກວ່າອາຍຸ 18 ປີ ແລະ ການຍິນຍອມ ຈາກ ຜູ້ປົກຄອງ ຫລື ຜູ້ປົກປ້ອງທາງກົດໝາຍ ເພື່ອແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງກັບຄະດີ ໃຫ້ກັບຈຸດປະສານງານຂັ້ນສູນກາງ ແລະ ກົນໄກການປະສານງານ ແລະ ຜູ້ໃຫ້ບໍລິການ ຢູ່ ປະເທດປາຍທາງ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຈຸດປະສານງານ TIP ຂັ້ນສູນກາງ ອຳນວຍຄວາມສະດວກໃນການຮ່ວມມື ແລະ ປະສານສົມທົບ ລະຫວ່າງ ອົງກອນ ເພື່ອຮັບປະກັນການກຳນົດຕົວ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍໃຫ້ແກ່ໜ່ວຍງານທີ່ໃຫ້ການບໍລິການ ການຊ່ວຍເຫຼືອ ໄດ້ຢ່າງທັນການ. | ການກຳນົດຕົວ, ປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ ແມ່ນຖືກເຊື່ອມສານເຂົ້າໃນສະຖາບັນ ແລະ ສອດຄ່ອງກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

11

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍ ຈາກ TIP ບໍ່ມີພັນທະຮັບຜິດຊອບ ສຳລັບການກະທຳຜິດກົດໝາຍໃດໆ ທີ່ເປັນຜົນໂດຍກົງຍ້ອນການຖືກຄ້າມະນຸດ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການພາກພື້ນ ພາກທີ 2.6.14, 3.6.1, 4.3.10.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍພາກທີ 3.6.1.
- ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 21.
- ACTIP ມາດຕາ 14(7).

## ລາຍລະອຽດ ແລະ ຄຳອະທິບາຍ

ACTIP ແມ່ນສະແດງເຖິງຄຳໝາຍໝັ້ນອັນໃຫຍ່ຫລວງ ຂອງບັນດາປະເທດສະມາຊິກອາຊຽນ ເພື່ອຮັບປະກັນຄວາມປອດໄພຂອງຜູ້ຖືກເຄາະຮ້າຍ, ການປົກປ້ອງຄວາມເປັນສ່ວນຕົວ, ແລະ ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກຄຸມຂັງ ແລະ ຖືກຕັດສິນເປັນອາຊະຍາກອນ. ACTIP ໄດ້ກຳນົດຈະແຈ້ງກ່ຽວກັບ ການກັກຕົວຜູ້ຖືກເຄາະຮ້າຍຍ້ອນການກະທຳຜິດທາງອາຍາ ແລະ ການກະທຳຜິດທີ່ມີມາດຕະການທາງບໍລິຫານ[39] ການກັກຂັງຜູ້ຖືກເຄາະຮ້າຍທີ່ບໍ່ສອດຄ່ອງກັບຂໍ້ກຳນົດໃນສົນທິສັນຍາ ຫລື ຂໍ້ກຳນົດຂອງສົນທິສັນຍາ ສປຊ ວ່າດ້ວຍການຕ້ານການຄ້າມະນຸດ[40].

ການເຮັດໃຫ້ເປັນອາຊະຍາກອນເກີດຂຶ້ນຍ້ອນບໍ່ສາມາດກຳນົດຕົວຜູ້ຖືກເຄາະຮ້າຍແບບຖືກຕ້ອງ ແລະ ທັນເວລາ, ການປະຕິເສດບໍ່ໃຫ້ຜູ້ຖືກເຄາະຮ້າຍໃຊ້ສິດຂອງຕົນ ເຖິງວ່າມີຂໍ້ກຳນົດກ່ຽວກັບການບໍ່ລົງໂທດ ທີ່ໄດ້ລະບຸໃນກົດໝາຍພາຍໃນກໍ່ຕາມ. ແທນທີ່ຈະຖືກກຳນົດຕົວທັນທີ ແລະ ສົ່ງຕໍ່ໄປຫາສູນພັກເຊົາທີ່ເໝາະສົມ, ຜູ້ທີ່ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈະຖືກກັກຕົວ ຫລື ເນລະເທດ, ໂດຍສະເພາະເວລາທີ່ເຈົ້າໜ້າທີ່ກ່ຽວຂ້ອງ ມີຄວາມເຊື່ອວ່າຜູ້ຖືກເຄາະຮ້າຍສົມຮູ້ຄວາມຄິດ ກັບຜູ້ຄ້າມະນຸດ ຍ້ອນວ່າມີສ່ວນຮ່ວມໃນການກະທຳທີ່ຜິດປົກກະຕິ ເປັນຕົ້ນແມ່ນການຄ້າປະເວນີ, ການສໍ້ໂກງ, ການພະນັນ, ການເຂົ້າປະເທດແບບຜິດກົດໝາຍ ຫລື ເຮັດວຽກແບບຜິດກົດໝາຍ.

## ຂອບເຂດ

ກົດໝາຍ ແລະ ນະໂຍບາຍ ໄດ້ຖືກສ້າງຂຶ້ນ, ທົບທວນ, ປະເມີນ, ແລະ ຮັບການສ້າງຄວາມເຂັ້ມແຂງ ເປັນແຕ່ລະໄລຍະ ເພື່ອຮັບປະກັນການກຳນົດ ຫລື ຜູ້ທີ່ຖືກກຳນົດຕົວຜູ້ຖືກເຄາະຮ້າຍຈາກ TIP ໃນເບື້ອງຕົ້ນ, ລວມທັງເດັກນ້ອຍເພື່ອບໍ່ໃຫ້ມີ:

- ການກັກຕົວທາງອາຍາ ຫລື ທາງບໍລິຫານ ສຳລັບການກະທຳທີ່ຜິດກົດໝາຍ ຖ້າວ່າເປັນການກະທຳທີ່ກ່ຽວຂ້ອງກັບການຄ້າມະນຸດ ໂດຍກົງ.
- ການກັກຕົວ ຫລື ຂັງຄຸກແບບບໍ່ມີເຫດຜົນ, ກ່ອນ, ໃນລະຫວ່າງ, ຫລື ຫລັງການດຳເນີນຄະດີທາງແພ່ງ, ທາງອາຍາ ຫລື ບໍລິຫານກ່ຽວກັບການຄ້າມະນຸດ.

ຂໍ້ກຳນົດ ເພື່ອບໍ່ໃຫ້ລົງໂທດຜູ້ຖືກເຄາະຮ້າຍ ຖືກລວມເຂົ້າໃນກົດໝາຍ, ລະບຽບການ, ແລະ ນະໂຍບາຍ ຂອງ ບັນດາປະເທດສະມາຊິກ ພ້ອມທັງ ຄູ່ມື ແລະ SOP ກ່ຽວກັບການກຳນົດຕົວຜູ້ຖືກເຄາະຮ້າຍ ທີ່ກ່ຽວຂ້ອງ.

| ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ |
| --- |
| ☐ ກົດໝາຍ ແລະ ນະໂຍບາຍ ຖືກສ້າງຂຶ້ນ ຫຼື ປັບປຸງ ເພື່ອປ້ອງກັນບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກ TIP ມີພັນທະຮັບຜິດຊອບຕໍ່ກົດໝາຍສຳລັບການກະທຳຜິດ ທີ່ເກີດຂຶ້ນຍ້ອນຖືກຄ້າມະນຸດໂດຍກົງ. |
| ☐ ກົດໝາຍ ແລະ ນະໂຍບາຍ ຖືກຈັດຕັ້ງປະຕິບັດ ເພື່ອປ້ອງກັນບໍ່ໃຫ້ຜູ້ຖືກເຄາະຮ້ານຈາກ TIP ມີພັນທະຮັບຜິດຊອບຕໍ່ກົດໝາຍສຳລັບການກະທຳຜິດ ທີ່ເກີດຂຶ້ນຍ້ອນຖືກຄ້າມະນຸດໂດຍກົງ. |
| ☐ ກົດໝາຍ, ນະໂຍບາຍ, ແລະ ຂະບວນການເຮັດວຽກ ຖືກສ້າງຂຶ້ນ ຫຼື ປັບປຸງ ເພື່ອປ້ອງກັນບໍ່ໃຫ້ ຜູ້ຖືກເຄາະຮ້າຍ ຈາກ TIP ຖືກກັກຕົວ ຫຼື ຂັງຄຸກ, ກ່ອນ, ໃນລະຫວ່າງ, ຫຼື ຫຼັງການດຳເນີນຄະດີທາງແພ່ງ, ອາຍາ ຫຼື ບໍລິຫານ ກ່ຽວກັບການຄ້າມະນຸດ |
| ☐ ກົດໝາຍ ແລະ ນະໂຍບາຍ ຖືກຈັດຕັ້ງປະຕິບັດເພື່ອປ້ອງກັນບໍ່ໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ຖືກກັກຕົວ ຫຼື ຂັງຄຸກ, ກ່ອນ, ໃນລະຫວ່າງ, ຫຼື ຫຼັງການດຳເນີນຄະດີທາງແພ່ງ, ອາຍາ ຫຼື ບໍລິຫານ ກ່ຽວກັບການຄ້າມະນຸດ |

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
| --- | --- |
| ກົດໝາຍ TIP ຖືກປັບປຸງ ເພື່ອປະກອບໃຫ້ມີຂໍ້ກຳນົດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ຈາກພັນທະຮັບຜິດຊອບ ສຳລັບການກະທຳທີ່ຜິດກົດໝາຍ ທີ່ເກີດຂຶ້ນຍ້ອນເປັນຜູ້ຖືກເຄາະຮ້າຍຈາກ TIP ໂດຍກົງ | ຫຼັກການ ການບໍ່ລົງໂທດ ຖືກເຊື່ອມສານເຂົ້າສະຖາບັນ ແລະ ສອດຄ່ອງກັບ ACTIP |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
| --- | --- | --- |
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

39 ASEAN, ການດຳເນີນຄະດີອາຍາ ຕໍ່ກັບຜູ້ຄ້າມະນຸດ: ຄູ່ມືສຳລັບຜູ້ປະຕິບັດຕົວຈິງ ຂອງ ອາຊຽນ , ມິຖຸນາ 2007, Part 1(c), para. 2.

40 ຫ້ອງການ ຄະນະກຳມະການລະດັບສູງ ຂອງ ອົງການ ສປຊ ເພື່ອສິດທິມະນຸດ ຫຼັກການແນະນຳ ແລະ ຄູ່ມື ກ່ຽວກັບ ສິດທິມະນຸດ ແລະ ການຕ້ານການຄ້າມະນຸດ, 2002: Commentary. OHCHR, New York and Geneva, 2010, Principle 7 and related guidelines, pp 129–140.

# ການກຳນົດຕົວ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ

12

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ສິດທິ, ຄວາມເປັນສ່ວນຕົວ, ແລະ ຂໍ້ມູນສ່ວນຕົວ ແລະ ຂໍ້ມູນຄອບຄົວ ຂອງຜູ້ຖືກເຄາະຮ້າຍ ແມ່ນຖືກປົກປ້ອງ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 2.3.7, 2.3.8.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ພາກທີ 2.3.1.
- ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບ ຜູ້ຕອບໂຕ້ດ້ານ ໜ້າ, ໜ້າທີ 16.
- ACTIP ມາດຕາ 14(6), 16(6).

## ລາຍລະອຽດ ແລະ ຄຳອະທິບາຍ

ດັ່ງທີ່ໄດ້ກຳນົດໃນ ACTIP, ບັນດາປະເທດສະມາຊິກອາຊຽນ ຕ້ອງປົກປ້ອງຄວາມເປັນສ່ວນຕົວ ແລະ ຂໍ້ມູນທີ່ລະບຸຕົວຕົນ ຂອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ລວມທັງຄອບຄົວເຂົາເຈົ້າ ດ້ວຍການຮັກສາຄວາມລັບ ຂອງການດຳເນີນຄະດີທາງກົດໝາຍ ທີ່ກ່ຽວຂ້ອງກັບການຄ້າມະນຸດ.

ການປ້ອງກັນ ການຕົກເປັນຜູ້ຖືກເຄາະຮ້າຍຊ້ຳຄືນ ຂອງ ຜູ້ຖືກເຄາະຮ້າຍ ຄວນເປັນບູລິມະສິດ ຂອງເຈົ້າໜ້າທີ່ທັງໝົດ. ACTIP ໄດ້ກຳນົດໃຫ້ ປະເທດສະມາຊິກອາຊຽນ ຍົກລະດັບແຜນງານຝຶກອົບຮົມ ໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອປ້ອງກັນ ແລະ ຕ້ານການຄ້າມະນຸດ ລວມທັງ ພາກສ່ວນທີ່ຮັບຜິດຊອບ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ, ການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ຕັດສິນຄະດີ.

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີ ບັນດາກົດໝາຍ, ລະບຽບການ ແລະ ນະໂຍບາຍ ເພື່ອ:

- ຮັບປະກັນສິດທິ ຂອງ ຜູ້ຖືກເຄາະຮ້າຍຈາກ TIP ແລະ ຄອບຄົວ ໃນຄວາມເປັນສ່ວນຕົວ ແລະ ຄວາມລັບ ນັບຕັ້ງແຕ່ເຂົາເຈົ້າຖືກກຳນົດຕົວຜູ້ຖືກເຄາະຮ້າຍ.
- ຫ້າມເປີດເຜີຍ ລາຍລະອຽດໃດໆ ທີ່ອາດນຳໄປສູ່ການກຳນົດຕົວ ຂອງຜູ້ຖືກເຄາະຮ້າຍຈາກ TIP ແລະ ຄອບຄົວເຂົາເຈົ້າ ຍົກເວັ້ນກໍລະນີຜູ້ຖືກເຄາະຮ້າຍຍິນຍອມ ດ້ວຍການຂຽນເປັນລາຍລັກອັກສອນ ຫລື ບັນທຶກສຽງ. ໃນກໍລະນີເປັນເດັກ, ຕ້ອງມີການຍິນຍອມຢ່າງຈະແຈ້ງຈາກເດັກ ພ້ອມທັງການຍິນຍອມຈາກຜູ້ປົກຄອງ ຫລື ຜູ້ປົກຄອງຕາມກົດໝາຍ ໃນການເປີດເຜີຍ, ຫລື ການເປີດເຜີຍ ມີຄວາມສຳຄັນຍ້ອນສາເຫດອື່ນ ເຊັ່ນ ສິດທິຂອງຜູ້ທີ່ຖືກຫາ ໃນການດຳເນີນຄະດີດ້ວຍຄວາມເປັນທຳ. ຄວນມີການແຕ່ງຕັ້ງ ຜູ້ປົກຄອງຕາມກົດໝາຍ ໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ ໃນກໍລະນີທີ່ພໍ່ແມ່ຜູ້ປົກຄອງ ບໍ່ສາມາດ, ບໍ່ຢາກ ຫລື ບໍ່ເໝາະສົມ ທີ່ຈະນຳໃຊ້ສິດຂອງຕົນໃນການເປັນຜູ້ປົກຄອງ ບໍ່ວ່າຈະຊົ່ວຄາວ ຫລື ຖາວອນ.
- ຮັບປະກັນສຳນວນຄະດີ ແລະ ຂໍ້ມູນ ບໍ່ປະສົງອອກນາມ ແລະ ມີຄຳແນະນຳຈະແຈ້ງ ໃນການປົກປ້ອງບໍ່ໃຫ້ຊື່, ວັນເດືອນປີເກີດ, ທີ່ຢູ່ອາໄສ ແລະ ຂໍ້ມູນສ່ວນຕົວອື່ນໆ ຖືກນຳໃຊ້ເພື່ອລະບຸຕົວຕົນ ຂອງ ຜູ້ຖືກເຄາະຮ້າຍ, ຄອບຄົວ ຫລື ພະຍານ.
- ກົດໝາຍ, ນະໂຍບາຍ ແລະ ຂັ້ນຕອນ ທີ່ກ່ຽວຂ້ອງກັບ ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ ແມ່ນຖືກທົບທວນ, ປະເມີນຜົນ ແລະ ປັບປຸງ ຢ່າງເປັນປະຈຳ.
- ການເສີມສ້າງຄວາມອາດສາມາດໃຫ້ແກ່ເຈົ້າໜ້າທີ່ພາກລັດ ແລະ ບຸກຄະລະກອນທີ່ບໍ່ແມ່ນພາກລັດ ທີ່ກ່ຽວຂ້ອງ ເພື່ອປົກປ້ອງສິດທິຂອງ ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ ໃນການຮັກສາຄວາມເປັນສ່ວນຕົວ

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ກົດໝາຍຖືກສ້າງຂຶ້ນ ເພື່ອປົກປ້ອງ ສິດທິຂອງ ຜູ້ຖືກເຄາະຮ້າຍຈາກ TIP ແລະ ຄອບຄົວຂອງເຂົາເຈົ້າ ໃນການຮັກສາຄວາມເປັນສ່ວນຕົວ ແລະ ຫ້າມບໍ່ເປີດເຜີຍລາຍລະອຽດທີ່ສາມາດລະບຸຕົວຕົນຜູ້ຖືກເຄະາຮ້າຍ.
- ☐ ກົດໝາຍຖືກຈັດຕັ້ງປະຕິບັດເພື່ອປົກປ້ອງ ສິດທິຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ຄອບຄົວຂອງເຂົາເຈົ້າ ໃນການຮັກສາຄວາມເປັນສ່ວນຕົວ ແລະ ຫ້າມບໍ່ເປີດເຜີຍລາຍລະອຽດທີ່ສາມາດ ລະບຸຕົວຜູ້ຖືກເຄະາຮ້າຍ.
- ☐ ນະໂຍບາຍ ຖືກສ້າງຂຶ້ນເພື່ອປົກປ້ອງ ສິດທິຂອງ ຜູ້ຖືກເຄາະຮ້າຍຈາກ TIP ແລະ ຄອບຄົວຂອງເຂົາເຈົ້າ ໃນການຮັກສາຄວາມເປັນສ່ວນຕົວ ແລະ ຫ້າມບໍ່ເປີດເຜີຍລາຍລະອຽດທີ່ສາມາດລະບຸຕົວຕົນຜູ້ຖືກເຄະາຮ້າຍ.
- ☐ ນະໂຍບາຍ ຖືກຈັດຕັ້ງປະຕິບັດເພື່ອປົກປ້ອງ ສິດທິຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ຄອບຄົວຂອງເຂົາເຈົ້າ ໃນການຮັກສາຄວາມເປັນສ່ວນຕົວ ແລະ ຫ້າມບໍ່ເປີດເຜີຍລາຍລະອຽດທີ່ສາມາດລະບຸຕົວຕົນຜູ້ຖືກເຄະາຮ້າຍ.
- ☐ ນະໂບບາຍກົດໝາຍ ແລະ ພາກປະຕິບັດ ປົກປ້ອງຄວາມເປັນສ່ວນຕົວຂອງ ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ.
- ☐ ມີໂຄງຮ່າງທີ່ຮັບປະກັນບໍ່ໃຫ້ເປີດເຜີຍຂໍ້ມູນຜູ້ຖືກເຄາະຮ້າຍຕາມກົດໝາຍ ເຊັ່ນ: ບໍ່ເປີດເຜີຍຊື່, ວັນເດືອນປີເກີດ ແລະ ທີ່ຢູ່ ຂອງຜູ້ຖືກເຄາະຮ້າຍ ພ້ອມທັງຂອງຄອບຄົວເຂົາເຈົ້າ.
- ☐ ກົດໝາຍ, ນະຍໂບາຍ ແລະ ຂັ້ນຕອນ ກ່ຽວກັບ ການປົກປ້ອງສິດ ຂອງຜູ້ຖືກເຄາະຮ້າຍ ດ້ານຄວາມເປັນສ່ວນຕົວ ແລະ ຮັກສາຄວາມລັບ ຖືກທົບທວນ, ປະເມີນ, ແລະ ປັບປຸງຕາມເປັນປະຈຳ

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການປົກປ້ອງຄວາມເປັນສ່ວນຕົວ, ຂໍ້ມູນຕົວຕົນ ແລະ ການຮັກສາຄວາມລັບ ຂອງ ຜູ້ຖືກເຄາະຮ້າຍ ແມ່ນມາດຕະຖານການດຳເນີນງານ. | ຂໍ້ມູນຜູ້ຖືກເຄາະຮ້າຍ ແມ່ນຖືກປົກປ້ອງ ດ້ວຍກົນໄກການສົ່ງຕໍ່ທີ່ເໝາະສົມພ້ອມທັງເກັບກຳຂໍ້ມູນຈັດຕັ້ງປະຕິບັດຕາມມາດຕະຖານສາກົນ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການກໍານົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

13

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ມາດຕະຖານຂັ້ນຕອນການດໍາເນີນງານ ແລະ ຄູ່ມື ສໍາລັບສົ່ງຕໍ່ຜູ້ຖືກເຄາະຮ້າຍທີ່ເປັນເດັກ ສອດຄ່ອງກັບສົນທິສັນຍາ ວ່າດ້ວຍສິດທິເດັກ (CRC).

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກທີ 4.1.1-3, 4.1.8.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ພາກທີ 3.2.3, 3.2.9.
- ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 32.
- ACTIP ມາດຕາ 14(12).

### ລາຍລະອຽດ ແລະ ຄໍາອະທິບາຍ

ບັນດາອົງການທີ່ກ່ຽວຂ້ອງ ສ້າງ SOP ແລະ ຄູ່ມື ສໍາລັບຂັ້ນຕອນການສົ່ງຕໍ່ຜູ້ຖືກເຄາະຮ້າຍທີ່ເປັນເດັກ ທີ່ສອດຄ່ອງກັບ ສົນທິສັນຍາ ວ່າດ້ວຍສິດທິເດັກ[41]. ACTIP ຮຽກຮ້ອງໃຫ້ ບັນດາປະເທດສະມາຊິກອາຊຽນ ຮັບຮູ້ເຖິງຊ່ອງທາງການຊ່ວຍເຫລືອ ແລະ ປົກປ້ອງ ຜູ້ຖືກເຄາະຮ້າຍ ທີ່ແຕກຕ່າງກັນ ໂດຍທີ່ຄໍານຶງເຖິງ ອາຍຸ, ເພດ ແລະ ຄວາມຕ້ອງການພິເສດ ໂດຍສະເພາະຄວາມຕ້ອງການພິເສດຂອງເດັກນ້ອຍ. ເຊິ່ງບໍ່ມີວິທີການອັນໜຶ່ງອັນດຽວ ເພື່ອຕອບສະໜອງກັບສະພາບການ ແລະ ເງື່ອນໄຂອັນສະເພາະ ຂອງເດັກນ້ອຍ. ການບໍລິການ ຕ້ອງແທດເໝາະ ກັບຄວາມຕ້ອງການ ຂອງ ບຸກຄົນ ແລະ ຈັດຕັ້ງປະຕິບັດໃນຮູບແບບທີ່ເປັນມິດຕໍ່ເດັກ.

ການນໍາໃຊ້ມຸມມອງ ຂອງ ການຈໍາແນກແບບທັບຊ້ອນ ສາມາດຊ່ວຍເຈົ້າໜ້າທີ່ ແລະ ໜ່ວຍງານທີ່ກ່ຽວຂ້ອງ ຮັບຮູ້ວ່າ ຜູ້ຖືກເຄາະຮ້າຍ ລວມທັງ ເດັກນ້ອຍ ມີຕົວຕົນທີ່ຫລາກຫລາຍ ອີງຕາມ ປະເທດ, ອາຍຸ, ຊົນເຜົ່າ ຫລື ແຫລ່ງທີ່ມາດ້ານສັງຄົມ, ຄວາມພິການ, ແລະ ປັດໄຈ ອື່ນໆ ເຊັ່ນ ວັດທະນາທໍາ ແລະ ສາດສະໜາ.

ຕ້ອງພິຈາລະນາ ຜົນປະໂຫຍດທີ່ດີທີ່ສຸດຂອງເດັກ ເປັນໃຈກາງ ຂອງ ແຜນງານ/ການຈັດຕັ້ງປະຕິບັດ ທີ່ອາດສົ່ງຜົນກະທົບຕໍ່ເດັກ ລວມທັງຂັ້ນຕອນການສົ່ງຕໍ່. ເດັກຄວນໄດ້ຮັບຂໍ້ມູນຢ່າງເຕັມສ່ວນ ແລະ ມີສ່ວນຮ່ວມໃນທຸກຂັ້ນຕອນຂອງການຕັດສິນໃຈ ແລະ ກິດຈະກໍາ ຜ່ານການຍິນຍອມທີ່ເຫັນຢ່າງຈະແຈ້ງ.

ທຸກຢ່າງຕ້ອງປະຕິບັດໃຫ້ສອດຄ່ອງກັບ CRC, ແລະ ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ ຄວນໄດ້ຮັບການແຕ່ງຕັ້ງ ເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດຂອງເດັກໃນກໍລະນີທີ່ຜູ້ປົກຄອງ ບໍ່ສາມາດເຂົ້າຮ່ວມຊົ່ວຄາວ ຫລື ຖາວອນ, ບໍ່ຢາກເຂົ້າຮ່ວມ ຫລື ບໍ່ແທດເໝາະທີ່ຈະນໍາໃຊ້ສິດຂອງຜູ້ປົກຄອງ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ບຸກຄະລາກອນ ທີ່ເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ໄດ້ຮັບການຝຶກອົບຮົມ ແລະ ມີຄວາມສາມາດຕາມຄວາມເໝາະສົມ
- ☐ ນໍາໃຊ້ຫຼັກການຂອງການຈໍາແນກແບບທັບຊ້ອນ ເວລາພົວພັນກັບຜູ້ຖືເຄາະຮ້າຍທີ່ເປັນເດັກ.
- ☐ ມີ SOP ສໍາລັບຂັ້ນຕອນການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ເປັນເດັກ
- ☐ ຈັດຕັ້ງປະຕິບັດ SOP ສໍາລັບຂັ້ນຕອນການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ
- ☐ ໄດ້ຮັບຄວາມຍິນຍອມທີ່ຈະແຈ້ງ
- ☐ ເຄົາລົບທັດສະນະມຸມມອງ ຂອງ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ແລະ ໄດ້ຮັບການພິຈາລະນາໃນການວາງແຜນ ແລະ ຈັດຕັ້ງປະຕິບັດການຊ່ວຍເຫຼືອເຂົາເຈົ້າ ອີງຕາມ ອາຍຸ, ວຸຄິພາວະ ແລະ ຄວາມສາມາດ.
- ☐ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ໄດ້ຮັບຂໍ້ມູນຂ່າວສານໃນພາສາໃດໜຶ່ງ ແລະ ໃນຮູບແບບທີ່ເຂົາເຈົ້າສາມາດເຂົ້າໃຈໄດ້.
- ☐ ປະເທດສະມາຊິອາຊຽນ ທົບທວນ ແລະ ປັບປຸງກົດໝາຍ, ລະບຽບການ ແລະ ນະໂຍບາຍເປັນແຕ່ລະໄລຍະ

41 ສົນທິສັນຍາ ຂອງ ອົງການ ສປຊ ວ່າດ້ວຍສິດທິຂອງເດັກ Convention on the rights of the child, 1989.

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີຂໍ້ພິຈາລະນາຂອງ SOPs ສຳລັບເດັກນ້ອຍທຸກຄົນ ລວມທັງ ເດັກນ້ອຍທີ່ບໍ່ມີຜູ້ປົກຄອງ ຫລື ຜູ້ປົກຄອງຕາມກົດໝາຍ, ໂດຍໄດ້ຮັບຄວາມຍິນຍອມຢ່າງຈະແຈ້ງຕາມຄວາມເໝາະສົມ:

- ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ມີສິດໃນການຍິນຍອມ ຫລື ບໍ່ຍິນຍອມຢ່າງຈະແຈ້ງ ກ່ຽວກັບ ບັນຫາທີ່ກ່ຽວຂ້ອງກັບເຂົາເຈົ້າ.
- ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ, ໂດຍອີງຕາມ ອາຍຸ, ວຸດທິພາວະ ແລະ ຄວາມສາມາດ ຂອງເຂົາເຈົ້າ, ໄດ້ຮັບຂໍ້ມູນຂ່າວສານຄົບຖ້ວນ ແລະ ມີສ່ວນຮ່ວມໃນທຸກການຕັດສິນໃຈ ລວມທັງໃນຂະບວນການຍຸຕິທຳທາງອາຍາ ເຊິ່ງໂດຍເຈົ້າໜ້າທີ່ ທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄວາມອາດສາມາດ,
- ເຄົາລົບ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ແລະ ທັດສະນະມຸມມອງເຂົາເຈົ້າໄດ້ຮັບການພິຈາລະນາ ໂດຍອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດ ລວມທັງການຊ່ວຍເຫລືອທີ່ເຂົາເຈົ້າຕ້ອງການ.
- ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ໄດ້ຮັບຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ກ່ຽວກັບ ສະພາບການ ແລະ ສິດທີທີ່ຄວນໄດ້ຮັບ ໃນວິທີ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້.
- ໄດ້ຮັບຂໍ້ມູນ ກ່ຽວກັບ ຄວາມຄືບໜ້າຂອງຄະດີຕົນເອງ.
- ການກັບຄືນສູ່ຄອບຄົວ ເປັນທາງເລືອກທຳອິດ ແລະ ເປັນສິ່ງທີ່ຕ້ອງການ ເວລາຊ່ວຍເຫລືອເດັກ. ຄວນປະຕິບັດຫລັກການນີ້ ໃນທຸກກໍລະນີ ເມື່ອເຫັນວ່າມີຄວາມປອດໄພ ແລະ ເປັນຜົນດີຕໍ່ເດັກ.
- ຜົນໄດ້ຮັບນີ້ ລວມທັງການປະສານງານ ແລະ ການຮ່ວມມື ລະຫວ່າງ ເຈົ້າໜ້າທີ່ພາຍໃນ ແລະ ສາກົນ.

ບັນດາປະເທດສະມາຊິກອາຊຽນ ປັບປຸງ, ປະເມີນຜົນ ແລະ ທົບທວນກົດໝາຍ, ລະບຽບການ ແລະ ນະໂຍບາຍ ເພື່ອຮັບປະກັນການປົກປ້ອງ ສິດທິເດັກ ຢ່າງເປັນປະຈຳ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| SOPs ແລະ ຄູ່ມື ສຳລັບການສົ່ງຕໍ່ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຖືກຈັດຕັ້ງປະຕິບັດ ແລະ ປັບປຸງຢ່າງຕໍ່ເນື່ອງ ເພື່ອໃຫ້ສອດຄ່ອງກັບ ສົນທິສັນຍາ ວ່າດ້ວຍສິດທິເດັກ (CRC) | ສິດທິເດັກ ແລະ ວິທີການປົກປ້ອງ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ສອດຄ່ອງກັບ CRC ແລະ ການປະຕິບັດທີ່ດີອື່ນໆ ຂອງສາກົນ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

14

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກສົ່ງຕໍ່ ໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ ຕາມຄວາມຕ້ອງການພິເສດຂອງເຂົາເຈົ້າ ໄດ້ຢ່າງທັນການ.

**ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ**

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 2.2.4, 2.3.8, 2.6.15.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ພາກທີ 2.2.1, 2.7.1, 2.7.2, 3.2.2, 3.2.6, 3.3.4.
- ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 26, 32, 34.
- ACTIP ມາດຕາ 14(5), 14(10).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງຄົນທີ່ມີຄວາມພິການ APSC3, APSC11.

**ລາຍລະອຽດ ແລະ ຄຳອະທິບາຍ**

ຈຸດປະສົງພື້ນຖານ ຂອງຂະບວນການສົ່ງຕໍ່ ແມ່ນເພື່ອເຄົາລົບ ແລະ ປົກປ້ອງສິດທິພື້ນຖານ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ສົ່ງຕໍ່ເຂົາເຈົ້າໃຫ້ແກ່ໜ່ວຍງານທີ່ເໝາະສົມ ທີ່ໃຫ້ການຊ່ວຍເຫລືອ ແລະ ການບໍລິການ[42]. ການສົ່ງຕໍ່ທີ່ມີປະສິດທິຜົນ ຕ້ອງມີການຮ່ວມມືທີ່ດີ ລະຫວ່າງ ອົງການຈັດຕັ້ງພາກລັດ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ ພ້ອມທັງອົງກອນສະຫະວິຊາຊີບ ອື່ນໆ.

ເວລາຜູ້ຖືກເຄາະຮ້າຍຖືກກຳນົດຕົວ ຫລື ສົງໄສວ່າແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ເຂົ້າສູ່ຂັ້ນຕອນການສົ່ງຕໍ່ແຫ່ງຊາດ ຕ້ອງຮັກສາຄວາມລັບ ແລະ ປົກປ້ອງຄວາມເປັນສ່ວນຕົວ. ໃນນີ້ລວມມີ ການສະໜັບສະໜູນ, ເບິ່ງແຍງດູແລ ແລະ ຊ່ວຍເຫລືອ ແບບທັນເວລາ ແລະ ເປັນຄວາມລັບ. ການບໍລິການອາດລວມມີ ແຕ່ບໍ່ຈຳກັດພຽງແຕ່ ການບໍລິການ ດ້ານສຸຂະພາບ (ການແພດ ແລະ ຈິດຕະວິທະຍາ), ດ້ານກົດໝາຍ, ທີ່ພັກອາໄສ, ການກັບຄືນ ແລະ ການກັບຄືນສູ່ສັງຄົມ.

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ສ້າງຄຳແນະນຳເພື່ອກຳນົດຕົວ ແລະ ປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍຢ່າງເໝາະສົມ
- ☐ ປະເມີນຄວາມຕ້ອງການດ້ານສຸຂະພາບ ຂອງ ຜູ້ຖືກເຄາະຮ້າຍຈາກ TIP ຢ່າງທັນທີ ແລະ ໃຫ້ບູລິມະສິດໃນການສົ່ງຕໍ່.
- ☐ ແນວທາງກົນໄກສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຖືກສ້າງຂຶ້ນທີ່ກວມເອົາຫຼາຍພາກສ່ວນ ບໍ່ເປັນພຽງແຕ່ ດ້ານສູນພັກເຊົາ, ການບໍລິການດ້ານການແພດ ແລະ ການປິ່ນປົວສຸຂະພາບຈິດ ແລະ ດ້ານກົດໝາຍ.
- ☐ ຂະບວນການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກ TIP ຮັບປະກັນຄວາມເປັນສ່ວນຕົວ ແລະ ຮັກສາຄວາມລັບ ຂໍ້ມູນຂ່າວສານຂອງຜູ້ຖືກເຄາະຮ້າຍ.
- ☐ ຂໍ້ມູນມີຄວາມເປັນລັບ ແລະ ບໍ່ສາມາດລະບຸຕົວຕົນໄດ້

  ມີກົນໄກການສົ່ງຕໍ່ຂ້າມຊາຍແດນ
- ☐ ແນວທາງ ແລະ ຂັ້ນຕອນການສົ່ງຕໍ່ ຖືກທົບທວນ ແລະປັບປຸງເປັນແຕ່ລະໄລຍະ.

42 ອົງການຈັດຕັ້ງສາກົນ ເພື່ອ ການເຄື່ອນຍ້າຍຖິ່ນຖານ (IOM), ກົນໄກການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ລະດັບຊາດ: ຊ່ອງວ່າງ ແລະ ການພັດທະນາໃນອານະຄົດ, 2017.

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ 14

**ຂອບເຂດ**

ຜົນໄດ້ຮັບນີ້ ຈະຮັບປະກັນ ວ່າການສົ່ງຕໍ່ຄວນປະກອບມີ:

- ການແນະນຳກ່ຽວກັບວິທີການກຳນົດຕົວ ແລະ ປະຕິບັດຕໍ່ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ/ຫລື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ໂດຍເຄົາລົບສິດທິເຂົາເຈົ້າ ລວມທັງການຕັດສິນໃຈໂດຍມີຂໍ້ມູນຄົບຖ້ວນ.
- ຄວາມຕ້ອງການດ້ານສຸຂະພາບ ຂອງ ຜູ້ຖືກເຄາະຮ້າຍຈາກ TIP ແມ່ນຖືກປະເມີນແບບທັນເວລາ, ແລະ ໃຫ້ບູລິມະສິດໃນການສົ່ງຕໍ່ ລວມທັງ ທີ່ພັກອາໄສ, ການແພດຕອບສະໜອງຄວາມຕ້ອງການ ແລະ ການຊ່ວຍເຫລືອດ້ານການແພດຈິດຕະສາດ.
- ການຊ່ວຍເຫລືອດ້ານກົດໝາຍ, ເຄືອຂ່າຍ ແລະ ຂໍ້ມູນຂ່າວສານທີ່ເປັນມິດຕໍ່ເດັກ, ສະໜອງໃນຫລາຍພາສາ ແລະ ຫລາຍຮູບແບບ ພ້ອມທັງພາສາໄບ້ ແລະ ເຂົ້າເຖິງທຸກພາກສ່ວນຂອງສັງຄົມແບບກ້ວາງຂວາງ ລວມທັງເດັກນ້ອຍ, ກຸ່ມດ້ອຍໂອກາດ, ແມ່ຍິງ ແລະ ຄົນທີ່ມີຄວາມພິການ.
- ຜູ້ຖືກເຄາະຮ້າຍຈາກ TIP ທີ່ປະຕິດເສດການຊ່ວຍເຫລືອ ແລະ ຕົກລົງຮັບການຊ່ວຍເຫລືອໃນພາຍຫລັງ ຕ້ອງໄດ້ຮັບຂໍ້ມູນຂ່າວສານອ້າງອີງ ເພື່ອອະນາຄົດ.

ຜົນໄດ້ຮັບນີ້ ລວມມີການປະສານງານ ແລະ ການຮ່ວມມື ລະຫວ່າງ ບັນດາຜູ້ໃຫ້ບໍລິການ:

- ມີກົນໄກການສົ່ງຕໍ່ຂ້າມຊາຍແດນ.
- ສ້າງຕັ້ງຂະບວນການສົ່ງຕໍ່ທີ່ເປັນຄວາມລັບ ໃນອົງການຈັດຕັ້ງທີ່ຄຳນຶງເຖິງຄວາມລະອຽດອ່ອນທາງບົດບາດຍິງ-ຊາຍ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເຊັ່ນ:ອົງການຈັດຕັ້ງ ທີ່ຮັບຜິດຊອບວຽກງານກ່ຽວກັບຄົນທີ່ມີຄວາມພິການ, ການບໍລິການອັນສະເພາະສຳລັບແມ່ຍິງ ແລະ ເດັກນ້ອຍ, ຜູ້ເບິ່ງແຍງດູແລເດັກ, ການບໍລິການໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອື່ນໆ.
- ຮັກສາຄວາມເປັນລັບຂອງຂໍ້ມູນ ແລະ ບໍ່ສາມາດນຳໃຊ້ເພື່ອລະບຸຕົວຕົນ.
- ໜ່ວຍງານທີ່ກ່ຽວຂ້ອງ ແມ່ນເຮັດວຽກໃນການທົບທວນ, ປະເມີນຜົນ ແລະ ປັບປຸງ ແນວທາງ ແລະ  ຂັ້ນການສົ່ງຕໍ່ ຢ່າງເປັນປະຈຳ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| SOPs ສຳລັບການສົ່ງຕໍ່ຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນການເຂົ້າເຖິງການບໍລິການ ແມ່ນຖືກຈັດຕັ້ງປະຕິບັດ ແລະ ປັບປຸງແບບຕໍ່ເນື່ອງ. | ວຽກງານການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂະບວນການເຮັດວຽກ ໂດຍສອດຄ່ອງກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

15

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ເວລາຜູ້ປົກຄອງ ບໍ່ສາມາດ, ປະຕິເສດ, ຫລື ບໍ່ແທດເໝາະທີ່ຈະນຳໃຊ້ສິດຂອງຕົນໃນຖານະທີ່ເປັນຜູ້ປົກຄອງ, ບໍ່ວ່າຈະຊົ່ວຄາວ ຫລື ຖາວອນ, ຕ້ອງແຕ່ງຕັ້ງຜູ້ປົກປ້ອງທີ່ຖືກຕ້ອງຕາມກົດໝາຍ ເພື່ອຮັບປະກັນການເຄົາລົບຜົນປະໂຫຍດທີ່ດີທີ່ສຸດຂອງເດັກ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 4.2.5, 4.4.14, 4.4.15.
- ຄູ່ມື ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 16, 93.

### ລາຍລະອຽດ ແລະ ຄຳອະທິບາຍ

ຄວາມສ່ຽງອັນສະເພາະ ທີ່ອາດເຮັດໃຫ້ເດັກຖືກກົດຂີ່ຂູດຮີດເຮັດໃຫ້ຈຳເປັນຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫລືອເປັນພິເສດ ເວລາທີ່ເດັກ ຖືກກຳນົດຕົວເປັນຜູ້ຖືກເຄາະຮ້າຍຈາກ TIP ຢ່າງແທ້ຈິງ[43]. ຄວນແຕ່ງຕັ້ງຜູ້ປົກປ້ອງ ຫລື ຜູ້ຕາງໜ້າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເວລາທີ່ເຈົ້າໜ້າທີ່ພົບເຫັນວ່າຜູ້ປົກຄອງ ບໍ່ສາມາດ, ປະຕິເສດ, ຫລື ບໍ່ແທດເໝາະທີ່ຈະນຳໃຊ້ສິດຂອງຕົນໃນຖານະທີ່ເປັນຜູ້ປົກຄອງ, ບໍ່ວ່າຈະຊົ່ວຄາວ ຫລື ຖາວອນ, ສຳລັບຂັ້ນຕອນການກຳນົດຕົວ ແລະ ການສົ່ງຕໍ່ ຄຽງຄູ່ກັບການຈັດຫາ ທີ່ພັກອາໄສທີ່ປອດໄພເພື່ອປົກປ້ອງຜົນປະໂຫຍດທີ່ດີທີ່ສຸດຂອງເດັກນ້ອຍ[44].

### ຂອບເຂດ

ຜົນໄດ້ຮັບນີ້ ລວມມີມາດຕະການ ເພື່ອປົກປ້ອງຜົນປະໂຫຍດທີ່ດີທີ່ສຸດຂອງ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ເວລາທີ່ຜູ້ປົກຄອງ ບໍ່ສາມາດ, ປະຕິເສດ, ຫລື ບໍ່ແທດເໝາະທີ່ຈະນຳໃຊ້ສິດຂອງຕົນໃນຖານະທີ່ເປັນຜູ້ປົກຄອງ, ບໍ່ວ່າຈະຊົ່ວຄາວ ຫລື ຖາວອນ:

- ການແຕ່ງຕັ້ງຜູ້ປົກປ້ອງທີ່ມີຄວາມສາມາດ ແລະ ມີຄຸນວຸດທິ ເປັນຕົ້ນແມ່ນຍາດຕິພີ່ນ້ອງ, ນັກສັງຄົມສົງເຄາະ, ຫລື ຜູ້ຊ່ວຍເຫລືອອື່ນໆ, ຖ້າເຫັນວ່າມີຄວາມຈຳເປັນໃນການປົກປ້ອງ ຜູ້ຖືເຄາະຮ້າຍຈາກ TIP ທີ່ເປັນເດັກນ້ອຍ (ແລະ ອາດສາມາດ ເຂົ້າຮ່ວມໃນລະຫວ່າງຂະບວນການຕ່າງໆ ລວມທັງຂະບວນການຫລັງຖືກຄ້າມະນຸດ, ການດຳເນີນຄະດີກົດໝາຍ, ການກັບຄືນບ້ານ ແລະ ການກັບຄືນສູ່ສັງຄົມ).
- ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ໄດ້ຮັບຂໍ້ມູນກ່ຽວກັບສິດຂອງຕົນ ໃນພາສາ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້ ແລະ ສາມາດສື່ສານກັບເດັກນ້ອຍ ທີ່ອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດ, ບໍ່ສື່ສານນຳແຕ່ຜູ້ປົກຄອງ, ຜູ້ເບິ່ງແຍງດູແລ ຫລື ຜູ້ປົກປ້ອງເທົ່ານັ້ນ.
- ຜູ້ປົກປ້ອງ ຫລື ຜູ້ຕາງໜ້າເດັກ ຕ້ອງເຂົ້າຮ່ວມຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍ ຫລື ການສົ່ງຕໍ່ ແລະ ຂັ້ນຕອນອື່ນໆ.
- ການຄັດເລືອກເອົາບຸກຄົນທີ່ແທດເໝາະຕ້ອງດຳເນີນການບົນພື້ນຖານການຍິນຍອມທີ່ຂຽນເປັນລາຍລັກອັກສອນ ຫລື ການຍິນຍອມດ້ວຍປາກເປົ່າທີ່ຊັດເຈນ ໂດຍອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດຂອງເດັກ.
- ຜູ້ປົກປ້ອງເດັກ ພິຈາລະນາ ທັດສະນະມຸມມອງ ຂອງ ເດັກ ແລະ ຮັບປະກັນການປົກປ້ອງຜົນປະໂຫຍດທີ່ດີທີ່ສຸດຂອງເດັກ ໂດຍອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດຂອງເຂົາເຈົ້າ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ເວລາທີ່ຜູ້ປົກປ້ອງ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ຖືກແຕ່ງຕັ້ງ, ມີການປຶກສາຫາລື ແລະ ແຈ້ງຕໍ່ເດັກນ້ອຍ ເປັນພາສາໃດໜຶ່ງ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້ ອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດຂອງເຂົາເຈົ້າ.
- ☐ ອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດ, ຂໍການຍິນຍອມທີ່ຊັດເຈນ ແລະ ຄວາມຍິນຍອມ ຈາກ ຜູ້ປົກປ້ອງຂອງເຂົາເຈົ້າ.
- ☐ ຜູ້ປົກປ້ອງມີຄວາມສາມາດໃນການປະຕິບັດພາລະບົດບາດຂອງຕົນ ແລະ ໃຫ້ບູລິມະສິດໃຫ້ແກ່ຜົນປະໂຫຍດທີ່ດີທີ່ສຸດຂອງເດັກ.
- ☐ ຜູ້ປົກປ້ອງ ຕ້ອງມີໜ້າ ແລະ ເຂົ້າຮ່ວມທຸກຂະບວນການ (ນັບແຕ່ການກຳນົດຕົວ ແລະ ການສົ່ງຕໍ່, ການດຳເນີນຄະດີ, ການກັບຄືນ ແລະ ການກັບຄືນສູ່ສັງຄົມ.).

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຍົກສູງ ແລະ ປົກປ້ອງ ຜົນປະໂຫຍດທີ່ດີທີ່ສຸດຂອງເດັກ ດ້ວຍການແຕ່ງຕັ້ງຜູ້ປົກປ້ອງ ຜ່ານການປຶກສາຫາລືກັບເດັກ ໂດຍອີງຕາມອາຍຸ, ວຸດທິພາວະ ແລະ ຄວາມສາມາດ ຂອງເຂົາເຈົ້າ | ການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຖືກເຊື່ອມສານເຂົ້າໃນສະຖາບັນ ແລະ ໃຫ້ສອດຄ່ອງກັບ ACTIP |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

43 ຄະນະກຳມາທິການ ອົງການ ສປຊ ເພື່ອສິດທິມະນຸດ (UNHCHR), ຫຼັກການ ແລະ ຄຳແນະນຳ ກ່ຽວກັບ ສິດທິມະນຸດ ແລະ ການຄ້າມະນຸດ, 2002, p 161.

44 ຄະນະກຳມາທິການ ເພື່ອສິດທິຂອງເດັກ, ຄຳເຫັນທົ່ວໄປ, no6, 2005, ວັກທີ 21; ອະນຸສັນຍາ ອົງການ ສປຊ ເພື່ອສະກັດກັ້ນ, ຕ້ານ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, 2000: ເພື່ອຕໍ່ຍອດສົນທິສັນຍາ ອົງການ ສປຊ ວ່າດ້ວຍການຕ້ານອາຊະຍາກຳທີ່ມີການຈັດຕັ້ງ

# ການກຳນົດຕົວ
# ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ

16

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ເຈົ້າໜ້າທີ່ ແລະ ໜ່ວຍງານດ້ານໜ້າ ທີ່ກ່ຽວຂ້ອງ ໄດ້ຮັບການຝຶກອົບຮົມ ແລະ ຂໍ້ມູນຂ່າວສານ ກ່ຽວກັບ ການກຳນົດຕົວຜູ້ຖືກເຄາະຮ້າຍຈາກ TIP.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 1.2.5, 1.2.6, 4.1.1, 2.1.2, 3.4.5.
- ຄູ່ມືໃນເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ພາກທີ 2.1.1, 3.3.1, 3.5.1, 3.5.2, 3.5.3, 3.5.4, 3.5.5.
- ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 15, 24, 30, 34.
- ACTIP ມາດຕາ 2(a), 12(g), 14(1), 14(5).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 4, ASCC 3.

## ລາຍລະອຽດ ແລະ ຄຳອະທິບາຍ

ການກຳນົດຕົວຜູ້ຖືກເຄາະຮ້າຍ ແບບທັນເວລາ ແລະ ຖືກຕ້ອງ ມີຄວາມສຳຄັນເປັນພື້ນຖານໃນການດຳເນີນການຕອບໂຕ້ທາງຍຸຕິທຳຢ່າງມີປະສິດທິຜົນ ແລະ ຮັບປະກັນວ່າຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງ ແລະ ການຊ່ວຍເຫລືອ. ພ້ອມນັ້ນ, ກົນໄກ ແລະ ຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການສ້າງຂີດຄວາມສາມາດ ເປັນຕົ້ນແມ່ນການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ຮັບຜິດຊອບ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແມ່ນສິ່ງທີ່ຈຳເປັນໃນການສະໜັບສະໜູນການກຳນົດຕົວຜູ້ຖືກເຄາະຮ້າຍ.

ຄວາມສັບສົນ ລະຫວ່າງ ການຄ້າມະນຸດ ແລະ ການລັກລອບ ແລະ/ຫລື ການເຄື່ອນຍ້າຍຖິ່ນຖານທີ່ບໍ່ຖືກຕ້ອງ ພ້ອມທັງທັດສະນະຄະຕິທີ່ລຳອຽງດ້ານເພດເຮັດໃຫ້ການກຳນົດຕົວຜູ້ຖືກເຄາະຮ້າຍ ຍັງບໍ່ທັນໄດ້ຮັບປະສິດທິຜົນເທົ່າທີ່ຄວນ. ການທີ່ບໍ່ສາມາດກຳນົດຕົວຜູ້ຖືກເຄາະຮ້າຍ ຈາກ TIP ຢ່າງຈະແຈ້ງ ຫລື ເຂົ້າໃຈຜິດວ່າແມ່ນການເຄື່ອນຍ້າຍຖິ່ນຖານທີ່ບໍ່ຖືກຕ້ອງ ອາດເຮັດໃຫ້ເກີດມີການເນລະເທດ ຫລື ຖືກປະຕິບັດ ແບບເປັນຜູ້ກະທຳຜິດ ແລະ ບໍ່ສາມາດເຂົ້າເຖິງສິດທິຂອງຕົນ. ຄວາມລົ້ມເຫລວໃນການກຳນົດຕົວຜູ້ຖືກເຄາະຮ້າຍ ສາມາດສົ່ງຜົນໃຫ້ມີການກໍ່ຂໍ້ຂູດຮີດຢ່າງໃຫ້ອາດ ຕໍ່ເນື່ອງ ຫລື ເກີດມີການກໍ່ຂໍ້ຂູດຮີດອັນໃໝ່ທີ່ພົ້ນເດັ່ນ.

ຜົນໄດ້ຮັບນີ້ ລວມມີການຝຶກອົບຮົມໃຫ້ແກ່ພາກສ່ວນຕໍ່ໄປນີ້: ອົງການຈັດຕັ້ງ ແລະ ເຈົ້າໜ້າທີ່ດ້ານໜ້າ ລວມທັງ ແຕ່ບໍ່ຈຳກັດພຽງແຕ່ ເຈົ້າໜ້າທີ່ດ້ານກົດໝາຍ, ນັກສັງຄົມສົງເຄາະ, ຜູ້ສຳພາດ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຜູ້ໃຫ້ບໍລິການປິ່ນປົວສຸຂະພາບ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ຢູ່ດ້ານໜ້າ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ.
- ☐ ຝຶກອົບຮົມ ແລະ ສ້າງຂີດຄວາມສາມາດໃຫ້ແກ່ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ລວມມີການສ້າງຄວາມເຂັ້ມແຂງ ໃຫ້ແກ່ກຸ່ມດ້ອຍໂອກາດ ເປັນຕົ້ນແມ່ນຜູ້ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ☐ ການຝຶກອົບຮົມ ເຊື່ອມສານ ການປະເມີນຜົນຕົນເອງ ກ່ຽວກັບການມີອັກຕະຕິ ແລະ ວິທີແກ້ໄຂ.

## ຂອບເຂດ

ການຝຶກອົບຮົມ ແລະ ຊັບພະຍາກອນ ລວມມີ:

- ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງຊາຍ, ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອການມີສ່ວນຮ່ວມ, ການປ່ຽນແປງຄ່ານິຍົມສັງຄົມ, ຄວາມພະຍາຍາມໃນການຕໍ່ຕ້ານການຈຳແນກລັງກຽດ ແລະ ຄວາມມີອັກຄະຕິກ່ຽວກັບເພດ.
- ການ ຮັບມືກັບກຸ່ມດ້ອຍໂອກາດ ເຊັ່ນ ຜູ້ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ຫົວຂໍ້ສະເພາະ ກ່ຽວກັບ ການກຳນົດຕົວ ແລະ ການສົ່ງຕໍ່ຜູ້ຖືກເຄະາຮ້າຍ ທີ່ສະທ້ອນເຖິງອົງປະກອບ ທີ່ກ່ຽວຂ້ອງກັນ[45] ກັບຫົວຂໍ້ສະເພາະ ກ່ຽວກັບການຄ້າເດັກນ້ອຍ, ການປ້ອງກັນ ແລະ ການຮັບຮູ້ກ່ຽວກັບ TIP.
- ການຝຶກອົບຮົມທີ່ເນັ້ນໜັກໃສ່ການກຳນົດຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນຜູ້ໃຫຍ່ ແລະ ເດັກນ້ອຍ ໂດຍສອດຄ່ອງກັບ ACTIP.
- ການປົກປ້ອງຜູ້ຖືກເຄາະຮ້າຍ ການການຕອບໂຕ້ເອົາຄືນ.
- ວິທີການທີ່ຄຳນຶງຄວາມບອບຊ້ຳທາງດ້ານຈິດໃຈ ເວລາທີ່ສຳພາດຜູ້ຖືກເຄາະຮ້າຍ ແລະ ການປະເມີນຜົນຕົນເອງ ກ່ຽວກັບ ອັກຄະຕິສ່ວນຕົວ.
- ຜົນສະທ້ອນ ແລະ ຄວາມເສຍຫາຍທີ່ຕາມມາ ຈາກການກຳນົດຕົວຜູ້ຖືກເຄາະຮ້າຍທີ່ບໍ່ຖືກຕ້ອງ ຫລື ບໍ່ໄດ້ຖືກກຳນົດຕົວ ເຮັດໃຫ້ຜູ້ຖືກເຄາະຮ້າຍເກີດມີຄວາມບອບຊ້ຳທາງດ້ານຈິດໃຈຊ້ຳຊ້ອນ ຍ້ອນການເຮັດໃຫ້ເປັນຜູ້ກະທຳຜິດທາງອາຍາ ຫລື ຜູ້ຖືກເຄາະຮ້າຍຖືກການກັກຕົວ.
- ການນຳໃຊ້ວິທີການພິຈາລະນາການຈຳແນກແບບທັບຊ້ອນ ໃນຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການຕັດສິນໃຈ.
- ການຈັດສັນຊັບພະຍາກອນ ເພື່ອການຝຶກອົບຮົມແບບພຽງພໍ.

ຜົນໄດ້ຮັບນີ້ລວມມີການຮ່ວມມືດ້ານວິຊາການ, ກອງປະຊຸມປະສານງານລະດັບຊາດ ແລະ ພາກພື້ນ ເພື່ອຍົກລະດັບຂີດຄວາມສາມາດໃນການກຳນົດຕົວຜູ້ຖືກເຄາະຮ້າຍ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ເຈົ້າໜ້າທີ່ ແລະ ຜູ້ຕອບໂຕ້ດ້ານໜ້າ ໃຫ້ການກຳນົດຕົວ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກ TIP ໃຫ້ແກ່ພາກສ່ວນກ່ຽວຂ້ອງເພື່ອການປົກປ້ອງ ແລະ ຊ່ວຍເຫຼືອ ຢ່າງທັນການ ແລະ ຖືກຕ້ອງ. | ເຊື່ອມສານຄຳນິຍາມ ແລະ ການກຳນົດຕົວ ຂອງຜູ້ຖືກເຄາະຮ້າຍ ເຂົ້າໃນສະຖາບັນ ແລະ ຂັ້ນຕອນດຳເນີນງານ ໂດຍສອດຄ່ອງກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

45 ສົນທິສັນຍາ ອົງການ ສປຊ ວ່າດ້ວຍການຕ້ານອາຊະຍາກຳທີ່ມີການຈັດຕັ້ງ (UNTOC) 2001.



# ຕົວຢ່າງ ພາກປະຕິບັດທີ່ດີ ໃນການກຳນົດຕົວ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍ

**ຜູ້ຖືກເຄາະຮ້າຍ ຈາກ ບໍ່ຖືກບັງຄັບໃຫ້ປະຕິບັດພັນທະຮັບຜິດຊອບຕໍ່ກົດໝາຍ ສຳລັບການກະທຳທີ່ລະເມີດກົດໝາຍ ຍ້ອນການຖືກຄ້າມະນຸດ.**

ຜູ້ຊາຍ ເຊື້ອຊາດ ຫວຽດນາມ ຖືກຕົວຍົວະຫລອກລວງ ໄປຕ່າງປະເທດ ແລ້ວຖືກຂາຍ ໃຫ້ບໍລິສັດທຸລະກິດອອນໄລ. ຜູ້ກ່ຽວຖືກກັກຕົວ ແລະ ບັງຄັບໃຫ້ເຮັດວຽກໃຫ້ແກ່ທຸລະກິດສໍ້ໂກງທາງອອນໄລ. ທຸກໆມື້ ກໍໄດ້ຮັບວຽກທີ່ມີເປົ້າໝາຍຕ້ອງໄປຕົວຍົວະຫລອກລວງ ສອງ ຫາ ສາມຄົນ. ເວລາທີ່ບໍ່ສາມາດເຮັດໄດ້ຕາມເປົ້າໝາຍ ກໍຖືກທຳຮ້າຍທາງຮ່າງກາຍ ແລະ ດ້ວຍຄຳເວົ້າ.

ຄົນຫວຽດຜູ້ນີ້ ສາມາດຫາໂອກາດລົບໜີໄດ້. ພາຍຫລັງທີ່ຮອດຊາຍແດນ ຫວຽດນາມ, ລາວກໍໄດ້ລາຍງານໃຫ້ແກ່ເຈົ້າໜ້າທີ່ປະຈຳຢູ່ດ້ານຊາຍແດນ ກ່ຽວກັບ ສະພາບທີ່ຖືກກັກຂັງ ແລະ ບັງຄັບໃຫ້ເຮັດວຽກ. ເຈົ້າໜ້າທີ່ຄຸ້ມຄອງຊາຍແດນ ໄດ້ດຳເນີນການສືບສວນ-ສອບສວນ ແລະ ຢັ້ງຢືນ ບົດລາຍງານຂອງຜູ້ຖືກເຄາະຮ້າຍ ແລະ ໃຫ້ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມຂັ້ນຕອນທີ່ຖືກຕ້ອງ ແລະ ອອກໃບຢັ້ງຢືນໃຫ້. ຢູ່ດ້ານຊາຍແດນ, ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫລືອ, ໄດ້ເຂົ້າເຖິງທີພັກອາໄສ ແລະ ຮັບການປົກປ້ອງ ທີ່ແທດເໝາະຕາມຄວາມຕ້ອງການຂອງລາວ. ຜູ້ຖືກເຄາະຮ້າຍຈາກ TIP ສາມາດເຂົ້າເຖິງ ການຊ່ວຍເຫລືອດ້ານຈິດຕະແພດ, ປິ່ນປົວສຸຂະພາບ ແລະ ດ້ານເສດຖະກິດ. ນອກນັ້ນ, ກໍບໍ່ໄດ້ມີພັນທະຮັບຜິດຊອບຕໍ່ກັບກົດໝາຍ ໃນການເຂົ້າ-ອອກປະເທດ ແລະ ການກະທຳອື່ນໆທີ່ລະເມີດກົດໝາຍ ໃນໄລຍະທີ່ເປັນຜູ້ຖືກເຄາະຮ້າຍຈາກ TIP.

# ການຟື້ນຟູ, ການທົບທວນ ແລະ ສູນພັກເຊົາ

17

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍຈາກ TIP ສາມາດເຂົ້າເຖິງ ສູນພັກເຊົາ ທີ່ປອດໄພ ແບບສະໝັກໃຈ ເພື່ອຟື້ນຟູ ແລະ ທົບທວນ ທີ່ແທດເໝາະກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 2.4.12, 3.1.3.
- ຄູ່ມື ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 36-50.
- ACTIP ມາດຕາ 14(4), 14(5), 14(10).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 3.

## ລາຍລະອຽດ ແລະ ຄໍາອະທິບາຍ

ກົດໝາຍ, ລະບຽບການ ແລະ ນະໂຍບາຍຖືກຈັດຕັ້ງປະຕິບັດ ຫລື ສ້າງຄວາມເຂັ້ມແຂງ ເພື່ອຮັບປະກັນໃຫ້ຜູ້ຖືກເຄາະຮ້າຍຈາກ TIP ແລະ ຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ສາມາດເຂົ້າເຖິງໄລຍະການຟື້ນຟູ ແລະ ທົບທວນແບບບໍ່ມີເງື່ອນໄຂ ແລະ ສາມາດຮັບການບໍລິການທີ່ແທດເໝາະກັບຄວາມຕ້ອງການ ພ້ອມທັງເຂົ້າເຖິງສູນພັກເຊົາຊົ່ວຄາວ. ໃນນີ້, ອາດລວມມີການຈ່າຍເງິນອຸດໜູນ, ການອອກໃບອະນຸຍາດພັກເຊົາ ແລະ/ຫລື ເຮັດວຽກ ແບບຊົ່ວຄາວໃຫ້ແກ່ຜູ້ຖືກເຄາະຮ້າຍ ອີງຕາມນະໂຍບາຍສັງຄົມ, ຄວາມເຫັນອົກເຫັນໃຈ ແລະ ມະນຸດສະທໍາ.

ການບໍລິການແປພາສາ ເປັນມິດຕໍ່ເດັກ ແລະ ສະໜອງແບບຫລາຍພາສາ ຫລື ພາສາໃບ້ ທີ່ທຸກພາກສ່ວນຂອງສັງຄົມສາມາດເຂົ້າເຖິງໄດ້ ລວມທັງກຸ່ມດ້ອຍໂອກາດ ເຊັ່ນ: ແມ່ຍິງ, ເດັກ, ແລະ ຄົນທີ່ມີຄວາມພິການ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ນະໂຍບາຍ ຫຼື ຂັ້ນຕອນສໍາລັບທີ່ພັກອາໄສ ແລະ ແຜນງານຟື້ນຟູທີ່ຄໍານຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງຊາຍ, ວັນທະນາທໍາ, ການເປັນມິດຕໍ່ເດັກ ແລະ ເໝາະສົມກັບອາຍຸ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP.
- ☐ ການໃຫ້ໄລຍະການທົບທວນ ແລະ ຟື້ນຟູທີ່ມີຄວາມຍືດຍຸ່ນ ແລະ ການສະໜອງສູນພັກເຊົາ ທີ່ບໍ່ບັງຄັບເປັນເງື່ອນໄຂໃຫ້ຜູ້ຖືກເຄາະຮ້າຍ ຕ້ອງມີສ່ວນຮ່ວມໃນຂະບວນການຍຸຕິທໍາ.
- ☐ ໃນໄລຍະການທົບທວນ ແລະ ຟື້ນຟູ, ຜູ້ຖືກເຄາະຮ້າຍໄດ້ຮັບການບໍລິການໂດຍອີງຕາມຄວາມຕ້ອງການ ແລະ ເຄົາລົບສິດຂອງເຂົາເຈົ້າ ໃນການຖອນຕົວ ຫຼື ປະຕິເສດການບໍລິການ.
- ☐ ສະໜອງຂໍ້ມູນຂ່າວສານໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ໃນພາສາ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້.
- ☐ ຜູ້ຖືກເຄາະຮ້າຍ ໄດ້ຮັບຂໍ້ມູນກ່ຽວກັບຄວາມຄືບໜ້າຂອງຄະດີ ທີ່ເຂົາເຈົ້າມີສ່ວນຮ່ວມ ແລະ ສາມາດຂໍ ຂໍ້ມູນໄດ້ທຸກເວລາ.
- ☐ ແຜນງານສະໜອງສູນພັກເຊົາ ແລະ ການຟື້ນຟູ ບໍ່ສົ່ງເສີມຄວາມຄິດດັ້ງເດີມທາງດ້ານເພດ ຫຼື ລະເມີດສິດ ຄວາມເປັນສ່ວນຕົວ ຫຼື ຮ່າງກາຍ ຂອງ ຜູ້ຖືກເຄາະຮ້າຍ.
- ☐ ຖືກເຄາະຮ້າຍ ສາມາດອາໄສຢູ່ ສະຖານທີ່ ຫຼື ປະເທດປາຍທາງ ໃນໄລຍະການທົບທວນ ແລະ ຟື້ນຟູ.

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີມາດຕະການການຟື້ນຟູ ສໍາລັບຜູ້ຖືກເຄາະຮ້າຍຈາກ TIP ແລະ ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ໂດຍທີ່:

- ນິຕິກໍາ ຫລື ມາດຕະການອື່ນໆ ທີ່ໄດ້ຮັບຮອງ ເພື່ອເອື້ອອໍານວຍໃຫ້ ຜູ້ຖືກເຄາະຮ້າຍຈາກ TIP ສາມາດອາໄສຢູ່ສະຖານທີ່ປາຍທາງ ໃນໄລຍະການຟື້ນຟູ ແລະ ດໍາເນີນຄະດີທາງກົດໝາຍ.
- ການບໍລິການ ທີ່ສະໜອງໃຫ້ໃນໄລຍະການຟື້ນຟູ ສາມາດປັບປ່ຽນຕາມສະພາບການ ອີງຕາມອາຍຸ, ເພດ ແລະ ຄວາມຕ້ອງການພິເສດ ລວມທັງໃຫ້ເວລາເພີ່ມໃຫ້ແກ່ເດັກ ແລະ ຜູ້ຖືກເຄາະຮ້າຍທີ່ເປັນກຸ່ມສ່ຽງ
- ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບການບໍລິການ ອີງຕາມອາຍຸ, ເພດ ແລະ ຄວາມຕ້ອງການພິເສດ ຂອງເຂົາເຈົ້າ. ໃນນີ້ອາດລວມມີ ແຕ່ບໍ່ຈໍາກັດພຽງແຕ່, ການຊ່ວຍເຫລືອທາງດ້ານການແພດ ແລະ ຈິດຕະວິທະຍາ, ດ້ານກົດໝາຍ, ການໃຫ້ຄໍາປຶກສາ, ຊ່ວຍເຫລືອດ້ານຈິດໃຈ ແລະ ວັດຖຸ ພ້ອມທັງການບໍລິການແປພາສາ ແລະ ພາສາໃບ້ ເພື່ອອໍານວຍຄວາມສະດວກໃນການສື່ສານກັບຄອບຄົວ ຫລື ເວລາທີ່ຊອກຫາໂອກາດໃນການຈ້າງງານ, ການສຶກສາ ແລະ ການຝຶກອົບຮົມ.
- ມີແຜນງານຟື້ນຟູໃຫ້ຜູ້ຖືກເຄາະຮ້າຍ ທີ່ມີເຈດຈໍານົງຕ້ອງການພັກອາໄສ ຢູ່ເຮືອນພັກ ແລະ/ຫລື ສູນພັກເຊົາ ຂອງພາກລັດ ລວມທັງຜູ້ຖືກເຄາະຮ້າຍທີ່ເລືອກຢູ່ສູນພັກເຊົາອື່ນໆ ເຊັ່ນ: ສູນພັກເຊົາຂອງຊຸມຊົນ ຫລື ບ້ານຕົນເອງ. ແຜນງານການຟື້ນຟູ ແມ່ນສະໜອງໃຫ້ຜູ້ຖືກເຄາະຮ້າຍ ຫລື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນ ແລະ ບໍ່ນໍາໃຊ້ເປັນເງື່ອນໄຂເພື່ອໃຫ້ຜູ້ຖືກເຄາະຮ້າຍ ເຂົ້າຮ່ວມໃນຂະບວນການດໍາເນີນຄະດີທາງອາຍາ.
- ຜູ້ຖືກເຄາະຮ້າຍ ສາມາດຖອນຄວາມຍິນຍອມຂອງເຂົາເຈົ້າໄດ້ທຸກເວລາ ແລະ ຜູ້ໃຫ້ບໍລິການດ້ານການຟື້ນຟູ ຕ້ອງກວດຄືນເປັນປະຈໍາວ່າຜູ້ຖືກເຄາະຮ້າຍສືບຕໍ່ໃຫ້ຄວາມຍິນຍອມ ສໍາລັບການຊ່ວຍເຫລືອເພື່ອການຟື້ນຟູ ຫລືບໍ່.
- ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫລືອ ເພື່ອກ້າວເຂົ້າສູ່ຄວາມສະຖຽນລະພາບ, ເພື່ອປ້ອງກັນໄພອັນຕະລາຍເພີ່ມເຕີມ ແລະ ກ້າວສູ່ການຟື້ນຟູແບບເຕັມສ່ວນ. ນອກນັ້ນ, ກໍສະໜອງການເບິ່ງແຍງດູແລຕໍ່ເນື່ອງ ແລະ ນໍາໃຊ້ວິທີການຄຸ້ມຄອງກໍລະນີແບບສະເພາະບຸກຄົນ.
- ຜູ້ຖືກເຄາະຮ້າຍຈາກ TIP ສາມາດຟື້ນຟູຈາກສິ່ງທີ່ເກີດຂຶ້ນ, ໄດ້ຮັບຄວາມຍຸຕິທໍາຈາກຄວາມທຸກທໍລະມານ, ບັນລຸຄວາມຍືນຍົງຄົງຕົວ ແລະ ມີສ່ວນຮ່ວມໃນເສດຖະກິດ ແລະ ສັງຄົມແບບເຕັມຮູບແບບ.

**ຂອບເຂດ**

ຜົນໄດ້ຮັບນີ້ລວມມີໄລຍະ ການທົບທວນ ຊຶ່ງ:

- ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບໄລຍະການທົບທວນ ທີ່ບໍ່ນຳໃຊ້ເປັນເງື່ອນໄຂໃນການເຂົ້າຮ່ວມ ຫລື ຮ່ວມມືກັບຂະບວນການຍຸຕິທຳ.
- ໄລຍະການທົບທວນ ແມ່ນໄລຍະເວລາທີ່ສະໜອງໃຫ້ ຜູ້ຖືກເຄາະຮ້າຍ ຈາກ TIP ໃນການທົບທວນຂໍ້ມູນຂ່າວສານທັງໝົດທີ່ມີຢູ່ ເພື່ອຕັດສິນໃຈແບບມີຂໍ້ມູນຄົບຖ້ວນ ກ່ຽວກັບ ທາງເລືອກ ລວມທັງການກຳນົດຕົວ, ການຊ່ວຍເຫລືອ ແລະ ການຮ່ວມມືກັບໜ່ວຍງານບັງຄັບໃຊ້ກົດໝາຍຕ່າງໆ.
- ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກ TIP ສາມາດເຂົ້າເຖິງການຊ່ວຍເຫລືອແບບກວ້າງຂວາງ ເວລາທີ່ສາມາດເຊື່ອວ່າຜູ້ກ່ຽວເປັນຜູ້ສົງໄສຜູ້ຖືກເຄາະຮ້າຍ ແບບສົມເຫດສົມຜົນ.
- ຜູ້ຖືກເຄາະຮ້າຍ ຈາກ TIP ບໍ່ສາມາດຖືກເນລະເທດອອກຈາກ ສະຖານທີ່ ຫລື ປະເທດປາຍທາງ ໃນໄລຍະນີ້ ແລະ ອົງການກ່ຽວຂ້ອງ ຕ້ອງອອກໃບອະນຸຍາດການພັກເຊົາໃຫ້.

ຜົນໄດ້ຮັບນີ້ ຮຽກຮ້ອງໃຫ້ການບໍລິການສູນພັກເຊົາ ປະຕິບັດ:

- ການເຄົາລົບສິດ ຂອງ ຜູ້ຖືກເຄາະຮ້າຍຈາກ TIP ທີ່ປະຕິເສດຈະເຂົ້າ ຫລື ອາໄສຢູ່ ສູນພັກເຊົາ.
- ສະໜອງສະພາບແວດລ້ອມການດຳລົງຊີວິດ ທີ່ໝັ້ນຄົງ ແລະ ມີການປົກປ້ອງ ໃຫ້ແກ່ຜູ້ຖືກເຄາະຮ້າຍ ໂດຍບໍ່ໄປກະທົບກັບສິດທິ ເສລີພາບໃນການເຄື່ອນຍ້າຍ ຂອງເຂົາເຈົ້າ (ເວລາທີ່ສາມາດເຮັດແບບປອດໄພ) ແລະ ປະຕິບັດຫລັກການບໍ່ລົງໂທດ.
- ສະໜອງທາງເລືອກດ້ານສູນພັກເຊົາ (ເຊັ່ນ: ສູນພັກເຊົາຂອງຊຸມຊົນ, ຫ້ອງເຊົ່າຊົ່ວຄາວ) ເວລາບໍ່ສາມາດສະໜອງສູນພັກເຊົາສະເພາະໃຫ້
- ພິຈາລະນາເປັນພິເສດ ກໍລະນີເປັນເດັກນ້ອຍ ເພື່ອພິຈາລະນາທາງດ້ານອາຍຸ, ເພດ, ຄວາມພິການ ແລະ/ຫລື ລະດັບວຸດທິພາວະ ໂດຍສອດຄ່ອງກັບການປົກປ້ອງສິດຜົນປະໂຫຍດທີ່ດີທີ່ສຸດຂອງເດັກ.
- ທີ່ພັກອາໄສ ແລະ ກິດຈະກຳ ແມ່ນຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງຊາຍ, ວັດທະນະທຳ, ເປັນມິດຕໍ່ເດັກ ແລະ ເໝາະສົມຕາມອາຍຸ. ສູນພັກເຊົາ ແລະ ແຜນງານການຟື້ນຟູ ບໍ່ສົ່ງເສີມທັດສະນະຄະຕິດ້ານລົບທາງດ້ານເພດ ຫລື ລະເມີດສິດຂອງຜູ້ຖືກເຄາະຮ້າຍ ດ້ານຄວາມເປັນສ່ວນຕົວ ຫລື ລະເມີດຮ່າງກາຍ (ເຊັ່ນ: ຄົ້ນຮ່າງກາຍ ຂອງ ຜູ້ຖືກເຄາະຮ້າຍ ຫລື ບັງຄັບໃຫ້ກວດສຸຂະພາບ).
- ເອື້ອອຳນວຍໃຫ້ຜູ້ຖືກເຄາະຮ້າຍ ສາມາດຕິດຕໍ່ ກັບຄອບຄົວໄດ້.
- ປະຕິບັດຕາມມາດຕະຖານລະດັບຊາດ ວ່າດ້ວຍ ການເຂົ້າເຖິງຂອງຄົນທີ່ມີຄວາມພິການ, ການຊ່ວຍເຫລືອດ້ານການແປພາສາ ແລະ ພາສາໃບ້ ໃຫ້ແກ່ທຸກພາກສ່ວນຂອງສັງຄົມ ລວມທັງກຸ່ມສ່ຽງ ເປັນຕົ້ນແມ່ນແມ່ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ສະໜອງຂໍ້ມູນຂ່າວສານ ກ່ຽວກັບກາລະໂອກາດໃນການຊອກຫາວຽກເຮັດງານທຳ, ການສຶກສາ ແລະ ການຝຶກອົບຮົມ ໃນຮູບແບບທີ່ທຸກພາກສ່ວນຂອງສັງຄົມສາມາດເຂົ້າເຖິງໄດ້
- ສະໜອງຂໍ້ມູນຂ່າວສານ ແລະ ການສົນທະນາ ກ່ຽວກັບ ທາງເລືອກໃນການທົດແທນຄ່າຄວາມເສຍຫາຍ ແລະ ການຊົດເຊີຍ ອື່ນໆ.
- ສະໜັບສະໜູນໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ສາມາດເຂົ້າເຖິງເຄືອຂ່າຍມືອາຊີບ ເປັນຕົ້ນແມ່ນ ຜູ້ຊ່ວຍເຫລືອດ້ານກົດໝາຍ, ຄວາມພິການ ແລະ ອົງກອນເພື່ອສິດທິມະນຸດ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ບັນດາປະເທດສະມາຊິກອາຊຽນ ສະໜອງສູນພັກເຊົາທີ່ເໝາະສົມ ແລະ ສະໜອງໄລຍະການທົບທວນ ແລະ ການຟື້ນຟູ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ທີ່ສອດຄ່ອງກັບ ACTIP. | ການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ຖືກເຊື່ອມສານເຂົ້າໃນສະຖາບັນ ແລະ ຈັດຕັ້ງປະຕິບັດທີ່ສອດຄ່ອງກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການຟື້ນຟູ, ການທົບທວນ ແລະ ສູນພັກເຊົາ

18

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍ ຈາກ TIP ໄດ້ຮັບຂໍ້ມູນຂ່າວສານ ແລະ ໃຫ້ຄວາມຍິນຍອມ ທີ່ເປັນລາຍລັກອັກສອນ ຫລື ຄວາມຍິນຍອມ ໂດຍມີຂໍ້ມູນຄົບຖ້ວນທີ່ບັນທຶກໄດ້, ແລະ ຄວາມຍິນຍອມທີ່ຈະແຈ້ງ ສໍາລັບເດັກ ພ້ອມທັງ ຄວາມຍິນຍອມຂອງຜູ້ປົກຄອງ ຫລື ຜູ້ປົກປ້ອງ, ເພື່ອເຂົ້າເຖິງສູນພັກເຊົາ/ທີ່ພັກອາໄສທີ່ປອດໄພ ສໍາລັບການຟື້ນຟູ ແລະ ການບໍລິການທີ່ເໝາະສົມກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກທີ 2.6.16.
- ຄູ່ມືໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍພາກທີ 2.2.1, 2.7.1, 2.7.2, 3.3.4.
- ຄູ່ມື ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 21. 40, 42, 92.
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 8, ASCC 13.

### ລາຍລະອຽດ ແລະ ຄໍາອະທິບາຍ

ການຊ່ວຍເຫລືອທັງໝົດ ລວມທັງແຜນງານການຟື້ນຟູ ແລະ ການສະໜອງສູນພັກເຊົາ ຄວາຖືກຈັດສັນໃຫ້ແກ່ຜູ້ຖືກເຄາະຮ້າຍ ຫລື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຈາກ TIP ຕ້ອງປະຕິບັດບົນພື້ນຖານຄວາມຍິນຍອມ ແບບເຕັມສ່ວນ ແລະ ມີຂໍ້ມູນຄົບຖ້ວນ[46]. ກ່ອນທີ່ຈະຂໍຄວາມຍິນຍອມເພື່ອການປະຕິບັດໃດໆ, ຜູ້ຖືກເຄາະຮ້າຍຄວນໄດ້ຮັບຂໍ້ມູນຂ່າວສານທັງໝົດ ກ່ຽວກັບນະໂຍບາຍ, ຂັ້ນຕອນ ແລະ ແຜນງານທີ່ມີ ໃນພາສາ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້. ສໍາລັບຜູ້ຖືກເຄາະຮ້າຍທີ່ມີຄວາມສາມາດ ແມ່ນຕ້ອງໃຫ້ຄວາມຍິນຍອມດ້ວຍການຂຽນເປັນລາຍລັກອັກສອນ, ຜູ້ທີ່ບໍ່ສາມາດ ກໍຕ້ອງໃຫ້ຄວາມຍິນຍອມດ້ວຍການປາກເວົ້າ. ຕ້ອງສະໜອງນາຍແປພາສາ ແລະ/ຫລື ນາຍແປພາສາໃບ້ ເພື່ອອໍານວຍຄວາມສະດວກໃຫ້ການປາກເວົ້າ ຫລື ການຂຽນສື່ສານ ກັບຜູ້ຖືກເຄາະຮ້າຍ. ໃນກໍລະນີທີ່ເປັນຜູ້ຖືກເຄາະຮ້າຍເປັນເດັກ, ຕ້ອງຊອກຮູ້ທັດສະນະມຸມມອງ ແລະ ຄວາມຕ້ອງການ ທີ່ອີງຕາມອາຍຸ, ວຸດທິພາວະ, ແລະ ຄວາມສາມາດ. ເດັກນ້ອຍຕ້ອງໃຫ້ຄວາມຍິນຍອມທີ່ຈະແຈ້ງ ແລະ ການຍິນຍອມຈາກ ຜູ້ປົກຄອງ ຫລື ຜູ້ປົກປ້ອງເດັກເຊັ່ນກັນ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ມີຂັ້ນຕອນຂໍຄວາມຍິນຍອມ, ການຍິນຍອມຢ່າງຈະແຈ້ງ (ສໍາລັບເດັກນ້ອຍ), ແລະ ຂັ້ນຕອນໃນການຖອນຄວາມຍິນຍອມ ຂອງຜູ້ຖືກເຄາະຮ້າຍ ສໍາລັບການຊ່ວຍເຫຼືອ.
- ☐ ຜູ້ຖືກເຄາະຮ້າຍໄດ້ຮັບຂໍ້ມູນຂ່າວສານ ໃນພາສາ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້.
- ☐ ຈັດການຝຶກອົບຮົມກ່ຽວກັບ ການນໍາໃຊ້ວິທີການຂໍຄວາມຍິນຍອມ ທີ່ເປັນມິດຕໍ່ເດັກ, ຄໍານຶງເຖິງບົດບາດຍິງຊາຍ, ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ວິທີການທີ່ຄໍານຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ
- ☐ ເດັກມີສ່ວນຮ່ວມ ໃນທຸກການຕັດສິນໃຈ ກ່ຽວກັບການໃຫ້ການບໍລິການ ແລະ ການຊ່ວຍເຫຼືອ ທີ່ສະໜອງໃຫ້ແກ່ເຂົາເຈົ້າ.

46 ອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ (IOM), ຄູ່ມື ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດໂດຍກົງ, 2007, p 57-58.

# ການຟື້ນຟູ, ການທົບທວນ ແລະ ສູນພັກເຊົາ 18

## ຂອບເຂດ

- ຜົນໄດ້ຮັບນີ້ ໝາຍເຖິງເຖິງ ການໃຫ້ຄວາມຍິນຍອມດ້ວຍການຂຽນເປັນລາຍລັກອັກສອນ ຫລື ຄຳເວົ້າປາກເປົ່າທີ່ໄດ້ບັນທຶກ ຫລື ຄວາມຍິນຍອມຈະແຈ້ງ ສະເພາະ ສຳລັບ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຕິດພັນກັບການຟື້ນຟູ, ສູນພັກເຊົາ ແລະ ການບໍລິການອື່ນໆ:
- ການຂໍຄວາມຍິນຍອມໂດຍມີຂໍ້ມູນຄົບຖ້ວນ ສຳລັບ ຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່, ແລະ ຄວາມຍິນຍອມທີ່ຈະແຈ້ງ ຈາກ ຜູ້ຖືກເຄາະຮ້າຍທີ່ເປັນເດັກລວມທັງ ຄວາມຍິນຍອມ ຈາກ ຜູ້ປົກຄອງ ຫລື ຜູ້ປົກປ້ອງ ໃນຂັ້ນຕອນທຳອິດ ຂອງ ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ພ້ອມທັງ ໄລຍະການຟື້ນຟູ້ ແລະ ສະໜອງສູນພັກເຊົາ.
- ຜູ້ຖືກເຄາະຮ້າຍ ຈາກ TIP ແລະ/ຫລື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ສາມາດຖອນຄວາມຍິນຍອມໄດ້ທຸກເວລາ ແລະ ຜູ້ໃຫ້ບໍລິການ ຕ້ອງກວດຄືນເປັນປະຈຳ ວ່າຜູ້ຖືກເຄາະຮ້າຍຍັງສືບຕໍ່ໃຫ້ຄວາມຍິນຍອມ ຕໍ່ກັບການຊ່ວຍເຫລືອ ຫລືບໍ່.
- ສະໜອງນາຍແປພາສາ, ນາຍແປພາສາໄບ້, ເຕັກໂນໂລຊີ ແລະ ເຄື່ອງມືອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການຂໍຄວາມຍິນຍອມ.
- ນຳໃຊ້ວິທີການເປັນມິດຕໍ່ເດັກ, ຄຳນຶງເຖິງບົດບາດຍິງຊາຍ, ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄຳນຶງເຖິງຄວາມບອບຊໍ້າທ່າງດ້ານຈິດໃຈ ເວລາຂໍຄວາມຍິນຍອມຈາກຜູ້ຖືກເຄາະຮ້າຍ ຈາກ TIP.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍ ເຂົ້າເຖິງ ສູນພັກເຊົາ/ທີ່ພັກອາໄສ, ການບໍລິການ ແລະ ການຊ່ວຍເຫຼືອ ແບບສະໝັກໃຈ ໂດຍ ອີງຕາມພາກປະຕິບັດທີ່ດີ. | ການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືເຄາະຮ້າຍ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂະບວນການເຮັດວຽກ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການຟື້ນຟູ, ການທົບທວນ ແລະ ສູນພັກເຊົາ

19

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນເດັກ ຖືກຈັດສົ່ງໄປຢູ່ສູນພັກເຊົາ/ທີ່ພັກອາໄສ ທີ່ປອດໄພ ແລະ ເໝາະສົມ ເພື່ອການຟື້ນຟູ ແລະ ທົບທວນ ອີງຕາມຄວາມຕ້ອງການຂອງເຂົາເຈົ້າ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 4.2.7, 4.2.9, 4.3.11, 4.3.12, 4.3.11-13.
- ຄູ່ມື ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 21, 39.
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 8, ASCC 13.

## ລາຍລະອຽດ ແລະ ຄໍາອະທິບາຍ

ທີ່ພັກອາໄສ ທີ່ປອດໄພ ແລະ ເໝາະສົມ ຄວນຈະຢູ່ກັບຄອບຄົວ ຍົກເວັ້ນກໍລະນີທີ່ ຄອບຄົວຂອງເດັກບໍ່ເໝາະສົມ. ເດັກນ້ອຍ, ທັງເດັກຊາຍ ແລະ ເດັກຍິງທີ່ມີຄວາມພິການ ຕ້ອງໄດ້ຮັບການເບິ່ງແຍງດູແລ ແລະ ການປິ່ນປົວສຸຂະພາບທີ່ແທດເໝາະກັບເພດ, ວັດທະນາທໍາ, ສຸຂະພາບຈິດ ແລະ ຮ່າງກາຍ, ຄວາມຕ້ອງການດ້ານພາສາ ແລະ ດ້ານຈິດໃຈ, ໃນເວລາທີ່ຈັດສົ່ງທີ່ພັກອາໄສ ຫລື ແຜນງານການຟື້ນຟູໃຫ້ແກ່ເຂົາເຈົ້າ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ທາງເລືອກທໍາອິດໃນການຊ່ວຍເຫຼືອເດັກ ແມ່ນການກັບຄືນຫາຄອບຄົວ. ຄວນປະຕິບັດຕາມຂັ້ນຕອນນີ້ ເວລາທີ່ເຫັນວ່າມີຄວາມປອດໄພ ແລະ ເປັນຜົນປະໂຫຍດໃຫ້ແກ່ເດັກ.
- ☐ ການຊ່ວຍເຫຼືອເດັກນ້ອຍ ຕາມຄວາມຕ້ອງການຂອງເຂົາເຈົ້າ.
- ☐ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ເປັນເດັກ ໄດ້ຮັບໄລຍະເວລາເພື່ອທົບທວນ.
- ☐ ເຄົາລົບສິດ, ທັດສະນະມຸມມອງ ແລະ ການຕັດສິນໃຈ ຂອງຜູ້ຖືກເຄາະຮ້າຍທີ່ເປັນເດັກ ສໍາລັບທຸກການຕັດສິນໃຈທີ່ສົ່ງຜົນກະທົບຕໍ່ເດັກນ້ອຍ.
- ☐ ບັນດາປະເທດສະມາຊິກອາຊຽນ ສະໜອງທີ່ພັກອາໄສທີ່ເໝາະສົມໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ.
- ☐ ທີ່ພັກອາໄສສໍາລັບ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ເປັນເດັກ ແມ່ນແທດເໝາະກັບຄວາມຕ້ອງການ ແລະ ພິຈາລະນາເຖິງ ອາຍຸ, ວຸດທິພາວະ, ຄວາມສາມາດ ແລະ ລະບົບການຊ່ວຍເຫຼືອ ຂອງເຂົາເຈົ້າ.
- ☐ ເດັກນ້ອຍມີສິດ ເຂົ້າໂຮງຮຽນ ໃນທຸກໄລຍະເວລາ ຕອນຢູ່ທີ່ພັກອາໄສ ຖ້າຫາກວ່າປອດໄພ.

**ຂອບເຂດ**

ຜົນໄດ້ຮັບນີ້ ກ່ຽວຂ້ອງ ກັບການຟື້ນຟູ ໂດຍສະເພາະ:

- ທາງເລືອກທຳອິດໃນການຊ່ວຍເຫລືອເດັກແມ່ນການກັບຄືນຫາຄອບຄົວ. ຄວນປະຕິບັດຕາມຂັ້ນຕອນນີ້ ເວລາທີ່ເຫັນວ່າມີຄວາມປອດໄພ ແລະ ເປັນຜົນປະໂຫຍດກັບເດັກ.
- ການເບິ່ງແຍງດູແລ ແລະ ການຊ່ວຍເຫລືອ ອີງຕາມຄວາມຕ້ອງການສະເພາະຂອງເດັກ ແລະ ບໍ່ນຳໃຊ້ເປັນເງື່ອນໄຂ ເພື່ອໃຫ້ເຂົາເຈົ້າຮ່ວມມືກັບເຈົ້າໜ້າທີ່ກ່ຽວຂ້ອງ ຫລື ການດຳເນີນຄະດີອາຍາ.
- ເດັກນ້ອຍຄວນມີສ່ວນຮ່ວມໃນຂະບວນການຕັດສິນໃຈທັງໝົດ ທີ່ສົ່ງຜົນກະທົບໃຫ້ແກ່ເຂົາເຈົ້າ.
- ເດັກນ້ອຍມີສິດ ເຂົ້າໂຮງຮຽນ ໃນທຸກໄລຍະເວລາ ຕອນຢູ່ທີ່ພັກອາໄສ ຖ້າຫາກວ່າປອດໄພ.

ຜົນໄດ້ຮັບນີ້ ກ່ຽວຂ້ອງກັບ ການທົບທວນ ໂດຍສະເພາະ:

- ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ເປັນເດັກ ໄດ້ຮັບໄລຍະການສະທ້ອນຄືນ ທີ່ແທດເໝາະກັບ ອາຍຸ, ວຸດທິພາວະ, ຄວາມສາມາດ ແລະ ລະບົບການຊ່ວຍເຫລືອ.
- ເຄົາລົບສິດ, ທັດສະນະມຸມມອງ ແລະ ການຕັດສິນໃຈຂອງເຂົາເຈົ້າ.

ຜົນໄດ້ຮັບນີ້ ກ່ຽວຂ້ອງກັບ ສູນພັກເຊົາ ໂດຍສະເພາະ:

- ທີ່ພັກອາໄສທີ່ເໝາະສົມ ທີ່ສາມາດເຄື່ອນຍ້າຍແບບເສລີພາບ, ສະໜອງໃຫ້ແກ່ເດັກ, ເດັກໄວໜຸ່ມ ແລະ ເດັກທີ່ມີຄວາມພິການ.
- ສູນພັກເຊົາ/ທີ່ພັກອາໄສ ທີ່ເໝາະສົມຕາມ ວັດທະນາທຳ, ຈິດໃຈ, ເພດ ແລະ ອາຍຸ ເພື່ອປ້ອງກັນບໍ່ໃຫ້ຕົກເປັນຜູ້ຖືກເຄາະຮ້າຍຊໍ້າຊ້ອນ.
- ບໍ່ກັກຂັງເດັກນ້ອຍ
- ຖ້າຈຳເປັນຕ້ອງເຂົ້າສູນພັກເຊົາກໍຕ້ອງເຂົ້າພັກອາໄສຢູ່ໃນໄລຍະທີ່ສັ້ນ ແລະ ຕ້ອງມີການທົບທວນແບບເອກະລາດ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ ສາມາດເຂົ້າເຖິງສູນພັກເຊົາ/ທີ່ພັກອາໄສ ແລະ ການບໍລິການ, ການຊ່ວຍເຫຼືອ ແລະ ການຟື້ນຟູ. | ການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂະບວນການເຮັດວຽກ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| (light blue) | NA | ບໍ່ສາມາດນຳໃຊ້ໄດ້ |
| (orange) | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| (yellow) | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| (green) | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການຟື້ນຟູ, ການທົບທວນ ແລະ ສູນພັກເຊົາ

20

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ໄລຍະການຟື້ນຟູ ແລະ ການທົບທວນ, ແລະ ການບໍລິການສູນພັກເຊົາ/ທີ່ພັກອາໄສ ແມ່ນຄຳນຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 49.
- ACTIP ມາດຕາ 14(10).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 8, ASCC 13.

## ລາຍລະອຽດ ແລະ ຄຳອະທິບາຍ

ວິທີການທີ່ຄຳນຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ ຮັບຮູ້ເຖິງຄວາມບອບຊໍ້າທີ່ເກີດຂຶ້ນກັບຜູ້ຖືກເຄາະຮ້າຍ ຈາກ TIP ຫລາຍ. ຜູ້ສະໜອງການບໍລິການທີ່ຢູ່ດ້ານໜ້າ ລວມທັງ ພະນັກງານຂອງສູນພັກເຊົາ ຄວນຮັບຮູ້ ແລະ ສາມາດຮັບມື ກັບສັນຍານຂອງຄວາມບອບຊໍ້າທາງດ້ານຈິດໃຈ ແລະ ຜົນກະທົບທີ່ມີຕໍ່ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ. ວິທີການຄຳນຶງຄວາມບອບຊໍ້າທາງດ້ານຈິດໃຈ ເລີ່ມຈາກການທຳຄວາມເຂົ້າໃຈກ່ຽວກັບ ຮ່າງກາຍ, ສັງຄົມ ແລະ ຄວາມຮູ້ສຶກ ກ່ຽວກັບຄວາມບອບຊໍ້າທາງດ້ານຈິດໃຈ ຕໍ່ກັບບຸກຄົນ ແລະ ຄອບຄົວ ພ້ອມທັງພາກສ່ວນທີ່ເປັນມືອາຊີບທີ່ສາມາດໃຫ້ການຊ່ວຍເຫລືອ. ວິທີການນີ້ ມີຍຸດທະສາດ ແລະ ເຄື່ອງມື ເພື່ອຊ່ວຍເຫລືອຜູ້ຖືກເຄາະຮ້າຍທີ່ຖືກກະທົບທາງຈິດໃຈ ໂດຍຫລີກລ້ຽງບໍ່ໃຫ້ເກີດຂຶ້ນອີກແບບຊໍ້າຊ້ອນ ແລະ ສິ່ງຕໍ່ຜູ້ຖືກເຄາະຮ້າຍ ຖ້າມີຄວາມຈຳເປັນ.

## ຂອບເຂດ

ຜົນໄດ້ຮັບນີ້ ກ່ຽວຂ້ອງສະເພາະກັບ:

- ບຸກຄະລາກອນທັງໝົດທີ່ຈັດຕັ້ງປະຕິບັດແຜນງານການຟື້ນຟູ ແລະ ເຮັດວຽກ ຢູ່ ສູນພັກເຊົາ (ຜູ້ບໍລິຫານ, ນັກສັງຄົມສົງເຄາະ, ພະນັກງານຮັກສາຄວາມປອດໄພ, ຜູ້ແຕ່ງກິນ ແລະ ພະນັກງານທຳຄວາມສະອາດ) ໄດ້ຮັບການຝຶກອົບຮົມດ້ານທັກສະ ແລະ ຄວາມຮູ້ ເພື່ອເຂົ້າໃຈ ກ່ຽວກັບ ພາລະບົດບາດຕົນເອງ ໃນການຊ່ວຍເຫລືອ ແລະ ເບິ່ງແຍງດູແລຜູ້ຖືກເຄາະຮ້າຍ ຈາກ TIP ແລະ ກະກຽມການໃຫ້ຊ່ວຍເຫລືອຫລັງອອກຈາກສູນພັກເຊົາ.
- ຄູ່ມື ແລະ ຂັ້ນຕອນເຮັດວຽກ ນຳໃຊ້ຫລັກການຄຳນຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ ໃນການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ໃນໄລຍະການຟື້ນຟູ ແລະ ຢູ່ສູນພັກເຊົາ.
- ການສະໜັບສະໜູນ ແລະ ຊ່ວຍເຫລືອ ທີ່ຄຳນຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ ໂດຍອີງຕາມຄວາມຕ້ອງການ ແລະ ຄວາມຮຽກຮ້ອງ ຂອງ ຜູ້ຖືກເຄາະຮ້າຍ. ມີຊ່ຽວຊານພິເສດ ຫລື ພະນັກງານ ໃນອົງກອນເປັນຜູ້ໃຫ້ຄຳປຶກສາ ແລະ ການຊ່ວຍເຫລືອດ້ານຈິດຕະວິທະຍາ
- ສ້າງເຄືອຂ່າຍ ເພື່ອນຊ່ວຍເພື່ອນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP.
- ເຄົາລົບສິດຂອງຄົນທີ່ມີຄວາມພິການ ໃນການດຳລົງຊີວິດແບບມີກຽດສັກສີ ອີງຕາມການຕັດສິນໃຈຂອງເຂົາເຈົ້າ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ຜູ້ໃຫ້ບໍລິການໄດ້ຮັບການຝຶກອົບຮົມ ກ່ຽວກັບການຄຳນຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ, ການຄຳນຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງຊາຍ, ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ສິດທິມະນຸດ.
- ☐ ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນແບບຄຳນຶງເຖິງຄວາມບອບຊໍ້າທາງດ້ານຈິດໃຈ ທີ່ອີງຕາມຄວາມຕ້ອງການ ຂອງຜູ້ຖືກເຄາະຮ້າຍ.
- ☐ ການບໍລິການທີ່ມີພາຍໃນໜ່ວຍງານ ຢ່າງໜ້ອຍ ແມ່ນການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອດ້ານຈິດຕະວິທະຍາ.
- ☐ ການຊ່ວຍເຫຼືອແບບເພື່ອນຊ່ວຍເພື່ອນ

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍ ຈາກ TIP ເຂົ້າເຖິງ ສູນພັກເຊົາ/ທີ່ພັກອາໄສ, ການບໍລິການ ແລະ ການຊ່ວຍເຫຼືອແບບສະໝັກໃຈ ອີງຕາມພາກປະຕິບັດທີ່ດີ. | ການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍທີ່ຄຳນຶງຄວາມບອບຊໍ້າທາງດ້ານຈິດໃຈ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ອີງຕາມ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸຫຼາຍລາຍການ |



# ຕົວຢ່າງ ພາກປະຕິບັດທີ່ດີດ້ານການຟື້ນຟູ, ການທົບທວນ ແລະ ສູນພັກເຊົາ

**ຜູ້ຖືກເຄາະຮ້າຍຈາກ ທີ່ເປັນເດັກນ້ອຍເກີດໃໝ່ ໄດ້ຮັບການຊ່ວຍເຫລືອຢູ່ສູນພັກເຊົາຊົ່ວຄາວ ຢູ່ສູນພັກເຊົາ ເຮືອນແຫ່ງຄວາມສະຫງົບສຸກ ( Peace House) ທີ່ ສສ. ຫວຽດນາມ.**

ໃນປີ 2021, ໄລຍະການແຜ່ລະບາດໂຄວິດ 19, ສູນພັກເຊົາຂອງຫວຽດນາມ ໄດ້ຮັບເອົາເດັກນ້ອຍເກີດໃໝ່ ທີ່ຖືກຄ້າມະນຸດ ລວມທັງ ເດັກເກີດໃໝ່ 4 ຄົນ (ທີ່ບໍ່ມີຜູ້ປົກປ້ອງ) ແລະ ແມ່ຍິງຖືພາ 1 ຄົນ. ສູນພັກເຊົາ ໄດ້ປະສານ ແລະ ລະດົມຊັບພະຍາກອນ ເພື່ອໃຫ້ບູລິມະສິດໃນການເບິ່ງແຍງດູແລເດັກ ແລະ ແມ່. ພະນັກງານທັງໝົດ, ທັງພໍ່ບ້ານແມ່ບ້ານ, ພະນັກງານ ຮັກສາຄວາມປອດໄພ ແລະ ນັກສັງຄົມສົງເຄາະ ໄດ້ຊ່ວຍໃນການດູແລເດັກເກີດໃໝ່.

ເມື່ອອົງການຈັດຕັ້ງພາກລັດ ໄດ້ຮັບຊາບ ກ່ຽວກັບສະພາບການ, ທາງສູນພັກເຊົາ ກໍໄດ້ຮັບການຊ່ວຍເຫລືອ ອີງຕາມຄວາມຕ້ອງການຂອງ ເດັກນ້ອຍ ໂດຍທີ່ມີເຄື່ອງບໍລິໂພກອຸປະໂພກທີ່ຈຳເປັນ ເປັນຕົ້ນແມ່ນນົມ ແລະ ເຄື່ອງນຸ່ງເດັກນ້ອຍ. ນອກນັ້ນ, ກໍໄດ້ໃຫ້ການຊ່ວຍເຫລືອດ້ານການແພດ ແລະ ປິ່ນປົວສຸຂະພາບໃຫ້ແກ່ເດັກ ໂດຍທີ່ພະນັກງານໄດ້ຮັບຄຳແນະນຳ ແລະ ການຝຶກອົບຮົມ. ແມ່ຍິງທີ່ຖືພາ ກໍສາມາດເກີດລູກໄດ້ແບບປອດໄພ ໃນໄລຍະທີ່ຢູ່ ທີ່ພັກອາໄສຢູ່ສູນພັກເຊົາດັ່ງກ່າວ.

ເມື່ອຜູ້ກະທຳຜິດຂອງການຄ້າມະນຸດຖືກຈັບກຸມ, ຕຳຫລວດ ກໍສາມາດຊອກຫາ ແມ່ ຂອງ ເດັກນ້ອຍ. ທາງຕຳຫລວດກໍໄດ້ຊ່ວຍແມ່ປະສານກັບສູນພັກເຊົາ ເພື່ອຮັບເອົາເດັກນ້ອຍຄືນ.

**ການສະໜັບສະໜູນ ແລະ ຊ່ວຍເຫລືອ ໃນສູນພັກເຊົາ ແມ່ນຄຳນຶງເຖິງຄວາມບອບຊ້ຳທາງດ້ານຈິດໃຈ.**

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນຫວຽດນາມ ສ່ວນໃຫຍ່ຖືກຄ້າມະນຸດ ໃນຮູບແບບການກົດຂີ່ຂູດຮີດທາງເພດຢູ່ ປະເທດມາເລເຊຍ. ເຈົ້າໜ້າທີ່ຊ່ວຍເຫລືອດ້ານຈິດຕະວິທະຍາ ທີ່ຄຳນຶງເຖິງຄວາມບອບຊ້ຳທາງດ້ານຈິດໃຈ ເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍ ເພື່ອໃຫ້ການສະໜັບສະໜູນເຂົາເຈົ້າໃນການໃຫ້ຄຳໃຫ້ການ ແລະ ເຂົ້າຮ່ວມຂະບວນການສານ. ພະນັກງານດ້ານຈິດຕະວິທະຍາ ທີ່ໄດ້ຮັບການຝຶກອົບຮົມພິເສດ ແລະ ສາມາດສ້າງສາຍພົວພັນໄວ້ເນື້ອເຊື່ອໃຈກັບຜູ້ຖືກເຄາະຮ້າຍ. ຖ້າໄດ້ຮັບການຊ່ວຍເຫລືອ, ຜູ້ຖືກເຄາະຮ້າຍ ຈະມີຄວາມໝັ້ນໃຈ ແລະ ຮູ້ສຶກສະບາຍໃຈ ທີ່ຈະແລກປ່ຽນຂໍ້ມູນຂ່າວສານ, ເຂົ້າຮ່ວມຂະບວນການສານ ໃນຖານະທີ່ເປັນພະຍານ ແລະ ຮູ້ສຶກໝັ້ນໃຈຕໍ່ກັບຕົນເອງ ແລະ ຄອບຄົວຫລາຍຂຶ້ນ.

# ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ

# 21

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ສ້າງແຜນການສົ່ງກັບ ແລະ ການກັບຄືນສູ່ສັງຄົມແບບເປັນລາຍບຸກຄົນ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 54, 59.
- ACTIP ມາດຕາ 14(10)-(12).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ ASCC 13.

## ລາຍລະອຽດ ແລະ ຄໍາອະທິບາຍ

ການສະໜອງການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ເພື່ອສົ່ງເຂົາເຈົ້າກັບ ຕ້ອງສຸມໃສ່ການຮັບປະກັນການເດີນທາງ ແລະ/ຫລື ການເຄື່ອນຍ້າຍ ຜູ້ຖືກເຄາະຮ້າຍ ຈາກສະຖານທີ່ ຫລື ປະເທດປາຍທາງ ເພື່ອກັບຄືນແບບປອດໄພ. ບໍ່ຄວນບັງຄັບໃຫ້ຜູ້ຖືກເຄາະຮ້າຍໃຫ້ກັບຄືນຖິ່ນເດີມ. ຖ້າເຫັນວ່າ ການສົ່ງກັບນັ້ນ ມີຄວາມສ່ຽງຮ້າຍແຮງຕໍ່ກັບຄວາມປອດໄພ ຂອງຜູ້ຖືກເຄາະຮ້າຍ, ຄວນພິຈາລະນາທາງເລືອກອື່ນ ເປັນຕົ້ນແມ່ນການພັກອາໄສ ຢູ່ໃນ ປະເທດ/ຊຸມຊົນທີ່ເປັນປາຍທາງ ຫລື ຕັ້ງຖິ່ນຖານໃໝ່ ຢູ່ປະເທດທີ່ສາມ ຫລື ຊຸມຊົນອື່ນ. ໃນກໍລະນີ ທີ່ມີແຕ່ທາງເລືອກັບຖິ່ນກໍາເນີດກໍຄວນສຸມໃສ່ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ແລະ ວິທີການປະສານກັບປະເທດຕົ້ນທາງ ເພື່ອຮັບປະກັນການດູແລແບບຕໍ່ເນື່ອງ.

ການກັບຄືນສູ່ສັງຄົມ ເປັນວຽກທີ່ສໍາຄັນໃນການສົ່ງກັບຄືນແບບປອດໄພ. ຜູ້ຖືກເຄາະຮ້າຍຈາກ TIP ທີ່ໄດ້ຮັບການຊ່ວຍເຫລືອດ້ານການກັບຄືນສູ່ສັງຄົມຈະບໍ່ຕົກເປັນຜູ້ຖືກເຄາະຮ້າຍອີກຄັ້ງ. ຄໍາແນະນໍາ 6.8 ຂອງ UNHCR ຮຽກຮ້ອງໃຫ້ປະເທດສະມາຊິກອາຊຽນ ຮັບປະກັນການເປັນຄູ່ຮ່ວມງານກັບ CSO ເພື່ອໃຫ້ຜູ້ຖືກເຄາະຮ້າຍທີ່ຖືກສົ່ງກັບ ໄດ້ຮັບການຊ່ວຍເຫລືອອັນຈໍາເປັນ ເພື່ອຊີວິດການເປັນຢູ່ຂອງເຂົາເຈົ້າ. ຄວນປະຕິບັດມາດຕະການ ເພື່ອຮັບປະກັນ ການຊ່ວຍເຫລືອດ້ານສຸຂະພາບກາຍ ແລະ ສຸຂະພາບຈິດ, ທີ່ພັກອາໄສ, ການສຶກສາ, ການບໍລິການຊ່ວຍຊອກຫາວຽກເຮັດງານທໍາ[47]. ACTIP ຮຽກຮ້ອງໃຫ້ ປະເທດສະມາຊິກອາຊຽນ ນໍາໃຊ້ຄວາມພະຍາຍາມທີ່ສຸດ ເພື່ອຊ່ວຍ ຜູ້ຖືກເຄາະຮ້າຍ ຈາກ TIP ໃຫ້ສາມາດກັບຄືນສູ່ສັງຄົມ ໂດຍຮ່ວມມືກັບບັນດາ CSOs.

ຄວນພິຈາລະນາ ຜົນປະໂຫຍດທີ່ດີທີ່ສຸດຂອງ ເດັກນ້ອຍ ເວລາໃຫ້ການຊ່ວຍເຫລືອເພື່ອສົ່ງເຂົາເຈົ້າກັບ ແລະ ກັບຄືນສູ່ສັງຄົມ ລວມທັງຮັບປະກັນຄວາມຍິນຍອມໂດຍມີຂໍ້ມູນຄົບຖ້ວນ ແລະ ຈະແຈ້ງ, ການປະເມີນຄອບຄົວ, ແຜນການກັບຄືນສູ່ສັງຄົມ ຊຶ່ງຕ້ອງສ້າງຂຶ້ນດ້ວຍການປຶກສາຫາລື ກັບຜູ້ຖືກເຄາະຮ້າຍ, ຄອບຄົວເຂົາເຈົ້າ ແລະ ຝ່າຍທີ່ຈະຮັບຜູ້ຖືກເຄາະຮ້າຍ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ສ້າງແຜນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ດ້ວຍການປຶກສາຫາລື ກັບຜູ້ຖືກເຄາະຮ້າຍ, ຄອບຄົວເຂົາເຈົ້າ ແລະ ຝ່າຍທີ່ຈະຮັບ.
- ☐ ນໍາໃຊ້ມາດຕະການພິເສດ ອີງຕາມຄວາມຕ້ອງການຂອງ ຜູ້ຖືກເຄາະຮ້າຍ.
- ☐ ແຕ່ງຕັ້ງນັກສັງຄົມສົງເຄາະ ຫຼື ຜູ້ຊ່ວຍເຫຼືອ.
- ☐ ບັນດາປະເທດສະມາຊິກອາຊຽນ ຮ່ວມມືສ້າງ SOP ສໍາລັບການສົ່ງກັບ ແລະ ການກັບຄືນສູ່ສັງຄົມແບບປອດໄພ ໂດຍມີການຮ່ວມມືລະຫວ່າງບັນດາສະຖານທູດ ແລະ ຜ່ານຊ່ອງທາງການທູດ.
- ☐ ມີນະໂຍບາຍ ແລະ ຂັ້ນຕອນ ສໍາລັບການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ເພື່ອຮັບປະກັນໃຫ້ ຜູ້ຖືກເຄາະຮ້າຍ ສາມາດກັບຄືນດ້ວຍຄວາມສະໝັກໃຈ ແລະ ເຂົ້າເຖິງການຊ່ວຍເຫຼືອດ້ານການກັບຄືນສູ່ສັງຄົມ.
- ☐ ຈັດການຝຶກອົບຮົມ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ຈາກພາກລັດ ແລະ ບໍ່ແມ່ນພາກລັດ ລວມທັງນັກສັງຄົມສົງເຄາະ ທີ່ມີໜ້າທີ່ຮັບຜິດຊອບ ໃຫ້ການຊ່ວຍເຫຼືອໃນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ. ຫົວຂໍ້ການຝຶກອົບຮົມກວມເອົາ ການຄໍານຶງເຖິງອາການບອບຊໍ້າທາງດ້ານຈິດໃຈ, ຄໍານຶງເຖິງຄວາມອ່ອນໄຫວດ້ານບົດບາດຍິງ-ຊາຍ ແລະ ວິທີການທີ່ຄໍານຶງເຖິງເດັກນ້ອຍ.

47 ຫ້ອງການ ຄະນະກໍາມະການລະດັບສູງ ຂອງ ອົງການ ສປຊ ເພື່ອສິດທິມະນຸດ ຫຼັກການແນະນໍາ ແລະ ຄູ່ມື ກ່ຽວກັບ ສິດທິມະນຸດ ແລະ ການຕ້ານການຄ້າມະນຸດ, 2002. Para 8.

# ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ 21

**ຂອບເຂດ**

ຜົນໄດ້ຮັບນີ້ແນໃສ່ການຮັບປະກັນໃຫ້:

- ຜູ້ຖືກເຄາະຮ້າຍ, ບໍ່ວ່າຈະເປັນພົນລະເມືອງ ຫລື ຜູ້ທີ່ມີສິດພັກອາໄສຖາວອນ, ໄດ້ຮັບການຊ່ວຍເຫລືອໄດ້ທັນເວລາ ເພື່ອການສົ່ງກັບຖິ່ນເດີມ.
- ສ້າງແຜນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ຜ່ານການປຶກສາຫາລື ກັບຝ່າຍທີ່ຈະຮັບ, ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ. ແຜນດັ່ງກ່າວຕ້ອງມີລັກສະນະເປັນສະເພາະສ່ວນບຸກຄົນ ທີ່ຕອບສະໜອງຄວາມຕ້ອງການຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ນຳໃຊ້ວິທີການທີ່ ເໝາະສົມຕາມເພດ, ອາຍຸ ແລະ ບັນຫາວັດທະນາທຳທີ່ລະອຽດອ່ອນ.
- ແຕ່ງຕັ້ງຜູ້ຄຸ້ມຄອງກໍລະນີ ຫລື ນັກສັງຄົມສົງເຄາະ ເພື່ອໃຫ້ການຮ່ວມມືກັບຜູ້ຖືກເຄາະຮ້າຍ ຈາກ TIP ໃນການສ້າງແຜນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ທີ່ຕອບສະໜອງຄວາມຕ້ອງການພິເສດຂອງແຕ່ລະບຸກຄົນ. ຕົວຢ່າງຂອງການຊ່ວຍເຫລືອ ລວມມີ ການປິ່ນປົວສຸຂະພາບ, ການໃຫ້ຄຳປຶກສາ, ການຊ່ວຍເຫລືອດ້ານການເງິນ, ການໃຫ້ເງິນກູ້-ສິນເຊື່ອຈຸນລະພາກ, ການຊ່ວຍເຫລືອດ້ານກົດໝາຍ, ການເຂົ້າເຖິງການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສາ, ການຊອກຫາວຽກເຮັດງານທຳ, ແລະ ທີ່ພັກອາໄສ.
- ພິຈາລະນາອາຍຸ, ເພດ ແລະ ຄວາມຕ້ອງການພິເສດ ຂອງ ຜູ້ຖືກເຄາະຮ້າຍ ໂດຍສະເພາະ ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ ເວລາຈັດຕັ້ງປະຕິບັດມາດຕະການຕ່າງໆ.
- ພິຈາລະນາການສົ່ງກັບແບບປອດໄພ ແລະ ບໍ່ຄວນບັງຄັບໃຫ້ຜູ້ຖືກເຄາະຮ້າຍກັບຄືນຖິ່ນເດີມ. ການສົ່ງກັບ ອາດຫຍຸ້ງຍາກ ສຳລັບຜູ້ຖືກເຄາະຮ້າຍທີ່ຖືກຄ້າມະນຸດພາຍໃນ. ເຖິງວ່າ ຜູ້ຖືກເຄາະຮ້າຍ ມາຈາກປະເທດທີ່ຖືກຄ້າມະນຸດກໍຕາມ ບໍ່ໄດ້ໝາຍຄວາມວ່າ ເຂົາເຈົ້າສາມາດກັບຄືນບ້ານໄດ້. ອີງຕາມການພິຈາລະນາຄວາມປອດໄພ, ການສົ່ງກັບຄືນໄປຊຸມຊົນ ຫລື ປະເທດອື່ນ ກໍອາດເໝາະສົມກວ່າ.
- ມີນັກສັງຄົມສົງເຄາະ ຫລື ຜູ້ໃຫ້ຄວາມຊ່ວຍເຫລືອ ຕິດຕາມຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນຄວາມປອດໄພ ອີງຕາມການຕັດສິນໃຈຂອງຜູ້ຖືກເຄາະຮ້າຍ ແລະ ພິຈາລະນາຄວາມສ່ຽງຕ່າງໆໃນຊຸມຊົນ.
- ຜູ້ຖືກເຄາະຮ້າຍ ຈາກ TIP ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ສິ່ງທີ່ຄາດຫວັງ ໃນຂັ້ນຕອນການເດີນທາງໃນການສົ່ງກັບ. ໃຫ້ເງິນ ເພື່ອຊ່ວຍ ສຳລັບຄ່າໃຊ້ຈ່າຍການເດີນທາງ ແລະ ອາຫານ ສຳລັບຜູ້ທີ່ຖືກເຄາະຮ້າຍ ທີ່ເດີນທາງກັບບ້ານຄົນດຽວເທົ່ານັ້ນ.
- ແຜນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ສ້າງຂຶ້ນຮ່ວມກັບຜູ້ຖືກເຄາະຮ້າຍ ແລະ/ຫລື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ບໍ່ນຳໃຊ້ເປັນເງື່ອນໄຂ ໃຫ້ເຂົາເຈົ້າເຂົ້າຮ່ວມຂະບວນການດຳເນີນຄະດີທາງອາຍາ.
- ບັນດາປະເທດສະມາຊິກອາຊຽນອາຊຽນ ຮ່ວມມືສ້າງ SOP ສຳລັບການສົ່ງກັບ ແລະ ການກັບຄືນສູ່ສັງຄົມແບບປອດໄພ ໂດຍມີການຮ່ວມມືລະຫວ່າງບັນດາສະຖານທູດ ແລະ ຜ່ານຊ່ອງທາງການທູດ.
- ໃຫ້ການຊ່ວຍເຫລືອໃນການກັບຄືນສູ່ສັງຄົມ. ໃນນັ້ນອາດລວມມີ ການປິ່ນປົວສຸຂະພາບ, ການໃຫ້ຄຳປຶກສາ, ການຊ່ວຍເຫລືອດ້ານການເງິນ, ການໃຫ້ເງິນກູ້-ສິນເຊື່ອຈຸນລະພາກ, ການຊ່ວຍເຫລືອດ້ານກົດໝາຍ, ການເຂົ້າເຖິງການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສາ, ການຊອກຫາວຽກເຮັດງານທຳ, ແລະ ທີ່ພັກອາໄສ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ແຜນການສົ່ງກັບ ແລະ ການກັບຄືນສູ່ສັງຄົມສະເພາະບຸກຄົນ ເປັນມາດຕະຖານທົ່ວໄປ. | ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ສອດຄ່ອງກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ

22

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍຈາກ TIP ແຕ່ລະຄົນ ໄດ້ຮັບການປະເມີນຄວາມສ່ຽງເປັນລາຍບຸກຄົນ ເພື່ອການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ເພື່ອຮັບປະກັນການສົ່ງກັບແບບປອດໄພ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 4.5.17, 6.1.1, 6.1.2, 6.1.4.
- ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 54, 56.
- ACTIP ມາດຕາ 14(11), 15(1)-(5).

## ລາຍລະອຽດ ແລະ ຄໍາອະທິບາຍ

ຄວາມສ່ຽງ ທີ່ກ່ຽວຂ້ອງ ກັບການຄ້າມະນຸດ ມີຫລາຍ ແລະ ກວ້າງຂວາງ. ຄຸນລັກສະນະຂອງການບັງຄັບ ແລະ ການກົດຂີ່ຂູດຮີດຂອງ ການຄ້າມະນຸດ ເຮັດໃຫ້ມີຄວາມສ່ຽງຕໍ່ຄວາມໝັ້ນຄົງ, ສຸຂະພາບ ແລະ ຄວາມສ່ຽງອື່ນໆທີ່ກ່ຽວຂ້ອງ. ດັ່ງນັ້ນ, ຈຶ່ງຈໍາເປັນຕ້ອງມີການປະເມີນຄວາມສ່ຽງຢ່າງຮອບດ້ານ:

- ພຶດຕິກໍາ ຂອງ ຜູ້ຄ້າມະນຸດ
- ພຶດຕິກໍາ ຂອງ ຜູ້ຖືກເຄາະຮ້າຍ ທີ່ມີສາເຫດ ເຮັດໃຫ້ຢ້ານການແກ້ແຄ້ນ
- ສະພາບຄວາມໝັ້ນຄົງ ແລະ ປອດໄພ ຢູ່ສະຖານທີ່ ທີ່ຜູ້ຖືກເຄາະຮ້າຍຈະຖືກສົ່ງກັບໄປ ແລະ ສົ່ງກັບຄືນສູ່ສັງຄົມ, ແລະ
- ຂອບເຂດທີ່ ເຈົ້າໜ້າທີ່ກ່ຽວຂ້ອງ ຢູ່ ສະຖານທີ່/ປະເທດຕົ້ນທາງ ສາມາດໃຫ້ການປົກປ້ອງຄວາມປອດໄພທາງດ້ານກາຍະພາບ ແລະ ຄວາມໝັ້ນຄົງ ຂອງ ຜູ້ຖືກເຄາະຮ້າຍ

ການສົ່ງຜູ້ຖືກເຄາະຮ້າຍ ຈາກ TIP ກັບບ້ານຖິ່ນເດີມນັ້ນ ອາດມີຄວາມສ່ຽງທີ່ເຂົາເຈົ້າຈະຖືກສັງຄົມປະນາມ. ເຂົາເຈົ້າອາດຕົກຢູ່ໃນສະພາບດຽວກັນ ທີ່ເຮັດໃຫ້ຖືກຄ້າມານຸດ ຫລື ໃນສະພາບການທີ່ເຂົ້າເຖິງການຊ່ວຍເຫລືອແບບມີຂໍ້ຈໍາກັດ. ດັ່ງນັ້ນໃຫ້ສອດຄ່ອງກັບ ACTIP, ການປະເມີນຄວາມສ່ຽງຄວນດໍາເນີນທັນທີເທົ່າທີ່ເປັນໄປໄດ້ ຫລັງຈາກທີ່ສາມາດກໍານົດຕົວຜູ້ຖືກເຄາະຮ້າຍ ແລະ ຕິດຕາມປະຈໍາ ເພື່ອຮັບປະກັນຄວາມປອດໄພ ຂອງ ຜູ້ຖືກເຄາະຮ້າຍ.

ປະເມີນຄວາມສ່ຽງເປັນແຕ່ລະກໍລະນີ ສໍາລັບ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນຜູ້ໃຫຍ່ ແລະ ເດັກນ້ອຍ ເພື່ອກໍານົດວ່າມີຄວາມເປັນໄປໄດ້ທີ່ຈະສົ່ງກັບບ້ານ ແລະ ກັບຄືນສູ່ສັງຄົມ, ຄອບຄົວ ແລະ ຊຸມຊົນແບບປອດໄພໄດ້ບໍ່, ພ້ອມທັງພິຈາລະນາທາງເລືອກອື່ນຖ້າມີຄວາມຈໍາເປັນ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ການປະເມີນຄວາມສ່ຽງເປັນລາຍບຸກຄົນ.
- ☐ ການຍິນຍອມໂດຍມີຂໍ້ມູນຄົບຖ້ວນ.
- ☐ ການຕັດສິນໃຈກ່ຽວກັບການສົ່ງກັບ ແລະ ການຄືນສູ່ສັງຄົມ ຂອງ ຜູ້ຖືກເຄາະຮ້າຍທີ່ເປັນເດັກ ໃຫ້ບູລິມະສິດ ຕໍ່ກັບຄວາມຕ້ອງການ ແລະ ຜົນປະໂຫຍດອັນຊອບທໍາ ສະເພາະບຸກຄົນ.
- ☐ ແຕ່ລະພາກສ່ວນປະສານສົມທົບ ກັບ ສະຖານທີ່ຕົ້ນທາງ ແລະ ຊຸມຊົນທ້ອງຖິ່ນເພື່ອໃຫ້ການຊ່ວຍເຫຼືອຕໍ່ເນື່ອງ.
- ☐ ແຕ່ງຕັ້ງອົງກອນຮັບຜິດຊອບວຽກງານການສົ່ງກັບ ແລະ ການກັບຄືນສູ່ສັງຄົມ.

## ຂອບເຂດ

ຜົນໄດ້ຮັບນີ້ ແນໃສ່ຮັບປະກັນ:

- ມີນິຕິກຳ ຫລື ມາດຕະການ ເພື່ອຈັດຕັ້ງປະຕິບັດການປະເມີນຄວາມສ່ຽງຢ່າງຮອບດ້ານ. ໃນນັ້ນ ອາດລວມມີອົງການຈັດຕັ້ງພາຍໃນ ຫລື ສາກົນ ແລະ ອົງການ CSOs.
- ຄວນດຳເນີນການປະເມີນຄວາມສ່ຽງຢ່າງຮອບດ້ານທັນທີເທົ່າທີ່ເປັນໄປໄດ້ ພາຍຫລັງທີ່ສາມາດກວດພົບຜູ້ຖືກເຄາະຮ້າຍຈາກ TIP.
- ຜູ້ຖືກເຄາະຮ້າຍຈາກ TIP ແລະ/ຫລື ຜູ້ທີ່ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ລວມທັງຄອບຄົວເຂົາເຈົ້າ ຄວນໄດ້ຮັບຂໍ້ມູນ ແລະ ໃຫ້ຄວາມຍິນຍອມໃນການປະເມີນຄວາມສ່ຽງ.
- ບໍ່ມີວິທີການທົ່ວໄປ ເພື່ອດຳເນີນການປະເມີນຄວາມສ່ຽງ TIP. ທຸກໆກໍລະນີ ຄວນໄດ້ຮັບການພິຈາລະນາສະເພາະ ເນື່ອງຈາກວ່າແຕ່ລະຄົນ ມີເອກະລັກສະເພາະຕົວ ແລະ ສິ່ງທ້າທາຍອາດແຕກຕ່າງກັບປະສົບການທີ່ເຄີຍພົບພໍ້ຜ່ານມາ.
- ພິຈາລະນາ ແລະ ຈັດຕັ້ງປະຕິບັດມາດຕະການ ອີງຕາມອາຍຸ, ເພດ ແລະ ຄວາມຕ້ອງການພິເສດ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ໂດຍສະເພາະເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ແຕ່ງຕັ້ງອົງການຈັດຕັ້ງ ເພື່ອຮັບຜິດຊອບການຈັດຕັ້ງປະຕິບັດການປະເມີນຄວາມສ່ຽງຢ່າງຮອບດ້ານ ສຳລັບການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການປະເມີນຄວາມສ່ຽງຂອງແຕ່ລະບຸກຄົນ ເປັນມາດຕະຖານການປະຕິບັດງານ. | ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ຂອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກອີງຕາມ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ

23

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຝ່າຍທີ່ເປັນຜູ້ສົ່ງ, ຮັບ ແລະ ທາງຜ່ານ ສ້າງ SOPs ຮ່ວມກັນ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 6.1.5, 6.2.6.
- ຄູ່ມື ໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍພາກທີ 3.4.3.
- ຄູ່ມືບໍ່ອ່າດ້ອຍການບໍ່ເຮັດໄພອັນຕະລາຍ ສຳລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 54, 56.
- ACTIP ມາດຕາ 14(11), 15(5).

### ລາຍລະອຽດ ແລະ ຄໍາອະທິບາຍ

ການຮ່ວມມື ມີຄວາມສຳຄັນພື້ນຖານ ໃນຊ່ວຍເຫລືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ລວມທັງການຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກ TIP ໃນການສົ່ງກັບປະເທດ ແລະ ການກັບຄືນສູ່ສັງຄົມ. ການຮ່ວມມືພາຍໃນປະເທດ, ລະດັບພາກພື້ນ ແລະ ສາກົນ ລະຫວ່າງ ບັນດາອົງການຈັດຕັ້ງ ທີ່ແມ່ນຂະແໜງການຍຸຕິທຳ ແລະ ບໍ່ແມ່ນຂະແໜງການຍຸຕິທຳ ລວມທັງ CSOs ໄດ້ຖືກລະບຸໃນ ACTIP ພາຍໃຕ້ຂໍ້ກຳນົດທີ່ກ່ຽວຂ້ອງ ກັບການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ການປ້ອງກັນ.

ACTIP ຮຽກຮ້ອງໃຫ້ ບັນດາປະເທດສະມາຊິກອາຊຽນ ສ້າງຂັ້ນຕອນ ແລະ ກົນໄກ ລະຫວ່າງ ປະເທດທີ່ສົ່ງ, ຮັບ ແລະ ເປັນທາງຜ່ານ ເພື່ອຮັບປະກັນຄວາມປອດໄພ ແລະ ການຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ຈາກ TIP ແບບຕໍ່ເນື່ອງ.

### ຂອບເຂດ

ຜົນໄດ້ຮັບນີ້ ແນໃສ່ການຮັບປະກັນ:

- ການສ້າງຂັ້ນຕອນ ແລະ ກົນໄກການຮ່ວມມື ລະຫວ່າງ ປະເທດສະມາຊິກອາຊຽນ ເພື່ອຮັບປະກັນການຊ່ວຍເຫລືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ຈາກ TIP ແບບຕໍ່ເນື່ອງ ພ້ອມທັງນຳໃຊ້ກາລະໂອກາດເຕັມສ່ວນ ໃນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ແລະ ການຕິດຕາມຂັ້ນຕອນການສົ່ງກັບ ແລະ ຜົນໄດ້ຮັບ ຂອງ ຜູ້ຖືກເຄາະຮ້າຍຈາກ TIP.
- ແຜນງານການສົ່ງກັບ ແລະ ການກັບຄືນສູ່ສັງຄົມ ຖືກສ້າງຂຶ້ນ ໂດຍມີອົງການຈັດຕັ້ງພາກລັດ ແລະ CSOs ທີ່ກ່ຽວຂ້ອງ ເປັນຜູ້ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ.
- ປະຕິບັດການຢັ້ງຢືນພົນລະເມືອງ ຫລື ການພັກອາໄສຖາວອນ ສຳລັບຜູ້ຖືກເຄາະຮ້າຍ ອີງຕາມການສະເໜີຂອງປະເທດທີ່ຮັບ ພ້ອມທັງອະນຸມັດການເດີນທາງໃຫ້ແກ່ຜູ້ຖືກເຄາະຮ້າຍ ທີ່ບໍ່ມີເອກະສານ.

| ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ |
|---|
| ☐ ມີຂັ້ນຕອນ ແລະ ກົນໄກຮ່ວມມືລະຫວ່າງ ປະເທດສະມາຊິກອາຊຽນ. |
| ☐ ປະເທດສະມາຊິກອາຊຽນມີການຮ່ວມມື ແລະ ມາດຕະຖານການດຳເນີນງານຮ່ວມກັນ. |

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| SOP ລະຫວ່າງ ປະເທດທີ່ສົ່ງ, ຮັບ ແລະ ເປັນທາງຜ່ານ ຂອງ ຜູ້ຖືກເຄາະຮ້າຍ ຖືກຈັດຕັ້ງປະຕິບັດ ແລະ ປັບປຸງຕໍ່ເນື່ອງ. | SOP ລະຫວ່າງ ປະເທດທີ່ສົ່ງ, ຮັບ ແລະ ເປັນທາງຜ່ານ ຂອງ ຜູ້ຖືກເຄາະຮ້າຍ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກ ອີງຕາມ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸຫຼາຍລາຍການ |

# ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ

24

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ສະຖານທີ່ຕົ້ນທາງ ແລະ ປາຍທາງ ໃຫ້ການຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກ TIP ທີ່ຖືກສົ່ງກັບ ດ້ວຍການໃຫ້ການສະໜັບສະໜູນການຄືນສູ່ສັງຄົມແບບຍືນຍົງ

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 6.2.7, 6.2.8, 6.3.9, 6.3.11.
- ຄູ່ມື ໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍພາກທີ 3.7.1, 3.7.3.
- ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບ ຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 54, 56, 59, 64.
- ACTIP ມາດຕາ 14(10)-(12), 15(5), 15(6).
- ແຜນແມ່ບົດອາຊຽນ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ AEC 25.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ແຕ່ງຕັ້ງຜູ້ຄຸ້ມຄອງກໍລະນີ ຫຼື ນັກສັງຄົມສົງເຄາະ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.
- ☐ ມີການຊ່ວຍເຫຼືອຫຼາຍດ້ານໃຫ້ແກ່ ຜູ້ຖືກເຄາະຮ້າຍທີ່ຖືກສົ່ງກັບ ຊຶ່ງບໍ່ນໍາໃຊ້ເປັນເງື່ອນໄຂໃນການຮ່ວມມືກັບຂັ້ນຕອນການດໍາເນີນຄະດີອາຍາ.
- ☐ ການບໍລິການແທດເໝາະກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກ TIP.
- ☐ ປະເທດສະມາຊິກອາຊຽນ ຕິດຕາມ ແລະ ປະເມີນຜົນການບໍລິການທີ່ສະໜອງໃຫ້ຜູ້ຖືກເຄາະຮ້າຍ.

## ລາຍລະອຽດ ແລະ ຄໍາອະທິບາຍ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງການການຊ່ວຍເຫລືອໄລຍະຍາວ ເພື່ອຮັບປະກັນການສົ່ງກັບ ແລະ ການກັບຄືນສູ່ສັງຄົມຢ່າງມີປະສິດທິຜົນ. ຈຸດປະສົງຫລັກ ໃນການກັບຄືນສູ່ສັງຄົມ ແມ່ນເພື່ອການກັບຄືນສູ່ສັງຄົມແບບປອດໄພ, ມີກຽດສັກສີ ແລະ ຍືນຍົງ ພ້ອມທັງການດໍາລົງຊີວິດແບບປົກກະຕິ. ການຊ່ວຍເຫລືອໃນການກັບຄືນສູ່ສັງຄົມອາດລວມມີການປິ່ນປົວສຸຂະພາບ (ລວມເຖິງການໃຫ້ຄໍາປຶກສາ), ການຊ່ວຍເຫລືອດ້ານການເງິນ, ການໃຫ້ເງິນກູ້-ສິນເຊື່ອຈຸນລະພາກ, ການຊ່ວຍເຫລືອດ້ານກົດໝາຍ, ການເຂົ້າເຖິງການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສາ, ການຊອກຫາວຽກເຮັດງານທໍາ, ແລະທີ່ພັກອາໄສ.

ສາມາດອໍານວຍຄວາມສະດວກໃນການເຊື່ອມໂຍງກັບຄືນສູ່ສັງຄົມ ໂດຍຜ່ານການເຮັດວຽກຢ່າງໃກ້ສິດ ກັບ ສະຖານທີ່ຕົ້ນທາງ ແລະ ປະເທດປາຍທາງ ເພື່ອຮັບປະກັນການເຊື່ອມໂຍງແບບຍືນຍົງ, ການຊ່ວຍເຫລືອ ແລະ ຕິດຕາມຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄອບຄົວເຂົາເຈົ້າ ເພື່ອຫລີກລ່ຽງບໍ່ໃຫ້ຖືກຄ້າມະນຸດຊໍ້າອີກ. ການຊ່ວຍເຫລືອດ້ານການເຊື່ອມໂຍງ ສ່ວນໃຫຍ່ ແມ່ນອົງການກ່ຽວຂ້ອງ ຂອງປະເທດຕົ້ນທາງເປັນຜູ້ຊ່ວຍເຫລືອໂດຍກົງ ແລະ ມີກິດຈະກໍາຫລາຍຢ່າງທີ່ຈະຖືກຈັດຕັ້ງປະຕິບັດ ຢູ່ ສະຖານທີ່ພັກອາໄສ ຂອງ ຜູ້ຖືກເຄາະຮ້າຍ.

ການກັບຄືນສູ່ສັງຄົມ ແມ່ນເອື້ອຍອໍານວຍໂດຍປະເທດຕົ້ນທາງ ທີ່ເຮັດວຽກຮ່ວມກັບປະເທດປາຍທາງ ຢ່າງໃກ້ຊິດ ແລະ ທັນການ ເພື່ອໃຫ້ສະໜອງໃຫ້ມີການກັບຄືນສູ່ສັງຄົມຢ່າງຍືນຍົງ, ການສະໜັບສະໜູນ ແລະ ການຕິດຕາມຜູ້ຖືກເຄາະຮ້າຍຈາກ TIP ແລະ ຄອບຄົວຂອງເຂົາເຈົ້າ ເພື່ອຫລີກລ້ຽງບໍ່ໃຫ້ຖືກຄ້າມະນຸດອີກ. ສ່ວນຫລາຍການສະໜັບສະໜູນການກັບຄືນສູ່ສັງຄົມ ແມ່ນອົງການຈັດຕັ້ງທີ່ເປັນຜູ້ຮັບ ໃນປະເທດຕົ້ນທາງ ຈະເປັນຜູ້ສະໜອງໃຫ້ໂດຍກົງ, ດ້ວຍມີກິດຈະກໍາທີ່ຫລາກຫລາຍ ໂດຍມີການຈັດຕັ້ງປະຕິບັດ ແລະ ບໍລິຫານ ຢູ່ໃນສະຖານທີ່ ທີ່ຜູ້ຖືກເຄາະຮ້າຍອາໄສຢູ່ເຊິ່ງເປັນສິ່ງສໍາຄັນທີ່ອົງການຈັດຕັ້ງທີ່ເປັນຜູ້ຮັບຂອງ ປະເທດຕົ້ນທາງ ໃຫ້ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ ໃນການກໍານົດເປົ້າໝາຍທີ່ແທດເໝາະກັບຄວາມເປັນຈິງ ເປັນຕົ້ນແມ່ນ ຄວາມຕ້ອງການສ່ວນຕົວ, ທັກສະ ແລະ ຄຸນວຸດທິ ພ້ອມທັງກາລະໂອກາດທີ່ມີໃນປະເທດ, ຂົງເຂດທ້ອງຖິ່ນ ແລະ ສະຖານທີ່ພັກອາໄສ ອີງຕາມການປະເມີນ ການກັບຄືນສູ່ສັງຄົມ. ພ້ອມນັ້ນ, ແຜນງານການກັບຄືນສູ່ສັງຄົມ ກໍຕ້ອງຂຶ້ນກັບຄວາມສາມາດ ຂອງ ການໃຫ້ບໍລິການ ແລະ ການຊ່ວຍເຫລືອ ຂອງ ອົງການຈັດຕັ້ງ ແລະ ຄູ່ຮ່ວມງານ ຂອງຕົນ ຢູ່ປະເທດຕົ້ນທາງ. ຈຸດນີ້ແມ່ນຕ້ອງພິຈາລະນາ ໃນຂັ້ນຕອນການປະເມີນການກັບຄືນສູ່ສັງຄົມ.

ປະເທດທີ່ສົ່ງ ຫລື ສະຖານທີ່ປາຍທາງ ຕ້ອງດໍາເນີນການປະເມີນບຸກຄົນຂັ້ນພື້ນຖານ ກ່ຽວກັບ ຄວາມຕ້ອງການ ຂອງ ຜູ້ຖືກເຄາະຮ້າຍ ແລະ ສົ່ງຂໍ້ມູນດັ່ງກ່າວໃຫ້ແກ່ອົງການກ່ຽວຂ້ອງ ຢູ່ປະເທດປາຍທາງ ກ່ອນການເດີນທາງ ຫລື ຜ່ານແຈ້ງການ.

# ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ 24

## ຂອບເຂດ

ຜົນໄດ້ຮັບນີ້ ແນະນຳໃຫ້ສະຖານທີ່ຕົ້ນທາງ:

- ແຕ່ງຕັ້ງຜູ້ຄຸ້ມຄອງກໍລະນີ ຫລື ນັກສັງຄົມສົງເຄາະ ເພື່ອຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ໃນການກັບຄືນສູ່ສັງຄົມ, ການເຂົ້າເຖິງບໍລິການ, ການຈ້າງງານ ແລະ ເຄືອຂ່າຍສັງຄົມ.
- ຕອບສະໜອງຄວາມຕ້ອງການຂອງ ກຸ່ມສ່ຽງ ເຊັ່ນ: ແມ່ຍິງ, ເດັກນ້ອຍ, ແລະ ຄົນທີ່ມີຄວາມພິການ. ຜູ້ຖືກເຄາະຮ້າຍ ຈາກ TIP ໂດຍສະເພາະແມ່ຍິງ ແລະ ເດັກຍິງ ໄດ້ຮັບໂອກາດເພື່ອພັດທະນາທັກສະການປະກອບອາຊີບ ເຊັ່ນ: ການອ່ານການຂຽນ, ຄວາມຮູ້ດ້ານ IT, ຄວາມຮູ້ດ້ານການເງິນ, ການປະຖົມພະຍາບານ, ສຸຂະພາບ ແລະ ຄວາມປອດໄພ ແລະ ການວາງແຜນຄອບຄົວ ອີງຕາມຄວາມຕ້ອງການ ແລະ ຄວາມສົນໃຈຂອງເຂົາເຈົ້າ. ເຊິ່ງບໍ່ນຳໃຊ້ເງື່ອນໄຂໃຫ້ການຊ່ວຍເຫລືອ ເພື່ອແລກກັບການມີສ່ວນຮ່ວມໃນຂະບວນການດຳເນີນຄະດີທາງອາຍາ.
- ໃຫ້ການຊ່ວຍເຫລືອ ທີ່ເໝາະສົມໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ ອີງຕາມຫລັກການເຄົາລົບສິດທິຂອງ ເດັກນ້ອຍ ແລະ ຂັ້ນຕອນອັນສະເພາະສຳລັບເດັກ.
- ຄົນທີ່ມີຄວາມພິການໄດ້ຮັບໂອກາດທີ່ເທົ່າທຽມກັນ ສຳລັບການຈ້າງງານ, ການເປັນຜູ້ປະກອບການ ແລະ ດ້ານເສດຖະກິດ.
- ຕິດຕາມຄວາມຄືບໜ້າ ຂອງຜູ້ຖືກເຄາະຮ້າຍທີ່ໄດ້ການຄືນສູ່ສັງຄົມ ໂດຍນຳໃຊ້ກົນໄກປະເມີນຜົນກະທົບ ຂອງການຊ່ວຍເຫລືອ.

ຜົນໄດ້ຮັບນີ້ແນະນຳໃຫ້ສະຖານທີ່ປາຍທາງ:

- ຮັບປະກັນການກັບສົ່ງແບບສະໝັກໃຈ ຈາກຜູ້ຖືກເຄາະຮ້າຍ ຈາກ TIP ໂດຍໃຫ້ຄວາມຍິນຍອມແບບມີຂໍ້ມູນຄົບຖ້ວນ ຫລື ການຍິນຍອມແບບຈະແຈ້ງ ສຳລັບຜູ້ທີ່ມີອາຍຸໜ້ອຍກວ່າ 18 ປີ.
- ຂະບວນການກັບຄືນສູ່ສັງຄົມ ຕອບສະໜອງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ຕາມແຕ່ລະກໍລະນີ ແລະ ຈັດຕັ້ງປະຕິບັດອີງຕາມຄວາມເໝາະສົມທາງເພດ, ອາຍຸ ແລະ ວັດທະນາທຳ.
- ຮັບປະກັນຜູ້ຖືກເຄາະຮ້າຍ ຈາກ TIP, ບໍ່ວ່າຈະເປັນພົນລະເມືອງ ຫລື ມີສິດພັກເຊົາຖາວອນ, ໄດ້ຮັບການຊ່ວຍເຫລືອ ເພື່ອກັບຄືນຖິ່ນເດີມຂອງຕົນ.
- ຮັບປະກັນ ຜູ້ຖືກເຄາະຮ້າຍ ຈາກ TIP ມີນັກສັງຄົມສົງເຄາະ ຫລື ຜູ້ສະໜັບສະໜູນ ຕິດຕາມໃນການເດີນທາງ ເພື່ອຮັບປະກັນຄວາມປອດໄພ ໂດຍເຄົາລົບການຕັດສິນໃຈຂອງຜູ້ຖືກເຄາະຮ້າຍ ແລະ ພິຈາລະນາຄວາມສ່ຽງໃນສັງຄົມ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການຈັດສັນຊັບພະຍາກອນພຽງພໍ ເພື່ອຈັດຕັ້ງປະຕິບັດວຽກງານການສົ່ງກັບ ແລະ ການກັບສູ່ສັງຄົມ ຂອງ ຜູ້ຖືກເຄາະຮ້າຍ. | ການສົ່ງກັບ ແລະ ການກັບສູ່ສັງຄົມ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກ ອີງຕາມ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |



# ຕົວຢ່າງ ພາກປະຕິບັດທີ່ດີ ດ້ານການສົ່ງກັບ ແລະ ການກັບຄືນສູ່ສັງຄົມ

**ການຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ຢູ່ ປະເທດໄທ**

ກົດໝາຍ ວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຂອງ ປະເທດ ໄທ ລະບຸວ່າ ຜູ້ຖືກເຄາະຮ້າຍ ຈາກ TIP ຖືກປະຕິບັດດ້ວຍການເຄົາລົບກຽດສັກສີ ເຊິ່ງເພດ, ອາຍຸ, ສັນຊາດ, ເຊື້ອຊາດ, ວັດທະນາທຳ ແລະ ທັດສະນະມຸມມອງ ສ່ວນຕົວ ຖືກພິຈາລະນາ. ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໄດ້ຮັບການຊ່ວຍເຫລືອ ດ້ານອາຫານ, ທີ່ພັກອາໄສ, ການ ປິ່ນປົວສຸຂະພາບ, ການຟື້ນຟູສຸຂະພາບຮ່າງກາຍ ແລະ ຈິດໃຈ, ການສຶກສາ, ການຝຶກອົບຮົມ, ການຊ່ວຍເຫລືອດ້ານ ກົດໝາຍ ແລະ ການກັບຄືນສະຖານທີ່ຕົ້ນທາງ. ນອກນັ້ນ, ກໍໄດ້ຮັບການສະໜັບສະໜູນເພື່ອດຳເນີນຂະບວນການດ້ານຍຸ ຕິທຳ ເພື່ອໄດ້ຮັບການຊົດເຊີຍ.

# ການດູແລທາງການແພດ ແລະ ສຸຂະພາບຈິດ

25

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບຂໍ້ມູນການບໍລິການດ້ານ ການບໍລິການການດູແລສຸຂະພາບ ເປັນພາສາໃດໜຶ່ງ ແລະ ໃນຮູບແບບທີ່ເຂົາເຈົ້າສາມາດເຂົ້າໃຈໄດ້

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 2.2.4, 2.2.5.
- ຄູ່ມື ໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍພາກທີ 2.4.1, 3.1.2, 2.6.1, 3.1.1.
- ຄູ່ມື ການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 73.
- ACTIP ມາດຕາ 14(5), (10).

## ລາຍລະອຽດ ແລະ ຄໍາອະທິບາຍ

ຜູ້ຖືກເຄາະຮ້າຍຈາກ TIP ມີສິດໄດ້ຮັບການດູແລດ້ານສຸຂະພາບ. ປະສົບການການຄ້າມະນຸດສາມາດສົ່ງຜົນກະທົບຕໍ່ສຸຂະພາບທາງຮ່າງກາຍ ແລະ ຈິດໃຈໃນໄລຍະສັ້ນ ແລະ ໄລຍະຍາວຂອງຜູ້ຖືກເຄາະຮ້າຍ. ອີງຕາມມາດຕາ 14(10) ຂອງ ACTIP, ບັນດາປະເທດສະມາຊິກອາຊຽນ ມີພັນທະທີ່ຈະສືບຕໍ່ພັດທະນາການດູແລ, ການປົກປ້ອງ, ການສະໜັບສະໜູນທີ່ເໝາະສົມໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກ TIP ເພື່ອໃຫ້ຮັບຮູ້ ແລະ ຕອບສະໜອງຄວາມຕ້ອງການດ້ານການດູແລທາງການແພດ ແລະ ສຸຂະພາບຈິດທີ່ຫລາກຫລາຍຂອງຜູ້ຖືກເຄາະຮ້າຍ. ຜົນກະທົບຂອງການຄ້າມະນຸດຕໍ່ການດູແລສຸຂະພາບຂອງບຸກຄົນແມ່ນມີຫລາຍຢ່າງ (ເຊັ່ນ: ທາງດ້ານຮ່າງກາຍ, ຈິດໃຈ, ແລະ ສັງຄົມ) ແລະ ດັ່ງນັ້ນ, ຈຶ່ງສະເໜີວິທີການບໍລິການຫລາຍດ້ານ ເພື່ອໃຫ້ໄດ້ຮັບການຟື້ນຟູ[48].

## ຂອບເຂດ

ຜົນໄດ້ຮັບນີ້ກ່ຽວຂ້ອງກັບການເຂົ້າເຖິງຂໍ້ມູນສໍາລັບຜູ້ຖືກເຄາະຮ້າຍຈາກ TIP ເພື່ອຮັບປະກັນວ່າ:

- ຜູ້ຖືກເຄາະຮ້າຍຈາກ TIP ທັງໝົດແມ່ນໄດ້ຮັບການສະໜອງຂໍ້ມູນ ແລະ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ໂດຍບໍ່ມີເງື່ອນໄຂ ໃນການຮ່ວມມືກັບເຈົ້າໜ້າທີ່ ຫລື ການດໍາເນີນຄະດີອາຍາ.
- ຂໍ້ມູນແມ່ນສະໜອງໃຫ້ໃນຮູບແບບແບບຟອມປະເພດຕ່າງໆ ທີ່ຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນ ສາມາດເຂົ້າເຖິງ ແລະ ເຂົ້າໃຈໄດ້, ໂດຍມີນາຍພາສາ ແລະ ພາສາມືຕາມຄວາມຕ້ອງການ.
- ພະນັກງານແພດ ແລະ ນາຍພາສາມີຄວາມພ້ອມດ້ວຍຄວາມຮູ້ ແລະ ຄວາມສາມາດ ເພື່ອເຮັດວຽກກັບຜູ້ຖືກເຄາະຮ້າຍຈາກ TIP ທັງໝົດ.
- ຜູ້ຖືກເຄາະຮ້າຍຈາກ TIP ມີສິດທີ່ຈະຮັບເອົາ ຫລື ປະຕິເສດການຊ່ວຍເຫລືອ ແລະ ໄດ້ຮັບການເຄົາລົບຕໍ່ການຕັດສິນໃຈຂອງເຂົາເຈົ້າ.
- ຜູ້ຖືກເຄາະຮ້າຍຈາກ TIP ໃຫ້ການຍິນຍອມເຫັນດີເປັນລາຍລັກອັກສອນ ຫລື ບັນທຶກດ້ວຍວາຈາ ຫລື ການຢືນຢັນສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ແລະ ການຍິນຍອມຈາກພໍ່ແມ່ ຫລື ຜູ້ປົກຄອງຕາມກົດໝາຍ.
- ວິທີການທີ່ເປັນມິດກັບເດັກນ້ອຍແມ່ນໄດ້ຖືກປະຕິບັດ ເພື່ອຮັບປະກັນວ່າການຕັດສິນໃຈໃນແຜນການປິ່ນປົວສໍາລັບເດັກນ້ອຍໄດ້ຖືກສື່ສານ ແລະ ໄດ້ຮັບການຕັດສິນໃຈ ຈາກພໍ່ແມ່, ຜູ້ເບິ່ງແຍງ, ຫລື ຜູ້ປົກຄອງ ແລະ ເດັກ ໂດຍອີງຕາມອາຍຸ, ການເຕີບໃຫ່ຍ ແລະ ຄວາມສາມາດຂອງເຂົາເຈົ້າ.
- ແຜນການປິ່ນປົວທີ່ປັບປຸງແມ່ນຈັດຕັ້ງປະຕິບັດໂດຍພະນັກງານແພດ ໃນການປຶກສາຫາລືກັບຜູ້ຖືກເຄາະຮ້າຍຈາກ TIP ສໍາລັບການບໍລິການດ້ານສຸຂະພາບສະເພາະ ແລະ ມີຊັບພະຍາກອນຢ່າງພຽງພໍ.
- ການບັນທຶກໄຟລ໌ແມ່ນບໍ່ໄດ້ລະບຸຊື່ ແລະ ຂໍ້ແນະນໍາທີ່ຖືກຕ້ອງໄດ້ຮັບທີ່ສ້າງຂຶ້ນ ເພື່ອປ້ອງກັນຊື່, ວັນເດືອນປີເກີດ, ທີ່ຢູ່ ແລະ ຂໍ້ມູນສ່ວນຕົວອື່ນໆ ທີ່ອາດຈະເປີດເຜີຍຕົວຕົນຂອງຜູ້ຖືກເຄາະຮ້າຍ, ຄອບຄົວ ຫລື ພະຍານ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ມີການຈັດກຽມເອກະສານຂໍ້ມູນຂ່າວສານທີ່ບໍ່ມີເງື່ອນໄຂ ແລະ ມີຫຼາຍຮູບແບບ ແລະ ປະເພດ.
- ☐ ເຄົາລົບການຕັດສິນໃຈຂອງຜູ້ຖືກເຄາະຮ້າຍຈາກ TIP ທີ່ຈະຍອມຮັບ ຫຼື ປະຕິເສດການຊ່ວຍເຫຼືອ.
- ☐ ຜູ້ຖືກເຄາະຮ້າຍຈາກ TIP ໃຫ້ການຍິນຍອມເຫັນດີເປັນລາຍລັກອັກສອນ ຫຼື ດ້ວຍວາຈາ, ການຢືນຢັນສໍາລັບຄົນອາຍຸຕໍ່າກວ່າ 18 ປີ ແລະ ການຍິນຍອມຈາກພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍເພື່ອຮັບການບໍລິການດ້ານສຸຂະພາບ..
- ☐ ແຜນການປິ່ນປົວສໍາລັບຜູ້ຖືກເຄາະຮ້າຍຈາກ TIP ທັງຫມົດແມ່ນສ້າງຂຶ້ນບົນພື້ນຖານການປຶກສາຫາລືກັບຜູ້ຖືກເຄາະຮ້າຍຈາກ TIP, ພະນັກງານແພດ, ຄອບຄົວ ຫຼື ຜູ້ອື່ນທີ່ກ່ຽວຂ້ອງ.
- ☐ ເອກະສານຂໍ້ມູນແມ່ນຖືກປິດລັບ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນເຂົ້າເຖິງຂໍ້ມູນ ແລະ ການບໍລິການດ້ານສຸຂະພາບເປັນປົກກະຕິຕາມຄວາມຕ້ອງການຂອງເຂົາເຈົ້າ. | ການດູແລທາງການແພດ ແລະ ສຸຂະພາບຈິດແມ່ນໄດ້ເຊື່ອມສານເຂົ້າໃນສະຖາບັນການເຮັດວຽກຮ່ວມກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນໍາໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

48 ອະນຸສັນຍາ ອົງການ ສປຊ ວ່າດ້ວຍການປ້ອງກັນ, ສະກັດກັ້ນ ແລະ ລົງໂທດຜູ້ຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (The TIP Protocol), 2000.

# ການດູແລທາງການແພດ ແລະ ສຸຂະພາບຈິດ

26

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບການເຂົ້າເຖິງການດູແລ ແລະ ການປົ່ນປົວຢູ່ໃນການບໍລິການການດູແລສຸຂະພາບທາງການແພດ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມືການບໍ່ເຮັດໄພອັນຕະລາຍສໍາລັບຜູ້ຕອບໂຕ້ດ້ານໜ້າ, ໜ້າທີ 68, 72, 73.
- ACTIP ມາດຕາ 14(10)(c).
- ແຜນແມ່ບົດຂອງອາຊຽນປີ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ AEC 17, ASCC 6.

## ລາຍລະອຽດ ແລະ ຄໍາອະທິບາຍ

ຜູ້ຖືກເຄາະຮ້າຍຈາກ TIP ຕ້ອງໄດ້ຮັບການເຂົ້າເຖິງການດູແລສຸຂະພາບທີ່ເໝາະສົມຢ່າງຍືນຍົງ ແລະ ຄົບຖ້ວນ ໂດຍສຸມໃສ່ການບັນລຸຄວາມເປັນຢູ່ທີ່ດີທັງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ. ຄວນເອົາໃຈໃສ່ເປັນພິເສດຕໍ່ຄວາມຕ້ອງການຂອງສຸຂະພາບ ແລະ ສຸຂະພາບຈິດຂອງເດັກນ້ອຍ ແລະ ໄວໜຸ່ມ ທີ່ຖືກຄ້າມະນຸດ. ການດູແລສຸຂະພາບຄວນໄດ້ຮັບການສະໜອງໃນສະຖານທີ່ສ່ວນຕົວ ແລະ ສະດວກສະບາຍ ໂດຍຜູ້ຊ່ຽວຊານທີ່ໄດ້ຮັບການຝຶກອົບຮົມ ແລະ ດ້ວຍຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ.

ຂັ້ນຕອນຂອງກິດຈະກໍາທີ່ແຕກຕ່າງກັນ ທີ່ຮຽກຮ້ອງໃຫ້ມີບູລິມະສິດທີ່ແຕກຕ່າງກັນ ກ່ຽວກັບການດູແລສຸຂະພາບທີ່ສະໜອງໃຫ້ຜູ້ຖືກເຄາະຮ້າຍ. ໃນລະຫວ່າງການຊ່ວຍເຫລືອເບື້ອງຕົ້ນ, ໂດຍເລີ່ມຈາກການຕິດຕໍ່ລະຫວ່າງຜູ້ຖືກເຄາະຮ້າຍ ແລະ ຜູ້ຊ່ຽວຊານດ້ານສຸຂະພາບ, ການດູແລຄວນສຸມໃສ່ການປິ່ນປົວການບາດເຈັບ ແລະ ຄວາມບອບຊໍ້າດ້ານຈິດໃຈ ແລະ ການດູແລສຸຂະພາບຂັ້ນພື້ນຖານ (ລວມທັງການໃຫ້ຄໍາປຶກສາ). ໃນໄລຍະການຟື້ນຟູ, ຈຸດສຸມຂອງການດູແລໄດ້ຫັນໄປສູ່ຄວາມຕ້ອງການດ້ານສຸຂະພາບໃນໄລຍະຍາວ ແລະ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍຄວນໄດ້ຮັບການດູແລສຸຂະພາບທີ່ເໝາະສົມກັບຄວາມຕ້ອງການສ່ວນບຸກຄົນ ແລະ ສະຖານະການຂອງເຂົາເຈົ້າ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ບັນດາປະເທດສະມາຊິກອາຊຽນ ສະໜອງການບໍລິການທາງການແພດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ TIP ທັງໝົດ.
- ☐ ແຜນການຮັກສາທີ່ຈັດຂຶ້ນໂດຍສະເພາະໃຫ້ກັບຜູ້ຖືກເຄາະຮ້າຍຈາກ TIP.
- ☐ ພະນັກງານ ແລະ ຜູ້ປະຕິບັດຕົວຈິງດ້ານການປິ່ນປົວ ໄດ້ຮັບການຝຶກອົບຮົມ ແລະ ມີປະສົບການ ເພື່ອສະໜອງການດູແລທາງການແພດໂດຍຄໍານຶງເຖິງບົດບາດຍິງ-ຊາຍ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງໂດຍບໍ່ມີການຈໍາແນກ.
- ☐ ການໃຫ້ຄໍາປຶກສາ ແລະ ການສອບຖາມໄດ້ເກີດຂຶ້ນໃນບັນຍາກາດທີ່ເປັນສ່ວນຕົວ ແລະ ສະດວກສະບາຍ.
- ☐ ນາຍພາສາທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນວຸດທິໃນການສື່ສານຢ່າງຈະແຈ້ງກ່ຽວກັບຂະບວນການ ແລະ ຄວາມຄາດຫວັງ.
- ☐ ການຍິນຍອມເຫັນດີເປັນລາຍລັກອັກສອນ ຫຼື ບັນທຶກໄວ້ດ້ວຍວາຈາ ຫຼື ການຢືນຢັນສໍາລັບຄົນທີ່ມີອາຍຸຕໍ່າກວ່າ 18 ປີ ຫຼື ການຍິນຍອມເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງທາງດ້ານກົດໝາຍແມ່ນຈະໄດ້ຮັບການກວດສອບທາງດ້ານຮ່າງກາຍ ແລະ ຂັ້ນຕອນ.
- ☐ ການກວດ HIV ແລະ STI, ແລະ ການປິ່ນປົວແມ່ນມີໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນ ຖ້າຕ້ອງການ.
- ☐ ການຖືພາ, ການຄຸມກໍາເນີດສຸກເສີນ, ການປິ່ນປົວ ແລະ ການໃຫ້ຄໍາປຶກສາທີ່ເໝາະສົມແມ່ນມີຢູ່ ຖ້າຈໍາເປັນ.
- ☐ ເມື່ອຜູ້ຖືກເຄາະຮ້າຍຈາກ TIP ກັບຄືນໄປບ້ານເກີດ, ການບັນທຶກທາງການແພດຈະຖືກສົ່ງຕໍ່ ເພື່ອໃຫ້ໄດ້ຮັບການດູແລສຸຂະພາບຢ່າງຕໍ່ເນື່ອງ...
- ☐ ຂໍ້ມູນທາງການແພດຖືກແບ່ງປັນ ໂດຍຮັບປະກັນການຮັກສາຄວາມລັບ ແລະ ການປົກປ້ອງຂໍ້ມູນໃນລະດັບສູງສຸດ.
- ☐ ເອກະສານຫຼັກຖານແມ່ນສະໜອງໃຫ້ຕາມການຮ້ອງຂໍຈາກຜູ້ຖືກເຄາະຮ້າຍຈາກ TIP ຫຼື ຕົວແທນທາງດ້ານກົດໝາຍຂອງເຂົາເຈົ້າ.
- ☐ ການດູແລສຸຂະພາບບໍ່ໄດ້ຖືກຮັບການປະຕິເສດເນື່ອງຈາກການຖືກສັງຄົມປະນາມ, ງົບປະມານ, ຫຼື ຂໍ້ຈໍາກັດຂອງຊັບພະຍາກອນ.
- ☐ ມີມາດຕະຖານຂັ້ນຕໍ່າສຸດ ສໍາລັບການດູແລທາງການແພດທີ່ນໍາສະເໜີໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ຂອບເຂດ

ຜົນໄດ້ຮັບນີ້ແມ່ນຮັບປະກັນການບໍລິການທາງການແພດ:

- ສະໜອງການປົ່ນປົວຜູ້ຖືກເຄາະຮ້າຍຈາກ TIP ທັງໝົດ ໂດຍບໍ່ແມ່ນເງື່ອນໄຂໃນການຮ່ວມມືກັບເຈົ້າໜ້າທີ່ ຫລື ການດຳເນີນຄະດີອາຍາ.
- ປັບປຸງແຜນການປິ່ນປົວຜູ້ຖືກເຄາະຮ້າຍຈາກ TIP ໂດຍພິຈາລະນາກ່ຽວກັບເພດ, ຄວາມເຊື່ອທາງສາດສະໜາ, ການປະຕິບັດທາງວັດທະນະທຳ, ອາຍຸ, ແລະ ຄວາມສາມາດ.
- ເຄົາລົບສິດທິຂອງຜູ້ຖືກເຄາະຮ້າຍຈາກ TIP ໃນການຮັບເອົາ ຫລື ປະຕິເສດການຊ່ວຍເຫລືອ. ຜູ້ຖືກເຄາະຮ້າຍອາດຈະຖອນຕົວ ຫລື ກັບຄືນໄດ້ທຸກເວລາ.
- ສະໜອງພະນັກງານ ແລະ ຜູ້ປະຕິບັດຕົວຈິງທີ່ໄດ້ຮັບການຝຶກອົບຮົມ ແລະ ມີປະສົບການ ເປັນຜູ້ທີ່ປະຕິບັດການດູແລທາງການແພດ ໂດຍຄຳນຶງເຖິງບົດບາດຍິງ-ຊາຍ ແລະ ການຖືເອົາຜູ້ຖືກເຄາະຮ້າຍເປັນໃຈກາງ.
- ໃຫ້ຄຳປຶກສາ ແລະ ທົດສອບເປັນການສ່ວນຕົວ ໃນສະຖານທີ່ທີ່ສະດວກ ໂດຍມີນາຍແປພາສາທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນສົມບັດຢ່າງເໝາະສົມ ຖ້າຈຳເປັນ ເພື່ອຮັບປະກັນການສື່ສານທີ່ຊັດເຈນກ່ຽວກັບຂະບວນການ ແລະ ຄວາມຄາດຫວັງ.
- ໄດ້ຮັບການຍິນຍອມເຫັນດີຈາກຜູ້ຖືກເຄາະຮ້າຍເປັນລາຍລັກອັກສອນ ຫລື ບັນທຶກດ້ວຍວາຈາ ຫລື ການຢືນຢັນຂອງຜູ້ຖືກເຄາະຮ້າຍທີ່ມີອາຍຸຕໍ່າກວ່າ 18 ປີ ແລະ ການຍິນຍອມຈາກພໍ່ແມ່ ຫລື ຜູ້ປົກຄອງຕາມກົດໝາຍ, ສຳລັບການກວດຮ່າງກາຍ ແລະ ຂັ້ນຕອນການເຄົາລົບສິດທິຂອງຜູ້ຖືກເຄາະຮ້າຍທີ່ຈະປະຕິເສດ.
- ສະໜອງຂໍ້ມູນທີ່ມີການຄຳນຶງເຖິງບົດບາດຍິງ-ຊາຍ, ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ແລະ ສາມາດເຂົ້າເຖິງໄດ້ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ທັງໝົດ ລວມທັງຄົນທີ່ມີຄວາມພິການ ໂດຍຊຸກຍູ້ໃຫ້ມີການກວດ HIV ແລະ STI, ແລະ ຖ້າຜູ້ຖືກເຄາະຮ້າຍຕ້ອງການ ແລະ ເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງໄດ້ຮັບການປິ່ນປົວທາງການແພດທີ່ເໝາະສົມ.
- ສະໜອງການບໍລິການແກ່ແມ່ຍິງ ແລະ ເດັກຍິງ ລວມທັງຄົນທີ່ມີຄວາມພິການຖືພາ ເຊັ່ນ: ການຄຸມກຳເນີດສຸກເສີນ, ການປິ່ນປົວ, ແລະ ການບໍລິການໃຫ້ຄຳປຶກສາ ທີ່ເໝາະສົມ, ຕາມຄວາມຕ້ອງການ.
- ການຖ່າຍໂອນບັນທຶກການແພດຂອງຜູ້ຖືກເຄາະຮ້າຍຈາກ TIP ໄປຫາທ້ອງຖິ່ນເດີມຂອງເຂົາເຈົ້າ ດ້ວຍການຍິນຍອມໃຫ້ຜູ້ຖືກເຄາະຮ້າຍ ທີ່ເປັນລາຍລັກອັກສອນ ຫລື ບັນທຶກດ້ວຍວາຈາ ຫລື ການຢືນຢັນການຢືນຢັນສຳລັບຄົນອາຍຸຕໍ່າກວ່າ 18 ປີ ແລະ ການຍິນຍອມເຫັນດີຈາກພໍ່ແມ່ ຫລື ຜູ້ປົກຄອງຕາມກົດໝາຍ ອັນນີ້ແມ່ນເພື່ອຮັບປະກັນການໄດ້ຮັບການບໍລິການໃຫ້ການດູແລທາງການແພດຢ່າງຕໍ່ເນື່ອງ ຖ້າຈຳເປັນ.
- ການແບ່ງປັນຂໍ້ມູນທາງການແພດ ໂດຍການຮັບປະກັນການຮັກສາຄວາມລັບ ແລະ ການປົກປ້ອງຂໍ້ມູນໃນລະດັບສູງສຸດ ແລະ ຕ້ອງໄດ້ຮັບການຍິນຍອມຈາກຜູ້ຖືກເຄາະຮ້າຍຈາກ TIP ເທົ່ານັ້ນ.
- ສະໜອງເອກະສານຫລັກຖານ (ການກວດຮ່າງກາຍ ແລະ ຈິດໃຈ ເພື່ອຈຸດປະສົງທາງກົດໝາຍ) ທີ່ຮ້ອງຂໍໂດຍຜູ້ຖືກເຄາະຮ້າຍຈາກ TIP ຫລື ຕົວແທນທາງດ້ານກົດໝາຍໃນລະຫວ່າງຂະບວນການຍຸຕິທຳຂອງຜູ້ຖືກເຄາະຮ້າຍ TIP.
- ປະສານງານກັບໜ່ວຍງານຂອງລັດຖະບານ ແລະ CSO ເພື່ອຮັບປະກັນວ່າການດູແລສຸຂະພາບບໍ່ໄດ້ຖືກປະຕິເສດ ເນື່ອງຈາກຂໍ້ຈຳກັດດ້ານງົບປະມານ ຫລື ຊັບພະຍາກອນ.

ຜົນໄດ້ຮັບນີ້ຮຽກຮ້ອງໃຫ້ລັດຖະບານ:

- ສ້າງມາດຕະຖານຂັ້ນຕໍ່າສຸດ ໃນການດູແລທາງການແພດທີ່ສະໜອງໃຫ້ຜູ້ເຄາະຮ້າຍຈາກ TIP. ມາດຕະຖານຄວນໄດ້ຮັບການພັດທະນາໂດຍຜ່ານການຮ່ວມມືຂອງລັດຖະບານ ລະຫວ່າງລັດຖະບານ, CSOs, ແລະ ສະຖາບັນວິຊາການ, ແລະ ຄວນຈະອີງໃສ່ການຄົ້ນຄວ້າທີ່ສົມບູນແບບ ແລະ ການປະຕິບັດທີ່ດີທີ່ສຸດ.
- ເພີ່ມທະວີການຮ່ວມມືລະຫວ່າງລັດຖະບານ, ລະຫວ່າງລັດຖະບານ ແລະ CSOs ແລະ ທົ່ວຊາຍແດນໂດຍການປະສານງານ ແລະ ປະສົມປະສານການດູແລທາງການແພດທີ່ສະໜອງໃຫ້ ໃນປະເທດປາຍທາງ, ຕົ້ນທາງ ແລະ ປະເທດທາງຜ່ານ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນເຂົ້າເຖິງຂໍ້ມູນ ແລະ ການບໍລິການດ້ານສຸຂະພາບເປັນປົກກະຕິຕາມຄວາມຕ້ອງການຂອງເຂົາເຈົ້າ. | ການດູແລທາງການແພດ ແລະ ສຸຂະພາບຈິດແມ່ນໄດ້ເຊື່ອມສານເຂົ້າໃນສະຖາບັນການເຮັດວຽກຮ່ວມກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ການດູແລທາງດ້ານການແພດ ແລະ ສຸຂະພາບຈິດ

27

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບການເຂົ້າເຖິງ ແລະ ການປິ່ນປົວການບໍລິການດ້ານສຸຂະພາບຈິດ.

**ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ**

- ຄູ່ມືການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ້ານໜ້າ ໜ້າທີ 68, 72, 73.
- ACTIP ມາດຕາ 14 (10)(C).
- ແຜນແມ່ບົດຂອງອາຊຽນປີ 2025: ການເຊື່ອມສານສິດທິຂອງຄົນທີ່ມີຄວາມພິການ AEC 17, APSC 6.

**ລາຍລະອຽດ ແລະ ຄໍາອະທິບາຍ**

ຜູ້ຖືກເຄາະຮ້າຍຈາກ TIP ອາດຈະມີຄວາມຕ້ອງການດ້ານສຸຂະພາບຈິດທີ່ຊັບຊ້ອນ. ດັ່ງນັ້ນ, ຜູ້ຖືກເຄາະຮ້າຍຄວນຈະມີການເຂົ້າເຖິງການບໍລິການດ້ານສຸຂະພາບຈິດທີ່ທັນເວລາ, ມີການຄໍານຶງທາງດ້ານວັດທະນະທໍາ, ແລະ ມີຄວາມບອບຊໍ້າດ້ານຈິດໃຈ ທີ່ສອດຄ່ອງກັບຄວາມຕ້ອງການຂອງເຂົາເຈົ້າ. ຄວນເອົາໃຈໃສ່ ແລະ ການດູແລເປັນພິເສດ ຕໍ່ກັບຄວາມຕ້ອງການດ້ານສຸຂະພາບທາງຈິດໃຈຂອງເດັກນ້ອຍ ແລະໄວໜຸ່ມ. ການຍິນຍອມຂອງຜູ້ຖືກເຄາະຮ້າຍ ແລະ ການຢືນຢັນຂອງເດັກນ້ອຍ ແລະ ການຍິນຍອມເຫັນດີຈາກພໍ່ແມ່/ຜູ້ປົກຄອງຂອງເຂົາເຈົ້າ ແມ່ນຈໍາເປັນໃນຂະບວນການປິ່ນປົວດ້ານສຸຂະພາບຈິດທັງໝົດ.

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ພາກສ່ວນຕ່າງໆໃຫ້ບໍລິການດ້ານສຸຂະພາບຈິດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ TIP ທັງໝົດ.
- ☐ ເຄົາລົບສິດຂອງຜູ້ຖືກເຄາະຮ້າຍຈາກ TIP ໃນການຍອມຮັບ ຫຼື ປະຕິເສດການຊ່ວຍເຫຼືອ..
- ☐ ແຜນການຮັກສາ ໄດ້ຈັດຂຶ້ນສະເພາະກັບຜູ້ຖືກເຄາະຮ້າຍຈາກ TIP.
- ☐ ຜູ້ປະຕິບັດງານດ້ານສຸຂະພາບຈິດໄດ້ຮັບການຝຶກອົບຮົມ ເພື່ອສະໜອງການດູແລດ້ານສຸຂະພາບຈິດທີ່ຄໍານຶງເຖິງບົດບາດຍິງ-ຊາຍ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ..
- ☐ ການຍິນຍອມເຫັນດີຈາກລາຍລັກອັກສອນ ຫຼື ບັນທຶກໄວ້ດ້ວຍວາຈາ ຫຼື ການຢືນຢັນສໍາລັບຄົນທີ່ມີອາຍຸຕໍ່າກວ່າ 18 ປີ ແລະ ການຍິນຍອມເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງທາງດ້ານກົດໝາຍຂອງພວກເຂົາ ກ່ອນກວດສອບທາງດ້ານຈິດໃຈ.
- ☐ ທີ່ປຶກສາ ແລະ ການໃຫ້ຄໍາປຶກສາເກີດຂຶ້ນໃນສະຖານທີ່ ທີ່ເປັນສ່ວນຕົວ ແລະ ສະດວກສະບາຍ ຫຼື "ພາຍໃນເຮືອນ"..
- ☐ ນາຍພາສາທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນວຸດທິສື່ສານຢ່າງຈະແຈ້ງກ່ຽວກັບຂະບວນການ ແລະ ຄວາມຕ້ອງການ.
- ☐ ການດູແລສຸຂະພາບຈິດບໍ່ໄດ້ຖືກປະຕິເສດເນື່ອງຈາກການຖືກສັງຄົມປະນາມ, ງົບປະມານ, ຫຼື ຂໍ້ຈໍາກັດດ້ານຊັບພະຍາກອນ.
- ☐ ຂໍ້ມູນທາງການແພດຖືກແບ່ງປັນ ໂດຍຮັບປະກັນຄວາມປອດໄພໃນການປົກປ້ອງຄວາມລັບຂອງຂໍ້ມູນໃຫ້ສູງສຸດ.
- ☐ ເອກະສານຫຼັກຖານແມ່ນສະໜອງໃຫ້ຕາມການຮ້ອງຂໍຈາກຜູ້ຖືກເຄາະຮ້າຍຈາກ TIP ຫຼື ຕົວແທນທາງດ້ານກົດໝາຍຂອງເຂົາເຈົ້າ..
- ☐ ມາດຕະຖານຂັ້ນຕໍ່າສຸດ ສໍາລັບການດູແລທາງການແພດທີ່ນໍາສະເໜີໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ຂອບເຂດ

ຜົນໄດ້ຮັບນີ້ຈະຮັບປະກັນວ່າການບໍລິການສຸຂະພາບຈິດປະກອບມີ:

- ສະໜອງການປິ່ນປົວດ້ານສະຂຸພາບຈິດ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ທັງໝົດ ໂດຍບໍ່ເປັນເງື່ອນໄຂໃນການຮ່ວມມືກັບເຈົ້າໜ້າທີ່ ຫລື ການດຳເນີນຄະດີອາຍາ.
- ເຄົາລົບສິດທິຂອງຜູ້ຖືກເຄາະຮ້າຍຈາກ TIP ທີ່ຈະຮັບເອົາ ຫລື ປະຕິເສດການຊ່ວຍເຫລືອ. ຜູ້ຖືກເຄາະຮ້າຍອາດຈະຖອນຕົວ ຫລື ກັບຄືນໄດ້ທຸກເວລາ.
- ປັບປຸງແຜນການປິ່ນປົວຜູ້ຖືກເຄາະຮ້າຍຈາກ TIP ໂດຍພິຈາລະນາກ່ຽວກັບເພດ, ຄວາມເຊື່ອທາງສາດສະໜາ, ການປະຕິບັດທາງວັດທະນະທຳ, ອາຍຸ, ແລະ ຄວາມສາມາດ.
- ສະໜອງຈິດຕະແພດ ແລະ ນັກຈິດຕະວິທະຍາ ທີ່ໄດ້ຮັບການຝຶກອົບຮົມ ແລະ ຫລື ພະນັກງານດ້ານສຸຂະພາບໄດ້ຮັບການຝຶກອົບຮົມ ເພື່ອສະໜອງການປິ່ນປົວດ້ານສະຂະພາບຈິດ ທີ່ຄຳນຶງເຖິງບົດບາດຍິງ-ຊາຍ ແລະ ຖືເອົາຜູ້ເຄາະຮ້າຍເປັນໃຈກາງ ໂດຍບໍ່ມີການປະນາມຈາກສັງຄົມ.
- ດຳເນີນການໃຫ້ຄຳປຶກສາ ແລະ ປຶກສາຫາລື ຢ່າງເປັນສ່ວນຕົວ ໃນສະຖານທີ່ທີ່ສະດວກ ລວມທັງນຳໃຊ້ ສະຖານທີ່ທີ່ມີຢູ່ ຖ້າເຫັນວ່າເໝາະສົມ ໂດຍມີນາຍແປພາສາທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນສົມບັດຢ່າງເໝາະສົມ ຖ້າຈຳເປັນ ເພື່ອຮັບປະກັນການສື່ສານທີ່ຊັດເຈນກ່ຽວກັບຂະບວນການ ແລະ ຄວາມຄາດຫວັງ.
- ໄດ້ຮັບການຍິນຍອມເຫັນດີຈາກຜູ້ຖືກເຄາະຮ້າຍເປັນລາຍລັກອັກສອນ ຫລື ບັນທຶກດ້ວຍວາຈາ ຫລື ການຢືນຢັນຂອງຜູ້ຖືກເຄາະຮ້າຍທີ່ມີອາຍຸຕໍ່າກວ່າ 18 ປີ ແລະ ການຍິນຍອມຈາກພໍ່ແມ່ ຫລື ຜູ້ປົກຄອງຕາມກົດໝາຍ, ສຳລັບການກວດຮ່າງກາຍ ແລະ ຂັ້ນຕອນການເຄົາລົບສິດທິຂອງຜູ້ຖືກເຄາະຮ້າຍທີ່ຈະປະຕິເສດ.
- ແບ່ງປັນຂໍ້ມູນທາງການແພດໂດຍການຮັບປະກັນການຮັກສາຄວາມລັບ ແລະ ການປົກປ້ອງຂໍ້ມູນໃນລະດັບສູງສຸດ ແລະ ຕ້ອງໄດ້ຮັບການຍິນຍອມຈາກຜູ້ເຄາະຮ້າຍຈາກ TIP ເທົ່ານັ້ນ.
- ສະໜອງເອກະສານຫລັກຖານ (ການກວດຮ່າງກາຍ ແລະ ຈິດໃຈ ເພື່ອຈຸດປະສົງທາງກົດໝາຍ) ທີ່ຮ້ອງຂໍໂດຍຜູ້ຖືກເຄາະຮ້າຍຈາກ TIP ຫລື ຕົວແທນທາງດ້ານກົດໝາຍໃນລະຫວ່າງຂະບວນການຍຸຕິທຳຂອງຜູ້ຖືກເຄາະຮ້າຍ TIP.
- ປະສານງານກັບໜ່ວຍງານຂອງລັດຖະບານ ແລະ CSO ເພື່ອຮັບປະກັນວ່າການດູແລສຸຂະພາບບໍ່ໄດ້ຖືກປະຕິເສດ ເນື່ອງຈາກຂໍ້ຈຳກັດດ້ານງົບປະມານ ຫລື ຊັບພະຍາກອນ.

ຜົນໄດ້ຮັບນີ້ຮຽກຮ້ອງໃຫ້ລັດຖະບານ:

- ສ້າງມາດຕະຖານຂັ້ນຕໍ່າສຸດ ໃນການດູແລທາງການແພດທີ່ສະໜອງໃຫ້ຜູ້ຖືກເຄາະຮ້າຍຈາກ TIP. ມາດຕະຖານຄວນໄດ້ຮັບການພັດທະນາໂດຍຜ່ານການຮ່ວມມືຂອງລັດຖະບານ ລະຫວ່າງລັດຖະບານ, CSOs, ແລະ ສະຖາບັນວິຊາການ, ແລະ ຄວນຈະອີງໃສ່ການຄົ້ນຄວ້າທີ່ສົມບູນແບບ ແລະ ການປະຕິບັດທີ່ດີທີ່ສຸດ.
- ເພີ່ມທະວີການຮ່ວມມືລະຫວ່າງລັດຖະບານ, ລະຫວ່າງລັດຖະບານ ແລະ CSOs ແລະ ທົ່ວຊາຍແດນໂດຍການປະສານງານ ແລະ ປະສົມປະສານການດູແລທາງການແພດທີ່ສະໜອງໃຫ້ໃນປະເທດ ປາຍທາງ, ຕົ້ນທາງ ແລະ ທາງຜ່ານ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍຈາກ TIP ທຸກຄົນເຂົ້າເຖິງຂໍ້ມູນ ແລະ ການບໍລິການດ້ານສຸຂະພາບເປັນປົກກະຕິຕາມຄວາມຕ້ອງການຂອງເຂົາເຈົ້າ. | ການດູແລທາງການແພດ ແລະ ສຸຂະພາບຈິດແມ່ນໄດ້ເຊື່ອມສານເຂົ້າໃນສະຖາບັນການເຮັດວຽກຮ່ວມກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |



# ຕົວຢ່າງ ພາກປະຕິບັດທີ່ດີ ດ້ານການດູແລທາງດ້ານການແພດ ແລະ ສຸຂະພາບຈິດ

**ຜູ້ຖືກເຄາະຮ້າຍຈາກ TIP ໄດ້ຮັບຂໍ້ມູນ ເພື່ອຕັດສິນໃຈໃນການໃຫ້ຂໍ້ມູນກ່ຽວກັບສຸຂະພາບຂອງເຂົາເຈົ້າ.**

ຜູ້ຖືກເຄາະຮ້າຍຈາກ TIP ທີ່ຖືກລັກອະໄວຍະວະ ແມ່ນຖືກສົ່ງໄປສະຖາທີ່ພັກທີ່ປອດໄພ 3 - 5 ມື້ ຫລັງຈາກໝາກໄຂ່ຫລັງຂອງເຂົາເຈົ້າຖືກເອົາອອກ. ຢູ່ສະຖານທີ່ພັກທີ່ປົດໄພຂອງຜູ້ຖືກເຄາະຮ້າຍ ກັບພະນັກງານດູແລສຸຂະພາບ.

ພະນັກງານດູແລສຸຂະພາບໄດ້ໃຫ້ຂໍ້ມູນກ່ຽວກັບຂັ້ນຕອນຕໍ່ໄປຂອງການຊ່ວຍເຫລືອຜູ້ຖືກເຄາະຮ້າຍ. ພະນັກງານໄດ້ແນະນຳຜູ້ຖືກເຄາະຮ້າຍວ່າການສຳພາດ ແລະ ການກວດຮ່າງກາຍຈະຕ້ອງດຳເນີນການກັບແພດໝໍທົ່ວໄປ, ລວມທັງການຖ່າຍຮູບບາດແຜ. ແພດຈະກວດເບິ່ງບາດແຜ ເພື່ອເບິ່ງວ່າຕ້ອງມີການກວດເພີ່ມເຕີມ ຫລື ຈຳເປັນຕ້ອງມີແພດສະເພາະມາກວດ. ທ່ານ ໝໍ ຍັງອາດຈະສັ່ງໃຫ້ເຮັດ CT scan ເພື່ອນຳໃຊ້ເປັນຫລັກຖານໃນສານ, ແລະ ເປັນຫລັກຖານທີ່ເກີດຂຶ້ນກັບ ຜູ້ຖືກເຄາະຮ້າຍ ທີ່ຈະຕ້ອງຖືກນຳໄປໂຮງໝໍ.

ຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນໄດ້ປະຕິເສດກວດ ແລະ ປິ່ນປົວ. ພະນັກງານດູແລສຸຂະພາບ ເຄົາລົບການຕັດສິນໃຈນີ້. ຢ່າງໃດກໍ່ຕາມ, ເຂົາເຈົ້າຮູ້ສຶກວ່າຜູ້ຖືກເຄາະຮ້າຍຕ້ອງການຂໍ້ມູນເພີ່ມເຕີມ. ພະນັກງານອະທິບາຍຜົນປະໂຫຍດ, ຄວາມຕ້ອງການສະເພາະຂອງເຂົາເຈົ້າ, ແລະ ທາງເລືອກທີ່ມີຢູ່ໃຫ້ແກ່ເຂົາເຈົ້າ. ຜູ້ຖືກເຄາະຮ້າຍມີຄວາມເຂົ້າໃຈດີຂຶ້ນ ແລະ ໄດ້ໃຫ້ຄວາມຍິນດີເຫັນພ້ອມ. ຄອບຄົວຜູ້ຖືກເຄາະຮ້າຍຍັງໄດ້ຖືກເຊີນໄປນຳຜູ້ຖືກເຄາະຮ້າຍ ໂດຍໄປໂຮງໝໍທີ່ສາມາດເຂົ້າການຮັກສາ ແລະ ປິ່ນປົວໄດ້.

**ການເຮັດວຽກຮ່ວມກັບຄົນທີ່ມີຄວາມພິການ**

ຢູ່ໃນປະເທດອິນໂດເນຊຍ ສູນຂໍ້ມູນຂ່າວສານແມ່ນດຳເນີນການໂດຍ CSO ທີ່ສະໜັບສະໜູນຄົນທີ່ມີຄວາມພິການ. CSO ແຕ່ງຕັ້ງຄູ່ຮ່ວມງານ ໃນກໍລະນີ ເມື່ອຜູ້ຖືກເຄາະຮ້າຍຈາກ TIP ຫລື ຜູ້ທີ່ອາດເປັນຜູ້ຖືກເຄາະຮ້າຍ ຖືກສົ່ງໄປສູນເພື່ອຂໍການຊ່ວຍເຫລືອ.

ຄູ່ຮ່ວມງານເຂົ້າໃຈສະພາບຂອງຄົນທີ່ມີຄວາມພິການ ແລະ ການເຂົ້າເຖິງການບໍລິການທີ່ຜູ້ຖືກເຄາະຮ້າຍຈາກ TIP. ຄູ່ຮ່ວມງານໄດ້ຮັບການຝຶກອົບຮົມ ເພື່ອຮັບມື ແລະ ຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກ TIP ທີ່ອາໄສຢູ່ກັບຜູ້ທີ່ມີຄວາມພິການໃນການນຳທາງໃຫ້ເຂົ້າເຖິງບໍລິການ ເພື່ອການປິ່ນປົວ ແລະ ການດູແລທີ່ດີທີ່ສຸດທີ່ເປັນໄປໄດ້.

# ຂະບວນການຍຸຕິທຳ

## 28

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ກົດໝາຍ, ລະບຽບການ ແລະ ນະໂຍບາຍ ຖືກຈັດຕັ້ງປະຕິບັດ ເພື່ອການສືບສວນສອບສວນ, ດຳເນີນຄະດີ ແລະ ຕັດສິນລົງໂທດ ຜູ້ຄ້າມະນຸດ ແລະ ຜູ້ທີ່ມີສ່ວນຮ່ວມ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍພາກທີ 3.6.2.
- ACTIP ມາດຕາທີ 1(1)(a), 5, 12(h).

### ລາຍລະອຽດ ແລະ ຄຳອະທິບາຍ

ການສົ່ງເສີມການລົງໂທດ ຜູ້ກະທຳຜິດ ບົນສະຖານການຄ້າມະນຸດ ຮຽກຮ້ອງໃຫ້ປະເທດສະມາຊິກອາຊຽນ ຮັບຮອງນິຕິກຳ ແລະ ມາດຕະຖານອື່ນໆທີ່ຈຳເປັນ ເພື່ອກຳນົດການຄ້າມະນຸດ ເປັນການກະທຳຜິດທາງອາຍາ ລວມທັງອົງປະກອບ ແລະ ພຶດຕິກຳ ກ່ຽວຂ້ອງ. ອັນນີ້ ຖືວ່າເປັນບາດກ້າວອັນສຳຄັນເພື່ອບໍ່ໃຫ້ຜູ້ຄ້າມະນຸດ ສາມາດລົບໜີຕໍ່ການປະຕິບັດ ກົດໝາຍ. ເປົ້າໝາຍສຸດທ້າຍ ແມ່ນເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ແລະ ຮັບປະກັນ ການລົງໂທດຜູ້ຄ້າມະນຸດແບບມີປະສິດທິຜົນ.

ປະເທດທີ່ບໍ່ສາມາດລົງໂທດ ຜູ້ຄ້າມະນຸດ ຖືວ່າລົ້ມເຫລວໃນການປະຕິບັດພັນທະນ ຂອງຕົນ ໃນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ສະກັດກັ້ນກໍລະນີການຄ້າມະນຸດທີ່ອາດເກີດຂຶ້ນໃນອານະຄົດ. ນອກນັ້ນ, ກໍລົ້ມເຫລວໃນການສ້າງຕັ້ງກົນໄກ ຂອງ ອົງການຈັດຕັ້ງພາກລັດ ເພື່ອສືບສວນ-ສອບສວນ, ດຳເນີນຄະດີ ແລະ ຕັດສິນຄະດີການຄ້າມະນຸດ ອີງຕາມມາດຕະຖານຂະບວນການຍຸຕິທຳ. ນອກຈາກການມີຂອບນິຕິກຳ ທີ່ເຂັ້ມງວດ, ລັດຍັງຕ້ອງການເຈົ້າໜ້າທີ່ ທີ່ມີຄວາມສາມາດ ເປັນຕົ້ນແມ່ນ ເຈົ້າໜ້າທີ່ປະຕິບັດກົດໝາຍ, ໄອຍະການ ແລະ ຜູ້ພິພາກສາ ທີ່ມີສິດອຳນາດ ແລະ ເຄື່ອງມືພຽງພໍເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ການຕັດສິນລົງໂທດຜູ້ກະທຳຜິດ.

ພ້ອມນັ້ນ, ບັນດາກົດໝາຍ, ລະບຽບການ ແລະ ນະໂຍບາຍ ຕ້ອງຖືກຈັດຕັ້ງປະຕິບັດ ຄຽງຄູ່ກັບການພິຈາລະນາລະອຽດ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ອີງຕາມຫລັກການ ບໍ່ຕັດສິນຜູ້ຖືກເຄາະຮ້າຍເປັນຜູ້ກະທຳຜິດ, ບໍ່ກັກຂັງກັກຕົວ ລວມທັງຫລັກການບໍ່ສ້າງຄວາມເສຍຫາຍ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ນະໂຍບາຍ ເພື່ອສົ່ງເສີມການຄ້າມະນຸດ ເປັນການກະທຳຜິດທາງອາຍາ ແລະ ການກະທຳຜິດທີ່ກ່ຽວຂ້ອງອື່ນໆ.
- ☐ ອົງການປະຕິບັດກົດໝາຍ ແລະ ຍຸຕິທຳ ມີຊັບພະຍາກອນ ແລະ ເຄື່ອງມືພຽງພໍ ເພື່ອດຳເນີນການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ການຕັດສິນຄະດີຄ້າມະນຸດ ແບບມີປະສິດທິພາບ ແລະ ປະສິດທິຜົນ.
- ☐ ການຝຶກອົບຮົມຕໍ່ເນື່ອງ ໃຫ້ແກ່ພາກສ່ວນປະຕິບັດກົດ ໝາຍທີ່ສືບສວນສອບສວນຄະດີຄ້າມະນຸດ ລວມທັງ ເຈົ້າໜ້າທີ່ ຕມ, ເຈົ້າໜ້າທີ່ກວດກາແຮງງານ ແລະ ເຈົ້າໜ້າທີ່ພາກສ່ວນອື່ນທີ່ບໍ່ທັນຮັບຮູ້ບັນຫາ ແລະ ມີສິດການສືບສວນສອບສວນ ແລະ ແກ້ໄຂຄະດີຄ້າມະນຸດ.
- ☐ ການຝຶກອົບຮົມໃຫ້ແກ່ໄອຍະການ ແລະ ຜູ້ພິພາກສາແບບຕໍ່ເນື່ອງ ເພື່ອຮັບມືແກ້ໄຂຄະດີຄ້າມະນຸດ.
- ☐ ການຝຶກອົບຮົມ ໂດຍນຳໃຊ້ຫຼັກການຄຳນຶງເຖິງບົດບາດຍິງ-ຊາຍ, ເອົາຜູ້ເຄາະຮ້າຍເປັນໃຈກາງ, ເປັນມິດຕໍ່ເດັກ ແລະ ຄຳນຶງເຖິງເຫດກະທົບຈິດໃຈຮ້າຍແຮງ ພ້ອມທັງການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ (CSOs) ໂດຍສະເພາະບັນດາອົງການທີ່ເຮັດວຽກເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ມີສ່ວນຮ່ວມໃນຂະບວນການດຳເນີນຄະດີທາງອາຍາ.
- ☐ ຝຶກອົບຮົມ ເພື່ອເພີ່ມທະວີການຮ່ວມມືໃນການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ຕັດສິນຄະດີການຄ້າມະນຸດ ພາຍໃນປະເທດ ແລະ ຂ້າມຊາຍແດນ.
- ☐ ແຕ່ງຕັ້ງໜ່ວຍງານສືບສວນ-ສອບສວນສະເພາະ.
- ☐ ແຕ່ງຕັ້ງໜ່ວຍງານໄອຍະການດຳເນີນຄະດີສະເພາະ.
- ☐ ແຕ່ງຕັ້ງໜ່ວຍງານສະເພາະ ຫຼື ຄະນະສະເພາະກິດເພື່ອດຳເນີນຄະດີ.
- ☐ ແຕ່ງຕັ້ງຜູ້ພິພາກສາສະເພາະ.
- ☐ ມີສານສະເພາະ ເພື່ອດຳເນີນ ແລະ ຕັດສິນຄະດີຄ້າມະນຸດ.

## ຂອບເຂດ

ຜົນໄດ້ຮັບນີ້ລວມມີ:

- ກົດໝາຍ, ນິຕິກຳ ແລະ ນະໂຍບາຍ ເພື່ອກຳນົດການຄ້າມະນຸດ ເປັນການກະທຳຜິດທາງກົດໝາຍອາຍາ ອີງຕາມ ACTIP ແລະ ສົນທິສັນຍາ ສາກົນອື່ນໆ ທີ່ກ່ຽວຂ້ອງ.
- ສ້າງຂີດຄວາມສາມາດໃຫ້ແກ່ອົງການດຳເນີນຄະດີທາງອາຍາ ແລະ ອົງການຍຸຕິທຳອື່ນໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ການຕັດສິນຄະດີການຄ້າມະນຸດ ລວມທັງການຮ່ວມມືກັບຕ່າງປະເທດ.
- ບັນດາປະເທດສະມາຊິກອາຊຽນ ສ້າງ ແລະ/ຫລື ແຕ່ງຕັ້ງ ໜ່ວຍງານສືບສວນ-ສອບສວນ ແລະ ໄອຍະການ ສະເພາະ, ໜ່ວຍງານ ຫລື ຄະນະສະເພາະກິດເພື່ອການດຳເນີນຄະດີ, ຜູ້ພິພາກສາ ແລະ ສານ ເພື່ອດຳເນີນການສືບສວນ-ສອບສວນ, ດຳເນີນ ແລະ ຕັດສິນຄະດີການຄ້າມະນຸດ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ອົງການຂະແໜງຍຸຕິທຳ ມີຄວາມຮູ້, ທັກສະ, ຊັບພະຍາກອນ ແລະ ເຄື່ອງມື ເພື່ອດຳເນີນການສືບສວນ-ສອບສວນ, ດຳເນີນ ແລະ ຕັດສິນຄະດີການຄ້າມະນຸດ ທຸກຮູບແບບ ທັງພາຍໃນ ແລະ ຕ່າງປະເທດ ແບບມີປະສິດທິຜົນ. | ການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

## ຂະບວນການຍຸຕິທຳ

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດສາມາດຕັດສິນໃຈເຂົ້າຮ່ວມຂະບວນການດໍາເນີນຄະດີ ຕໍ່ຜູ້ຄ້າມະນຸດ ໂດຍທີ່ມີຂໍ້ມູນຄົບຖ້ວນ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.1.1.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 42, 77, 85, 92.
- ACTIP ມາດຕາ 16(5).

### ລາຍລະອຽດ ແລະ ຄໍາອະທິບາຍ

ຜູ້ຖືກເຄາະຮ້າຍຈາກ TIP ເປັນຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ສຸດ ຈາກການດໍາເນີນຄະດີຕໍ່ຜູ້ຄ້າມະນຸດທີ່ມີຜົນສໍາເລັດ. ມີຄວາມສໍາຄັນທີ່ຕ້ອງໃຫ້ຂໍ້ມູນ ຜູ້ຖືກເຄາະຮ້າຍ ກ່ຽວກັບ ສິດເຂົາເຈົ້າ, ການຊ່ວຍເຫລືອທີ່ສາມາດເຂົ້າເຖິງໄດ້ ແລະ ມີເຫດການໃດ ເກີດຂຶ້ນ ຍ້ອນສາເຫດໃດ. ການເຄົາລົບສິດ, ຄວາມຕ້ອງການ ແລະ ການຕັດສິນໃຈ ສາມາດສ້າງຜົນປະໂຫຍດໄລຍະຍາວ ໃຫ້ແກ່ຜູ້ຖືກເຄາະຮ້າຍ ພ້ອມທັງຂະບວນການຍຸຕິທໍາ ແລະ ສັງຄົມໂດຍລວມ.

ການສື່ສານລະຫວ່າງ ຜູ້ສືບສວນ-ສອບສວນ, ເຈົ້າໜ້າທີ່ໄອຍະການ ແລະ ຜູ້ພິພາກສາ ກັບ ຜູ້ຖືກເຄາະຮ້າຍ ແລະ ພະຍານ ມີຄວາມສໍາຄັນເປັນຢ່າງຍິ່ງ ພ້ອມທັງການໃຫ້ຂໍ້ມູນຂ່າວສານທີ່ຈໍາເປັນ ໃນພາສາ ຫລື ຮູບແບບທີ່ສາມາດເຂົ້າໃຈໄດ້ງ່າຍ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ສາມາດເຂົ້າໃຈ ກ່ຽວກັບ ລະບົບຍຸຕິທໍາ ແລະ ການຊ່ວຍເຫລືອທີ່ສາມາດເຂົ້າເຖິງໄດ້ ໂດຍແນໃສ່ການຕັດສິນໃຈໂດຍທີ່ມີຂໍ້ມູນຄົບຖ້ວນ. ດ້ວຍວິທີນີ້ ເຈົ້າໜ້າທີ່ສາມາດເກັບກໍາຂໍ້ມູນ ແລະ ເລື່ອງເລົ່າຈາກຜູ້ຖືກເຄາະຮ້າຍທີ່ຄົບຖ້ວນ ແລະ ສອດຄ່ອງຫລາຍກວ່າ.

29

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ອາຊະຍາກໍາຄ້າມະນຸດ, ການລົງໂທດຜູ້ກະທໍາຜິດ ແລະ ການເຂົ້າເຖິງຂະບວນການຍຸຕິທໍາ ແລະ ການຊົດເຊີຍ ຖືກອະທິບາຍຢ່າງຈະແຈ້ງ.
- ☐ ອະທິບາຍລະບົບການດໍາເນີນຄະດີອາຍາ ແບບຈະແຈ້ງ.
- ☐ ຜູ້ຖືກເຄາະຮ້າຍໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ສິດທິ ໃນການເຂົ້າ ຫຼື ບໍ່ເຂົ້າຮ່ວມຂະບວນການດໍາເນີນຄະດີທາງກົດໝາຍ ແລະ ສາມາດຕັດສິນໃຈຖອນຕົວໄດ້ທຸກເວລາ.
- ☐ ສະໜອງຂໍ້ມູນຂ່າວສານ ກ່ຽວກັບ ການຊ່ວຍເຫຼືອດ້ານກົດໝາຍ, ຂະບວນການຂອງສານ, ຄວາມຄາດຫວັງ ແລະ ການດໍາເນີນຄະດີ.
- ☐ ໃຫ້ຂໍ້ມູນຂ່າວສານ ກ່ຽວກັບ ພາລະບົດບາດ ຂອງ ຜູ້ພິພາກສາ, ພະນັກງານ ຂອງ ຊັ້ນສານ, ເຈົ້າໜ້າທີ່ໄອຍະການ, ທະນາຍຄວາມ ແລະ ຄໍາຖາມອື່ນໆ.
- ☐ ໃຫ້ຂໍ້ມູນ ທີ່ຄໍານຶງເຖິງບົດບາດຍິງຊາຍ, ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ທີ່ທຸກພາກສ່ວນຂອງສັງຄົມ ສາມາດເຂົ້າເຖິງໄດ້ ລວມທັງກຸ່ມດ້ອຍໂອກາດ ເປັນຕົ້ນແມ່ນຜູ້ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ☐ ການໃຫ້ຄວາມຍິນຍອມແບບມີຂໍ້ມູນຄົບຖ້ວນ ຫຼື ບັນທຶກສຽງ ຫຼື ຍິນຍອມແບບຈະແຈ້ງ ສໍາລັບຄົນທີ່ອາຍຸ ຕໍ່າກວ່າ 18 ປີ ແລະ ຈາກຜູ້ປົກຄອງ ຫຼື ຜູ້ປົກປ້ອງແບບສະໝັກໃຈ.
- ☐ ເຄົາລົບສິດຂອງຜູ້ຖືກເຄາະຮ້າຍ ໃນການປະຕິເສດການຊ່ວຍເຫຼືອໄດ້ທຸກເວລາ
- ☐ ບໍ່ນໍາໃຊ້ເງື່ອນໄຂໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອແບບພຽງພໍເໝາະສົມ ທີ່ເປັນພາກບັງຄັບທາງກົດໝາຍ ເພື່ອໃຫ້ຜູ້ຖືກເຄາະຮ້າຍມີສ່ວນຮ່ວມໃນຂະບວນການຍຸຕິທໍາ.
- ☐ ແຕ່ງຕັ້ງຜູ້ໃຫ້ຄໍາປຶກສາ ແລະ ການຊ່ວຍເຫຼືອດ້ານກົດໝາຍ ຫຼື ຜູ້ສະໜັບສະໜູນອື່ນໆ.
- ☐ ຖືກເຄາະຮ້າຍ ບໍ່ຖືກຂົ່ມຂູ່ ວ່າຈະຖືກດໍາເນີນຄະດີທາງອາຍາ ຖ້າປະຕິເສດການຮ່ວມມືກັບຂະບວນການດໍາເນີນຄະດີ.

# ຂະບວນການຍຸຕິທຳ 29

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີຂໍ້ກຳນົດ ເພື່ອອຳນວຍໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ສາມາດຕັດສິນໃຈ.

- ອະທິບາຍ ກ່ຽວກັບ ລະບົບຍຸຕິທຳຢ່າງຈະແຈ້ງ ໃຫ້ຜູ້ຖືກເຄາະຮ້າຍ ລວມທັງຈຸດຢືນທາງດ້ານກົດໝາຍ, ສິດ, ທາງເລືອກ, ການບໍລິການທີ່ມີ ແລະ ຂະບວນການດຳເນີນຄະດີ. ຂໍ້ມູນຂ່າວສານ ລວມມີ (ແຕ່ບໍ່ຈຳກັດພຽງແຕ່) ຂໍ້ມູນການລົງໂທດຜູ້ກະທຳຜິດ, ການຊົດເຊີຍທີ່ມີ, ຂະບວນການຍື່ນເອກະສານ, ຄວາມເປັນໄປໄດ້ ກ່ຽວກັບ ການຕັດສິນລົງໂທດ ຂອງສານ ແລະ ໄລຍະເວລາຂອງການດຳເນີນຄະດີໃນຊັ້ນສານ.
- ການໃຫ້ຂໍ້ມູນຂ່າວສານ ທີ່ຄຳນຶງເຖິງບົດບາດຍິງຊາຍ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃຫ້ແກ່ ຜູ້ຖືກເຄາະຮ້າຍ ແລະ ພະຍານ ກ່ຽວກັບ ຂະບວນການດຳເນີນຄະດີທາງອາຍາທັງໝົດ ລວມທັງ ຄວາມຄາດຫວັງໃນສານ, ການດຳເນີນຄະດີ, ແລະ ຄຳຖາມທີ່ອາດຍົກຂຶ້ນ. ສະໜອງໃນຫລາຍພາສາ, ຮູບແບບ ຫລື ພາສາໃບ້ ທີ່ທຸກພາກສ່ວນຂອງສັງຄົມສາມາດເຂົ້າເຖິງໄດ້ ເປັນຕົ້ນແມ່ນກຸ່ມດ້ອຍໂອກາດ ກໍຄືຜູ້ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.
- ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫລືອດ້ານກົດໝາຍ ເພື່ອເອື້ອອຳນວຍໃຫ້ສາມາດຕັດສິນໃຈ ໂດຍມີຂໍ້ມູນຄົບຖ້ວນ ກ່ຽວກັບ ການມີສ່ວນຮ່ວມໃນການດຳເນີນຄະດີຕໍ່ຜູ້ຄ້າມະນຸດ.
- ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫລືອ ແລະ ການປົກປ້ອງ ທີ່ພຽງພໍ ທີ່ເປັນພາກບັງຄັບທາງກົດໝາຍ ໃນໄລຍະການມີສ່ວນຮ່ວມໃນການດຳເນີນຄະດີທາງກົດໝາຍ. ການໃຫ້ການຊ່ວຍເຫລືອ ໃຫ້ແກ່ ຜູ້ຖືກເຄາະຮ້າຍ ຫລື ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ບໍ່ຖືກນຳໃຊ້ເປັນເງື່ອນໄຂ ໃຫ້ເຂົາເຈົ້າມີສ່ວນຮ່ວມໃນຂະບວນການຍຸຕິທຳ.
- ການໃຫ້ຄວາມຍິນຍອມແບບມີຂໍ້ມູນຄົບຖ້ວນ ຫລື ບັນທຶກສຽງ ຫລື ຍິນຍອມແບບຈະແຈ້ງ ສຳລັບຄົນທີ່ອາຍຸ ຕໍ່າກວ່າ 18 ປີ ແລະ ຈາກຜູ້ປົກຄອງ ຫລື ຜູ້ປົກປ້ອງ. ເຄົາລົບສິດຂອງຜູ້ຖືກເຄາະຮ້າຍ ໃນການປະຕິເສດການຊ່ວຍເຫລືອໄດ້ທຸກເວລາ
- ເດັກນ້ອຍ ມີຄວາມສ່ຽງ ທີ່ຈະຖືກກະທົບ ຫລື ການຕົກເປັນຜູ້ຖືກເຄາະຮ້າຍຊ້ຳຊອ້ນ ເວລາທີ່ພົວພັນກັບລະບົບຍຸຕິທຳ ແລະ ຕ້ອງມີການພົວພັນຮັບມືໂດຍທີ່ພິຈາລະນາອາຍຸ, ວັນທະນາທຳ ແລະ ເພດແບບເໝາະສົມ.
- ແຕ່ງຕັ້ງ ຜູ້ໃຫ້ຄຳປຶກສາ ຫລື ຊ່ວຍເຫລືອດ້ານກົດໝາຍ ຫລື ຜູ້ສະໜັບສະໜູນອື່ນໆ ເພື່ອໃຫ້ຂໍ້ມູນໃຫ້ແກ່ຜູ້ຖືກເຄາະຮ້າຍ ພ້ອມທັງຕິດຕາມ ເວລາທີ່ຕ້ອງຂຶ້ນສານ ໃນໄລຍະການມີສ່ວນຮ່ວມກັບຂະບວນການຍຸຕິທຳທັງໝົດ. ບໍ່ໃຫ້ນຳໃຊ້ ການແຕ່ງຕັ້ງຜູ້ໃຫ້ຄຳປຶກສາດ້ານກົດໝາຍ ເປັນເງື່ອນໄຂບັງຄັບໃຫ້ຜູ້ຖືກເຄາະຮ້າຍ ຫລື ພະຍານ ຮ່ວມມືກັບເຈົ້າໜ້າທີ່ ຫລື ຂະບວນການຍຸຕິທຳ.
- ຜູ້ຖືກເຄາະຮ້າຍ ບໍ່ຖືກຂົ່ມຂູ່ ດ້ວຍການດຳເນີນຄະດີທາງອາຍາ ຖ້າປະຕິເສດການຮ່ວມມືກັບຂະບວນການດ້ານກົດໝາຍ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຈຳນວນຜູ້ຖືກເຄາະຮ້າຍ ທີ່ມີສ່ວນຮ່ວມໃນການດຳເນີນຄະດີຕໍ່ຜູ້ຄ້າມະນຸດເພີ່ມຂຶ້ນ. | ການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

30

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍ ສາມາດຢູ່ປະເທດປາຍທາງໄດ້ ໃນໄລຍະການຟື້ນຟູ ແລະ ເຂົ້າຮ່ວມຂະບວນການດຳເນີນຄະດີ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 2.5.13, 3.1.3, 5.3.8.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 21, 54, 92.
- ACTIP ມາດຕາ 14(4), 16(5).

## ລາຍລະອຽດ ແລະ ຄໍາອະທິບາຍ

ປະເທດສະມາຊິກອາຊຽນ ມີພັນທະ ພາຍໃຕ້ ACTIP ໃນການຮັບຮອງນິຕິກໍາ ຫລື ມາດຕະການອື່ນທີ່ເໝາະສົມ ເພື່ອອະນຸຍາດໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ສາມາດຢູ່ໃນປະເທດຂອງຕົນ, ບໍ່ວ່າຈະເປັນຊົ່ວຄາວ ຫລື ຖາວອນ, ຈົນກວ່າຄະດີຂອງເຂົາເຈົ້າຖືກແກ້ໄຂ ຫລື ໄດ້ຮັບການຊົດເຊີຍຕາມການຮຽກຮ້ອງ. ປະເທດສະມາຊິກອາຊຽນ ມີພັນທະ ພິຈາລະນາປັດໄຈດ້ານມະນຸດສະທຳ ແລະ ຄວາມເປັນອົກເຫັນໃຈ ເພື່ອບັນລຸຈຸດປະສົງດັ່ງກ່າວ. ປະເທດເຈົ້າພາບ ສາມາດຊຸກຍູ້ໃຫ້ຜູ້ຖືກເຄາະຮ້າຍ ຢູ່ ພາຍໃນຂົງເຂດປະເທດຂອງຕົນ ເພື່ອຂຶ້ນສານ ຫລື ຮ່ວມມືກັບການດຳເນີນຄະດີຜູ້ຄ້າມະນຸດ ແຕ່ຕ້ອງຄໍານຶງເຖິງຄວາມປອດໄພ.

ຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບອະນຸຍາດໃຫ້ພັກເຊົາຊົ່ວຄາວ ຫລື ຖາວອນ ບໍ່ວ່າຈະເຂົ້າຮ່ວມ ຫລື ໃຫ້ຫລັກຖານໃນການດຳເນີນຄະດີກໍຕາມ. ຜູ້ຖືກເຄາະຮ້າຍ ຈະບໍ່ຖືກລົງໂທດ ຖ້າຫາກໄດ້ລະເມີດກົດໝາຍຄົນເຂົ້າ-ອອກເມືອງ ຂອງປະເທດເຈົ້າພາບ ຍ້ອນສາເຫດທີ່ຖືກຄ້າມະນຸດ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ມີກົດໝາຍ/ນະໂຍບາຍ ຫຼື ຂັ້ນຕອນເພື່ອຮັບປະກັນຜູ້ຖືເຄາະຮ້າຍ ຈາກ TIP ແລະ ພະຍານບໍ່ຖືກບັງຄັງໃຫ້ອອກ ຫຼື ຢູ່ປະເທດປາຍທາງ ເພື່ອເຂົ້າຮ່ວມການດຳເນີນຄະດີ
- ☐ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ພະຍານ ໄດ້ຮັບສະຖານະດ້ານກົດໝາຍ ແລະ ເອກະສານ ເພື່ອຢູ່ໃນປະເທດປາຍທາງ ໃນໄລຍະຟື້ນຟູ ແລະ ດຳເນີນຄະດີທາງກົດໝາຍ.
- ☐ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ພະຍານ ໄດ້ຮັບການປົກປ້ອງເພື່ອຮັກສາຄວາມປອດໄພຈາກການທຳຮ້າຍຮ່າງກາຍ ແລະ ການຂົ່ມຂູ່.
- ☐ ໃຫ້ໄລຍະການຟື້ນຟູ ແລະ ຄວນເປັນເງື່ອນໄຂກ່ຽວຂ້ອງກັບເວລາການດຳເນີນຄະດີ.
- ☐ ຜູ້ຖືກເຄາະຮ້າຍ ເຂົ້າຮ່ວມການດຳເນີນຄະດີ ເມື່ອມີຄວາມພ້ອມ.
- ☐ ການດຳເນີນຄະດີຈະຖືກໂຈະ ຊົ່ວຄາວ ຖ້າຫາກມີຄວາມຈຳເປັນ.
- ☐ ຜູ້ຖືກເຄາະຮ້າຍ ບໍ່ຖືກລົງໂທດ ສໍາລັບໄລຍະທີ່ຢູ່ໃນປະເທດປາຍທາງແບບຜິດກົດໝາຍ ຍ້ອນສາເຫດທີ່ຖືກຄ້າມະນຸດ.

# ຂະບວນການຍຸຕິທຳ 30

## ຂອບເຂດ

ນຳໃຊ້ວິທີເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ຄຳນຶງເຖິງບົດບາດຍິງຊາຍ ແລະ ເປັນມິດຕໍ່ເດັກນ້ອຍ ເພື່ອຮັບປະກັນ:

- ການຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ເພື່ອປັບສະຖານະພາບທາງກົດໝາຍ, ບໍ່ວ່າຈະຊົ່ວຄາວ ຫລື ຖາວອນ, ຕາມຄວາມເໝາະສົມ.
- ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ພະຍານໄດ້ຮັບການປົກປ້ອງ ແລະ ຮັບປະກັນຄວາມປອດໄພຈາກການທຳຮ້າຍຮ່າງກາຍ ຫລື ການຂົ່ມຂູ່.
- ໄລຍະການຟື້ນຟູ ບໍ່ນຳໃຊ້ເປັນເງື່ອນໄຂໃນການດຳເນີນຄະດີ, ຄວນດຳເນີນຄະດີທາງກົດໝາຍ ເວລາທີ່ຜູ້ຖືກເຄາະຮ້າຍມີຄວາມພ້ອມ.
- ສານສາມາດສັ່ງໂຈະ ການດຳເນີນຄະດີທາງອາຍາ ຖ້າຜູ້ຖືກເຄາະຮ້າຍ ຫລື ພະຍານ ບໍ່ມີຄວາມພ້ອມດ້ານສຸຂະພາບ ຫລື ຈິດໃຈທີ່ຈະເຂົ້າຮ່ວມການດຳເນີນຄະດີ ຈົນກວ່າຊ່ຽວຊານສະເພາະດ້ານ ສາມາດຢັ້ງຢືນເປັນທາງການ ວ່າມີຄວາມພ້ອມທີ່ຈະສືບຕໍ່ດຳເນີນຄະດີ.
- ປະເທດສະມາຊິກອາຊຽນ ພັດທະນາ SOPs ຫລື ຄູ່ມື ເພື່ອອຳນວຍໃຫ້ຜູ້ຖືກເຄາະຮ້າຍຈາກ TIP ແລະ ພະຍານສາມາດປັບສະຖານະພາບດ້ານກົດໝາຍ ແລະ ຮັບເອກະສານທາງການ ເພື່ອຢູ່ໃນປະເທດປາຍທາງໃນໄລຍະການດຳເນີນຄະດີ.
- ຜູ້ຖືກເຄາະຮ້າຍ ຫລື ຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ໄດ້ຮັບສະຖານະທາງກົດໝາຍ ແລະ ປົກປ້ອງຈາກການກັກຕົວ ແລະ ເນລະເທດ ຫລື ບໍ່ຖືກປັບໄໝ, ກັກຂັງ, ຫລື ເນລະເທດສຳລັບການລະເມີດກົດໝາຍ ວ່າດ້ວຍການຄຸ້ມຄອງຄົນເຂົ້າອອກເມືອງ ເປັນຕົ້ນແມ່ນການຢູ່ເກີນກຳນົດ, ສະຖານະຜິດກົດໝາຍ, ບໍ່ຈ່າຍຄ່າທຳນຽມ ຕມ, ຫລື ເຮັດວຽກຜິດກົດໝາຍ ຢູ່ ປະເທດປາຍທາງ ຍ້ອນຖືກຄ້າມະນຸດ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ຖືກປັບປຸງ ເພື່ອເຊື່ອມສານຂໍ້ກຳນົດໃນການປົກປ້ອງ ຜູ້ຖືກເຄາະຮ້າຍ ແລະ ເອື້ອອຳນວຍໃຫ້ສາມາດຢູ່ ແລະ ຟື້ນຟູ ຢູ່ປະເທດປາຍທາງ. | ກົດໝາຍ ແລະ ຂໍ້ກຳນົດ ສະໜອງກົດໄກດ້ານກົດໝາຍ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ສາມາດຢູ່ໃນປະເທດປາຍທາງ ແລະ ຈັດຕັ້ງປະຕິບັດສອດຄ່ອງກັບ ACTIP. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

ຖືກເຄາະຮ້າຍຈາກ TIP ໄດ້ຮັບການບໍລິການທີ່ກ່ຽວຂ້ອງ ໃນໄລຍະການມີເຂົ້າຮ່ວມຂະບວນການດຳເນີນຄະດີທາງອາຍາ.

**ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ**

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.1.5.
- ຄູ່ມື ການຄຳນຶງເຖິງບົດບາດຍິງຊາຍ ເວລາພົວພັນກັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ແມ່ນຜູ້ຍິງ ພາກທີ 3.4.6.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 93.
- ACTIP ມາດຕາ 14(10), (13), 16(5).
- ແຜນແມ່ບົດອາຊຽນ ວ່າດ້ວຍການເອື້ອອຳນວຍ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 3

**ລາຍລະອຽດ ແລະ ຄຳອະທິບາຍ**

ກົດໝາຍ, ລະບຽບການ ແລະ ນະໂຍບາຍ ຖືກຈັດຕັ້ງປະຕິບັດເພື່ອໃຫ້ບໍລິການໃຫ້ແກ່ ຜູ້ຖືກເຄາະຮ້າຍ ຈາກ TIP ໃນໄລຍະການມີສ່ວນຮ່ວມກັບຂະບວນການດຳເນີນຄະດີທາງອາຍາ. ການບໍລະການລວມມີ (ແຕ່ບໍ່ຈຳກັດພຽງແຕ່): ການສະໜອງທີ່ພັກອາໄສ, ການໃຫ້ຄຳປຶກສາ, ແລະ ຂໍ້ມູນຂ່າວສານກ່ຽວກັບ ສິດທິ ຂອງເຂົາເຈົ້າ ໃນຮູບແບບ ແລະ ພາສາທີ່ສາມາດເຂົ້າໃຈໄດ້ງ່າຍ, ດ້ານການແພດ, ຈິດຕະສາດ, ແລະ ວັດຖຸປັດໃຈ, ການຈ້າງງານ, ການສຶກສາ ແລະ ໂອກາດໃນການຝຶກອົບຮົມວິຊາຊີບ. ນອກນັ້ນ, ຜູ້ຖືກເຄາະຮ້າຍກໍມີສິດໃນການເຂົ້າເຖິງການບໍລິການດ້ານກົດໝາຍແບບບໍ່ມີຄ່າໃຊ້ຈ່າຍໃນໄລຍະດຳເນີນຄະດີ, ລວມທັງການຮັບເອົາຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ.

ການຮ່ວມມື ລະຫວ່າງ ອົງການຈັດຕັ້ງພາກລັດ ແລະ CSOs ມີຄວາມສຳຄັນເປັນຢ່າງຍິ່ງ ເພື່ອຮັບປະກັນຜູ້ຖືກເຄາະຮ້າຍ ໄດ້ຮັບການເບິ່ງແຍງດູແລ ແລະ ຊ່ວຍເຫລືອແບບເຕັມສ່ວນ ອີງຕາມ ACTIP.



**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ສະໜອງການບໍລິການທີ່ຫຼາກຫຼາຍ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ TIP ລວມທັງການຊ່ວຍເຫຼືອດ້ານກົດໝາຍແບບບໍ່ມີຄ່າໃຊ້ຈ່າຍ ຊຶ່ງບໍ່ໃຊ້ເປັນເງື່ອນໄຂໃນການເຂົ້າຮ່ວມຂະບວນການດຳເນີນຄະດີທາງອາຍາ.
- ☐ ມີເຄືອຂ່າຍອົງການຈັດຕັ້ງພາກລັດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຫຼື ອົງການຈັດຕັ້ງທາງສັງຄົມໃຫ້ການຊ່ວຍເຫຼືອດ້ານກົດໝາຍ ແລະ ສາມາດເຂົ້າເຖິງໄດ້.
- ☐ ຜູ້ໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອດ້ານກົດໝາຍ ເປັນມືອາຊີບ ແລະ ມີປະສົບການ.
- ☐ ການໃຫ້ຄຳແນະນຳທາງກົດໝາຍ ຕ້ອງສື່ສານຢ່າງຈະແຈ້ງ ແລະ ສາມາດເຂົ້າເຖິງໄດ້ດ້ວຍຫຼາຍຮູບແບບ ແລະ ພາສາ ທີ່ຜູ້ຖືກເຄາະຮ້າຍເຂົ້າໃຈ.
- ☐ ແຕ່ງຕັ້ງຜູ້ປົກປ້ອງ ໃຫ້ຜູ້ຖືກເຄາະຮ້າຍເດັກນ້ອຍ ເວລາທີ່ບໍ່ສາມາດຕິດຕໍ່ຜູ້ປົກຄອງ ຫຼື ບໍ່ສາມາດເບິ່ງແຍງດູແລເດັກ.

**ຂອບເຂດ**

ຜົນໄດ້ຮັບນີ້ ລວມມີຂໍ້ກຳນົດດັ່ງຕໍ່ໄປນີ້:

- ໃຫ້ການຊ່ວຍເຫລືອ ແລະ ສະໜັບສະໜູນດ້ານກົດໝາຍທີ່ບໍ່ເສຍຄ່າໃຊ້ຈ່າຍ ແລະ ສາມາດເຂົ້າເຖິງໄດ້ ສຳລັບຜູ້ຖືກເຄາະຮ້າຍ ຈາກ TIP ອີງຕາມກົດໝາຍ ແລະ ນະໂຍບາຍ ແຫ່ງຊາດ ຂອງແຕ່ລະປະເທດສະມາຊິກອາຊຽນ. ຖ້າການຊ່ວຍເຫລືອດ້ານກົດໝາຍສະໜອງໂດຍພາກລັດ ບໍ່ມີ, ຕ້ອງແຕ່ງຕັ້ງທະນາຍຄວາມໂດຍໃຊ້ທາງເລືອກອື່ນ ເຊັ່ນແບບ ໂປຣໂບໂນ ຫລື ໃຫ້ CSO ເປັນຜູ້ສະໜອງ.
- ສ້າງ ຫລື ຍົກລະດັບເຄືອຂ່າຍ ວິຊາຊີບຊ່ວຍເຫລືອດ້ານກົດໝາຍ ແລະ ອົງການສະເພາະ ເພື່ອຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ແລະ ຄົນທີ່ມີຄວາມພິການທີ່ບໍ່ມີເງິນວ່າຈ້າງທະນາຍຄວາມ ຫລື ຜູ້ຕາງໜ້າທາງກົດໝາຍ.
- ສະໜອງຜູ້ໃຫ້ຄຳປຶກສາດ້ານກົດໝາຍທີ່ເປັນມືອາຊີບ ແລະ ມີຄວາມຊ່ຽວຊານດ້ານໃຫ້ຄຳແນະນຳໃຫ້ແກ່ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ເປັນຜູ້ຕາງໜ້າແບບມີປະສິດທິຜົນ.
- ການສື່ສານ ຄຳແນະນຳທາງກົດໝາຍ ຢ່າງຈະແຈ້ງ ໂດຍທີ່ນຳໃຊ້ນາຍແປພາສາ ຖ້າເໝາະສົມ ໃນພາສາ ຫລື ພາສາໄບ້ ທີ່ທຸກພາກສ່ວນຂອງສັງຄົມສາມາດເຂົ້າເຖິງໄດ້ ລວມທັງກຸ່ມດ້ອຍໂອກາດ ເຊັ່ນ ຜູ້ຍິງ, ເດັກນ້ອຍ, ແລະ ຄົນທີ່ມີຄວາມພິການ.
- ຮັບປະກັນຂັ້ນຕອນດຳເນີນຄະດີ ແລະ ສານທີ່ເປັນມິດຕໍ່ເດັກ ໂດຍທີ່ມີຜູ້ປົກປ້ອງທາງກົດໝາຍ ທີ່ມີຄຸນວຸດທິໄດ້ຮັບການແຕ່ງຕັ້ງ ເພື່ອເປັນຜູ້ຕາງໜ້າຜູ້ຖືກເຄາະຮ້າຍເດັກນ້ອຍ ຖ້າບໍ່ມີຜູ້ປົກຄອງເບິ່ງແຍງດູແລ, ແລະ ເພື່ອສະກັດບໍ່ໃຫ້ມີເຫດກະທົບຈິດໃຈຮ້າຍແຮງຊ້ຳຊ້ອນ ແລະ ປົກປ້ອງສິດຜົນປະໂຫຍດຂອງເຂົາເຈົ້າໃນການດຳເນີນຄະດີ.
- ຮັບປະກັນການໃຫ້ບໍລິການ ແບບບໍ່ນຳໃຊ້ເປັນເງື່ອນໄຂບັງຄັບໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ຫລື ພະຍານ ຮ່ວມມືກັບເຈົ້າໜ້າທີ່ ຫລື ເຂົ້າຮ່ວມຂະບວນການດຳເນີນຄະດີ.
- ນຳໃຊ້ວິທີການຄຳນຶງເຖິງເຫດກະທົບຈິດໃຈຮ້າຍແຮງ ແລະ ຫລັກການບໍ່ສ້າງຄວາມເສຍຫາຍ ໃນທຸກຂັ້ນຕອນຂອງການດຳເນີນຄະດີອາຍາ.
- ຮັບປະກັນການຮັກສາຄວາມເປັນລັບ ຂອງ ຄະດີຄ້າມະນຸດ (ເຊັ່ນ: ສະໜອງຫ້ອງທີ່ເປັນສ່ວນຕົວ ສຳລັບການສຳພາດ, ການສືບສວນສອບສວນ/ການໄຕ່ສວນ).

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຈຳນວນ ຜູ້ຖືກເຄາະຮ້າຍ ທີ່ເຂົ້າຮ່ວມການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ແບບສະໝັກໃຈ ເພີ່ມຂຶ້ນ. | ການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ອີງຕາມ ACTIP, ເຮັດໃຫ້ມີການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ຜູ້ຄ້າມະນຸດ ເພີ່ມຂຶ້ນ ພ້ອມທັງສະກັດກັ້ນການກະທຳຜິດເພີ່ມເຕີມ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

32

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ທີ່ກັບບ້ານ ແລະ ເຊື່ອມໂຍງຄືນສູ່ສັງຄົມ ໄດ້ຮັບການສະໜັບສະໜູນ ເພື່ອເຂົ້າຮ່ວມຂະບວນການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ຜູ້ທີ່ຄ້າເຂົາເຈົ້າ ແບບຂ້າມຊາຍແດນ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.1.4.
- ACTIP ມາດຕາ 15(1), (4), (7), 16(5).

## ລາຍລະອຽດ ແລະ ຄຳອະທິບາຍ

ປະເທດສະມາຊິກ ອາຊຽນ ມີພັນທະ, ບົນພື້ນຖານ ຂອງ ACTIP, ໃນການອຳນວຍຄວາມສະດວກໃຫ້ແກ່ຜູ້ຖືກເຄາະຮ້າຍເພື່ອກັບບ້ານ ໂດຍບໍ່ໃຫ້ມີຄວາມຊັກຊ້າ ແລະ ຮັບປະກັນຄວາມປອດໄພ ຂອງພົນລະເມືອງ ຫລື ຜູ້ທີ່ພັກເຊົາຖາວອນ. ປະເທດສະມາຊິກອາຊຽນ ມີພັນທະ ໃນການອອກເອກະສານເດີນທາງ ໃຫ້ແກ່ ຜູ້ຖືກເຄາະຮ້າຍ ພ້ອມທັງອະນຸມັດໃຫ້ສາມາດເດີນທາງອອກ ແລະ ເຂົ້າປະເທດໄດ້.

ໃນກໍລະນີທີ່ມີການສືບສວນ-ສອບສວນ ແລະ ດຳເນີນຄະດີແບບຂ້າມຊາຍແດນ ແລະ ຕ້ອງເດີນທາງໄປຕົວຈິງ, ຕ້ອງພິຈາລະນາ ຄ່າໃຊ້ຈ່າຍໃນການເດີນທາງ, ອາຫານ ແລະ ທີ່ພັກອາໄສ, ຄວາມປອດໄພ ແລະ ຄວາມສະດວກ ຂອງຜູ້ຖືກເຄາະຮ້າຍ ເພື່ອສະໜັບສະໜູນໃຫ້ສາມາດເຂົ້າຮ່ວມຂະບວນການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ຜູ້ຄ້າມະນຸດ. ແຕ່ຕ້ອງຂຶ້ນກັບ ສັນຍາ ຊ່ວຍເຫລືອສອງຝ່າຍ ຫລື ຫລາຍຝ່າຍ ດ້ານກົດໝາຍ ຫລື ກົນໄກການຮ່ວມມື ດ້ານຄົນເຂົ້າອອກເມືອງ ຊຶ່ງອາດໃຫ້ສິດ ແລະ ສິດທິພິເສດຫລາຍກວ່າໃຫ້ຜູ້ຖືກເຄາະຮ້າຍ.

ຖ້າຫາກການເຂົ້າຮ່ວມດ້ວຍຕົວຈິງບໍ່ມີຄວາມເປັນໄປໄດ້ ຕ້ອງໃຊ້ທາງເລືອກອື່ນ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ສາມາດສະໜອງຫລັກຖານ.

### ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ມີກົນໄກ ຫຼື ຂັ້ນຕອນເພື່ອໃຫ້ຜູ້ຖືກເຄາະຮ້າຍທີ່ກັບບ້ານ ສາມາດເຂົ້າຮ່ວມການສືບສວນ-ສອບສວນ ແລະ ການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ໃນກໍລະນີທີ່ປອດໄພ.
- ☐ ມີວິທີການຂຶ້ນສານ ແລະ ໃຫ້ການແບບທາງໄກ ເພື່ອສະ ໜັບສະໜູນຜູ້ຖືກເຄາະຮ້າຍເຂົ້າຮ່ວມຈາກສະຖານທີ່ຕົ້ນທາງ.
- ☐ ຜູ້ຖືກເຄາະຮ້າຍ ໄດ້ຮັບການຊ່ວຍເຫຼືອ ເພື່ອຂຶ້ນໃຫ້ການນອກສານ ຫຼື ບັນທຶກວິດີໂອ ໃຫ້ການ ລ່ວງໜ້າ ເພື່ອນຳໃຊ້ເປັນຫຼັກຖານໃນການສືບສວນ-ສອບສວນ ແລະ ການດຳເນີນຄະດີຕໍ່ຜູ້ຄ້າມະນຸດ.
- ☐ ມີກົນໄກການຮ່ວມມື ກັບປະເທດຕົ້ນທາງ ເພື່ອຮັບປະກັນການເດີນທາງແບບປອດໄພ, ການຊ່ວຍເຫຼືອດ້ານອາຫານ ແລະ ທີ່ພັກອາໄສ ໃຫ້ຜູ້ຖືກເຄາະຮ້າຍ ລວມທັງຜູ້ຕິດຕາມ ໃນໄລຍະການດຳເນີນຄະດີ ຖ້າຈຳເປັນ.
- ☐ ກົນໄກການຮ່ວມມືລະຫວ່າງ ປະເທດ ຕ້ອງມີລັກສະນະສະດວກສະບາຍ ແລະ ບໍ່ຕ້ອງເສຍຄ່າໃຊ້ຈ່າຍສຳລັບຜູ້ຖືກເຄາະຮ້າຍ.

# ຂະບວນການຍຸຕິທຳ 32

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີການປະສານງານ ແລະ ການຮ່ວມມື ລະຫວ່າງປະເທດສະມາຊິກອາຊຽນ ເພື່ອ:

- ສ້າງກົນໄກການຮ່ວມມື ລະຫວ່າງ ປະເທດປາຍທາງ ແລະ ຕົ້ນທາງ ເພື່ອຮັບປະກັນຄວາມປອດໄພ ຂອງ ຜູ້ຖືກເຄາະຮ້າຍໃນການເດີນທາງ ແລະ ມີຜູ້ຕິດຕາມ ເພື່ອໄປ ໃຫ້ການ ໂດຍທີ່ບໍ່ຕ້ອງເສຍຄ່າໃຊ້ຈ່າຍ ແລະ ຫລຸດຜ່ອນຄວາມບໍ່ສະດວກ.
- ສະໜອງ ກົນໄກການຮ່ວມມື ລະຫວ່າງ ປະເທດສະມາຊິກອາຊຽນ ແລະ ອົງການກ່ຽວຂ້ອງ ເພື່ອອຳນວຍໃຫ້ຜູ້ຖືກເຄາະຮ້າຍ ສາມາດເຂົ້າຮ່ວມການສືບສວນ-ສອບສວນ ແລະ ການດຳເນີນຄະດີຜູ້ຄ້າມະນຸດ.
- ສະໜອງວິທີການຂຶ້ນສານ ແບບບທາງໄກ, ການໃຫ້ການແບບອອນລາຍ ຫລື ບັນທຶກພາບ ຈາກສະຖານທີ່ຕົ້ນທາງ ອີງຕາມກົດໝາຍ ແຫ່ງຊາດ.
- ມີທາງເລືອກໃນການບັນທຶກວິດີໂອລ່ວງໜ້າ ໃຫ້ແກ່ຜູ້ຖືກເຄາະຮ້າຍ ເພື່ອເປັນທາງເລືອກໃນການສະໜອງຫລັກຖານ.
- ມີທາງເລືອກໃນການສະໜອງຫລັກຖານ ກໍຄືການໃຫ້ຄໍາໃຫ້ການນອກສານ.
- ອະນຸຍາໃຫ້ຜູ້ຊ່ວຍເຫລືອ ຕິດຕາມຜູ້ຖືກເຄາະຮ້າຍ ແລະ/ຫລື ຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ໃນໄລຍະການສືບ-ສວນສອບສວນ, ດຳເນີນຄະດີ ແລະ ຕັດສິນຄະດີ.

ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ເຈົ້າໜ້າທີ່ທາງກົດໝາຍ ຮັບຮູ້ ວ່າຄະດີການຄ້າມະນຸດ ອາດບໍ່ຈຳເປັນຕ້ອງເອື່ອຍອີງ ຄຳໃຫ້ການຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ໃນການສືບສວນສອບສວນ, ການດຳເນີນ ແລະ ຕັດສິນຄະດີ ຕໍ່ກັບຜູ້ຄ້າມະນຸດ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຈຳນວນ ຜູ້ຖືກເຄາະຮ້າຍ ທີ່ເຂົ້າຮ່ວມການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ແບບສະໝັກໃຈ ເພີ່ມຂຶ້ນ. | ການສືບສວນສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ເລືອກເຂົ້າຮ່ວມການສືບສວນ-ສອບສວນ ແລະ ການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ເຂົາເຈົ້າ ໄດ້ຮັບຂໍ້ມູນ ກ່ຽວກັບ ຄວາມຄືບໜ້າຂອງຄະດີ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.1.1.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 42, 77, 85, 92.
- ACTIP ມາດຕາ 16(5), 9.

## ລາຍລະອຽດ ແລະ ຄຳອະທິບາຍ

ເພື່ອສະໜອງ ຂໍ້ມູນ ກ່ຽວກັບ ຄວາມຄືບໜ້າ ຂອງ ຄະດີ ໃຫ້ແກ່ຜູ້ຖືກເຄາະຮ້າຍແບບທັນເວລາ ແລະ ຖືກຕ້ອງຊັດເຈນ, ມີຄວາມຈຳເປັນທີ່ບັນດາປະເທດສະມາຊິກອາຊຽນ ຕ້ອງສ້າງ ແລະ ນຳໃຊ້ຊ່ອງທາງການຊື່ສານ ແລະ ປະສານງານ ທີ່ມີຢູ່ປະຈຸບັນ ລະຫວ່າງ ອົງການຈັດຕັ້ງພາກລັດ ທີ່ກ່ຽວຂ້ອງ ໃນລະດັບຊາດ, ຫລື ລະຫວ່າງ ອົງການທີ່ມີໜ້າທີ່ຮັບຜິດຊອບ ລະຫວ່າງແຕ່ລະປະເທດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນຂໍ້ມູນຂ່າວສານ ແລລ ປອດໄພ ແລະ ວ່ອງໄວ ພ້ອມທັງ ການສະໜອງຂໍ້ມູນລ່າສຸດ ກ່ຽວກັບຄວາມຄືບໜ້າ ໃນການສືບສວນ-ສອບສວນ ຫລື ດຳເນີນຄະດີ.

ACTIP ກຳນົດໃຫ້ປະເທດສະມາຊິກ ສະໜອງຂໍ້ມູນຂ່າວສານ ກ່ຽວກັບ ການປົກປ້ອງ, ຊ່ວຍເຫລືອ ແລະ ສະໜັບສະໜູນ ໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ສິດອື່ນໆທີ່ຈະໄດ້ຮັບ ອີງຕາມກົດໝາຍພາຍໃນ ແລະ ສົນທິສັນຍາ. ຂໍ້ມູນດັ່ງກ່າວ ໂດຍສະເພາະ ແມ່ນສິດທິທາງກົດໝາຍ ຄວນສະໜອງໃນພາສາ ແລະ ຮູບແບບທີ່ຜູ້ຖືກເຄາະຮ້າຍສາມາດເຂົ້າໃຈໄດ້.

## ຂອບເຂດ

ຜົນໄດ້ຮັບນີ້ແນໃສ່ການຮັບປະກັນ ໃຫ້ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ພະຍານ ໃຫ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ຄວາມຄືບໜ້າຂອງຄະດີ ດ້ວຍວິທີເໝາະສົມ, ໃນພາສາ ແລະ ຮູບແບບທີ່ເຂົາເຈົ້າເຂົ້າໃຈໄດ້.

ມີກົນໄກເພື່ອຮັບປະກັນ ການແລກປ່ຽນຂໍ້ມູນຂ່າວສານທີ່ຊັດເຈນ ແລະ ຖືກຕ້ອງປອດໄພ ກ່ຽວກັບການດຳເນີນຄະດີຄ້າມະນຸດ ລະຫວ່າງອົງການຈັດຕັ້ງກ່ຽວຂ້ອງ. ຜູ້ຖືກເຄາະຮ້າຍໄດ້ຮັບຂໍ້ມູນລ່າສຸດ ຕາມແຕ່ລະໄລຍະ ກ່ຽວກັບ ຄະດີຂອງຕົນ ຈາກຜູ້ປະສານງານ ຫລື ອົງການທີ່ຮັບຜິດຊອບ

33

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ອະທິບາຍຄວາມຄືບໜ້າ ກ່ຽວກັບ ຄະດີ ໃນພາສາ ແລະ ຮູບແບບທີ່ຜູ້ຖືກເຄາະຮ້າຍເຂົ້າໃຈໄດ້.
- ☐ ມີກົນໄກການຮ່ວມມື/ປະສານງານ ທີ່ເຂັ້ມແຂງ ສຳລັບການແລກປ່ຽນຂໍ້ມູນຂ່າວສານ.
- ☐ ກຳນົດຊ່ອງທາງການສື່ສານທີ່ມີຄວາມໝັ້ນຄົງ ແລະ ນຳໃຊ້ລະຫວ່າງປະເທດສະມາຊິກອາຊຽນ.
- ☐ ອາດແຕ່ງຕັ້ງ ຜູ້ຊ່ວຍເຫຼືອ ຫຼື ຜູ້ປະສານງານ ໃຫ້ແກ່ຜູ້ຖືກເຄາະຮ້າຍພະຍານ ເພື່ອຊ່ວຍເຫຼືອ ແລະ ແຈ້ງຂໍ້ມູນກ່ຽວກັບສະຖານະ/ຄວາມຄືບໜ້າ ຂອງ ຄະດີ ແລະ ບັນຫາອື່ນໆ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຈຳນວນ ຜູ້ຖືກເຄາະຮ້າຍ ທີ່ເຂົ້າຮ່ວມການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ແບບສະໝັກໃຈ ເພີ່ມຂຶ້ນ. | ການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

## ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ

| | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

## ຂະບວນການຍຸຕິທຳ

### ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ສ້າງແຜນປະເມີນຄວາມສ່ຽງສ່ວນບຸກຄົນ ແລະ ແຜນຮັກສາຄວາມປອດໄພ ສຳລັບຜູ້ຖືກເຄາະຮ້າຍ ຈາກ TIP ທຸກຄົນໃນໄລຍະເຂົ້າຮ່ວມການດຳເນີນຄະດີອາຍາ.

### ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.2.7.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 77, 81, 85.

### ລາຍລະອຽດ ແລະ ຄຳອະທິບາຍ

ສ້າງແຜນປະເມີນຄວາມສ່ຽງຮອບດ້ານລາຍບຸກຄົນ ແລະ ທຸກໆແຜນ ສຳລັບ ຜູ້ຖືກເຄາະຮ້າຍຈາກ TIP ທີ່ເປັນຜູ້ໃຫຍ່ ແລະ ເດັກນ້ອຍ ແລະ ພະຍານ ຖືກສ້າງຂຶ້ນໂດຍຜ່ານການປຶກສາຫາລືກັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ (ຖ້າເປັນໄປໄດ້), ພາກສ່ວນປະຕິບັດກົດໝາຍ ແລະ ການບໍລິການຊ່ວຍເຫລືອຜູ້ຖືກເຄາະຮ້າຍ. ຈຸດປະສົງ ແມ່ນເພື່ອປະເມີນ ຄວາມເປັນໄປໄດ້ ທີ່ຈະສ້າງຄວາມເສຍຫາຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ ເວລາທີ່ເຂົ້າຮ່ວມຂະບວນການຍຸຕິທຳ ແລະ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມໝັ້ນຄົງ ຂອງ ເຂົາເຈົ້າ ແລະ ຄອບຄົວ.

ຜົນເສຍຫາຍ ຕໍ່ ຜູ້ຖືກເຄາະຮ້ຍາ ແລະ ຄອບຄົວເຂົາເຈົ້າ ທີ່ອາດເກີດຂຶ້ນໄດ້ຕ້ອງໄດ້ຮັບການພິຈາລະນາ ໃນແຜນການປະເມີນຄວາມສ່ຽງ ແລະ ອາດລວມມີຂໍ້ມູນດ້ານ ການຂົ່ມຂູ່, ການບັງຄັບ, ການເຮັດໃຫ້ຢ້ານກົວ ແລະ ຮູບແບບຄວາມຮຸນແຮງອື່ນໆ ທີ່ອາດນຳໄປສູ່ການທຳຮ້າຍຮ່າງກາຍ ແລະ ຈິດໃຈ. ນອກນັ້ນ, ກໍຄວນພິຈາລະນາທັດສະນະຄະຕິ ດ້ານລົບ ຂອງສັງຄົມ ຕໍ່ກັບຄອບຄົວຜູ້ຖືກເຄາະຮ້າຍ ແລະ ຊຸມຊົນຕົ້ນທາງ ໃນການວິເຄາະຄວາມສ່ຽງ.

## 34

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ການສ້າງ ແລະ ຈັດຕັ້ງປະຕິບັດແຜນປະເມີນຄວາມສ່ຽງສະເພາະບຸກຄົນ.
- ☐ ກິດຈະກຳທັງໝົດ ຕ້ອງໄດ້ຮັບຄວາມຍິນຍອມທີ່ເປັນລາຍລັກອັກສອນ ຫຼື ບັນທຶກສຽງ ຫຼື ໄດ້ຮັບຄວາມຍິນຍອມທີ່ຈະແຈ້ງ ສຳລັບຄົນທີ່ອາຍຸ 18 ລົງມາ ພ້ອມທັງການຍິນຍອມຈາກຜູ້ປົກຄອງ ຫຼື ຜູ້ປົກປ້ອງຕາມກົດໝາຍ.
- ☐ ມີແຜນຮັກສາຄວາມປອດໄພ ທີ່ຄຳນຶງເຖິງ:
- ☐ ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ ຂອງ ຂໍ້ມູນຕົວຕົນຜູ້ຖືກເຄາະຮ້າຍ ແລະ ຄອບຄົວ
- ☐ ການສືບສວນ-ສອບສວນ ແລະ ດຳເນີນຄະດີແບບບໍ່ເປີດກວ້າງທາງເລືອກເພື່ອໃຫ້ຫຼັກຖານ
- ☐ ມີແຜນງານປົກປ້ອງພະຍານ
- ☐ ອາດແຕ່ງຕັ້ງພະນັກງານຮັກສາຄວາມປອດໄພ ສຳລັບການປົກປ້ອງ ຜູ້ຖືກເຄາະຮ້າຍ ຫຼື ພະຍານ.

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີຂໍ້ກຳນົດສຳລັບ:

- ດຳເນີນການປະເມີນຄວາມສ່ຽງລາຍບຸກຄົນ ເພື່ອປະເມີນຜົນເສຍຫາຍທີ່ອາດເກີດຂຶ້ນ ແລະ/ຫລື ຄວາມສ່ຽງທີ່ອາດຕ້ອງປະເຊີນໜ້າ ໂດຍຜູ້ຖືກເຄາະຮ້າຍ ແລະ/ຫລື ຄອບຄົວເຂົາເຈົ້າ ໃນໄລຍະການມີສ່ວນຮ່ວມກັບຂະບວນການຍຸຕິທຳ (ໃນໄລຍະ ແລະ ຫລັງການມີສ່ວນຮ່ວມ).

ມີແຜນຮັກສາຄວາມປອດໄພ ແລະ ຄວາມໝັ້ນຄົງ ເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ TIP ໃນໄລຍະການເຂົ້າຮ່ວມຂະບວນການຍຸຕິທຳ. ແຜນດັ່ງກ່າວ ລວມມີ ແຕ່ບໍ່ຈຳກັດພຽງແຕ່:

- ການປົກປ້ອງຄວາມເປັນສ່ວນຕົວ ຂອງ ຜູ້ຖືກເຄາະຮ້າຍ, ພະຍານ ແລະ ຄອບຄົວເຂົາເຈົ້າ; ຊື່, ວັນເດືອນປີເກີດ, ທີ່ຢູ່, ສະພາບເງື່ອນໄຂສ່ວນຕົວ, ຫລື ລາຍລະອຽດທີ່ສາມາດລະບຸຕົວຕົນໄດ້ ຕ້ອງປິດບັງ ຫລື ປິດລັບ ຖ້າມີຄວາມຈຳເປັນ.
- ດຳເນີນ ການສືບສວນ-ສອບສວນ ແລະ ຄະດີ ແບບບໍ່ເປີດກວ້າງ.
- ເປີດເຜີຍລາຍລະອຽດ ທີ່ສາມາດລະບຸຕົວຕົນໄດ້ ໂດຍທີ່ມີຄວາມຍິນຍອມທີ່ເປັນລາຍລັກອັກສອນ ຫລື ບັນທຶກສຽງ ຫລື ໄດ້ຮັບຄວາມຍິນຍອມທີ່ຈະແຈ້ງ ສຳລັບຄົນທີ່ອາຍຸ 18 ລົງມາ ພ້ອມທັງການຍິນຍອມຈາກຜູ້ປົກຄອງ ຫລື ຜູ້ປົກປ້ອງຕາມກົດໝາຍ.
- ມີຫລາຍທາງເລືອກເພື່ອໃຫ້ຫລັກຖານ
- ນຳໃຊ້ແຜນງານປົກປ້ອງພະຍານ ໂດຍທີ່ມີຄວາມຍິນຍອມທີ່ເປັນລາຍລັກອັກສອນ ຫລື ບັນທຶກສຽງ ຫລື ໄດ້ຮັບຄວາມຍິນຍອມທີ່ຈະແຈ້ງ ສຳລັບຄົນທີ່ອາຍຸ 18 ລົງມາ ພ້ອມທັງການຍິນຍອມຈາກຜູ້ປົກຄອງ ຫລື ຜູ້ປົກປ້ອງຕາມກົດໝາຍ.
- ແຕ່ງຕັ້ງພະນັກງານຮັກສາຄວາມປອດໄພ ສຳລັບການປົກປ້ອງ ຜູ້ຖືກເຄາະຮ້າຍ ຫລື ພະຍານ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຈຳນວນ ຜູ້ຖືກເຄາະຮ້າຍ ທີ່ເຂົ້າຮ່ວມການດຳເນີນຄະດີຕໍ່ຜູ້ຄ້າມະນຸດ ແບບສະໝັກໃຈ ເພີ່ມຂຶ້ນ. | ການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

35

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ຄອບຄົວເຂົາເຈົ້າ ຖືກປົກປ້ອງຈາກການຂົ່ມຂູ່, ບີບບັງຄັບ, ລົບກວນ, ແລະ/ຫລື ແກ້ແຄ້ນ ຫລື ການຫຍຸ້ງກ່ຽວກັບພະຍານ.

## ຂໍ້ອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.2.7, 2.1.1.
- ຄູ່ມື ການຄຳນຶງເຖິງບົດບາດຍິງຊາຍ ເວລາພົວພັນກັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ແມ່ນຜູ້ຍິງ ພາກທີ 3.6.5, 4.16.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 77, 81.
- ACTIP ມາດຕາ 16(5), (7).

## ລາຍລະອຽດ ແລະ ຄຳອະທິບາຍ

ການຮັກສາຄວາມສຸຈະລິດ ແລະ ຄວາມໂປ່ງໃສ ຂອງ ລະບົບຍຸຕິທຳທາງອາຍາ ຈຳເປັນຕ້ອງປົກປ້ອງຝ່າຍທີ່ຖືກຜົນກະທົບ, ຕັດສິນລົງໂທດຜູ້ກະທຳຜິດ, ໂດຍຜ່ານຂະບວນການນຳໃຊ້ກົດໝາຍ. ພາຍໃຕ້ ACTIP, ປະເທດສະມາຊິກອາຊຽນ ມີພັນທະໃນການປະຕິບັດບາດກ້າວ ທີ່ຈຳເປັນ ເພື່ອຮັບປະກັນຄວາມສຸຈະລິດໂປ່ງໃສ ຂອງ ຂະບວນການສານ ໃນນັ້ນລວມມີ ການປົກປ້ອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການຂົ່ມຂູ່ ແລະ ລົບກວນ ຖ້າເຫັນມີຄວາມຈຳເປັນ ພ້ອມທັງລົງໂທດຜູ້ຄ້າມະນຸດ.

ເພື່ອບັນລຸເປົ້າໝາຍດັ່ງກ່າວ, ຈຳເປັນທີ່ກົດໝາຍ, ລະບຽບການ, ນະໂຍບາຍ ແລະ ແຜນຕ່າງໆ ຖືກຈັດຕັ້ງປະຕິບັດເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ ຈາກການຂົ່ມຂູ່ ແລະ ແກ້ແຄ້ນ. ການປົກປ້ອງ ລວມມີ (ແຕ່ບໍ່ຈຳກັດພຽງແຕ່) ການສະໜອງເຈົ້າໜ້າທີ່ຍຸຕິທຳທາງອາຍາ ທີ່ໄດ້ຮັບການຝຶກອົບຮົມ ຫລື ບຸກຄະລະກອນອື່ນໆ ເພື່ອປ້ອງກັນຈາກການທຳຮ້າຍຮ່າງກາຍ ພ້ອມທັງເຈົ້າໜ້າທີ່ຮັກສາຄວາມປອດໄພໃຫ້ຕິດຕາມ, ລວມທັງພະນັກງານ ຂອງ ສານ ເພື່ອຮັບປະກັນບໍ່ໃຫ້ເກີດມີເຫດການ ຕໍ່ກັບຜູ້ຖືກເຄາະຮ້າຍ ຫລື ພະຍານ ແລະ ປ້ອງກັນບໍ່ໃຫ້ລົບກວນຂະບວນການດຳເນີນຄະດີ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ກົດໝາຍ, ລະບຽບການ, ນະໂຍບາຍ ແລະ ແຜນຕ່າງໆ ຖືກຈັດຕັ້ງປະຕິບັດເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ ຈາກການຂົ່ມຂູ່ ແລະ ແກ້ແຄ້ນ.
- ☐ ການໃຫ້ທີ່ພັກອາໄສທີ່ປອດໄພ ແລະ ເໝາະສົມ ສຳລັບ ຜູ້ຖືກເຄາະຮ້າຍ ຈາກ TIP, ພະຍານ ແລະ ສະມາຊິກຄອບຄົວທີ່ມີຄວາມສ່ຽງ.
- ☐ ແຜນງານປົກປ້ອງພະຍານ ຂອງ ພາກລັດ ສະໜອງ ແລະ ມີການປະສານງານຢ່າງໃກ້ສິດເພື່ອໃຫ້ການບໍລິການປົກປ້ອງໃຫ້ແກ່ຜູ້ຖືກເຄາະຮ້າຍ
- ☐ ການເຮັດວຽກຮ່ວມກັນ ລະຫວ່າງ ສານ ແລະ CSOs ເພື່ອສົ່ງເສີມ ແລະ ອຳນວຍການບໍລິການປົກປ້ອງ ແລະ ຊ່ວຍເຫຼືອໃຫ້ແກ່ຜູ້ຖືກເຄາະຮ້າຍ, ພະຍານ ແລະ ສະມາຊິກຄອບຄົວທີ່ມີຄວາມສ່ຽງ.
- ☐ ບໍ່ໃຊ້ການຊ່ວຍເຫຼືອ ເປັນເງື່ອນໄຂບັງຄັບໃຫ້ເຂົ້າຮ່ວມຂະບວນການດຳເນີນຄະດີ
- ☐ ເຄົາລົບສິດໃນການປະຕິເສດການປົກປ້ອງ ແລະ ການຊ່ວຍເຫຼືອ

## ຂອບເຂດ

ຜົນໄດ້ຮັບນີ້ ລວມມີຂໍ້ກຳນົດ ເພື່ອຫລຸດຜ່ອນໂອກາດເພື່ອການຂົ່ມຂູ່ ຫລື ຫຍຸ້ງກ່ຽວກັບພະຍານ:

- ແຕ່ງຕັ້ງເຈົ້າໜ້າທີ່ຍຸຕິທຳທາງອາຍາ, ຕຳຫລວດ ແລະ ພະນັກງານຮັກສາຄວາມປອດໄພ ຂອງ ສານ ຫລື ທົ່ວໄປ ເພື່ອຮັບປະກັນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານຈາກການທຳຮ້າຍຮ່າງກາຍ
- ບໍ່ເປີດເຜີຍຂໍ້ມູນ ຂອງ ພະຍານ, ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ ເພື່ອຮັກສາຄວາມເປັນສ່ວນຕົວ ແລະ ຄວາມເປັນລັບ.
- ສະໜອງທີ່ພັກອາໄສ ທີ່ປອດໄພ ແລະ ເໝາະສົມໃຫ້ແກ່ຜູ້ຖືກເຄາະຮ້າຍ, ພະຍານ ແລະ ສະມາຊິກຄອບຄົວທີ່ມີຄວາມສ່ຽງ.
- ປະສານສົມທົບ ກັບ ແຜນງານປົກປ້ອງພະຍານ ແລະ ຍ້າຍພູມລຳເນົາ ຂອງ ລັດຖະບານ ເພື່ອໃຫ້ການບໍລິການໃຫ້ແກ່ ຜູ້ຖືກເຄາະຮ້າຍ.
- ສ້າງກົນໄກການຮ່ວມມືລະຫວ່າງ ສານ ແລະ CSOs ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການສົ່ງຕໍ່ ການບໍລິການປົກປ້ອງ ແລະ ຊ່ວຍເຫລືອ ຜູ້ຖືກເຄາຮ້າຍ, ພະຍານ ແລະ ສະມາຊິກຄອບຄົວທີ່ມີຄວາມສ່ຽງ.

ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ສາມາດນຳໃຊ້ສິດ ເພື່ອປະຕິເສດການປົກປ້ອງ ແລະ ການຊ່ວຍເຫລືອ (ສຳລັບຜູ້ໃຫຍ່) ແລະ ສິດໃນການອອກຄຳຄິດເຫັນ (ສຳລັບເດັກນ້ອຍ).

ບໍ່ນຳໃຊ້ການບໍລິການປົກປ້ອງ, ລວມທັງການຊ່ວຍເຫລືອ ແລະ ທີ່ພັກອາໄສປອດໄພເໝາະສົມ ເປັນເງື່ອນໄຂເພື່ອໃຫ້ຜູ້ຖືກເຄາະຮ້າຍຮ່ວມມືກັບເຈົ້າໜ້າທີ່ ຫລື ເຂົ້າຮ່ວມຂະບວນການດຳເນີນຄະດີ.

ຫລັກຖານ ບໍ່ຈຳເປັນຕ້ອງອ້າງອີງ ຄຳໃຫ້ການ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ສຳລັບການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ຜູ້ຄ້າມະນຸດ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ມີມາດຕະການປົກປ້ອງ ແລະ ການບໍລິການໃຫ້ແກ່ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ມີຊັບພະຍາກອນພຽງພໍເພື່ອຈັດຕັ້ງປະຕິບັດ. | ການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

## ຂະບວນການຍຸຕິທຳ

**ຜົນໄດ້ຮັບໄລຍະສັ້ນ (0-2 ປີ)**

ການປົກປ້ອງຄວາມເປັນສ່ວນຕົວ ແລະ ຂໍ້ມູນສ່ວນຕົວຂອງຜູ້ຖືກເຄາະຮ້າຍຈາກ TIP ແລະ ຄອບຄົວເຂົາເຈົ້າໃນໄລຍະການດຳເນີນຄະດີ.

**ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ**

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.2.6, 4.2.4.
- ຄູ່ມື ການຄຳນຶງເຖິງບົດບາດຍິງຊາຍ ເວລາພົວພັນກັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ແມ່ນຜູ້ຍິງ ພາກທີ 3.6.6.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 79, 89.
- ACTIP ມາດຕາ 14(6).

**ລາຍລະອຽດ ແລະ ຄຳອະທິບາຍ**

ປະເທດສະມາຊິກ ອາຊຽນ ມີພາລະບົດບາດ ໃນການຮັກສາຄວາມເປັນສ່ວນຕົວ ແລະ ຂໍ້ມູນຕົວຕົນ ຂອງ ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າລວມທັງການດຳເນີນຄະດີການຄ້າມະນຸດ ແບບປິດລັບ.

ເພື່ອບັນລຸໄດ້, ມີຄວາມສຳຄັນທີ່ປະເທດສະມາຊິກ ອາຊຽນ ຕ້ອງສ້າງກົດໝາຍ, ລະບຽບການ ແລະ ນະໂຍບາຍ ເພື່ອກຳນົດສິດທິ ໃຫ້ແກ່ຜູ້ຖືກເຄາະຮ້າຍ ດ້ານຄວາມເປັນສ່ວນຕົວ ແລະ ການຮັກສາຄວາມເປັນລັບ, ແລະ ຮັບປະກັນວ່າ ບັນດາຂອບນິຕິກຳຕ່າງໆ ຖືກຈັດຕັ້ງປະຕິບັດເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ຄອບຄົວເຂົາເຈົ້າ ຈາກການທຳຮ້າຍຮ່າງກາຍ ຫລື ຈິດໃຈ ໃນໄລຍະການເຂົ້າຮ່ວມຂະບວນການຍຸຕິທຳ.

# 36

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ປະຕິບັດທຸກບາດກ້າວ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ-ພະຍານ ແລະ ຄອບຄົວເຂົາເຈົ້າ
- ☐ ປິດບັງ ຫຼື ປິດລັບ ຊື່, ວັນເດືອນປີເກີດ, ທີ່ຢູ່, ສະພາບເງື່ອນໄຂສ່ວນບຸກຄົນ ຫຼື ລາຍລະອຽດທີ່ສາມາດລະບຸຕົວຕົນ ເວລາເຫັນວ່າຈຳເປັນ.
- ☐ ການປົກປ້ອງຄວາມເປັນສ່ວນຕົວ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ແມ່ນເດັກນ້ອຍ.
- ☐ ດຳເນີນຄະດີແບບບໍ່ເປີດກ້ວາງ.
- ☐ ດຳເນີນ ການສືບສວນ-ສອບສວນ ແບບປິດລັບ.
- ☐ ຮັກສາຄວາມເປັນລັບ, ເປີດເຜີຍຂໍ້ມູນ ຂອງ ຜູ້ຖືກເຄາະຮ້າຍ ໃນເມື່ອໄດ້ຮັບອະນຸຍາດ ຈາກ ຜູ້ຖືກເຄາະຮ້າຍ ຈາກ TIP ເທົ່ານັ້ນ.
- ☐ ສ້າງຄຳແນະນຳຈະແຈ້ງ ເພື່ອປິດລັບ/ປິດບັງ ລາຍລະອຽດທີ່ສາມາດລະບຸຕົວຕົນ ຂອງ ຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ.
- ☐ ສ້າງຄຳແນະນຳ ເພື່ອເປີດເຜີຍ ແລະ ແລກປ່ຽນສຳນວນຄະດີ.
- ☐ ຈັດຕັ້ງປະຕິບັດມາດຕະການປົກປ້ອງ ຢູ່ ສານ.
- ☐ ສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການລະເມີດ ຂໍ້ຮັກສາຄວາມເປັນລັບ ແລະ ສິດຄວາມເປັນສ່ວນຕົວ
- ☐ ເຈົ້າໜ້າທີ່ສານທີ່ເປັນມືອາຊີບ ໄດ້ຮັບການຝຶກອົບຮົມ ກ່ຽວກັບການຄຳນຶງເຖິງບົດບາດຍິງຊາຍ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ພ້ອມທັງຫົວຂໍ້ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ.

# ຂະບວນການຍຸຕິທຳ 36

## ຂອບເຂດ

ຜົນໄດ້ຮັບນີ້ແນໃສ່ການຮັບປະກັນ:

- ປະຕິບັດທຸກບາດກ້າວ ເພື່ອປົກປ້ອງຄວາມເປັນສ່ວນຕົວ ຂອງ ຜູ້ຖືກເຄາະຮ້າຍ-ພະຍານ ແລະ ຄອບຄົວເຂົາເຈົ້າ ຊຶ່ງລວມມີການປິດລັບ ຫລື ປິດບັງຊື່, ທີ່ຢູ່ອາໄສ, ວັນເດືອນປີເກີດ ແລະ/ຫລື ຂໍ້ມູນສ່ວນຕົວອື່ນໆ, ຈາກການສືບສວນສອບສວນ ຈົນຮອດຂະບວນການດຳເນີນຄະດີ, ອີງຕາມກົດໝາຍ ແລະ ລະບຽບການຂອງປະເທດ.
- ໜ້າທີ່ຮັບຜິດຊອບ ໃນການປົກປ້ອງຄວາມເປັນສ່ວນຕົວ ແມ່ນເຈົ້າໜ້າທີ່ຍຸຕິທຳ ແລະ ຜູ້ໃຫ້ບໍລິການ ລວມທັງຝ່າຍທີ່ກ່ຽວຂ້ອງກັບຄະດີທັງໝົດ.
- ປົກປ້ອງຄວາມເປັນສວ່ນຕົວ ຂອງ ຜູ້ຖືກເຄາະຮ້າຍ ເດັກນ້ອຍ ແລະ ບໍ່ໃຫ້ມີການເປີດເຜີຍຂໍ້ມູນສ່ວນຕົວ ຫລື ລາຍລະອຽດອື່ນໆ ໂດຍທີ່ບໍ່ໄດ້ຮັບອະນຸຍາດ.
- ຮັກສາຄວາມເປັນລັບ ແລະ ຕ້ອງຂໍອະນຸຍາດຈາກ ຝ່າຍທີ່ກ່ຽວຂ້ອງ ກ່ອນທີ່ຈະແລກປ່ຽນຂໍ້ມູນຜູ້ຖືກເຄາະຮ້າຍ ທີ່ອາດເຮັດໃຫ້ຮູ້ເຖິງຕົວຕົນ ຫລື ທີ່ຢູ່ອາໄສ.
- ຈັດຕັ້ງປະຕິບັດ ມາດຕະການປົກປ້ອງ ຢູ່ ສານ ເພື່ອຮັບປະກັນຄວາມເປັນສ່ວນຕົວ, ຄວາມປອດໄພ ແລະ ຄວາມລັບ ກ່ຽວກັບ ຜູ້ຖືກເຄາະຮ້າຍ ແລະ ຄອບຄົວ ເປັນຕົ້ນແມ່ນໃນ ຂະບວນການດຳເນີນຄະດີແບບບໍ່ເປີດກວ້າງ, ການສືບສວນ-ສອບສວນແບບປິດລັບ, ຫ້ອງລໍຖ້າແຍກສະເພາະ, ບັນທຶກຄຳໃຫ້ການ ແລະ ທາງເລືອກອື່ນໆເພື່ອໃຫ້ຫລັກຖານ.
- ສຳນວນຄະດີ ແລະ ການຕັດສິນຂອງ ສານ ຈະບໍ່ເປີດເຜີຍຊື່ ແລະ ມີຄຳແນະນຳການປະຕິບັດທີ່ຊັດເຈນ ເພື່ອປ້ອງກັນການເປີດເຜີຍ ຊື່, ວັນເດືອນປີເກີດ, ທີ່ຢູ່ ແລະ ຂໍ້ມູນສ່ວນຕົວອື່ນໆ ທີ່ອາດຈະເປີດເຜີຍຕົວຕົນ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP, ຄອບຄົວ ຫລື ພະຍານ.
- ການລະເມີດຄວາມເປັນສ່ວນຕົວ ໂດຍບຸກຄະລາກອນສື່ມວນຊົນ ຕ້ອງໄດ້ຮັບການລາຍງານ ແລະ ແກ້ໄຂໂດຍເຈົ້າໜ້າທີ່ ແລະ ອາດມີການດຳເນີນຄະດີ.
- ສະໜອງການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ຍຸຕິທຳ ກ່ຽວກັບ ກົດໝາຍ ວ່າດ້ວຍສິດທິມະນຸດ ແລະ ອະຄະຕິທາງບົດບາດຍິງ-ຊາຍ ໂດຍຮ່ວມມືກັບອົງການທີ່ມີໜ້າທີ່ຮັບຜິດຊອບດ້ານບົດບາດຍິງ-ຊາຍ, ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ສະຖາບັນການສຶກສາຕ່າງໆ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການປົກປ້ອງຄວາມເປັນສ່ວນຕົວ, ຂໍ້ມູນຕົວຕົນ ແລະ ການຮັກສາຄວາມລັບແມ່ນມາດຕະຖານການດຳເນີນງານ. | ການສືບສວນສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຈັດຕັ້ງປະຕິບັດມາດຕະການພິເສດ ເພື່ອອຳນວຍໃຫ້ ຜູ້ຖືກເຄາະຮ້າຍ ຈາກ TIP ແລະ ພະຍານ ສາມາດເຂົ້າຮ່ວມຂະບວນການດຳເນີນຄະດີແບບປອດໄພ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 2.2.6, 3.3.8, 3.3.9, 2.4.10, 2.4.11.
- ຄູ່ມື ການຄຳນຶງເຖິງບົດບາດຍິງຊາຍ ເວລາພົວພັນກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ແມ່ນຜູ້ຍິງ ພາກທີ 3.3.3, 3.6.6, 3.6.7.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 42, 81, 85, 92.
- ACTIP ມາດຕາ 14(6), (7).

## ລາຍລະອຽດ ແລະ ຄຳອະທິບາຍ

ນັບຕັ້ງແຕ່ ຜູ້ຖືກເຄາະຮ້າຍ ເລີ່ມພົວພັນກັບລະບົບຍຸຕິທຳ ຈົນໄປຮອດການສິ້ນສຸດການດຳເນີນຄະດີ ເຂົາເຈົ້າມີຄວາມສ່ຽງທີ່ຈະຖືກກະທົບຈິດໃຈຊ້ຳຊ້ອນ. ຜູ້ຖືກເຄາະຮ້າຍ ສ່ວນໃຫຍ່ຕ້ອງເຂົ້າຮ່ວມການສຳພາດ ຊຶ່ງຕ້ອງເລົ່າລາຍລະອຽດຄືນໃໝ່ ກ່ຽວກັບ ປະສົບການ ທີ່ຖືກຄ້າມະນຸດ. ບາງຄັ້ງກໍອາດມີການນຳໃຊ້ພາສາກາຍ, ຄຳສັບ ແລະ ນ້ຳສຽງທີ່ບໍ່ເໝາະສົມ ແລະ ເຮັດໃຫ້ຜູ້ຖືກເຄາະຮ້າຍຮູ້ສຶກຜິດ ຫລື ຕ້ອງເປັນຜູ້ຮັບຜິດຊອບຕໍ່ກັບບັນຫາທີ່ເກີດຂຶ້ນ. ຍິ່ງໄປກວ່ານັ້ນ, ເຈົ້າໜ້າທີ່ບາງພາກສ່ວນອາດມີອະຄະຕິ ຕໍ່ກັບຜູ້ຖືກເຄາະຮ້າຍ ຍ້ອນວັດທະນາທຳ ຊຶ່ງອາດເຮັດໃຫ້ມີຜົນກະທົບຕໍ່ ກັບການຕັດສິນ ແລະ ການເຂົ້າໃຈ ກ່ຽວກັບ ເຫດກະທົບຈິດໃຈຮ້າຍແຮງຕໍ່ຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍ ອາດເປັນໂລກພາວະຄວາມຄຽດຫລັງການຖືກກະທົບຮຸນແຮງ ຊຶ່ງການພົວພັນກັບເຈົ້າໜ້າທີ່ອາດເຮັດໃຫ້ມີຜົນກະທົບເພີ່ມເຕີມ ຖ້າເຫັນພຶດຕິກຳແບບນີ້ວ່າ ບໍ່ໃຫ້ການຮ່ວມມື.

ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໃຫ້ການປົກປ້ອງ ໃຫ້ແກ່ຜູ້ຖືກເຄາະຮ້າຍ ແບບສະເພາະ ຕາມຄວາມຕ້ອງການ ເພື່ອຫລຸດຜ່ອນຄວາມສ່ຽງໃນການກະທົບຈິດໃຈຮຸນແຮງຄືນໃໝ່. ມາດຕະການພິເສດອາດລວມມີ (ແຕ່ບໍ່ຈຳກັດພຽງແຕ່) ເຂົ້າຮ່ວມທາງໄກ, ການຂຶ້ນສານ ແລະ ເຂົ້າຮ່ວມປະຊຸມສານແບບເອເລັກໂຕຣນິກ, ໃຊ້ຈໍໂທລະທັດ, ຫ້ອງລໍຖ້າແຍກສະເພາະ, ທາງເຂົ້າທີ່ເປັນສ່ວນຕົວ, ຫລັກການບໍ່ປະສົງອອກນາມ, ແລະ ການປັບພາບ/ດັດສຽງ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ໃນຂັ້ນຕອນການດຳເນີນຄະດີ.

37

**ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ**

- ☐ ການປົກປ້ອງສະເພາະ ແລະ ຕາມຄວາມຕ້ອງການ ສຳລັບຜູ້ຖືກເຄາະຮ້າຍ ແລະ ພະຍານທີ່ມີຄວາມສ່ຽງ.
- ☐ ມີຂັ້ນຕອນໃນສານ ເພື່ອອຳນວຍໃຫ້ ຜູ້ຖືກເຄາະຮ້າຍ ຂຶ້ນໃຫ້ການ ແລະ ຂຶ້ນສານ ແບບທາງໄກ, ການບັນທຶກວິດີໂອລ່ວງໜ້າ ຫຼື ຫ້ອງແຍກສະເພາະ ຫຼື ຜ່ານການໃຫ້ການນອກສານ.
- ☐ ຜູ້ຖືກເຄາະຮ້າຍ ມີສິດຖອນຕົວຈາກຂະບວນການຍຸຕິທຳທຸກເວລາ
- ☐ ໃຫ້ຄວາມຍິນຍອມແບບເປັນລາຍລັກອັກສອນ ຫຼື ບັນທຶກສຽງ ຫຼື ການຍິນຍອມທີ່ເຫັນຈະແຈ້ງ ສຳລັບ ຄົນອາຍຸ 18 ລົງມາ ແລະ ການຍິນຍອມ ຂອງ ຜູ້ປົກຄອງ ແລະ ຜູ້ປົກປ້ອງ.
- ☐ ການໃຫ້ການນອກສານ ຫຼຸດຜ່ອນເວລາ ເພື່ອໃຫ້ຜູ້ຖືກເຄາະຮ້າຍທີ່ເປັນພະຍານ ຕ້ອງລໍຖ້າເພື່ອຂຶ້ນສານ ແລະ ໃຫ້ການ.
- ☐ ການໄຕ່ສວນ ແລະ ດຳເນີນຄະດີ ເລີ່ມ ແລະ ສິ້ນສຸດ ໂດຍບໍ່ມີຄວາມຊັກຊ້າ.
- ☐ ຜູ້ຖືກເຄາະຮ້າຍມີສິດປະຕິເສດການຊ່ວຍເຫຼືອ.
- ☐ ແຕ່ງຕັ້ງຜູ້ໃຫ້ຄຳປຶກສາດ້ານກົດໝາຍ ແລະ ຜູ້ສະໜັບສະໜູນ ເພື່ອໃຫ້ຂໍ້ມູນຄວາມຄືບໜ້າ ກ່ຽວກັບການດຳເນີນຄະດີພ້ອມທັງຕິດຕາມເວລາຕ້ອງຂຶ້ນສານ.
- ☐ ບຸກຄະລະກອນ ສະໜັບສະໜູນຜູ້ຖືກເຄາະຮ້າຍ ໄດ້ຮັບການຝຶກອົບຮົມ.

# ຂະບວນການຍຸຕິທຳ 37

## ຂອບເຂດ

ຜົນໄດ້ຮັບນີ້ ອາດລວມມີຂໍ້ກຳນົດ ເພື່ອ:

- ຜູ້ຖືກເຄາະຮ້າຍໃຫ້ຫລັກຖານ ໃນການດຳເນີນຄະດີຜ່ານ ການເຂົ້າຮ່ວມທາງໄກ, ຫ້ອງແຍກສະເພາະ, ທາງເອເລັກໂຕຣນິກ, ການບັນທຶກວິດີໂອລ່ວງໜ້າ ຫລື ການໃຫ້ການນອກສານ.
- ຜູ້ຖືກເຄາະຮ້າຍມີສິດຖອນຕົວອອກຈາກຂະບວນການຍຸຕິທຳໄດ້ທຸກເວລາ.
- ການໃຫ້ການນອກສານ ຫລຸດຜ່ອນເວລາ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ທີ່ເປັນພະຍານ ຕ້ອງລໍຖ້າເພື່ອຂຶ້ນສານ ແລະ ໃຫ້ການ.
- ການໄຕ່ສວນ ແລະ ດຳເນີນຄະດີ ເລີ່ມ ແລະ ສິ້ນສຸດ ໂດຍບໍ່ມີຄວາມຊັກຊ້າ, ໂດຍສະເພາະແມ່ນຄະດີ ທີ່ກ່ຽວຂ້ອງ ກັບເດັກນ້ອຍ.
- ຈັດຕັ້ງປະຕິບັດມາດຕະການ ເພື່ອປ້ອງກັນບໍ່ໃຫ້ເຈົ້າໜ້າທີ່ ແລະ ພາກສ່ວນຜູ້ໃຫ້ບໍລິການ ບີບບັງຄັບ ໃຫ້ຜູ້ຖືກເຄາະຮ້າຍຈາກ TIP ເຂົ້າຮ່ວມຂະບວນການຍຸຕິທຳ.
- ຜູ້ຖືກເຄາະຮ້າຍ ໄດ້ຮັບຂໍ້ມູນ ກ່ຽວກັບ ສິດທິ ໃນການເຂົ້າເຖິງການປົກປ້ອງ ແລະ ການຊ່ວຍເຫລືອທັນທີ ແບບບໍ່ມີເງື່ອນໄຂ.
- ໃຫ້ຄວາມຍິນຍອມແບບເປັນລາຍລັກອັກສອນ ຫລື ບັນທຶກສຽງ ຫລື ການຍິນຍອມທີ່ເຫັນຈະແຈ້ງ ສຳລັບ ຄົນອາຍຸ 18 ລົງມາ ແລະ ການຍິນຍອມຂອງ ຜູ້ປົກຄອງ ແລະ ຜູ້ປົກປ້ອງ.
- ແຕ່ງຕັ້ງຜູ້ໃຫ້ຄຳປຶກສາດ້ານກົດໝາຍ ແລະ ຜູ້ສະໜັບສະໜູນ ເພື່ອໃຫ້ຂໍ້ມູນຄວາມຄືບໜ້າ ກ່ຽວກັບ ການດຳເນີນຄະດີ ພ້ອມທັງຕິດຕາມເວລາຕ້ອງຂຶ້ນສານ.
- ປິດບັງ ຫລື ປິດລັບ ຊື່, ວັນເດືອນປີເກີດ, ທີ່ຢູ່, ສະພາບເງື່ອນໄຂສ່ວນບຸກຄົນ ຫລື ລາຍລະອຽດທີ່ສາມາດລະບຸຕົວຕົນ.
- ນຳໃຊ້ຜູ້ສື່ກາງ ຫລື ຜູ້ສະໜັບສະໜູນ.

ມີການຊ່ວຍເຫລືອ ສຳລັບຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຢາກເຂົ້າຮ່ວມຂະບວນການຍຸຕິທຳ. ຜູ້ສະໜັບສະໜູນ ແລະ ຜູ້ຄຸ້ມຄອງກໍລະນີ ໄດ້ຮັບການຝຶກອົບຮົມກ່ຽວກັບ ການຊ່ວຍເຫລືອ ຜູ້ຖືກເຄາະຮ້າຍ ເພື່ອປະສານງານກັບ ອົງການໄອຍະການ, ການໃຫ້ຂໍ້ມູນຂ່າວສານຄວາມຄືບໜ້າ, ການຕິດຕາມຜູ້ຖືກເຄາະຮ້າຍເພື່ອຂຶ້ນສານ ແລະ ຮັບປະກັນເຂົ້າເຖິງການບໍລິການທີ່ເໝາະສົມ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ການປົກປ້ອງຄວາມເປັນສ່ວນຕົວ, ຂໍ້ມູນຕົວຕົນ ແລະ ການຮັກສາຄວາມເປັນລັບ ແມ່ນມາດຕະຖານການດຳເນີນງານ. | ການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ສະກັດກັ້ນການກໍ່ອາຊະຍາກຳຄ້າມະນຸດ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ການດຳເນີນຄະດີ ກຳນົດໃຫ້ໄອຍະການ ຫລື ເຈົ້າໜ້າທີ່ກ່ຽວຂ້ອງ ພະຍາຍາມຊຸກຍູ້ໃຫ້ໄດ້ຮັບຄ່າຕອບແທນຄ່າເສຍຫາຍ ແລະ/ຫລື ການຊົດເຊີຍ ຈາກຜູ້ທີ່ຖືກຕັດສິນວ່າກະທຳຜິດ ລວມທັງ ຈາກລັດ ໂດຍຜ່ານການປຶກສາຫາລືກັບຜູ້ຖືກເຄາະຮ້າຍ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 5.2.3, 5.2.5, 5.2.6.
- ຄູ່ມື ການຄຳນຶງເຖິງບົດບາດຍິງຊາຍ ເວລາພົວພັນກັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ແມ່ນຜູ້ຍິງ ພາກທີ 2.5.1, 3.6.9, 4.15
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສຳລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 92
- ACTIP ມາດຕາ 14(13), 14.
- ແຜນແມ່ບົດອາຊຽນວ່າດ້ວຍການເຊື່ອມຕໍ່ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 3.

## ລາຍລະອຽດ ແລະ ຄຳອະທິບາຍ

ເຈົ້າໜ້າທີ່ໄອຍະການ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ສາມາດຊ່ວຍຜູ້ຖືກເຄາະຮ້າຍໃນການຮຽກຮ້ອງຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ. ເພື່ອຮັບປະກັນໃຫ້ຜູ້ຖືກເຄາະຮ້າຍ ໄດ້ຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ, ເຈົ້າໜ້າທີ່ໄອຍະການ ແລະ ພາກສ່ວນກ່ຽວຂ້ອງຕ້ອງສາມາດລະບຸ, ຕິດຕາມ, ອາຍັດ, ຢຶດ/ຮິບ ຊັບສິນທີ່ໄດ້ຈາກການຄ້າມະນຸດ, ລວມທັງ ຊັບສິນ, ອຸປະກອນ ແລະ ເຄື່ອງມືອື່ນໆ ທີ່ນຳໃຊ້ ຫລື ມີແຜນຈະນຳໃຊ້ໃນການຄ້າມະນຸດ. ນອກນັ້ນ, ຍັງມີຄວາມສຳຄັນທີ່ເຈົ້າໜ້າທີ່ໄອຍະການ ແລະ ພາກສ່ວນກ່ຽວຂ້ອງ ມີຄວາມຮູ້ ແລະ ທັກສະດ້ານການປະເມີນ ແລະ ຄິດໄລ່ມູນຄ່າຄວາມເສຍຫາຍ ແລະ/ຫລື ການຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ ໃນຂັ້ນຕອນການດຳເນີນຄະດີ. ການຮຽກຮ້ອງຄ່າຊົດເຊີຍ (ຈາກງົບປະມານລັດ) ບໍ່ຄວນຂຶ້ນກັບຜົນຂອງການດຳເນີນຄະດີອາຍາຢ່າງດຽວ. ພາຍໃຕ້ ACTIP, ປະເທດສະມາຊິກອາຊຽນ ມີພັນທະໃນການຈັດສັນທຶນຮອນ, ສ້າງຕັ້ງກອງທຶນລະດັບຊາດ ເພື່ອຊ່ວຍເຫລືອຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ການລະດົມທຶນ ເຂົ້າໃນກອງທຶນ ຄວນນຳໃຊ້ແຫລ່ງທີ່ໄດ້ຢຶດມາຈາກອາຊະຍາກອນ, ການຈັດສັນງົບປະມານແຫ່ງລັດ ແລະ ຜູ້ໃຫ້ທຶນສາກົນ.

38

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ປະເທດສະມາຊິກອາຊຽນ ທົດແທນຄ່າເສຍຫາຍ ແລະ ໃຫ້ການຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ ອີງຕາມກົດໝາຍ, ລະບຽບການ ແລະ ນະໂຍບາຍ.
- ☐ ປະເທດສະມາຊິກອາຊຽນ ສ້າງຕັ້ງກອງທຶນສະໜັບສະໜູນຜູ້ຖືກເຄາະຮ້າຍ ອີງຕາມ ACTIP.
- ☐ ປະເທດສະມາຊິກອາຊຽນ ສ້າງ ແລະ ຈັດຕັ້ງປະຕິບັດກົນໄກ ເພື່ອໃຫ້ຄ່າເສຍຫາຍ ແລະ ຄ່າຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ ແບບສະດວກ ແລະ ສາມາດເຂົ້າເຖິງໄດ້.
- ☐ ອົງການ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ຊ່ວຍຜູ້ຖືກເຄາະຮ້າຍ ໃນການຮຽກຮ້ອງຄ່າເສຍຫາຍ ແລະ ຄ່າຊົດເຊີຍ.
- ☐ ການຮຽກຮ້ອງຄ່າເສຍຫາຍ ແລະ ຊົດເຊີຍ ທາງແພ່ງ ແລະ ອາຍາ ແມ່ນຍື່ນໃຫ້ສານຜ່ານການປຶກສາຫາລື ກັບຜູ້ຖືກເຄາະຮ້າຍ.
- ☐ ກົດໝາຍ, ລະບຽບການ, ນະໂຍບາຍ ແລະ ຄຳແນະນຳ ເປັນພື້ນຖານໃຫ້ເຈົ້າໜ້າທີໄອຍະການ ແລະ ພາກສ່ວນອື່ນໆ ສາມາດ:
- ☐ ລະບຸ, ຕິດຕາມ, ອາຍັດ, ຢຶດ/ຮິບ ຊັບສິນທີ່ໄດ້ຈາກການຄ້າມະນຸດ, ລວມທັງ ຊັບສິນ, ອຸປະກອນ ແລະ ເຄື່ອງມືອື່ນໆ ທີ່ນຳໃຊ້ ຫຼື ມີແຜນຈະນຳໃຊ້ໃນການຄ້າມະນຸດ.
- ☐ ປະເມີນ ແລະ ຄິດໄລ່ມູນຄ່າຄວາມເສຍຫາຍ ແລະ/ຫຼື ການຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ
- ☐ ມອບ ແລະ ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ວ່າດ້ວຍການໃຫ້ຄ່າເສຍຫາຍ ແລະ ຄ່າຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ.

## ຂອບເຂດ

ຜົນໄດ້ຮັບນີ້ລວມມີ:

- ມີນິຕິກຳເຂັ້ມງວດ ແລະ ຖືກບັງຄັບໃຊ້ ເພື່ອຮັບປະກັນການລະບຸການຄ້າມະນຸດ ເປັນການກະທຳຜິດທາງອາຍາ ແລະ ມີສິດຮັບຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ.
- ຜູ້ຖືກເຄາະຮ້າຍ ຈາກ TIP ແລະ/ຫລື ຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ ຮັບຮູ້ ກ່ຽວກັບສິດໃນການຮັບຄ່າເສຍຫາຍ ແລະ ຄ່າຊົດເຊີຍ ເປັນພາສາ ແລະ ຮູບແບບທີ່ສາມາດເຂົ້າໃຈໄດ້.
- ປະເທດສະມາຊິກອາຊຽນ ສ້າງຕັ້ງກອງທຶນສະໜັບສະໜູນຜູ້ຖືກເຄາະຮ້າຍ ອີງຕາມ ACTIP.
- ປະເທດສະມາຊິກອາຊຽນ ສ້າງ ແລະ ຈັດຕັ້ງປະຕິບັດກົນໄກ ເພື່ອໃຫ້ຄ່າເສຍຫາຍ ແລະ ຄ່າຊົດເຊີຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ ແບບສະດວກ ແລະ ສາມາດເຂົ້າເຖິງໄດ້.
- ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ແລະ ກົດໝາຍກ່ຽວຂ້ອງ ພາຍໃນ ລວມທັງ ປະມວນກົດໝາຍອາຍາ, ຄຳແນະນຳພາກລັດ ແລະ ພາກຕຸລາການ ອະນຸຍາດໃຫ້ສານ ຕັດສິນ ທົດແທນຄ່າເສຍຫາຍ ແລະ ອອກຄຳສັ່ງໃຫ້ຜູ້ກະທຳຜິດປະຕິບັດ ລວມທັງການຮິບຊັບສິນຂອງ ຜູ້ກະທຳຜິດ.
- ຍື່ນຄຳຮຽກຮ້ອງ ຄ່າເສຍຫາຍ ຫລື ຄ່າຊົດເຊີຍທາງແພ່ງ ແລະ/ຫລື ທາງອາຍາ ໂດຍຜ່ານການປຶກສາຫາລື ກັບຜູ້ຖືກເຄາະຮ້າຍ ຫລື ພາກສ່ວນກ່ຽວຂ້ອງ.
- ນຳໃຊ້ຊ່ອງທາງ ທາງການ ແລະ ບໍ່ເປັນທາງການ ເພື່ອຊ່ວຍເຫລືອ ແລະ ປະສານລະຫວ່າງ ອົງການຈັດຕັ້ງກ່ຽວຂ້ອງ ໃນການເກັບກຳຂໍ້ມູນບັນທຶກທາງທະນາຄານ, ການເງິນ ຫລື ການຄ້າ ແລະ ການຢຶດຊັບສິນ ຂອງ ຜູ້ກະທຳຜິດບົນສະຖານການຄ້າມະນຸດ

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໄດ້ຮັບຄ່າເສຍຫາຍ ແລະ ຄ່າຊົດເຊີຍ. | ມີກົນໄກທົດແທນຜົນເສຍຫາຍ ໃຫ້ແກ່ຜູ້ຖືກເຄາະຮ້າຍ ຊຶ່ງໄດ້ເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກ. |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸຫຼາຍລາຍການ |

# ຂະບວນການຍຸຕິທໍາ

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ຜູ້ເຄາະຮ້າຍຈາກ TIP ໄດ້ຮັບຂໍ້ມູນກ່ຽວກັບສິດໃນການຮຽກຮ້ອງຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ ແລະ ຂັ້ນຕອນກ່ຽວຂ້ອງ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 5.1.1, 5.1.2, 5.3.9.
- ຄູ່ມືບໍ່ສ້າງຄວາມເສຍຫາຍ ສໍາລັບ ເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 77, 92.
- ACTIP ມາດຕາ 14(9).

## ລາຍລະອຽດ ແລະ ຄໍາອະທິບາຍ

ໃນການຮຽກຮ້ອງເອົາຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ, ຜູ້ຖືກເຄາະຮ້າຍຈາກ TIP ຕ້ອງການຂໍ້ມູນຂ່າວສານສະເພາະ ກ່ຽວກັບການຮຽກຮ້ອງ ແລະ ຈຸດປະສົງ ແລະ ໄດ້ຮັບຂໍ້ມູນ ກ່ຽວກັບ ສິດ ຂອງ ຕົນ ໃນການຮຽກຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ.

ຄວນສະໜອງຂໍ້ມູນຂ່າວສານ ກ່ຽວກັບ ເງື່ອນໄຂ ແລະ ຊ່ອງທາງໃນການເຂົ້າເຖິງການທົດແທນຜົນເສຍຫາຍ ໃນພາສາ ແລະ ຮູບແບບທີ່ເຂົ້າໃຈງ່າຍ ພ້ອມທັງໃຫ້ຂໍ້ມູນ ກ່ຽວກັບ ໄລຍະເວລາທີ່ຈະໃຊ້ເພື່ອດໍາເນີນຄະດີຈົນສິ້ນສຸດ ແລະ ຄວາມເປັນໄປໄດ້ທີ່ຈະໄດ້ຮັບຄ່າເສຍຫາຍ. ຂໍ້ມູນດັ່ງກ່າວ ຈະຊ່ວຍຜູ້ຖືກເຄາະຮ້າຍສາມາດຕັດສິນໃຈວ່າຈະດໍາເນີນຂັ້ນຕອນເພື່ອຮຽກຮ້ອງຄ່າເສຍຫາຍ ຫລື ຄ່າຊົດເຊີຍ.

# 39

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

☐ ກົດໝາຍ, ນະໂຍບາຍ, ຄູ່ມື ແລະ ຂັ້ນຕອນການເຮັດວຽກ ລວມມີຂໍ້ກໍານົດ ກ່ຽວກັບ ສິດໃນການຮຽກຮ້ອງຄ່າເສຍຫາຍ ແລະ/ຫຼື ຄ່າຊົດເຊີຍ.

☐ ກົດໝາຍ, ນະໂຍບາຍ, ຄູ່ມື ແລະ ຂັ້ນຕອນເຮັດວຽກ ລວມມີຂໍ້ກໍານົດ ກ່ຽວກັບ ພັນທະ ຂອງ ເຈົ້າໜ້າທີ່ ໃນການໃຫ້ຂໍ້ມູນຂ່າວສານ ໃຫ້ແກ່ ຜູ້ຖືກເຄາະຮ້າຍ ກ່ຽວກັບ ສິດໃນການຮຽກຮ້ອງຄ່າເສຍຫາຍ ແລະ/ຫຼື ຄ່າຊົດເຊີຍ.

☐ ຂໍ້ມູນ ກ່ຽວກັບ ລະບຽບ ແລະ ຂັ້ນຕອນ ໃນການຮຽກຮ້ອງ ຄ່າຊົດເຊີຍ ສາມາດເຂົ້າເຖິງໄດ້ໂດຍທຸກພາກສ່ວນຂອງສັງຄົມ ລວມທັງກຸ່ມດ້ອຍໂອກາດ ເຊັ່ນ ແມ່ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ.

☐ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຮຽກຮ້ອງ, ທີ່ໄດ້ເດີນທາງກັບບ້ານ ຫຼື ຢູ່ ປະເທດທີສາມ, ໄດ້ຮັບຂໍ້ມູນ ຫຼື ຄໍາແນະນໍາ ແລະ ການຊ່ວຍເຫຼືອສະເພາະບລຸກຄົນໃນຂະບວນການທັງໝົດ.

☐ ຜູ້ຕາງໜ້າທາງກົດໝາຍ ແລະ ຜູ້ສະໜັບສະໜູນ ຖືກແຕ່ງຕັ້ງເພື່ອໃຫ້ຂໍ້ມູນຂ່າວສານ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໃນການຮຽກຮ້ອງຄ່າເສຍຫາຍ ແລະ/ຫຼື ຄ່າຊົດເຊີຍ.

# ຂະບວນການຍຸຕິທຳ 39

## ຂອບເຂດ

ຜົນໄດ້ຮັບນີ້ ກ່ຽວຂ້ອງ ກັບຂໍ້ມູນຂ່າວສານ ທີ່ສະໜອງໃຫ້ຜູ້ຖືກເຄາະຮ້າຍ ເຊັ່ນ:

- ສ້າງ ແລະ ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ, ນະໂຍບາຍ, ຄູ່ມື ແລະ ຂັ້ນຕອນ ກ່ຽວກັບ ການຮຽກຮ້ອງຄ່າຊົດເຊີຍ ແລະ/ຫລື ຄ່າເສຍຫາຍ.
- ກົດໝາຍ, ລະບຽບການ, ນະໂຍບາຍ, ຄູ່ມື ແລະ ຂັ້ນຕອນການກຳນົດຕົວ, ສົ່ງຕໍ່, ຊ່ວຍເຫລືອ, ປົກປ້ອງ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍ ລະບຸສະເພາະ ກ່ຽວກັບ ຄວາມຈຳເປັນໃນການໃຫ້ຂໍ້ມູນ ຜູ້ຖືກເຄາະຮ້າຍ ຈາກ TIP ກ່ຽວກັບ ສິດໃນການຮຽກຮ້ອງ ຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ ໂດຍຜ່ານ ສານ, ທາງບໍລິຫານ ແລະ ຊ່ອງທາງອື່ນໆ.
- ມີສື່ສິ່ງພິມທີ່ໃຫ້ຂໍ້ມູນ ກ່ຽວກັບ ການຮຽກຮ້ອງຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ, ຈຸດປະສົງ, ລະບຽບ ແລະ ຂັ້ນຕອນ, ພື້ນຖານດ້ານນິຕິກຳ ທີ່ທຸກພາກສ່ວນ ຂອງ ສັງຄົມ ສາມາດເຂົ້າເຖິງໄດ້ແບບກວ້າງຂວາງ ໃນພາສາ ແລະ ຮູບແບບທີ່ເຂົ້າໃຈໄດ້ງ່າຍ ໂດຍສະເພາະແມ່ນປະຊາກອນກຸ່ມດ້ອຍໂອກາດ ແລະ ຄົນທີ່ມີຄວາມພິການ.
- ຂໍ້ມູນຂ່າວສານ ກ່ຽວກັບ ສິດ ຂອງ ຜູ້ຖືກເຄາະຮ້າຍ ໃນການຮຽກຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ, ເງື່ອນໄຂເກີດສິດ, ຂະບວນການຍື່ນເອກະສານແບບລຽບງ່າຍ, ການປະກອບເອກະສານ, ອົງການຈັດຕັ້ງພາກລັດທີ່ຮັບຜິດຊອບ, ກຳນົດເວລາ ເພື່ອຕັດສິນໃຈ ສາມາດເຂົ້າເຖິງໄດ້ໂດຍທຸກພາກສ່ວນຂອງ ສັງຄົມ ແບບກວ້າງຂວາງ ໃນພາສາ ແລະ ຮູບແບບທີ່ເຂົ້າໃຈໄດ້ງ່າຍ ໂດຍສະເພາະແມ່ນປະຊາກອນກຸ່ມດ້ອຍໂອກາດ ແລະ ຄົນທີ່ມີຄວາມພິການ.
- ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຮຽກຮ້ອງ, ທີ່ໄດ້ເດີນທາງກັບບ້ານ ຫລື ຢູ່ ປະເທດທີ່ສາມ, ໄດ້ຮັບຂໍ້ມູນ ຫລື ຄຳແນະນຳ ແລະ ການຊ່ວຍເຫລືອເພື່ອຮຽກຮ້ອງຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ ຢູ່ ປະເທດທີ່ຄະດີຄ້າມະນຸດ ກຳລັງດຳເນີນການ. ເຂົາເຈົ້າໄດ້ຮັບຂໍ້ມູນ, ຄຳແນະນຳ ແລະ ການຊ່ວຍເຫລືອ ທີ່ຈຳເປັນໃນຂະບວນການທັງໝົດ.
- ຜູ້ຕາງໜ້າທາງກົດໝາຍ, ລວມທັງຜູ້ຊ່ວຍເຫລືອ ໃຫ້ການສະໜັບສະໜູນໃນຂະບວນການຍຸຕິທຳທັງໝົດ ທັງທາງແພ່ງ ແລະ ອາຍາ ເພື່ອຮຽກຮ້ອງຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ.
- ການສະໜັບສະໜູນ ເພື່ອ ຮຽກຮ້ອງ ຄ່າເສຍຫາຍ ແລະ/ຫລື ຄ່າຊົດເຊີຍ ບໍ່ຖືກນຳໃຊ້ເປັນເງື່ອນໄຂໃຫ້ເຂົ້າຮ່ວມຂະບວນການຍຸຕິທຳ.

---

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ໄດ້ຮັບຄ່າຊົດເຊີຍ ສຳລັບຜົນເສຍຫາຍທີ່ເກີດຈາກອາຊະຍາກຳ ຄ້າມະນຸດ. | ການຊົດເຊີຍ ແລະ ປົວແປງທາງດ້ານຈິດໃຈ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |

# ຂະບວນການຍຸຕິທຳ

40

## ຜົນໄດ້ຮັບໄລຍະສັ້ນ (0-2 ປີ)

ເຈົ້າໜ້າທີ່ໄດ້ຮັບການຝຶກອົບຮົມ ແລະ ມີຊັບພະຍາກອນ ພຽງພໍ ເພື່ອປ້ອງກັນການຕົກເປັນຜູ້ຖືກເຄາະຮ້າຍແບບຊ້ຳຊ້ອນ ໃນໄລຍະດຳເນີນຄະດີ.

## ບ່ອນອ້າງອີງເຖິງເນື້ອໃນຢູ່ເອກະສານແຫຼ່ງທີ່ມາ

- ຄູ່ມື ແລະ ຂະບວນການເຮັດວຽກ ລະດັບພາກພື້ນ ພາກ 3.3.12, 3.3.15.
- ຄູ່ມື ການຄຳນຶງເຖິງບົດບາດຍິງຊາຍ ເວລາພົວພັນກັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ແມ່ນຜູ້ຍິງ ພາກທີ 3.5.7, 3.6.3, 3.6.8.
- ຄູ່ມືບໍ່ສ້າງຄວາມເສຍຫາຍສຳລັບເຈົ້າໜ້າທີ່ດ້ານໜ້າ, ໜ້າທີ 85 ,89.
- ACTIP ມາດຕາ 16(1), (6) .
- ແຜນແມ່ບົດອາຊຽນ ວ່າດ້ວຍການເຊື່ອມໂຍງ 2025: ການເຊື່ອມສານສິດທິ ຂອງ ຄົນທີ່ມີຄວາມພິການ APSC 4.

## ລາຍລະອຽດ ແລະ ຄຳອະທິບາຍ

ຜູ້ຖືກເຄາະຮ້າຍຈາກ TIP ມີຄວາມສ່ຽງທີ່ຈະຖືກກະທົບທາງດ້ານຮ່າງກາຍ ແລະ ຈິດໃຈ ຊຶ່ງເກີດຈາກການຖືກລ່ວງລະເມີດ ແລະ ຂູດຮີດແບບຊ້ຳຊ້ອນໄລຍະຍາວ. ພາຍຫລັງທີ່ສາມາດຊ່ວຍເຫລືອເຂົາເຈົ້າ, ກໍຍັງຕ້ອງຖືກເຫດກະທົບທາງຈິດໃຈ ແລະ ການເຮັດໃຫ້ເປັນຜູ້ຖືກເຄາະຮ້າຍ ແບບຊ້ຳຊ້ອນໃນໄລຍະການເຂົ້າຮ່ວມຂະບວນການຍຸຕິທຳ. ການຝຶກອົບຮົມ ແລະ ການໂຄສະນາເຜີຍແຜ່ ເປັນພື້ນຖານທີ່ສຳຄັນເພື່ອຍົກລະດັບຄວາມຮັບຮູ້ໃຫ້ແກ່ຜູ້ຕອບໂຕ້ເບື້ອງຕົ້ນ, ເຈົ້າໜ້າທີ່ປະຕິບັດກົດໝາຍ, ຜູ້ໃຫ້ບໍລິການ ແລະ ອື່ນໆ.

ACTAIP ຮຽກຮ້ອງ ໃຫ້ປະເທດສະມາຊິກອາຊຽນ ສະໜອງ ຫລື ເພີ່ມທະວີ ແຜນງານການຝຶກອົບຮົມ ໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອສະກັດກັ້ນ ແລະ ແກ້ໄຂຄະດີການຄ້າມະນຸດ ໂດຍສຸມໃສ່ການນຳໃຊ້ວິທີການ ປ້ອງກັນ, ສືບສວນສອບສວນ, ດຳເນີນຄະດີ, ຕັດສິນລົງໂທດຜູ້ຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ແລະ ຄອບຄົວເຂົາເຈົ້າ.

## ລາຍການກວດກາ ເພື່ອຢັ້ງຢືນການບັນລຸຜົນໄດ້ຮັບໃນໄລຍະສັ້ນ

- ☐ ມີຊັບພະຍາກອນ ເພື່ອຈັດການຝຶກອົບຮົມໃຫ້ແກ່ຜູ້ພິພາກສາ, ເຈົ້າໜ້າທີ່ໄອຍະການ, ເຈົ້າໜ້າທີ່ປະຕິບັດກົດໝາຍ ແລະ ພາກສ່ວນອື່ນໆ.
- ☐ ຈັດການຝຶກອົບຮົມ ແລະ ກິດຈະກຳສ້າງຂີດຄວາມສາມາດ ດ້ານວຽກຄົນທີ່ມີຄວາມພິການ
- ☐ ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ ດ້ານວິທີການຄຳນຶງເຖິງບົດບາດຍິງຊາຍ.
- ☐ ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ ດ້ານວິທີການຄຳນຶງເຖິງສິດທິມະນຸດ
- ☐ ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ ດ້ານວິທີການຄຳນຶງເຖິງການກະທົບດ້ານຈິດໃຈຮ້າຍແຮງ.
- ☐ ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ ດ້ານວິທີການຄຳນຶງເຖິງວິທີການເປັນມິດຕໍ່ເດັກນ້ອຍ.
- ☐ ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ ດ້ານວິທີເກັບຫຼັກຖານທາງກາຍະພາບ ແລະ ນິຕິເວດ (ທາງການແພດ ແລະ ດິຈິຕອນ).
- ☐ ຜູ້ພິພາກສາ, ເຈົ້າໜ້າທີ່ໄອຍະການ, ເຈົ້າໜ້າທີ່ປະຕິບັດກົດໝາຍ ແລະ ພາກສ່ວນອື່ນໆ ໄດ້ຮັບການຝຶກອົບຮົມເພື່ອຮັບມືກັບຄະດີຄ້າມະນຸດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

## ຂອບເຂດ

ຜົນໄດ້ຮັບນີ້ ມີຂໍ້ກຳນົດ ແລະ ການຈັດສັນຊັບພະຍາກອນເພື່ອຮັບປະກັນ:

- ອົງການຈັດຕັ້ງ, ສະຖາບັນການຝຶກອົບຮົມ ຫລື ສະຖາບັນການສຶກສາ ມີແຜນງານການຝຶກອົບຮົມ ພ້ອມທັງຈັດຕັ້ງປະຕິບັດເປັນປະຈຳໃຫ້ແກ່ ເຈົ້າໜ້າທີ່ ກ່ຽວຂ້ອງ ໃນການຕ້ານການຄ້າມະນຸດ.
- ມີຊັບພະຍາກອນພຽງພໍ ເພື່ອຈັດການຝຶກອົບຮົມໃຫ້ແກ່ ຜູ້ພິພາກສາ, ເຈົ້າໜ້າທີ່ໄອຍະການ, ເຈົ້າໜ້າທີ່ປະຕິບັດກົດໝາຍ ແລະ ເຈົ້າໜ້າທີ່ອື່ນໆ.
- ຈັດການຝຶກອົບຮົມ ກ່ຽວກັບ ຈຸດດີ ແລະ ຂໍ້ຈຳກັດໃນການນຳໃຊ້ຫລັກຖານກາຍະພາບ ແລະ ນິຕິເວດ (ການແພດ ແລະ ດິຈິຕອນ) ໃນກໍລະນີການຄ້າມະນຸດເພື່ອຈຸດປະສົງການລ່ວງລະເມີດທາງດ້ານເພດ, ທາງດ້ານແຮງງານ, ການຄ້າອະໄວຍະວະພາຍໃນ ແລະ ຮູບແບບການຄ້າມະນຸດອື່ນໆ ເຊັ່ນ ການບັງຄັບໃຫ້ກໍ່ອາຊະຍາກຳ.

ເພື່ອຮັບປະກັນ ການເຄົາລົບສິດ ຂອງ ຜູ້ຖືກເຄາະຮ້າຍ, ການຈັດການຝຶກອົບຮົມ ແລະ ກິດຈະກຳສ້າງຂີດຄວາມສາມາດ ກ່ຽວກັບ ມາດຕະຖານ ດ້ານການປະພຶດ ແລະ ຜົນສະທ້ອນທີ່ຕາມມາ ໃນການຮັບມືກັບຄະດີການຄ້າມະນຸດ ຄວນລວມມີຫົວຂໍ້ດັ່ງລຸ່ມນີ້:

- ທັດສະນະມຸມມອງ ແລະ ວິທີການຄຳນຶງເຖິງຄົນທີ່ມີຄວາມພິການ
- ວິທີການຄຳນຶງເຖິງບົດບາດ ຍິງ-ຊາຍ
- ວິທີການອີງຕາມສິດທິມະນຸດ
- ວິທີການທີ່ຄຳນຶງເຖິງເຫດກະທົບຈິດໃຈຮ້າຍແຮງ
- ວິທີການເປັນມິດຕໍ່ເດັກນ້ອຍ

ການຝຶກອົບຮົມແນໃສ່ການຮັບປະກັນ:

- ຜູ້ພິພາກສາ, ເຈົ້າໜ້າທີ່ໄອຍະການ, ເຈົ້າໜ້າທີ່ປະຕິບັດກົດໝາຍ ແລະ ພາກສ່ວນອື່ນໆ ໄດ້ຮັບການຝຶກອົບຮົມ ເພື່ອແກ້ໄຂຄະດີການຄ້າມະນຸດທີ່ຕ້ອງຄຳນຶງເຖິງຄວາມລະອຽດອ່ອນຂອງຄະດີ.
- ພິພາກສາ, ເຈົ້າໜ້າທີ່ໄອຍະການ, ເຈົ້າໜ້າທີ່ປະຕິບັດກົດໝາຍ ແລະ ພາກສ່ວນອື່ນໆ ພົວພັນກັບຜູ້ຖືກເຄາະຮ້າຍ ແບບລະອຽດອ່ອນ ແລະ ໃຫ້ການຊ່ວຍເຫລືອສະໜັບສະໜູນ.
- ພິພາກສາ, ເຈົ້າໜ້າທີ່ໄອຍະການ, ເຈົ້າໜ້າທີ່ປະຕິບັດກົດໝາຍ ແລະ ພາກສ່ວນອື່ນໆ ປົກປ້ອງຜູ້ຖືກເຄາະຮ້າຍ ຈາກການເຮັດໃຫ້ຮູ້ສຶກເປັນຜູ້ຖືກເຄາະຮ້າຍ ແບບຊໍ້າຊ້ອນ ເປັນຕົ້ນແມ່ນການຫລີກລ່ຽງການສຳພາດກັບໄປກັບມາ ຫລື ການໄຕ່ສວນໃນລັກສະນະແບບໂຈມຕີ ທີ່ບໍ່ຈຳເປັນ.

| ຜົນໄດ້ຮັບໄລຍະກາງ (2-5 ປີ) | ຜົນໄດ້ຮັບໄລຍະຍາວ (5+ ປີ) |
|---|---|
| ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ໄດ້ຮັບຄ່າຊົດເຊີຍ ສຳລັບຜົນເສຍຫາຍທີ່ເກີດຈາກອາຊະຍາກຳ ຄ້າມະນຸດ. | ການຊົດເຊີຍ ແລະ ປົວແປງທາງດ້ານຈິດໃຈ ຖືກເຊື່ອມສານເຂົ້າໃນອົງການຈັດຕັ້ງ ແລະ ຂັ້ນຕອນການເຮັດວຽກ |

| ກອບປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບໄລຍະສັ້ນ | | |
|---|---|---|
| ☐ | NA | ບໍ່ສາມາດນຳໃຊ້ໄດ້ |
| ☐ | ບໍ່ມີຄວາມຄືບໜ້າ | ບໍ່ມີຫຍັງ ທີ່ບັນລຸໄດ້ |
| ☐ | ຄວາມຄືບໜ້າລະດັບໃດໜຶ່ງ | ບາງລາຍງານສາມາດບັນລຸໄດ້ |
| ☐ | ມີຄວາມຄືບໜ້າແບບກ້າວກະໂດດ | ບັນລຸທຸກລາຍການ |



# ຕົວຢ່າງພາກປະຕິບັດທີ່ດີ ດ້ານຂະບວນການຍຸຕິທຳ

**ການປົກປ້ອງຈາກການຂົ່ມຂູ່ ແລະ ການແກ້ແຄ້ນ**

ມີແມ່ ຜູ້ໜຶ່ງຢືມເງິນຈາກຫົວໜ້າ ແຕ່ໄດ້ນຳເອົາລູກສາວ ມາເປັນສິ່ງຊົດໃຊ້ໜີ້ສິນ. ຫົວໜ້າ ຂອງ ຜູ້ກ່ຽວ ແຕ່ງງານກັບເຈົ້າໜ້າທີ່ຕຳຫລວດ.

ເດັກຍິງຄົນນັ້ນ ຖືກບັງຄັບໃຫ້ເຮັດວຽກໃຫ້ແກ່ຄອບຄົວດັ່ງກ່າວ ຢູ່ຮ້ານເສີມສວຍທຸກໆມື້. ລາວບໍ່ສາມາດໄປໂຮງຮຽນ. ນອກນັ້ນ, ກໍ່ຖືກບັງຄັບໃຫ້ນອນກັບຜົວລາວ ແລະ ຖືກລູກຊາຍ ຂອງ ຄອບຄົວດັ່ງກ່າວ ລ່ວງລະເມີດທາງເພດ.

ສຸດທ້າຍ, ເດັກຍິງຄົນນີ້ ກໍສາມາດລາຍງານສະພາບການຂອງຕົນ ໃຫ້ແກ່ຜູ້ທີ່ລາວໄວ້ເນື້ອເຊື່ອໃຈ ຊຶ່ງຜູ້ກ່ຽວ ກໍ່ໄດ້ນຳເອົາຂໍ້ມູນໄປລາຍງານຕໍ່ໃຫ້ແກ່ CSO. ຫລັງຈາກນັ້ນ, ກໍໄດ້ມີການເຂົ້າໄປຊ່ວຍເຫລືອເອົາເດັກຍິງ ແລະ ໄດ້ເຂົ້າຮ່ວມຂະບວນການດຳເນີນຄະດີອາຍາທັງໝົດ. ເດັກຍິງຄົນນີ້ ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອ ເພື່ອເຂົ້າຮ່ວມຂະບວນການຍຸຕິທຳ ແລະ ໄດ້ຮັບການປົກປ້ອງໃນຖານະທີ່ເປັນພະຍານ.

ຄອບຄົວທີ່ກະທຳຜິດ ຖືກສັ່ງຟ້ອງ, ດຳເນີນຄະດີ ແລະ ຖືກຕັດອິດສະລະພາບ. ຫລັງຈາກນັ້ນ ເດັກຍິງ ກໍສາມາດກັບໄປໂຮງຮຽນ ແລະ ໄດ້ຮັບຄ່າຊົດເຊີຍ.

**ການຝຶກອົບຮົມໃຫ້ເຈົ້າໜ້າທີ່ຂະແໜງຍຸຕິທຳ**

ຢູ່ ອິນໂດເນເຊຍ, ອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ ກະກຽມ ແລະ ຈັດການຝຶກອົບຮົມ ຮ່ວມກັບ CSOs, ອົງການຈັດຕັ້ງພາກລັດ ແລະ ອົງການປະຕິບັດກົດໝາຍກ່ຽວຂ້ອງ. ຫລັກສູດການຝຶກອົບຮົມ ລວມມີຫົວຂໍ້ການກຳນົດຕົວຜູ້ຖືກເຄາະຮ້າຍ, ກົນໄກການສົ່ງຕໍ່ ແລະ ວິທີໄຈ້ແຍກ ຄະດີການຄ້າມະນຸດ ຈາກການກະທຳຜິດປະເພດອື່ນ. ນອກນັ້ນ, ກໍມີຫລັກສູດທີ່ຖືກພັດທະນາ ສຳລັບສານປະຊາຊົນສູງສຸດ ກ່ຽວກັບ ຂະບວນການຍຸຕິທຳ ແລະ ການຕ້ານການຄ້າມະນຸດ.

**ເຈົ້າໜ້າທີ່ມາເລເຊຍ ກອບກູ້ຊ່ວຍເຫລືອແຮງງານ ທີ່ຖືກບັງຄັບໃຊ້**

ສຳລັບຕົວຢ່າງ ຂອງ ພາກປະຕິບັດຕົວຈິງ ໃນການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄຳນຶງເຖິງບົດບາດຍິງ-ຊາຍ, ການດຳເນີນຄະດີອາຍາ ຕໍ່ຜູ້ກະທຳຜິດ ໄດ້ກຳນົດວ່າຈະເກີດຂຶ້ນ ຢູ່ ມາເລເຊຍ ແລະ ກໍຖືກໂຈະຊົ່ວຄາວ ເພື່ອໃຫ້ການຊ່ວຍເຫລືອຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍ ຈາກການບັງຄັບໃຊ້ແຮງງານ ໄດ້ກັບຄືນບ້ານເພື່ອເຂົ້າຮ່ວມຂະບວນການດຳເນີນຄະດີ. ແຕ່ວ່າ ກ່ອນທີ່ຈະເລີ່ມ ນັກສັງຄົມສົງເຄາະ ພົບເຫັນວ່າ ຜູ້ຖືກເຄາະຮ້າຍ ມີເຫດກະທົບຈິດໃຈຮ້າຍແຮງ ແລະ ມີຄວາມສ່ຽງທີ່ຈະຖືກກະທົບແບບຊ້ຳຊ້ອນ. ດັ່ງນັ້ນ, ເພື່ອຊ່ວຍຜູ້ຖືກເຄາະຮ້າຍ ກໍຈຶ່ງໄດ້ຂໍໃຫ້ຈຳກັດຈຳນວນເຈົ້າໜ້າທີ່ພ້ອມທັງຈັດພື້ນທີ່ປອດໄພ ແລະ ເປັນສ່ວນຕົວເພື່ອສຳພາດຜູ້ຖືກເຄາະຮ້າຍ. ຂໍ້ສະເໜີເຫລົ່ານີ້ ຖືກອະນຸມັດ ແລະ ກໍໄດ້ດຳເນີນການສຳພາດ ຢູ່ໂຮງແຮມແບບເປັນສ່ວນຕົວ ເຖິງວ່າຈະເຮັດໃຫ້ການດຳເນີນຄະດີມີຄວາມຊັກຊ້າເລັກນ້ອຍກໍຕາມ.

# ເອກະສານຊ້ອນທ້າຍ 1:
# ຕົວຊີ້ບອກຜົນໄດ້ຮັບ

| ລ/ດ | ຜົນໄດ້ຮັບ (ຕົວຊີ້ບອກ) | ຂອບວຽກທີ |
|---|---|---|
| 1 | ຈຳນວນກິດຈະກຳການໂຄສະນາເຜີຍແຜ່ ກ່ຽວກັບ ການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄຈ້ແຍກຕາມປະເພດກິດຈະກຳ ແລະ ກຸ່ມເປົ້າໝາຍ ເຊັ່ນ: ອາຍຸ, ເພດ, ຄົນທີ່ມີຄວາມພິການ, ລະດັບການຮູ້ໜັງສື ແລະ ກຸ່ມດ້ອຍໂອກາດອື່ນໆ. | 1 |
| 2 | ຈຳນວນຂໍ້ສະເໜີ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຮ່ວມມືເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ ລະຫວ່າງບັນດາປະເທດສະມາຊິກອາຊຽນ. | 2 |
| 3 | ຈຳນວນຄະດີການຄ້າມະນຸດ ແຍກລະອຽດຕາມ ຫລັກການ GEDSI | 2 |
| 4 | ເວລາສະເຫລ່ຍເປັນມື້ ໃນການຢັ້ງຢືນການກຳນົດຕົວຜູ້ຖືກເຄາະຮ້າຍ, ແຍກລະອຽດ ຕາມ ຫລັກການ GEDSI | 2 |
| 5 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ທີ່ເປັນຄົນທີ່ມີຄວາມພິການ ແລະ ໄດ້ແຕ່ງຕັ້ງຜູ້ປົກປ້ອງ | 2 |
| 6 | ຕົວເລກ ແລະ ອັດຕາສ່ວນຮ້ອຍ ຂອງ ຜູ້ປົກປ້ອງ ທີ່ໄດ້ຮັບການແຕ່ງຕັ້ງ ອີງຕາມປະເພດ ເຊັ່ນ: ຄອບຄົວ, ອົງການຈັດຕັ້ງ ອື່ນໆ. | 2 |
| 7 | ອັດຕາສ່ວນຮ້ອຍ ຂອງ ຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບອະນຸຍາດພັກເຊົາ ຊົ່ວຄາວ ບົນພື້ນຖານຫລັກການສັງຄົມ ຫລື ມະນຸດສະທຳ. | 3 |
| 8 | ຕົວເລກ ແລະ ອັດຕາສ່ວນຮ້ອຍຂອງຜູ້ຖືກເຄາະຮ້າຍ ທີ່ຢູ່ທີ່ພັກອາໄສທີ່ເໝາະສົມ ກັບຄວາມຕ້ອງການຂອງເຂົາເຈົ້າ ອີງຕາມປະເພດ ຂອງ ທີ່ພັກອາໄສ (ຢູ່ບ້ານຍາດຕິພີ່ນ້ອງຫ່າງໄກ ຫລື ຢູ່ບ້ານພີ່ນ້ອງໃກ້ສິດ, ບ້ານກຸ່ມນ້ອຍ, ທີ່ພັກອາໄສຊົ່ວຄາວ ຫລື ທີ່ພັກອາໄສຂອງພາກສ່ວນອື່ນໆ.)ຕົວເລກ ແລະ ອັດຕາສ່ວນຮ້ອຍ ຂອງ ຜູ້ຖືກເຄາະຮ້າຍ ທີ່ຢູ່ໃນ ທີ່ພັກອາໄສທີ່ເໝາະສົມ ກັບຄວາມຕ້ອງການຂອງເຂົາເຈົ້າ ອີງຕາມປະເພດຂອງທີ່ພັກອາໄສ (ຢູ່ບ້ານຍາດຕິພີ່ນ້ອງຫ່າງໄກ ຫລື ຢູ່ບ້ານພີ່ນ້ອງໃກ້ສິດ, ບ້ານກຸ່ມນ້ອຍ, ທີ່ພັກອາໄສຊົ່ວຄາວ ຫລື ທີ່ພັກອາໄສຂອງພາກສ່ວນອື່ນໆ.) | 3 |
| 9 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ໄດ້ຮັບການປະເມີນຄວາມສ່ຽງ ຕາມແຕ່ລະກໍລະນີ ເພື່ອກັບຄືນບ້ານແບບປອດໄພ ແຍກປະເພດ ຕາມ GEDSI. | 4 |
| 10 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຖືກສົ່ງຕໍ່ໃຫ້ການບໍລິການປິ່ນປົວສຸຂະພາບ | 5 |
| 11 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ຜູ້ຖືກເຄາະຮ້າຍ ຈາກ TIP ທີ່ຖືກສົ່ງຕໍ່ໃຫ້ການບໍລິການປິ່ນປົວສຸຂະພາບຈິດ. | 5 |
| 12 | ຈຳນວນຄະດີການຄ້າມະນຸດ ທີ່ຖືກລາຍງານ ແລະ ດຳເນີນໃນປີໜຶ່ງ. | 6 |
| 13 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ການຕັດສິນຄະດີຄ້າມະນຸດ ທີ່ບໍ່ປະສິງອອກນາມ, ເຜີຍແຜ່ທາງອອນໄລ ແລະ ສະໜອງໃຫ້ແກ່ຖານຂໍ້ມູນຄະດີກົດໝາຍ ຂອງ UNODC Sherlock. | 6 |
| 14 | ເວລາສະເຫລ່ຍ ໃນການດຳເນີນຄະດີຄ້າມະນຸດ ທີ່ກ່ຽວຂ້ອງ ກັບເດັກນ້ອຍ. | 6 |
| 15 | ຈຳນວນສະເຫລ່ຍ ທີ່ຜູ້ຖືກເຄາະຮ້າຍ ຈາກ TIP ລາຍງານ ກ່ຽວກັບການຖືກສຳພາດໂດຍເຈົ້າໜ້າທີ່ກ່ຽວຂ້ອງ. | 6 |
| 16 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ຄະດີການຄ້າມະນຸດ ຖືກຕັດສິນໂດຍທີ່ມີການໃຫ້ຄ່າເສຍຫາຍ/ຄ່າຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍ. | 6 |
| 17 | ຈຳນວນ ແລະ ອັດຕາສ່ວນຮ້ອຍ ຂອງ ຄະດີຄ້າມະນຸດ ຖືກຕັດສິນໂດຍທີ່ຜູ້ຖືກເຄາະຮ້າຍ ໄດ້ຮັບຄ່າຊົດເຊີຍເປັນທີ່ຮຽບຮ້ອຍ. | 6 |
| 18 | ຈຳນວນ ຂອງ ພະຍານ ຈາກ TIP ໄດ້ຖືກປະເມີນຄວາມສ່ຽງຕາມແຕ່ລະກໍລະນີ ແຍກປະເພດຕາມ GEDSI. | 6 |
| 19 | ຈຳນວນຂອງພະຍານ TIP ທີ່ມີແຜນຄວາມປອດໄພ ແຍກຕາມ GEDSI. | 6 |
| 20 | ຈຳນວນ ຂອງ ຄະດີທີ່ໄດ້ນຳໃຊ້ການບໍລິການຜູ້ປະສານງານພະຍານຜູ້ຖືກເຄາະຮ້າຍ. | 6 |

# ເອກະສານຊ້ອນທ້າຍ 2:

## ວຽກບົດບາດຍິງ-ຊາຍ, ຄົນທີ່ມີຄວາມພິການ, ການມີສ່ວນຮ່ວມຂອງ ກຸ່ມດ້ອຍໂອກາດ ແລະ ການເກັບກຳຂໍ້ມູນ TIP.

ປະເທດສະມາຊິກອາຊຽນ ຄວນພິຈາລະນາການປະກອບຂໍ້ມູນຂ່າວສານ, ນຳໃຊ້ຫລັກການ ແລະ ພາກປະຕິບັດທີ່ດີ ໃນເຄື່ອງມືລະບຸການຄ້າມະນຸດ, ຂັ້ນຕອນການເຮັດວຽກ ແລະ ການເກັບກຳຂໍ້ມູນ.

### ເພດ ແລະ ບົດບາດຍິງ-ຊາຍ ເພດ ແລະ ບົດບາດຍິງ-ຊາຍ

ເວລາເກັບກຳຂໍ້ມູນ ກ່ຽວກັບ ເພດ ແລະ ບົດບາດຍິງຊາຍ ໃຫ້ໄຈ້ແຍກ ລະຫວ່າງ ເພດ ແລະ ບົດບາດຍິງຊາຍ. ເວລາເກັບກຳຂໍ້ມູນ ກ່ຽວກັບ ເພດ ແລະ ບົດບາດຍິງຊາຍ ໃຫ້ໄຈ້ແຍກ ລະຫວ່າງ ເພດ ແລະ ບົດບາດຍິງ-ຊາຍ. ສອງຢ່າງນີ້ ບໍ່ມີຄວາມໝາຍອັນດຽວກັນ. ບາງຄຳຖາມອາດບໍ່ແທດເໝາະກັບ ເດັກນ້ອຍ ແລະ ຄົນໄວໜຸ່ມ. ອີງຕາມວຸຕິພາວະ, ບາງເທື່ອເຂົາເຈົ້າອາດລະບຸຕົນເອງວ່າ ບໍ່ແມ່ນເພດໃດເພດໜຶ່ງ.

- ☐ ເວລາຖາມກ່ຽວກັບເພດ, ໃຫ້ໃຊ້ຄຳສັບ: ຜູ້ຊາຍ, ຜູ້ຍິງ ຫລື ບໍ່ມີເພດ?
- ☐ ເວລາຖາມກ່ຽວກັບບົດບາດຍິງຊາຍ ໃຫ້ນຳໃຊ້ຄຳວ່າ: ຜູ້ຍິງ, ຜູ້ຊາຍ, ຜູ້ຍິງແປງເພດ ແລະ ຜູ້ຊາຍແປງເພດ?
- ☐ ເວລາທີ່ຖາມກ່ຽວກັບ ເພດ ແລະ ບົດບາດຍິງ-ຊາຍ, ໃຫ້ທາງເລືອກເພື່ອໃຫ້ເຂົາເຈົ້າລະບຸຕົວຕົນ ດ້ວຍຕົນເອງ ?
- ☐ ເວລາຖາມກ່ຽວກັບ ເພດ ແລະ ບົດບາດຍິງຊາຍ, ໃຫ້ເຄົາລົບສິດ ຂອງ ບຸກຄົນ ໃນການບໍ່ເປີດເຜີຍຂໍ້ມູນດັ່ງກ່າວ?
- ☐ ຂໍ້ມູນເກັບກຳໄດ້ແຍກເພດບໍ່?
- ☐ ໄດ້ແຍກຂໍ້ມູນອີງຕາມບົດບາດຍິງຊາຍບໍ່? ໄດ້ແຍກຂໍ້ມູນອີງຕາມບົດບາດຍິງ-ຊາຍບໍ່?

### ຄວາມພິການ

ກຸ່ມ ວໍຊິງຕັ້ນ ໄດ້ກ່າວວ່າ:

*ນິຍາມ ຂອງຄວາມພິການ ໄດ້ມີການປ່ຽນແປງຕາມການເວລາ ແລະ ປະຈຸບັນແມ່ນຂອບແນວຄວາມຄິດ ກ່ຽວກັບ ການພົວພັນລະຫວ່າງບຸກຄົນ ທີ່ມີຂໍ້ບົກພ່ອງດ້ານໜ້າທີ່ການ (ຄວາມຫຍຸ້ງຍາກໃນການປະຕິບັດໜ້າທີ່ການທົ່ວໄປ) ແລະ ສະພາບແວດລ້ອມທີ່ບໍ່ເອື້ອອຳນວຍຄວາມສະດວກ ຊຶ່ງເຮັດໃຫ້ບໍ່ສາມາດມີສ່ວສນຮ່ວມກັບສັງຄົມແບບເຕັມສ່ວນ [49].*

ກຸ່ມ ວໍຊິງຕັ້ນ ໄດ້ສະໜອງ ຊຸດຄຳຖາມ ສຳລັບ ຜູ້ໃຫຍ່, ເດັກນ້ອຍ ແລະ ຄົນໄວໜຸ່ມ. ຊຸດຄຳຖາມເຫລົ່ານີ້ ສາມາດນຳເອົາໄປເຊື່ອມສານກັບລະບົບເກັບກຳຂໍ້ມູນແຫ່ງມູນແຫ່ງຊາດ, ການສຳຫລວດຫົວຂໍ້ສະເພາະ, ແຜນງານ, ການຄົ້ນຄວ້າ ແລະ ການປະເມີນຜົນ. ຄວນນຳໃຊ້ຊຸດຄຳຖາມດັ່ງກາວ ອີງຕາມຄຳແນະນຳ ຂອງ Washington Group.

- ☐ ລະບົບການຕິດຕາມ ແລະ ການເກັບກຳຂໍ້ມູນຂອງທ່ານ ໄດ້ຮັບຮູ້ເຖິງທຸກຮູບແບບຂອງຄວາມພິການ ຫລື ບໍ່ ລວມທັງ ທີ່ເປັນເງື່ອນໄຂ ທີ່ ປິດບັງ ເຊັ່ນ: ຄວາມພິການທາງລະບົບປະສາດ?
- ☐ ທ່ານເກັບກຳຂໍ້ມູນ ທີ່ມີການໄຈ້ແຍກຂໍ້ມູນຄວາມພິການ ຫລື ບໍ່?

49 ກຸ່ມ ວໍຊິງຕັນ ກ່ຽວກັບສະຖິຕິຄວາມພິການ. 2020. ເຄື່ອງມືເກັບກຳຂໍ້ມູນພັດທະນາໂດຍ ກຸ່ມວໍຊິງຕັນ ເພື່ອສະຖິຕິຄວາມພິການ ແລະ ຄຳແນະນຳການນຳໃຊ້. www.washingtongroup-disability.com

**ການຄຳນຶງເຖິງວັດທະນາທຳ ແລະ ຄວາມລະອຽດອ່ອນ**

ຄວາມບອບບາງ ຂຶ້ນກັບປັດໄຈດ້ານປະຫວັດສາດ, ການເມືອງ, ວັດທະນາທຳ, ອົງການຈັດຕັ້ງ ແລະ ສະພາບແວດລ້ອມ. ທັງໝົດທີ່ກ່າວມານັ້ນ ເປັນພື້ນຖານກຳນົດເງື່ອນໄຂທາງສັງຄົມ ແລະ ສະພາບແວດລ້ອມ ຂອງ ການດຳລົງຊີວິດ. ວັດທະນາທຳ, ພາສາ, ສະຖານະເສດຖະກິດ ແລະ ສັງຄົມ ເປັນບັນດາປັດໄຈທີ່ອາດເຮັດໃຫ້ບຸກຄົນມີຄວາມບອບບາງ ແລະ ຄວາມສ່ຽງທີ່ຈະຖືກຄ້າມະນຸດ.

- ☐ ມີຄວາມເຂົ້າໃຈຕໍ່ກັບປະຫວັດສາດດ້ານສັງຄົມ, ພື້ນທີ່ ແລະ ປະຊາຊົນ ຂອງການເກັບກຳຂໍ້ມູນການຄ້າມະນຸດແນວໃດ?
- ☐ ຢູ່ພື້ນທີ່ ເກັບກຳຂໍ້ມູນ TIP ເຂົາເຈົ້າໃຊ້ພາສາຫຍັງ?
- ☐ ມີປະຊາກອນທີ່ເປັນກຸ່ມຊົນເຜົ່າບໍ່ຢູ່ພື້ນທີ່ເກັບກຳຂໍ້ມູນ?
- ☐ ຢູ່ພື້ນທີ່ດັ່ງກ່າວ ມີການປະຕິບັດສາດສະໜາ ແລະ ມີຂໍ້ສັງເກດການຫຍັງແດ່?
- ☐ ພູມສັນຖານຂອງປະເທດ ສົ່ງຜົນສາດ ຫຍັງບໍ່ຕໍ່ກັບວັດທະນາທຳ ຢູ່ພື້ນທີ່ເກັບກຳຂໍ້ມູນ TIP?
- ☐ ສຽງຂອງໃຜຖືກຮັບຟັງ ແລະ ສຽງໃຜທີ່ບໍ່ຖືກຮັບຟັງ ແລະ ທ່ານຈະສ້າງຄວາມສົມດຸນລະຫວ່າງ ບັນດາບຸກຄົນ, ຊຸມຊົນ ຫລື ອົງການຈັດຕັ້ງແນວໃດ ໃນເວລາ ເກັບກຳຂໍ້ມູນ TIP?
- ☐ ເວລາຖາມກ່ຽວກັບອາຍຸ, ທ່ານໄດ້ໃຫ້ທາງເລືອກໃຫ້ການເປີດເຜີຍອາຍຸທີ່ມີລັກສະນະເຄົາລົບຕໍ່ສິດການເປັນສ່ວນຕົວຂອງເຂົາເຈົ້າແນວໃດ ?
- ☐ ເວລາທີ່ຖາມກ່ຽວກັບ ການສຶກສາ, ທ່ານໃຫ້ທາງເລືອກແນວໃດ ເພື່ອເປີດເຜີຍຂໍ້ມູນລະດັບການສຶກສາ ໃນຮູບແບບທີ່ເຂົາເຈົ້າບໍ່ຮູ້ສຶກອັບອາຍ?
- ☐ ຊັ້ນຮຽນ ແລະ ລາຍຮັບ (ສະຖານະສັງຄົມ ແລະ ເສດຖະກິດ) ສົ່ງຜົນອັນໃດຕໍ່ຂໍ້ມູນ TIP ທີ່ເກັບກຳມາ?